United Nations Educational, Scientific and Cultural Organization

Sustainable Development Goals

Bangkok Office
Asia and Pacific Regional Bureau for Education

# ໂຮງຮຽນ ໃຫ້ຄວາມສຸກ!

## ໂຄງປະກອບສຳລັບຄວາມຢູ່ດີມີສຸກຂອງຜູ້ຮຽນຢູ່ພາກພື້ນອາຊີ - ປາຊີຟິກ



# ໂຮງຮຽນ ໃຫ້ຄວາມສຸກ!

ໂຄງປະກອບສຳລັບຄວາມຢູ່ດີມີສຸກຂອງຜູ້ຮຽນຢູ່ພາກພື້ນອາຊີ ~ ປາຊີຟິກ



Published in 2018 by the United Nations Educational, Scientific and Cultural Organization 7, place de Fontenoy, 75352 Paris 07 SP, France,

and

UNESCO Bangkok Office

© UNESCO 2018

ISBN: 978-92-9223-599-4 (Print version)
ISBN: 978-92-9223-600-7 (Electronic Version)

This publication is available in Open Access under the Attribution-ShareAlike 3.0 IGO (CC-BY-SA 3.0 IGO) license (http://creativecommons.org/licenses/by-sa/3.0/igo/). By using the content of this publication, the users accept to be bound by the terms of use of the UNESCO Open Access Repository (http://www.unesco.org/open-access/terms-use-ccbysa-en).

Original title "Happy Schools! A Framework for Learner Well-being in the Asia-Pacific (TH/IQE/C3/16/006-500). Published in 2016 by the United Nations Educational, Scientific and Cultural Organization and UNESCO Bangkok

The designations employed and the presentation of material throughout this publication do not imply the expression of any opinion whatsoever on the part of UNESCO concerning the legal status of any country, territory, city or area or of its authorities, or concerning the delimitation of its frontiers or boundaries.

The ideas and opinions expressed in this publication are those of the authors; they are not necessarily those of UNESCO and do not commit the Organization.

Copy-editor: Ellie Meleisea (English version) and Department of Teacher Education, Ministry of Education and Sports (Lao version)
Translation: Pestalozzi Children's Foundation
Cover Photos and illustrations: © Yejoon (Jennifer) Yoo, © Estiawati Subair, © Debdatta Chakraborty, © Elodie Khan, © Kuntal Kumar Roy
Design/Layout: Warren Field (English version) and Souphatsone Phongphichid (Lao version)
Illustrations: Aliénor Salmon
Graphics: Kathleen Sullivan

TH/IQE/C3-0915_ED05/18/025-100

TH/IQE/16/006-1000 (English ver.)

# ສາລະບານ


**ຄຳນຳ** ........ VI

**ຄຳຈາລຶກບຸນຄຸນ** ........ IX

**ສັງລວມໂດຍຫຍໍ້** ........ XII

**1. ພາກແນະນຳ** ........ 1

**2. ການອອກແບບງານວິໄຈແລະວິທີວິທະຍາ** ........ 10

**3. ບໍລິບົດລະດັບໂລກແລະລະດັບພາກພື້ນ** ........ 25

ກ. ທິດສະດີກ່ຽວກັບຄວາມສຸກ ........ 27

ຂ. ການລິເລີ່ມໃນລະດັບໂລກ ........ 34

ຄ. ຄວາມສຸກຢູ່ໃນນະໂຍບາຍ ........ 43

**4. ໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ** ........ 63

ກ. ການນຳສະເໜີມາດຖານຕ່າງໆ ........ 64

ຂ. ຜູ້ຄົນ ........ 75

ຄ. ຂະບວນການ ........ 88

ງ. ສະຖານທີ່ ........ 110

**5. ຄິດທົບທວນ, ບາດກ້າວຕໍ່ໄປແລະຂໍ້ສະຫຼຸບ** ........ 124

**ເອກະສານອ້າງອີງ** ........ 138

**ເອກະສານແນບ ທີ 1:** ສັງລວມບັນດາປະເທດຕ່າງໆທີ່ ສະທ້ອນໃຫ້ເຫັນຢູ່ໃນຜົນຂອງການວິໄຈ (ທີ່ກ່າວເຖິງຢູ່ໃນການວິໄຈ)... 148

**ເອກະສານແນບ ທີ 2:** ການສຳຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ........ 154

**ເອກະສານແນບ ທີ 3:** ກິດຈະກຳຢູ່ໃນການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ........ 157

## ແຜນວາດ


| | | |
|---|---|---|
| ແຜນວາດ 1. | ມາດຖານຕ່າງໆຂອງໂຮງຮຽນໃຫ້ຄວາມສຸກ | XXII |
| ແຜນວາດ 2. | ກອບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ | 12 |
| ແຜນວາດ 3. | ເຈ້ຍໂປສເຕີເປົ່າທີ່ໃຊ້ກັນຢູ່ກອງປະຊຸມວິຊາການກ່ຽວກັບໂຮງຮຽນຂອງປະເທດອາຊຽນ | 16 |
| ແຜນວາດ 4. | ຄຳຕອບເພື່ອການສຳຫຼວດທີ່ໄດ້ຈາກເພດຍິງ-ຊາຍ, ກຸ່ມຜູ້ທີ່ມີສ່ວນຮ່ວມ, ປະເພດໂຮງຮຽນແລະພາສາ | 18 |
| ແຜນວາດ 5. | ຄຸນນະທຳທັກຢ່າງແລະຈຸດແຂງດ້ານບຸກຄະລິກ 24 ຢ່າງຢູ່ໃນຈິດຕະສາດທາງບວກ | 32 |
| ແຜນວາດ 6. | ເກົ້າຂະແໜງຂອງຄວາມສຸກມວນລວມຂອງຊາດ | 44 |
| ແຜນວາດ 7. | ແປດມິຕິຂອງ 'ໂຮງຮຽນສີຂຽວເພື່ອປະເທດພູຖານສີຂຽວ' | 46 |
| ແຜນວາດ 8. | ຄວາມຫວັງແລະຄວາມເປັນຈິງທີ່ເດັກນ້ອຍເກົາຫຼີເຮັດກິດຈະກຳຫຼັງຈາກເລີກໂຮງຮຽນ (ຄິດໄລ່ເປັນເປີເຊັນ) | 52 |
| ແຜນວາດ 9. | ປັດໄຈອັນດັບຕົ້ນທ້າຍ່າງສຳລັບໂຮງຮຽນໃຫ້ຄວາມສຸກ | 67 |
| ແຜນວາດ 10. | ປັດໄຈອັນດັບຕົ້ນທ້າຍ່າງສຳລັບໂຮງຮຽນທີ່ບໍ່ໃຫ້ຄວາມສຸກ | 70 |
| ແຜນວາດ 11. | ປັດໄຈອັນດັບຕົ້ນທ້າຍ່າງທີ່ເຮັດໃຫ້ການຮຽນການສອນມ່ວນຊື່ນແລະສະໜຸກສະໜານ | 72 |
| ແຜນວາດ 12. | ປັດໄຈອັນດັບຕົ້ນທ້າຍ່າງທີ່ເຮັດໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນຳ | 74 |


## ຕາຕະລາງ


| | | |
|---|---|---|
| ຕາຕະລາງ 1. | ຂໍ້ສັນນິຖານເບື້ອງຕົ້ນກ່ຽວກັບມາດຖານສຳລັບໂຮງຮຽນໃຫ້ຄວາມສຸກ | 13 |
| ຕາຕະລາງ 2. | ໂຮງຮຽນທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ | 20 |

ຕາຕະລາງ 3. ມາດຖານໂຮງຮຽນໃຫ້ຄວາມສຸກ ........................................65

## ຕາຕະລາງໃນເອກະສານແນບ

ຕາຕະລາງ ເອ1. ໂຮງຮຽນຕ່າງໆທີ່ເຂົ້າຮ່ວມກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນປະເທດອາຊຽນ ເປັນແຕ່ລະປະເທດແລະປະເພດໂຮງຮຽນ/ທີ່ຕັ້ງ... 149

ຕາຕະລາງ ເອ2. ຈຳນວນຜູ້ຕອບຄຳຖາມສຳລັບການສຳຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ເປັນແຕ່ລະປະເທດ/ຂອບເຂດບ່ອນຢູ່ອາໄສ ............... 151

ຕາຕະລາງ ເອ3. ໂຮງຮຽນຕ່າງໆທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກເປັນແຕ່ລະປະເທດແລະປະເພດໂຮງຮຽນ/ທີ່ຕັ້ງ......................... 152

## ກ່ອງຂໍ້ຄວາມ

ກ່ອງຂໍ້ຄວາມ 1. ວິທີການດ້ານຕ່າງໆກ່ຽວກັບການສຶກສາຂອງທ່ານ ແປສຕາໂລຊີ ທີ່ຄັດເລືອກມາ..............................................................30

ກ່ອງຂໍ້ຄວາມ 2. ແຜນການແລະນະໂຍບາຍດ້ານການສຶກສາຢູ່ສາທາລະນະລັດເກົາຫຼີ ..............................................................53

ກ່ອງຂໍ້ຄວາມ 3. ກ່ອງຍຸດທະສາດ: ຜູ້ຄົນ ....................................................88

ກ່ອງຂໍ້ຄວາມ 4. ວິທີການຮຽນຮູ້ທີ່ແຕກຕ່າງຈາກສິ່ງທີ່ເຄີຍເຮັດຊຶ່ງນຳມາໃຊ້ຢູ່ໃນແຜນງານໃຫຍ່ ໂດຍເບິ່ງຂ້າມດ້ານວິຊາການຂອງສະຖາບັນວິທະຍາສິລປ໌ (ອິນເດຍ) ..............................................................95

ກ່ອງຂໍ້ຄວາມ 5. ກ່ອງຍຸດທະສາດ: ຂະບວນການ.......................................109

ກ່ອງຂໍ້ຄວາມ 6. ວິໄສທັດຂອງໂຮງຮຽນຫົກແຫ່ງທີ່ໄດ້ຮັບການຄັດເລືອກໃນເຫດສະບານອະກິຕະ (ຍີ່ປຸ່ນ)..........................................................116

ກ່ອງຂໍ້ຄວາມ 7. ກ່ອງຍຸດທະສາດ: ສະຖານທີ່.............................................121

# ຄໍານໍາ

ເວລາທີ່ເປັນເດັກນ້ອຍ ຂ້າພະເຈົ້າມັກກະຕືລືລົ້ນຢາກຮຽນຮູ້ທຸກສິ່ງທຸກຢ່າງທີ່ຢູ່ອ້ອມຕົວ ຢາກຮູ້ຈັກກ່ຽວກັບສິ່ງທີ່ໄດ້ເຫັນ ໄດ້ສໍາຜັດຫຼືໄດ້ຍິນໄດ້ຟັງ. ເມືອງນ້ອຍແຫ່ງໜຶ່ງໃນສາທາລະນະລັດເກົາຫຼີ ຊຶ່ງເປັນບ່ອນທີ່ຂ້າພະເຈົ້າເກີດແລະເຕີບໃຫຍ່ນັ້ນ ໂຮງຮຽນແມ່ນສູນກາງຂອງຊຸມຊົນ. ພວກເດັກນ້ອຍມີຄວາມສຸກເວລາຢູ່ໂຮງຮຽນ ຊຶ່ງເປັນບ່ອນທີ່ເຂົາເຈົ້າໄດ້ຮຽນ ໄດ້ຫຼິ້ນກັບໝູ່ເພື່ອນ ຢູ່ໃນສະພາບແວດລ້ອມທໍາມະຊາດ ແລະມີຄວາມຜູກພັນກັບຄູຂອງຕົນ. ວັນເວລາທີ່ໄດ້ຢູ່ໃນສະພາບໂຮງຮຽນແບບນັ້ນ ແມ່ນສ່ວນສໍາຄັນໃນຊີວິດຂອງຕົນ ແລະຂ້າພະເຈົ້າເຊື່ອວ່າ ມັນແມ່ນສ່ວນສໍາຄັນຢ່າງຍິ່ງຂອງຊີວິດຄົນເຮົາໂດຍລວມ ແລະມັນອາດເປັນປັດໄຈທີ່ມີອິດທິພົນໃນການຫຼໍ່ຫຼອມບຸກຄະລິກ ແລະເສັ້ນທາງຊີວິດໃນອະນາຄົດກໍເປັນໄດ້.

ຫຼາຍສະຕະວັດຕໍ່ມາ ໂຮງຮຽນໄດ້ກາຍເປັນສິ່ງຊັບຊ້ອນຫຼາຍຂຶ້ນ ເນື່ອງຈາກມັນສະທ້ອນສະພາບເສດຖະກິດສັງຄົມໃນປັດຈຸບັນ ຊຶ່ງເກີດຈາກການປ່ຽນແປງຢ່າງໄວວາຂອງຈໍານວນປະຊາກອນແລະເຕັກໂນໂລຊີ ລວມທັງໂຄງສ້າງແລະຄວາມຕ້ອງການຂອງຄອບຄົວທີ່ກໍາລັງມີການປ່ຽນແປງ. ຜົນທີ່ຕາມມາກໍຄື ດຽວນີ້ຢູ່ຫຼາຍໂຮງຮຽນ ພວກເດັກນ້ອຍບໍ່ມີຄວາມສຸກເລີຍ ອາດເປັນຍ້ອນເຂົາເຈົ້າມີຄວາມກົດດັນຫຼາຍເກີນໄປ, ຄາດຫວັງຫຼາຍເກີນໄປ ແລະມີການເນັ້ນໃສ່ດ້ານວິຊາການ, ການສອບເສັງແລະການແຂ່ງຂັນກັນຫຼາຍເກີນໄປ.

ຂ້າພະເຈົ້າເຊື່ອວ່າ ເດັກນ້ອຍໝົດທຸກຄົນມີສິດທີ່ຈະມີຄວາມສຸກແລະເບີກບານມ່ວນຊື່ນກັບຊີວິດຂອງຕົນເອງຢູ່ໃນໂຮງຮຽນ ບໍ່ວ່າຈະເປັນຄວາມຮັກໃນການຮຽນຢ່າງແທ້ຈິງ, ການສ້າງຄວາມຮັກແພງແບບໝູ່ເພື່ອນ, ມີສາຍສໍາພັນອັນດີກັບຄົນອື່ນ ຫຼືມີຄວາມຮູ້ສຶກຜູກພັນກັບຊຸມຊົນແລະສັງຄົມໃນວົງກວ້າງ. ນອກຈາກນັ້ນ ພວກເຮົາຍັງຢາກໃຫ້ຜູ້ຮຽນໝົດທຸກຄົນມີຄວາມສຸກ ເພື່ອໃຫ້ຮຸ່ນຄົນໃນອະນາຄົດ ປະກອບສ່ວນເຮັດໃຫ້ໂລກຂອງເຮົາມີສັນຕິສຸກແລະຈະເລີນຮຸ່ງເຮືອງຫຼາຍຂຶ້ນ. ສໍາລັບຂ້າພະເຈົ້າແລ້ວ ທັງໝົດນີ້ລ້ວນແຕ່ກ່ຽວກັບໂຮງຮຽນໃຫ້ຄວາມສຸກ ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງມີຄວາມປິຕິຍິນດີທີ່ຈະນໍາສະເໜີບົດລາຍງານນີ້ຊຶ່ງເວົ້າເຖິງໂຮງຮຽນໃຫ້ຄວາມສຸກ: ໂຄງປະກອບສໍາລັບຄວາມຢູ່ດີມີສຸກຂອງຜູ້ຮຽນຢູ່ພາກພື້ນອາຊີ-ປາຊີຟິກ.

ບົດລາຍງານສະບັບນີ້ອີງໃສ່ສິ່ງທີ່ຄົ້ນພົບຈາກການເຮັດກິດຈະກຳຫຼາຍຢ່າງ ຊຶ່ງແມ່ນສ່ວນໜຶ່ງຂອງໂຄງການໂຮງຮຽນໃຫ້ຄວາມສຸກທີ່ຮັບຮູ້ວ່າ ຄວາມສຳພັນລະຫວ່າງຄວາມສຸກ ແລະຄຸນນະພາບການສຶກສາ ມີຄວາມສຳຄັນຢ່າງຍິ່ງ. ອົງປະກອບສອງຢ່າງນີ້ດຳເນີນຢູ່ຄູ່ກັນໄປ ແລະຮຽກຮ້ອງໃຫ້ພວກເຮົາເບິ່ງໄປໄກກວ່າວິທີການຮຽນຮູ້ຕາມປະເພນີທີ່ເຄີຍປະຕິບັດກັນມາ. ເມື່ອເວົ້າເຖິງລະບົບການສຶກສາ ພວກເຮົາຄວນເປີດໃຈຍອມຮັບພອນສະຫວັນ ແລະສະຕິປັນຍາທີ່ຫຼາກຫຼາຍ ດ້ວຍການຮັບຮູ້ຄ່ານິຍົມ, ຈຸດແຂງແລະຄວາມສາມາດ ຊຶ່ງຊ່ວຍສົ່ງເສີມຄວາມສຸກ ແລະຄວາມຢູ່ດີມີສຸກຂອງຜູ້ຮຽນ ພ້ອມທັງເຮັດໃຫ້ເຂົາເຈົ້າສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະຊື່ນຊົມຍິນດີກັບຜົນສຳເລັດຂອງຕົນເອງ.

ບົດລາຍງານນີ້ຍັງຮຽກຮ້ອງໃຫ້ມີການປ່ຽນແປງພື້ນຖານລະບົບການສຶກສານຳອີກ ໂດຍຮັບເອົາສິ່ງທີ່ຂ້າພະເຈົ້າເອີ້ນວ່າ 'ເສັ້ນແບ່ງໃໝ່' ລະຫວ່າງຄວາມຮູ້ແລະສະຕິປັນຍາທີ່ກ່ຽວຂ້ອງກັບດ້ານການຮຽນຮູ້ ຊຶ່ງມີຄວາມສຳຄັນເທົ່າກັບດ້ານວິຊາການ. ສິ່ງນີ້ເຊື່ອມໂຍງກັບວຽກຂອງພວກເຮົາ ທີ່ເວົ້າເຖິງການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ ຊຶ່ງແມ່ນພື້ນຖານສຳຄັນທີ່ສຸດສຳລັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ມັນຍັງພົວພັນກັບວຽກຂອງພວກເຮົາທີ່ເວົ້າກ່ຽວກັບ 'ຄວາມສາມາດໃນການຂ້າມຜ່ານ' ໂດຍໃຫ້ຄວາມສຳຄັນກັບສິ່ງທີ່ເອີ້ນວ່າ ທັກສະທີ່ບໍ່ແມ່ນລັກສະນະວິຊາການ ແລະຄວາມສາມາດຕ່າງໆ ເຊັ່ນ: ຄວາມຄິດສ້າງສັນ, ການສື່ສານ ແລະການເຮັດວຽກເປັນໝູ່ຄະນະກັບຄົນອື່ນໆ ຊຶ່ງທັງໝົດລ້ວນແຕ່ມີຄວາມສຳຄັນຫຼາຍຕໍ່ການກະກຽມຜູ້ຮຽນ ສຳລັບວຽກງານຢູ່ໂລກທີ່ບໍ່ມີການຈຳແນກເຊື້ອຊາດ ຊຶ່ງກຳລັງເພີ່ມທະວີຂຶ້ນ ແລະສຳລັບສັງຄົມໂລກ ຊຶ່ງກຳລັງປ່ຽນແປງຢ່າງທີ່ບໍ່ເຄີຍເປັນມາກ່ອນ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງເພື່ອນຮ່ວມງານ ທີ່ໃຊ້ຄວາມພະຍາຍາມເຮັດໃຫ້ໂຄງການໂຮງຮຽນໃຫ້ຄວາມສຸກກ້າວໄປຂ້າງໜ້າ ແລະເຮັດບົດລາຍງານທີ່ມີລັກສະນະສະເພາະນີ້ອອກມາ ຊຶ່ງພວກເຮົາເຊື່ອວ່າ ແມ່ນການປະກອບສ່ວນເບື້ອງຕົ້ນທີ່ສຳຄັນຢ່າງຍິ່ງ ເພື່ອຂະຫຍາຍວຽກງານດ້ານນີ້. ຂໍຂອບໃຈເປັນພິເສດຕໍ່ທ່ານ ກວາງ ຊອລ ຊາງ (Gwang Chol Chang) ຊຶ່ງເປັນຜູ້ອອກຫົວຄິດທຳອິດກ່ຽວກັບໂຄງການນີ້, ທ່ານ ມິນ ບິສຕາ (Min Bista) ທີ່ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງ, ທ່ານນາງ ຣັມຢາ ວິວການັນດາ (Ramya Vivekananda) ຜູ້ນຳພາໂຄງການນີ້ ແລະທ່ານນາງ ອາລີເອນອຣ໌ ຊາລມອນ (Alienor Salmon) ຊຶ່ງເປັນຜູ້ຂຽນບົດລາຍງານນີ້ ແລະປະສານງານກິດຈະກຳຂອງໂຄງ

ການ. ຂ້າພະເຈົ້າຮູ້ສຶກພາກພູມໃຈ ແລະປາຖະໜາຢາກໃຫ້ບົດລາຍງານນີ້ ເປັນບໍ່ເກີດຂອງ ແຮງບັນດານໃຈໃຫ້ແກ່ໂຮງຮຽນ, ຜູ້ກຳນົດນະໂຍບາຍແລະຜູ້ຊ່ຽວຊານທັງຫຼາຍ ເພື່ອໃຫ້ພວກເຮົານຳເອົາຄວາມສຸກກັບຄືນມາສູ່ໂຮງຮຽນ ແລະພ້ອມພາກັນສ້າງໂລກທີ່ມີຄວາມສັນຕິສຸກແລະຈະເລີນຮຸ່ງເຮືອງຫຼາຍຂຶ້ນ.

*Gwangjo Kim*

**ກວາງ ຈູ ກິມ**
ຜູ້ອຳນວຍການ
ອົງການຢູເນສໂກປະຈຳບາງກອກ

# ຄຳຄາລຶກບຸນຄຸນ

ຫ້ອງການອົງການຢູເນສໂກຢູ່ພາກພື້ນອາຊີແລະປາຊີຟິກເພື່ອການສຶກສາ (UNESCO Bangkok) ເປັນຜູ້ກະກຽມບົດລາຍງານລະດັບພາກພື້ນສະບັບນີ້. ບົດລາຍງານນີ້ສະເໜີສິ່ງທີ່ຄົ້ນພົບຈາກການສຶກສາຄົ້ນຄວ້າ ຊຶ່ງແມ່ນສ່ວນໜຶ່ງຂອງໂຄງການໂຮງຮຽນໃຫ້ຄວາມສຸກ. ທ່ານ ກວາງ ຊອລ ຊາງ (UNESCO Dakar, formerly UNESCO Bangkok) ຄິດໂຄງການນີ້ຂຶ້ນມາ ຊຶ່ງປະກອບດ້ວຍກິດຈະກຳແບບມີສ່ວນຮ່ວມຫຼາຍຢ່າງ ໂດຍແນໃສ່ຮັບໂຮມເອົາຄວາມຄິດເຫັນຈາກຜູ້ທີ່ມີສ່ວນຮ່ວມເກືອບ 30 ປະເທດຢູ່ພາກພື້ນອາຊີ-ປາຊີຟິກ ແລະນອກຈາກໂຮງຮຽນໃຫ້ຄວາມສຸກແລ້ວ ແມ່ນຫຍັງທີ່ມີຄວາມໝາຍສຳຄັນສຳລັບພວກເຂົາເຈົ້າ.

ການສຶກສາຄົ້ນຄວ້ານີ້ເກີດຂຶ້ນໄດ້ ຍ້ອນມີການປະກອບສ່ວນຈາກຜູ້ທີ່ມີສ່ວນຮ່ວມເຫຼົ່ານີ້ ດັ່ງນັ້ນ ພວກເຮົາຈຶ່ງຂໍສະແດງຄວາມຂອບໃຈມາຍັງບັນດານັກຮຽນ, ຄູ, ຜູ້ອຳນວຍການໂຮງຮຽນ, ພະນັກງານໂຮງຮຽນທີ່ໃຫ້ການຊ່ວຍເຫຼືອ ແລະສະມາຊິກມວນຊົນທົ່ວໄປ ຜູ້ທີ່ເຂົ້າຮ່ວມໃນການສຳຫຼວດໂຮງຮຽນໃຫ້ຄວາມສຸກໃນຄັ້ງນີ້. ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ຜູ້ຕາງໜ້າໂຮງຮຽນ ທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ໃນເດືອນມິຖຸນາ ປີ 2015 ລວມທັງຜູ້ທີ່ມາຈາກໂຮງຮຽນນາໆຊາດໃໝ່ (ປະເທດໄທ) ທີ່ມີນ້ຳໃຈເອື້ອເຟື້ອຮັບເປັນເຈົ້າພາບໃນການຈັດສຳມະນາ, ຜູ້ທີ່ມາຈາກໂຮງຮຽນມັດທະຍົມຕົ້ນ ພີມາກັຕເຊລ (ພູຖານ), ສະຖາບັນວິທະຍາສິລປ໌ (ອິນເດຍ), ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ), ໂຮງຮຽນມັດທະຍົມສາທິດ ຈຸລາລົງກອນ (ປະເທດໄທ), ໂຮງຮຽນທົດລອງມັດທະຍົມຕົ້ນ ທີ່ຂຶ້ນກັບສະຖາບັນວິທະຍາສາດການສຶກສາ (ຫວຽດນາມ). ພວກເຮົາຂອບໃຈນຳ ຣັຕຈະພອລ ຊູວັນນະໂຊຕ ປະຈຳສູນຂ່າວເດັກນ້ອຍແລະຊາວໜຸ່ມອາຊຽນ ທີ່ໄດ້ຈັດກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນປະເທດອາຊຽນ ໃນເດືອນພະຈິກ ປີ 2014 ແລະຜູ້ຕາງໜ້າໂຮງຮຽນໝົດທຸກຄົນທີ່ມາເຂົ້າຮ່ວມ.

ຣັມຢາ ວິວການັນດັນ (Ramya Vivekanandan) ປະຈຳອົງການຢູເນສໂກທີ່ບາງກອກ ເປັນຜູ້ປະສານງານລວມ ເພື່ອກະກຽມບົດລາຍງານລະດັບພາກພື້ນນີ້. ອາລີເອນໍຣ໌

ຊາລມອນ (Alienor Salmon) ຜູ້ທີ່ອອກແບບແນວຄິດລວມແລະກິດຈະກໍາຕ່າງໆ ລວມທັງວິທີການວິໄຈໂຄງການ ເປັນຄົນຂຽນບົດລາຍງານນີ້. ທີມງານທົບທວນໂຄງການປະຈໍາອົງການຢູເນສໂກທີ່ບາງກອກ ຊຶ່ງປະກອບດ້ວຍ ກວາງ ຊອລ ຊາງ (Gwang Chol Chang), ມິນ ບິສຕາ (Min Bista) ທີ່ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງ, ຣັມຢາ ວິວການັນດາ (Ramya Vivekananda) ໄດ້ປະກອບສ່ວນຢ່າງມີຄຸນຄ່າໃຫ້ແກ່ໂຄງການ ສ່ວນ ຣັຕສະກອນ ກຸນຊາເວດ (Ratchakorn Kulsawet) ໃຫ້ການຊ່ວຍເຫຼືອດ້ານວິຊາການ.

ບົດລາຍງານນີ້ບໍ່ອາດເກີດຂຶ້ນໄດ້ ຖ້າຫາກບໍ່ມີການປະກອບສ່ວນຂອງພະນັກງານເກົ່າ ແລະທີ່ມີຢູ່ປັດຈຸບັນ ທັງທີມງານລົງຝຶກຫັດຕ່າງໆຂອງອົງການຢູເນສໂກທີ່ບາງກອກ. ເຂົາເຈົ້າແຕ່ລະຄົນໄດ້ເຮັດບົດບາດສະເພາະຕາມວິທີການຂອງຕົນເອງ. ພວກເຮົາຂໍຂອບໃຈນໍາ ມາກາເຣັຕ ແອບໂພ ຊູມາກເກີຣ໌ (Magaret Appel-Schumacher), ນະໂອໂກະ ອາຊາໂນະ ເອໂນໂມໂຕະ (Naoko Asano-Enomoto), ປັນດາຣີ ບຸນເກີດ (Pundaree Boonkerd), ຈິນ ເອ ຮະວັງ (Jin A Hwang), ຊາກິ ກິຊິໂມໂຕະ (Saki Kishimoto), ຊັງຊຸນ ຄະວອນ (Sangsun Kwon), ເຣໂຊລ ແມັກຄາຣ໌ທີ (Rachel McCarthy), ຢູໂກະ ນາກະຊາກະ (Yuko Nagasaka), ທະນະທິຢາ ໂປຕິມູ (Thanattiya Potimu), ໄຣໂຢໂກະ ຊູຊູກິ (Ryoko Suzuki), ແອໂທນີ ແທັມ (Antony Tam), ເທີກາດັນ ທາຊີໂບໂລຕອບ (Turdakan Tashibolotov), ໂກເຮອິ ຢາມາດະ (kohei Yamada) ແລະ ລຽງ ຊີ ຢາບ (Lian Chee Yap). ເອລລີ ເມລາຍຊີ (Ellie Meleisea) ຊຶ່ງເປັນຜູ້ກວດແກ້ບົດລາຍງານນີ້ ສ່ວນ ວາຣເຣັນ ຟີລດ໌ (Warren Field) ແລະ ແຄທ໌ລີນ ຊູລີແວນ (Kathleen Sullivan) ພວກເຮົາຍອມຮັບດ້ວຍຄວາມຈິງໃຈ ສໍາລັບການອອກແບບແລະວຽກກຣາຟິກຕ່າງໆຂອງພວກເຂົາເຈົ້າ.

ພວກເຮົາຂໍສະແດງຄວາມຂອບໃຈນໍາສະມາຊິກເພື່ອນຮ່ວມງານ ທີ່ດໍາເນີນກອງປະຊຸມໃຫຍ່ ເພື່ອທົບທວນໂຄງການທີ່ໄດ້ໃຫ້ທິດຊີ້ນໍາແລະຄວາມຄິດເຫັນດ້ານວິຊາການ ຊຶ່ງປະກອບດ້ວຍ ຟລໍເຣັນສ໌ ມີເຈີນ (Florence Migeon), ຄຣິສ໌ ແຄສໂຊ (Chris Castle), ຄຣິສ໌ຕົຟ ຄອຣນູ (Christophe Cornu), ເທໂອຟາເນຍ ຊາວັຕເຊຍ (Theophania Chavatzia), ຮວງ ລີ ທຸຍ (Huong Le Thu) ແລະ ຄາຣ໌ລອສ ວາຣ໌ກາສ໌ ຕາເມສ໌ (Carlos Vargas Tamez) ປະຈໍາຫ້ອງການໃຫຍ່ອົງການຢູເນສໂກ, ອຸຕັກ ຈຸງ (Utak Chung)

ແລະ ເຮ່ເຣັນ ຢັງ (Hye-Ran Yang) ປະຈຳສູນອາຊີ-ປາຊີຟິກກ່ຽວກັບການສຶກສາ ເພື່ອຄວາມເຂົ້າໃຈລະຫວ່າງປະເທດ (APCEIU), ຟຣານແຊສກາ ບໍຣ໌ໂກໂນວີ (Francesca Borgonovi) ປະຈຳອົງການຮ່ວມມືດ້ານເສດຖະກິດແລະການພັດທະນາ (OECD), ລີມ ລາຍ ເຊັງ (Lim Lai Cheng) ປະຈຳສະຖາບັນການເປັນຜູ້ນຳພາກສັງຄົມ ທີ່ມະຫາວິທະຍາໄລການບໍລິຫານຂອງສິງກະໂປ ແລະ ມາຕິນ ເຊລິກມັນ (Martin Seligman) ປະຈຳສູນຈິດຕະສາດທາງບວກ ຢູ່ມະຫາວິທະຍາໄລ ເພັນຊີວາເນຍ (University of Pennsylvania).

ທ້າຍສຸດນີ້ ພວກເຮົາຂໍຂອບໃຈນຳຜູ້ທີ່ມີລາຍຊື່ສົ່ງຜົນງານເຂົ້າປະກວດການແຂ່ງຂັນງານສິລະປະກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ຮູບພາບຂອງເຂົາເຈົ້າລ້ວນແຕ່ສະແດງອອກເຖິງຄວາມມີຊີວິດຊີວາແລະຄວາມສຸກຂອງຊີວິດ ຊຶ່ງພວກເຮົາໄດ້ຍົກເອົາມາເປັນຕົວຢ່າງຜົນງານຄຸນນະພາບຢູ່ໃນບົດລາຍງານ. ອັນນີ້ໄດ້ຊ່ວຍໃຫ້ແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກປະກົດຜົນເປັນຈິງຫຼາຍຂຶ້ນ.

# ສັງລວມໂດຍຫຍໍ້

ມະນຸດທຸກຄົນປາຖະໜາຢາກມີຄວາມສຸກ ດັ່ງທີ່ນັກປຣັດຊະຍາ ອາຣິສໂຕເຕິລ (Aristotle) ມັກເວົ້າສະເໝີວ່າ 'ຄວາມສຸກຄືຄວາມໝາຍແລະຈຸດປະສົງຂອງຊີວິດ ຊຶ່ງແມ່ນຈຸດໝາຍປາຍທາງໃນການດຳລົງຢູ່ຂອງມະນຸດນັ້ນເອງ' (Crisp, 2000). ຄວາມຈິງແລ້ວ ທັງໝົດທີ່ມະນຸດພະຍາຍາມໄຂວ່ຄວ້າມາຕະຫຼອດຊີວິດ ນັບຕັ້ງແຕ່ມືນຕາຂຶ້ນມາສູ່ໂລກ ກໍແມ່ນການສະແຫວງຫາສິ່ງນີ້ ຄືການໄດ້ສຳຜັດລົດຊາດຂອງຄວາມສຸກນັ້ນເອງ. ປະສົບການຈາກການເຂົ້າໂຮງຮຽນ ອາດແມ່ນສິ່ງທີ່ມີບົດບາດຫຼາຍທີ່ສຸດຂອງຄວາມພະຍາຍາມສະແຫວງຫາສິ່ງເຫຼົ່ານີ້ ໂດຍສະເພາະແມ່ນວິຖີການດຳລົງຊີວິດຂອງພວກເຮົາ. ໂຮງຮຽນທີ່ສາມາດສົ່ງເສີມໃຫ້ເກີດຄວາມສຸກໄດ້ ຊຶ່ງມີການເວົ້າເຖິງຢູ່ໃນບົດລາຍງານນີ້ຄື 'ໂຮງຮຽນໃຫ້ຄວາມສຸກ' ແມ່ນຫົວໃຈສຳຄັນເພື່ອຮັບປະກັນເຮັດໃຫ້ຄວາມຢູ່ດີມີສຸກ, ສຸຂະພາບ, ສິ່ງທີ່ບັນລຸແລະຜົນສຳເລັດດີຂຶ້ນຢູ່ໃນຊີວິດ ລວມທັງການງານໃນອະນາຄົດ. ລະບົບການສຶກສາຕ້ອງເຫັນຄຸນຄ່າຈຸດແຂງແລະພອນສະຫວັນສະເພາະຂອງຜູ້ຮຽນ ດ້ວຍການຍອມຮັບວ່າຄົນເຮົາ 'ມີສະຕິປັນຍາຫຼາຍຢ່າງທີ່ແຕກຕ່າງກັນ' ຊຶ່ງແຕ່ລະຢ່າງກໍມີຄວາມສຳຄັນເທົ່າທຽມກັນ (Gardner, 1993). ເຊັ່ນການສົ່ງເສີມຄວາມສຸກ ແລະຄວາມຢູ່ດີມີສຸກຢູ່ໃນໂຮງຮຽນ ບໍ່ໝາຍຄວາມວ່າເຮັດໃຫ້ການຮຽນຮູ້ງ່າຍຂຶ້ນແລະໃຊ້ຄວາມພະຍາຍາມໜ້ອຍລົງ ແຕ່ວິທີການແບບນີ້ສາມາດຊ່ວຍກະຕຸ້ນໃຫ້ຮັກໃນການຮຽນຮູ້ໃນຕົວມັນເອງຢ່າງແທ້ຈິງ.

ປັດໄຈທັງພາຍໃນແລະພາຍນອກຫຼາຍຢ່າງກຳລັງທຳລາຍຄວາມສຸກຂອງຜູ້ຮຽນ ຊຶ່ງມີອິດທິພົນຕໍ່ມິຕິຂອງພວກເຮົາກ່ຽວກັບຄຸນນະພາບຊີວິດ ແລະຄຸນນະພາບການສຶກສານຳອີກ. ບັນຫາທຳອິດ ປັດໄຈພາຍນອກເຮັດໃຫ້ຄວາມບໍ່ເທົ່າທຽມກັນແລະການບໍ່ຍອມຮັບຄວາມຄິດຂອງຄົນອື່ນກຳລັງຂະຫຍາຍຕົວ ທັງເຮັດໃຫ້ລັດທິໃຊ້ຄວາມຮຸນແຮງສຸດຂົ້ວເພີ່ມທະວີຂຶ້ນ ຊຶ່ງທັງໝົດນີ້ລ້ວນແຕ່ກໍ່ໃຫ້ເກີດສັງຄົມທີ່ບໍ່ມີຄວາມສຸກ. ຜົນທີ່ຕາມມາກໍຄື ໂຮງຮຽນຕ່າງໆກຳລັງຜະເຊີນໜ້າກັບກໍລະນີທະເລາະວິວາດກັນເພີ່ມຂຶ້ນຢູ່ພາຍໃນໂຮງຮຽນ ໃນຂະນະດຽວກັນ ຜູ້ທີ່ຢູ່ໃນໂຮງຮຽນກໍຕົກເປັນເປົ້າໃຫ້ຄົນພາຍນອກເຂົ້າມາໃຊ້ຄວາມຮຸນແຮງ. ຄວາມກ້າວໜ້າທາງດ້ານເຕັກໂນໂລຊີໄດ້ຍູ້ດັນໂລກເຮົາກ້າວໄປຢ່າງໄວວາ ເຮັດໃຫ້ມະນຸດເຮົາມີການແຂ່ງຂັນແລະ 'ການແບກຮັບເອົາຂໍ້ມູນຫຼາຍເກີນໄປ' ນຳໄປສູ່ການຊ່ວງຊີງ

ກັນຢ່າງບໍ່ສິ້ນສຸດ ເປັນເຫດໃຫ້ພວກເຮົາສົນໃຈນຳແຕ່ເລື່ອງ 'ຕົວເລກ' ຫຼາຍຂຶ້ນ ບໍ່ວ່າຈະແມ່ນເກນວັດການພັດທະນາທາງດ້ານເສດຖະກິດ ຫຼືດ້ານຜົນການສຶກສາກໍຕາມ. ບັນຫາທີສອງ ປັດໄຈພາຍໃນຢູ່ໃນລະບົບຂອງໂຮງຮຽນ ເຊັ່ນ: ສະພາບແວດລ້ອມຂອງການຮຽນຮູ້ທີ່ບໍ່ດີ, ຄວາມບໍ່ເຂົ້າໃຈບັນຫາລະອຽດອ່ອນຂອງນັກການສຶກສາ, ຫຼັກສູດທີ່ລ້າສະໄໝ, ລວມທັງເນັ້ນໃສ່ເນື້ອຫາທາງວິຊາການ ແລະຄະແນນສອບເສັງຫຼາຍເກີນໄປ ທັງໝົດນີ້ລ້ວນແຕ່ພາໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໄດ້ສ້າງຄວາມສຸກໃຫ້ແກ່ຜູ້ຮຽນເລີຍ. ແຕ່ເປັນໜ້າເສຍດາຍທີ່ຜູ້ຄົນສ່ວນໃຫຍ່ເຫັນວ່າ ອົງປະກອບເຫຼົ່ານີ້ເປັນສິ່ງທີ່ສົ່ງເສີມເຮັດໃຫ້ເກີດຄວາມສຸກ ບໍ່ວ່າຈະຢູ່ໃນໂຮງຮຽນ, ຊີວິດຫຼືການງານ ແລະມີພຽງຄົນສ່ວນໜ້ອຍທີ່ຄິດວ່າມັນເປັນພຽງສ່ວນໜຶ່ງຂອງການຄິດຄຳນວນດ້ານຄະນິດສາດເທົ່ານັ້ນ.

ແນວໃດກໍດີ ໃນຊຸມປີຜ່ານມາ ຜູ້ຄົນຍອມຮັບເອົາຄວາມສຸກເຂົ້າມາບັນຈຸຢູ່ໃນວາລະຂອງໂລກ ລວມທັງຢູ່ໃນນະໂຍບາຍການພັດທະນາ ແລະການສຶກສາຂອງປະເທດຕ່າງໆ ໂດຍຖືເອົາເປັນເປົ້າໝາຍສຳຄັນທີ່ຈະຕ້ອງບັນລຸໃຫ້ໄດ້. ຕົວຢ່າງທີ່ປະກົດໃຫ້ເຫັນຢູ່ໃນຍັດຕິກອງປະຊຸມໃຫຍ່ຂອງອົງການສະຫະປະຊາຊາດ ປີ 2011 ໄດ້ໃຫ້ຄວາມສຳຄັນໃນເລື່ອງຄວາມສຸກ ແລະມີການກ່າວເຖິງຄວາມຢູ່ດີມີສຸກຢູ່ທົ່ວເປົ້າໝາຍຂອງການພັດທະນາທີ່ຍືນຍົງ. ຄວາມພະຍາຍາມເພີ່ມຂຶ້ນໃນການວັດຄວາມສຸກ ໄດ້ມາບັນຈົບກັນພໍດີກັບຄວາມພະຍາຍາມໃນການວັດຄຸນນະພາບການສຶກສາ ເຫັນໄດ້ຈາກຕົວຢ່າງການໃຊ້ດັດສະນີຊີ້ວັດລະດັບໂລກ ແລະການປະເມີນຄວາມສາມາດທາງດ້ານວິຊາການຂອງນັກຮຽນລະຫວ່າງປະເທດ.

ເນື່ອງຈາກເຫັນຄວາມສຳຄັນຂອງການເຊື່ອມໂຍງກັນລະຫວ່າງຄວາມສຸກແລະຄຸນນະພາບການສຶກສາ ອົງການຢູເນສໂກປະຈຳບາງກອກຈຶ່ງເລີ່ມເຮັດໂຄງການໂຮງຮຽນໃຫ້ຄວາມສຸກ ໃນເດືອນມິຖຸນາ ປີ 2014. **ບົດລາຍງານນີ້ນຳສະເໜີໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ ແລະມີຈຸດມຸ່ງໝາຍຢາກເອົາອົງປະກອບສອງຢ່າງນີ້ມາລວມເຂົ້າກັນ ໂດຍຮຽກຮ້ອງໃຫ້ມີການປ່ຽນແປງລະບົບການສຶກສາ ຈາກມາດຕະການທີ່ເຄີຍປະຕິບັດກັນມາເປັນການຍອມຮັບພອນສະຫວັນແລະສະຕິປັນຍາທີ່ຫຼາກຫຼາຍ ດ້ວຍການຮັບຮູ້ຄ່ານິຍົມ, ຈຸດແຂງແລະຄວາມສາມາດຊຶ່ງມີສ່ວນຊ່ວຍສົ່ງເສີມໃຫ້ເກີດຄວາມສຸກ.** ເວົ້າອີກແນວໜຶ່ງຄືຮຽກຮ້ອງໃຫ້ລະບົບການສຶກສາຈຳເປັນຕ້ອງ 'ວັດສິ່ງທີ່ພວກເຮົາເຫັນວ່າມີຄຸນຄ່າ' ຄື: 'ເມື່ອທ່ານເຫັນວ່າສິ່ງໃດມີຄຸນຄ່າ ທ່ານຈຶ່ງວັດສິ່ງນັ້ນ. ຖ້າໂຮງຮຽນບໍ່ວັດຄວາມຢູ່ດີມີສຸກຂອງນັກ

ຮຽນຂອງຕົນ ແຕ່ໄປວັດການພັດທະນາດ້ານສະຕິປັນຍາແລ້ວ ຜູ້ຄົນມັກຄິດເຖິງສະຕິປັນຍາຂອງຜູ້ຮຽນມາກ່ອນສະເໝີ' (Layard and Hagell, 2015). ເພື່ອແນໃສ່ປ່ຽນແປງຄວາມຄິດຂອງຜູ້ກຳນົດນະໂຍບາຍ ກໍຄືເຮັດໃຫ້ມີສ່ວນຮ່ວມໃນລະດັບໂຮງຮຽນ ພວກເຮົາຈຶ່ງຫວັງວ່າ ບົດລາຍງານແລະໂຄງປະກອບໂຮງຮຽນໃຫ້ຄວາມສຸກໃນທີ່ນີ້ ຈະໃຫ້ຂໍ້ມູນອ້າງອີງທີ່ສຳຄັນ ເພື່ອທົບທວນຄືນໃໝ່ໃນເລື່ອງແນວຄິດກ່ຽວກັບຄຸນນະພາບຂອງການຮຽນ ເພື່ອກ້າວຂ້າມຂະແໜງດ້ານວິຊາການທີ່ມີຂໍ້ຈຳກັດ.

ບົດລາຍງານນີ້ສະເໜີສິ່ງທີ່ຄົ້ນພົບຈາກການສຶກສາຄົ້ນຄວ້າໂດຍອີງໃສ່ວິທີການວິໄຈຫຼາຍຢ່າງ ຊຶ່ງປະກອບດ້ວຍການສຶກສາຄົ້ນຄວ້າຈາກແຫຼ່ງຂໍ້ມູນຕ່າງໆຢູ່ທີ່ຫ້ອງການ, ການສຳຫຼວດ, ການສຳມະນາ ແລະກອງປະຊຸມວິຊາການກັບຜູ້ມີສ່ວນຮ່ວມໃນລະດັບໂຮງຮຽນ. ບົດລາຍງານນີ້ໄດ້ສຶກສາບໍລິບົດ ໃນລະດັບພາກພື້ນທາງດ້ານທິດສະດີກ່ຽວກັບຄວາມສຸກ, ການລິເລີ່ມໃນລະດັບໂລກ ແລະຄວາມສຸກສະທ້ອນໃຫ້ເຫັນແນວໃດ ຢູ່ໃນນະໂຍບາຍດ້ານການພັດທະນາ ແລະການສຶກສາຂອງປະເທດທີ່ໄດ້ຮັບການຄັດເລືອກຢູ່ໃນພາກພື້ນອາຊີ-ປາຊີຟິກ. ຕໍ່ມາ ບົດລາຍງານນີ້ສະເໜີຜົນສຳຄັນທີ່ໄດ້ຮັບຈາກການສຶກສາຄົ້ນຄວ້າເທື່ອນີ້ຄື: ໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ ຊຶ່ງມີ 22 ມາດຖານ ລວມທັງຕົວຢ່າງຍຸດທະສາດ ເພື່ອບັນລຸມາດຖານແຕ່ລະຢ່າງຢູ່ໃນໂຮງຮຽນຕ່າງໆນຳອີກ.

# ບໍລິບົດໃນລະດັບໂລກແລະພາກພື້ນ

## ທິດສະດີກ່ຽວກັບຄວາມສຸກ

ນັບຕັ້ງແຕ່ນັກປຣັດຊະຍາສະໄໝບູຮານຈົນມາຮອດປັດຈຸບັນ ຄວາມສຸກມັກແມ່ນເລື່ອງທີ່ຜູ້ຄົນສົນໃຈໃນການຊອກຄົ້ນຫາ. ເມື່ອພິຈາລະນາຄຳນິຍາມຕ່າງໆກ່ຽວກັບຄວາມສຸກຂອງບັນດານັກຄິດສະໄໝບູຮານທັງຫຼາຍ ເຊັ່ນ: ພະພຸດທະເຈົ້າ, ອາຣິສໂຕເຕິລ (Aristot-le), ຂົງຈື້ (Confucius) ລວມທັງ 'ນັກຄິດສະໄໝຍຸກແສງສະຫວ່າງທາງປັນຍາຈົນມາຮອດປັດຈຸບັນນີ້ ສາມາດລະບຸຫຼາຍຢ່າງທີ່ຄ້າຍຄືກັນ ຊຶ່ງແມ່ນຫົວໃຈສຳຄັນຂອງໂຮງຮຽນໃຫ້ຄວາມສຸກ. ອັນທຳອິດ ຄວາມສຸກຖືວ່າແມ່ນບາງຢ່າງທີ່ສ້າງຂຶ້ນຮ່ວມກັນໄດ້ ອີງໃສ່ການ

ເປັນເພື່ອນມິດແລະຄວາມສຳພັນອັນດີທີ່ມີຕໍ່ກັນ. ດັ່ງທີ່ລະບຸໄວ້ໃນທັມມະປາດະ *(The Dhammapada)* ຫຼືຄຳສອນຂອງພະພຸດທະເຈົ້າທີ່ບອກວ່າ 'ຄວາມສຸກຄືການມີເພື່ອນມິດໃນຍາມຈຳເປັນ' (Fronsdal, 2005, p. 80). ອັນທີສອງ ນັກປຣັດຊະຍາເຫຼົ່ານີ້ບອກວ່າ ຄວາມສຸກແມ່ນບາງຢ່າງທີ່ມະນຸດສາມາດຮຽນຮູ້ໄດ້ ແລະການຮຽນແມ່ນບໍ່ເກີດຂອງຄວາມສຸກໃນຕົວມັນເອງ ຊຶ່ງສາມາດຊອກສະແຫວງຫາໄດ້ ດ້ວຍການທຳຄຸນງາມຄວາມດີ, ສົ່ງເສີມຄຸນຄ່າແລະຄວາມສາມາດທີ່ກ່ຽວຂ້ອງກັບຊີວິດຂອງຄົນເຮົາ (Beebe, 2003; Yao, 2003). ອັນສຸດທ້າຍ ບຸກຄົນສຳຄັນເຫຼົ່ານີ້ຕ່າງກໍຍອມຮັບວ່າ ການສຶກສາແມ່ນບາງຢ່າງທີ່ມີຫຼາຍມິຕິທີ່ສຳຄັນ (Newman, 2010; Jowett, n.d).

ນັກຄິດໃນຍຸກແສງສະຫວ່າງທາງປັນຍາ ເຊັ່ນ: ຈອຫ໌ນ ລອຄ (John Locke) ແລະໂຈຮານ ແປສໂຕລາຊີ (Johan Pestolassi) ຍັງຄົ້ນຄວ້າລັກສະນະຂອງການສຶກສາໃນຫຼາຍມິຕິ ແລະບອກວ່າ ການສຶກສາຄວນຮັບປະກັນໃຫ້ຜູ້ຮຽນມີການພັດທະນາການທາງດ້ານສະຕິປັນຍາ, ທາງອາລົມຄວາມຮູ້ສຶກແລະທາງດ້ານຮ່າງກາຍ (Aldrich, 1994; Bruhlmeter, 2010). ການເຄື່ອນໄຫວກ່ຽວກັບຈິດຕະສາດທາງບວກໄດ້ຖືກຄົ້ນພົບໃນຊຸມປີ 1990 ແລະຜູ້ຄົນມັກບອກວ່າ ແມ່ນ 'ສາດແຫ່ງຄວາມສຸກ' ຊຶ່ງຍອມຮັບ 'ຈຸດແຂງທາງດ້ານບຸກຄະລິກ' ຫຼາຍຢ່າງທີ່ສົ່ງເສີມຄວາມສຸກ ເຊັ່ນ: ຄວາມຄິດສ້າງສັນ, ຄວາມພາກພຽນພະຍາຍາມ, ຄວາມມີຈິດໃຈດີແລະການເຮັດວຽກເປັນໝູ່ຄະນະຮ່ວມກັບຄົນອື່ນໆ (Peterson and Seligman, 2004) ທັງເປັນການພັດທະນາທີ່ດີນຳອີກ. ໂດຍອີງໃສ່ຈິດຕະສາດທາງບວກ ເຄືອຂ່າຍການສຶກສາທາງບວກລະຫວ່າງປະເທດໄດ້ໃຫ້ຄຳນິຍາມການສຶກສາທາງບວກວ່າ ແມ່ນກຽວຄູ່ດ້ານວິຊາການ ຊຶ່ງປະກອບດ້ວຍສອງຢ່າງຄື: ຄວາມຢູ່ດີມີສຸກແລະບຸກຄະລິກ (IPEN, 2016b) ໂດຍມີສິ່ງຢືນຢັນສະແດງໃຫ້ເຫັນວ່າ ຄວາມຢູ່ດີມີສຸກທີ່ຫຼາຍຂຶ້ນຄຽງຄູ່ໄປກັບການຮຽນທີ່ດີຂຶ້ນ (Seligman et. Al., 2009).

## ການລິເລີ່ມໃນລະດັບໂລກ

ປັດຈຸບັນ ຄວາມສຸກໄດ້ກາຍເປັນວາລະສູງສຸດຂອງນະໂຍບາຍລະດັບໂລກໄປແລ້ວ ໂດຍຍັດຕິກອງປະຊຸມໃຫຍ່ຂອງອົງການສະຫະປະຊາດໃນປີ 2011 ຍອມຮັບວ່າ ການສະແຫວງຫາຄວາມສຸກແມ່ນເປົ້າໝາຍສຳຄັນຂອງມະນຸດ (United Nations General Assembly, 2011). ການພັດທະນາທີ່ຍືນຍົງຍັງສົ່ງເສີມຄວາມຢູ່ດີມີສຸກຢູ່ໃນຈຸດປະສົງ

ແລະເປົ້າໝາຍຕ່າງໆ. ເປົ້າໝາຍການພັດທະນາທີ່ຍືນຍົງທີ 4 ໄດ້ໃຫ້ຄວາມສຳຄັນກ່ຽວກັບຄຸນນະພາບການສຶກສາ ແລະເວົ້າເຖິງຫຼາຍແງ່ມຸມທີ່ກ່ຽວຂ້ອງຢ່າງຫຼວງຫຼາຍກັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ໂດຍສະເພາະເປົ້າໝາຍ 4.7 ແນໃສ່ໃຫ້ຜູ້ຮຽນມີຄວາມຮູ້ ແລະທັກສະທີ່ສາມາດສົ່ງເສີມໃຫ້ມີການພັດທະນາທີ່ຍືນຍົງ ດ້ວຍການສຶກສາເພື່ອເປັນພົນລະເມືອງຂອງໂລກແລະວັດທະນະທຳສັນຕິສຸກ. ການໃຫ້ຄວາມສຳຄັນໃນດ້ານທັກສະທີ່ກ່ຽວພັນກັບການປະພຶດແລະລັກສະນະພິເສດຂອງຄົນເຮົາ ເຊັ່ນ: ຄວາມຄິດສ້າງສັນ, ຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ, ການເຮັດວຽກເປັນໝູ່ຄະນະແລະການສື່ສານກັນ ສະທ້ອນໃຫ້ເຫັນ ‘ຈຸດແຂງທາງດ້ານບຸກຄະລິກ’ ຊຶ່ງລະບຸໄວ້ຢູ່ໃນຈິດຕະສາດທາງບວກວ່າແມ່ນສິ່ງຈຳເປັນ ເພື່ອສົ່ງເສີມຄວາມສຸກແລະການຢູ່ດີມີສຸກ. ສິ່ງເຫຼົ່ານີ້ຍັງສະທ້ອນໃຫ້ເຫັນຢູ່ໃນແນວຄິດຂອງອົງການຢູເນສໂກ ກ່ຽວກັບການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນແລະການຮຽນຮູ້ເພື່ອຄວາມເປັນມະນຸດ. ການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນເນັ້ນໃສ່ຄວາມເຂົ້າອົກເຂົ້າໃຈຄົນອື່ນ ສ່ວນການຮຽນຮູ້ເພື່ອຄວາມເປັນມະນຸດນັ້ນ ເນັ້ນໃສ່ຄວາມຫຼາກຫຼາຍທາງດ້ານລັກສະນະສ່ວນຕົວແລະການສະແດງອອກຂອງຜູ້ຮຽນ (Delors et. Al., 1996; Faure et. Al., 1972)

ການລິເລີ່ມອື່ນໆໃນລະດັບໂລກຍັງໄດ້ຊອກຫາວິທີວັດຄວາມສຸກແລະຄວາມຢູ່ດີມີສຸກເຊັ່ນດຽວກັນ. ສິ່ງເຫຼົ່ານີ້ປະກອບດ້ວຍຄວາມພະຍາຍາມໃນການວັດຄວາມສຸກແລະຄວາມຢູ່ດີມີສຸກໃນລະດັບປະເທດ ໂດຍໃຊ້ດັດສະນີຊີ້ວັດລະດັບໂລກເຊັ່ນ: *ບົດລາຍງານກ່ຽວກັບຄວາມສຸກຢູ່ໃນໂລກ,* ດັດສະນີຊີ້ວັດຄວາມສຸກຢູ່ໃນໂລກ, ການສຳຫຼວດຄ່ານິຍົມຢູ່ໃນໂລກແລະດັດສະນີຊີ້ວັດຊີວິດທີ່ດີຂຶ້ນ. ໃນລັກສະນະດຽວກັນນີ້ ກໍມີຄວາມພະຍາຍາມວັດຄວາມສຸກຂອງນັກຮຽນແລະຄົ້ນຫາຄວາມເຊື່ອມໂຍງກັນລະຫວ່າງຄວາມສຸກ ແລະຜົນຂອງການຮຽນຮູ້, ໂຄງການປະເມີນຄວາມສາມາດທາງດ້ານວິຊາການຂອງນັກຮຽນລະຫວ່າງປະເທດຊຶ່ງແມ່ນໜຶ່ງໃນວິທີວັດທີ່ສຳຄັນກ່ຽວກັບຜົນສຳເລັດດ້ານການຮຽນຮູ້ຂອງນັກຮຽນລະຫວ່າງປະເທດ ທີ່ປະກອບດ້ວຍຕົວບົ່ງຊີ້ກ່ຽວກັບຄວາມສຸກຂອງນັກຮຽນ ຢູ່ໃນການປະເມີນໃນປີ 2012 ແລະຈະຄົ້ນຫາຄວາມເຊື່ອມໂຍງກັນລະຫວ່າງຄວາມຢູ່ດີມີສຸກແລະຜົນຂອງການຮຽນໃນປີ 2018 (OECD, 2015a).

## ຄວາມສຸກຢູ່ໃນນະໂຍບາຍ

ໃນຊຸມປີຜ່ານມາ ປະເທດຕ່າງໆໄດ້ເອົາຄວາມສຸກບັນຈຸເຂົ້າຢູ່ໃນເປົ້າໝາຍສະເພາະຂອງນະໂຍບາຍດ້ານການພັດທະນາແລະການສຶກສາຂອງຕົນ ຫຼືເອົາອົງປະກອບທີ່ກ່ຽວຂ້ອງກັບຄວາມສຸກ ບັນຈຸເຂົ້າໃນກອບນະໂຍບາຍ. ບົດລາຍງານນີ້ໄດ້ສຶກສານະໂຍບາຍໂດຍສັງເຂບຂອງຫ້າປະເທດ ເຊັ່ນ: ພູຖານ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ສິງກະໂປ ແລະອາບູດາບີ ຊຶ່ງແຕ່ລະປະເທດມີການແປຄວາມໝາຍຂອງຄວາມສຸກແລະຄວາມຢູ່ດີມີສຸກຕາມລັກສະນະສະເພາະຂອງຕົນເອງ.

ຜູ້ຄົນຮູ້ຈັກ**ປະເທດພູຖານ** ຍ້ອນນະໂຍບາຍຄວາມສຸກມວນລວມຂອງຊາດ Gross National Happiness (GNH) ແລະໃນປີ 2010 ພູຖານໄດ້ສ້າງດັດສະນີຊີ້ວັດຄວາມສຸກມວນລວມຂອງຊາດ ໂດຍກຳນົດຕົວບົ່ງຊີ້ເພື່ອວັດດ້ານຕ່າງໆຂອງການສຶກສາ ແລະຄວາມຢູ່ດີມີສຸກທາງດ້ານຈິດຕະສາດ. ນະໂຍບາຍຂອງພູຖານໃນປີ 2011 ກ່ຽວກັບການໃຫ້ຄວາມຮູ້ເລື່ອງຄວາມສຸກມວນລວມຂອງຊາດ ໄດ້ຊອກຫາວິທີນຳໃຊ້ການສຶກສາ ເພື່ອເປັນຊ່ອງທາງບັນລຸຄວາມສຸກມວນລວມຂອງຊາດ, ໃຫ້ຄວາມສຳຄັນຕໍ່ຄວາມຍືນຍົງ ແລະການປົກປັກຮັກສາສິ່ງແວດລ້ອມ ໃນຂະນະດຽວກັນກໍສົ່ງເສີມແນວຄິດກ່ຽວກັບ 'ໂຮງຮຽນສີຂຽວເພື່ອປະເທດພູຖານສີຂຽວ' (Drapka and Dorji, 2013).

ຢູ່**ປະເທດຍີ່ປຸ່ນ** ຫ້ອງການຄະນະລັດຖະມົນຕີໄດ້ຕັ້ງຄະນະກຳມາທິການກ່ຽວກັບການວັດຄວາມຢູ່ດີມີສຸກໃນປີ 2010 ແລະເຮັດການສຳຫຼວດຄຸນນະພາບຊີວິດເປັນເທື່ອທຳອິດໃນປີ 2012 ເພື່ອແກ້ໄຂຄວາມວິຕົກກັງວົນທີ່ມີເພີ່ມຂຶ້ນຢູ່ໃນປະເທດກ່ຽວກັບບັນຫາສຸຂະພາບຈິດ ແລະຄວາມກົດດັນທີ່ຢູ່ໃນລະດັບສູງ ທັງສິ່ງທີ່ເກີດຂຶ້ນກັບເດັກນ້ອຍນຳອີກ. ອີງຕາມຜົນສຳຫຼວດໃນປີ 2010 ກ່ຽວກັບການດຳລົງຊີວິດໃນປະເທດນີ້ ຜູ້ທີ່ຕອບຄຳຖາມຊຶ່ງມີອາຍຸ 12 ຫາ 19 ປີ ລາຍງານວ່າ ສາເຫດຫຼັກທີ່ພາໃຫ້ເກີດຄວາມກົດດັນນັ້ນກ່ຽວຂ້ອງກັບຜົນການຮຽນ ແລະການສອບເສັງຕ່າງໆທາງດ້ານວິຊາການ (Ministry of Health, Labour and Welfare [Japan], 2010). ຢູ່ໃນການສຶກສາ ມີການກວດຄືນກົດໝາຍກ່ຽວກັບການສຶກສາຢູ່ໃນໂຮງຮຽນ ຊຶ່ງສະເໜີໃຫ້ມີການປ່ຽນແປງຄັ້ງສຳຄັນ ໂດຍເນັ້ນໃສ່ການສຶກສາທີ່ມີຫຼາຍມິຕິ ເຊື່ອມໂຍງກັບແນວຄິດໂຮງຮຽນໃຫ້ຄວາມສຸກ (MEXT, 2011). ໂດຍສະເພາະຫຼັກການກ່ຽວກັບ 'ຄວາມເບີກບານມ່ວນຊື່ນໃນການໃຊ້ຊີວິດ' ໝາຍເຖິງການ

ເຮັດໃຫ້ມີຄວາມສົມດຸນກັນລະຫວ່າງຄວາມເປັນເລີດທາງວິຊາການ, ບຸກຄະລິກດີຮອບດ້ານ, ສຸຂະພາບຈິດແລະຮ່າງກາຍ ຊຶ່ງສິ່ງເຫຼົ່ານີ້ລ້ວນແຕ່ພົບເຫັນຢູ່ໃນຄຳແນະນຳຂອງຫຼັກສູດລະດັບຊາດ (MEXT, n.d).

ເຖິງວ່າ**ສາທາລະນະລັດເກົາຫຼີ**ເປັນປະເທດໜຶ່ງ ໃນບັນດາປະເທດທີ່ມີຜົນສອບເສັງດີທີ່ສຸດໃນການປະເມີນຄວາມສາມາດຂອງນັກຮຽນລະຫວ່າງປະເທດກໍຕາມ ຜົນອອກມາຍັງສະແດງໃຫ້ເຫັນວ່າ ຊາວໜຸ່ມເກົາຫຼີອາຍຸ 15 ປີ ລາຍງານວ່າ ເຂົາເຈົ້າແມ່ນພວກທີ່ບໍ່ມີຄວາມສຸກຫຼາຍທີ່ສຸດໃນບັນດາຊາວໜຸ່ມທັງໝົດຂອງປະເທດທີ່ເຂົ້າຮ່ວມການປະເມີນ (OECD, 2013). ຜູ້ຊ່ຽວຊານເຊື່ອວ່າ ບັນຫານີ້ເປັນຍ້ອນນັກຮຽນມີພາລະການຮຽນຫຼາຍ ເພື່ອກະກຽມໃສ່ການສອບເສັງທີ່ມີການແຂ່ງຂັນສູງ ແລະຍ້ອນຄວາມກົດດັນຈາກພໍ່ແມ່ ທີ່ຢາກໃຫ້ລູກຂອງຕົນໄດ້ຄະແນນສູງ (Korean Institution for Health and Social Affairs, 2013). ຄວາມກົດດັນເພື່ອຢາກປະສົບຄວາມສຳເລັດ ຖືກມອງວ່າເປັນຍ້ອນສັງຄົມທີ່ມີການແຂ່ງຂັນຊຶ່ງເພີ່ມຂຶ້ນເລື້ອຍໆ ຜົນທີ່ຕາມມາກໍຄືຜູ້ຄົນບໍ່ເຫັນຄວາມສຳຄັນດ້ານ 'ທັກສະທີ່ບໍ່ເປັນວິຊາການ' ທີ່ມີສ່ວນຊຸກຍູ້ໃຫ້ນັກຮຽນພັດທະນາຕົນເອງໃຫ້ມີ 'ບຸກຄະລິກະພາບທັງດ້ານສຸຂະພາບ ແລະ ຈາລິຍະທຳ' ທັງຢູ່ໃນໂຮງຮຽນແລະຢູ່ບ້ານ (Lee, 2012). ຍ້ອນຮັບຮູ້ບັນຫາເຫຼົ່ານີ້ ລັດຖະບານສາທາລະນະລັດເກົາຫຼີຈຶ່ງໄດ້ວາງນະໂຍບາຍກ່ຽວກັບ 'ການສຶກສາທີ່ໃຫ້ຄວາມສຸກແກ່ທຸກຄົນ: 'ພອນສະຫວັນທີ່ສ້າງສັນທີ່ຫຼອມອະນາຄົດ' ຊຶ່ງແນະນຳໃຫ້ມີການລິເລີ່ມ ເຊັ່ນ: ໄຕມາດທີ່ 'ບໍ່ມີການສອບເສັງ', ການສ້າງບຸກຄະລິກແລະໂຮງຮຽນທີ່ປອດຈາກການໃຊ້ຄວາມຮຸນແຮງ ໂດຍແນໃສ່ຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນຫຼາຍຂຶ້ນ (Ministry of Education [Republic of Korea], 2013).

ຢູ່**ສິງກະໂປ**ກໍມີຄວາມເປັນກັງວົນແບບດຽວກັນ ກ່ຽວກັບຄວາມກົດດັນທາງດ້ານຈິດໃຈຂອງນັກຮຽນທີ່ຢູ່ໃນລະດັບສູງ ຊຶ່ງບາງຢ່າງແມ່ນບັນຫາແບບດຽວກັນ ຄືບອກວ່າລະບົບການສຶກສາເປັນ 'ສິ່ງທີ່ສ້າງຄວາມກົດດັນ' (Hill, 2010). ຍ້ອນຮັບຮູ້ບັນຫານີ້ ກະຊວງສຶກສາຈຶ່ງແນະນຳການຮຽນຮູ້ທາງດ້ານສັງຄົມແລະອາລົມຄວາມຮູ້ສຶກ Social and Emotional Learning (SEL) ຊຶ່ງເອົາເຂົ້າເປັນສ່ວນໜຶ່ງຢູ່ໃນຫຼັກສູດການສຶກສາກ່ຽວກັບບຸກຄະລິກແລະການເປັນພົນລະເມືອງ (Yeo, 2011; Ministry of Education [Singapore], 2012). ນອກຈາກນັ້ນ ໃນປີ 2016 ນີ້ ປະທານາທິບໍດີໄດ້ກ່າວໃນຕອນ

ທ້າຍຂອງຄຳປາໄສເມື່ອບໍ່ດົນມານີ້ ໂດຍຍົກໃຫ້ເຫັນການຈັດລຽງລຳດັບຄວາມສຳຄັນຂອງການສຶກສາ ຊຶ່ງຈຳເປັນຕ້ອງມີການພັດທະນາອີງຕາມ 'ຄວາມມັກໃນການຮຽນຮູ້ຂອງເດັກນ້ອຍ' ແລະ 'ຫຼຸດຜ່ອນການເນັ້ນໃສ່ຜົນການຮຽນດ້ານວິຊາການຫຼາຍເກີນໄປ' ໂດຍໃຫ້ມີການສຶກສາແບບມີອົງປະກອບທີ່ຄົບຖ້ວນ ຊຶ່ງປະກອບດ້ວຍສິ່ງຈຳເປັນແລະພື້ນຖານຄວາມເປັນມາທຸກຢ່າງ (Ministry of Education [Singapore], 2016b).

**ຢູ່ວານູອາຕູ** ຄວາມສຸກແລະຄວາມຢູ່ດີມີສຸກສະທ້ອນໃຫ້ເຫັນດ້ານສັນຕິສຸກແລະຄວາມຍືນຍົງຫຼາຍກວ່າ. ໂດຍໄດ້ຮັບການຂະໜານນາມວ່າເປັນປະເທດທີ່ມີຄວາມສຸກທີ່ສຸດໃນໂລກຕາມດັດສະນີຊີ້ວັດຄວາມສຸກຂອງໂລກ ວານູອາຕູໄດ້ອອກຖະແຫຼງການກ່ຽວກັບການສຶກສາ ເພື່ອສົ່ງເສີມຄວາມສຸກຢູ່ໃນໂຮງຮຽນຕ່າງໆ ແລະມີຈຸດມຸ່ງໝາຍເພື່ອພັດທະນາຄວາມສາມາດຫຼາຍຢ່າງ ຊຶ່ງບົ່ງບອກເຖິງປຣັດຊະຍາການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ (Ministry of Education [Vanuatu], 2010). ດັ່ງນັ້ນ ໃນປີ 2012 ວານູອາຕູ ຈຶ່ງໄດ້ທົດລອງຕົວຊີ້ວັດທີ່ຕ່າງຈາກສິ່ງທີ່ເຄີຍເຮັດກ່ຽວກັບຄວາມຢູ່ດີມີສຸກສຳລັບ ເມລານີເຊຍ (Malanesia) ທັ້ງນີ້ກໍເພື່ອສະທ້ອນຄ່ານິຍົມຂອງ ເມລານີເຊຍ ໂດຍອີງໃສ່ປັດໄຈຕ່າງໆເຊັ່ນ: ການເຂົ້າເຖິງຊັບພະຍາກອນ, ການປະຕິບັດທາງວັດທະນະທຳ ແລະຄວາມສາມາດໃນການດຳລົງຢູ່ຂອງຊຸມຊົນ (MNCC, 2012).

ຈາກການສົມທຽບນະໂຍບາຍຂອງປະເທດຕ່າງໆ ສະແດງໃຫ້ເຫັນວ່າ ຂະນະທີ່ພູຖານແລະວານູອາຕູມີນະໂຍບາຍເນັ້ນໃສ່ຄ່ານິຍົມດ້ານວັດທະນະທຳຂອງທ້ອງຖິ່ນ ແລະໃຫ້ຄວາມສຳຄັນກັບສິ່ງເຫຼົ່ານີ້ໃນການພັດທະນາປະເທດຕົນເອງໃຫ້ຍືນຍົງ ສ່ວນອີກສາມປະເທດ ຄື: ຍີ່ປຸ່ນ, ສິງກະໂປແລະສາທາລະນະລັດເກົາຫຼີ ມີນະໂຍບາຍສ່ວນໃຫຍ່ເພື່ອແກ້ໄຂຄວາມວິຕົກກັງວົນຢູ່ໃນປະເທດ ຍ້ອນເນັ້ນໃສ່ການຮ່ຳຮຽນດ້ານວິຊາການຫຼາຍເກີນໄປເປັນຜົນພວງເຮັດໃຫ້ຄວາມກົດດັນທາງດ້ານຈິດໃຈຂອງຜູ້ຮຽນມີລະດັບເພີ່ມຂຶ້ນຕາມມາ. ເຖິງຈະມີການນະໂຍບາຍຊຸກຍູ້ປານໃດກໍຕາມ ໝົດທຸກປະເທດເຫຼົ່ານີ້ໃຫ້ຂໍ້ສະຫຼຸບວ່າ ການສຶກສາຄວນມີອົງປະກອບຄົບຖ້ວນ ຄືສົ່ງເສີມໃຫ້ມີຄວາມສົມດຸນກັນລະຫວ່າງດ້ານວິຊາການ, ສັງຄົມ, ອາລົມຄວາມຮູ້ສຶກແລະຮ່າງກາຍ.

# ໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ

ໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກຖືກສ້າງຂຶ້ນ ອີງໃສ່ສິ່ງທີ່ຄົ້ນພົບຈາກການສຶກສາຄົ້ນຄວ້າ ແນໃສ່ສັງລວມຄວາມຄິດເຫັນແລະມິຕິຂອງຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນກ່ຽວກັບສິ່ງທີ່ຈະປະກອບຢູ່ໃນໂຮງຮຽນໃຫ້ຄວາມສຸກ. ໂຄງປະກອບອັນນີ້ແມ່ນຫົວໃຈສໍາຄັນຂອງບົດລາຍງານສະບັບນີ້ ໂດຍມີຈຸດປະສົງຢາກເອົາມິຕິຕ່າງໆຢູ່ໃນລະດັບໂຮງຮຽນເຫຼົ່ານີ້ມານໍາສະເໜີໃນລະດັບການກໍານົດນະໂຍບາຍ ເພື່ອເປັນການປະຕິບັດການສຶກສາຈາກຮາກຖານ (Robinson and Lou, 2015).

## ມາດຖານໂຮງຮຽນໃຫ້ຄວາມສຸກ

ຜົນຈາກການສໍາຫຼວດໂຮງຮຽນໃຫ້ຄວາມສຸກໄດ້ວາງຮາກຖານເພື່ອກໍານົດມາດຖານ 22 ຢ່າງ ສໍາລັບໂຮງຮຽນໃຫ້ຄວາມສຸກ ໂດຍແບ່ງອອກເປັນສາມປະເພດໃຫຍ່: ຜູ້ຄົນ, ຂະບວນການແລະສະຖານທີ່. ການສໍາຫຼວດຄັ້ງນີ້ໄດ້ມີຜູ້ເຂົ້າຮ່ວມຫຼາຍກວ່າ 650 ຄົນ ຈາກນັກຮຽນ, ຄູ, ພໍ່ແມ່ນັກຮຽນ, ຜູ້ອໍານວຍການໂຮງຮຽນ ແລະພະນັກງານທີ່ຊ່ວຍວຽກໃນໂຮງຮຽນທົ່ວພາກພື້ນອາຊີ-ປາຊີຟິກ. ເຂົາເຈົ້າເຫຼົ່ານີ້ໄດ້ໃຫ້ທັດສະນະຮ່ວມກັນກ່ຽວກັບວ່າ ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ແລະເປັນບ່ອນບໍ່ໃຫ້ຄວາມສຸກ, ແມ່ນຫຍັງທີ່ເຮັດໃຫ້ການຮຽນແລະການສອນມ່ວນຊື່ນ ແລະສະໜຸກສະໜານ ແລະແມ່ນຫຍັງທີ່ເຮັດໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນໍາ. ມາດຖານທີ່ສະເໜີຢູ່ໃນແຜນວາດ 1 ໃຫ້ຂໍ້ສະຫຼຸບກ່ຽວກັບໂຄງປະກອບທັງໝົດຂອງໂຮງຮຽນໃຫ້ຄວາມສຸກ. ມາດຖານເຫຼົ່ານີ້ມີຫຼາຍບັນຫາກ່ຽວຂ້ອງກັນ ຊຶ່ງປະກົດຢູ່ໃນສາມປະເພດ ຄື: ຜູ້ຄົນ, ຂະບວນການແລະສະຖານທີ່ຊຶ່ງມີການເກື້ອໜູນກັນແລະກັນ.

ຂໍ້ຄິດເຫັນທີ່ສັງລວມໄດ້ລະຫວ່າງທີ່ມີການສໍາມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກສະແດງໃຫ້ເຫັນວ່າ ຢູ່ໃນໂຮງຮຽນມີການປະຕິບັດໄດ້ດີກ່ຽວກັບສິ່ງທີ່ໃຊ້ຫົວຄິດປະດິດສ້າງຂຶ້ນໃໝ່ຫຼາຍຢ່າງ ທັງໄດ້ໃຫ້ຕົວຢ່າງຍຸດທະສາດ ທີ່ໂຮງຮຽນສາມາດເອົາໄປນໍາໃຊ້ເພື່ອບັນລຸແຕ່ລະມາດຖານໄດ້ນໍາອີກ. ຕໍ່ໄປແມ່ນການອະທິບາຍບາງຕົວຢ່າງພາຍໃຕ້ສາມປະເພດຫຼັກ: ປະເພດຜູ້ຄົນ, ປະເພດຂະບວນການ ແລະ ປະເພດສະຖານທີ່.

## ປະເພດຜູ້ຄົນ

ປະເພດທຳອິດແມ່ນຜູ້ຄົນ ໝາຍເຖິງມະນຸດທຸກຄົນ ແລະຄວາມສຳພັນກັນລະຫວ່າງສະມາຊິກຊຸມຊົນທີ່ມີໂຮງຮຽນ. **ມິດຕະພາບແລະຄວາມສຳພັນກັນຂອງຜູ້ຄົນຢູ່ໃນຊຸມຊົນທີ່ມີໂຮງຮຽນ** ຖືກຈັດໃຫ້ເປັນປັດໄຈສຳຄັນທີ່ສຸດຂອງຜູ້ທີ່ຕອບຄຳຖາມກ່ຽວກັບວ່າ ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ສິ່ງທີ່ຄົ້ນພົບລະບຸເຖິງການປະຕິບັດຢູ່ໃນໂຮງຮຽນທີ່ຊຸກຍູ້ການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນ, ສົ່ງເສີມການມີປະຕິສຳພັນຕໍ່ກັນແລະການເປັນເພື່ອນມິດກັນລະຫວ່າງນັກຮຽນຊັ້ນຕ່າງໆ ແລະກິດຈະກຳໂຮງຮຽນທີ່ໃຫ້ສະມາຊິກຊຸມຊົນເຂົ້າມາມີສ່ວນຮ່ວມໂດຍກົງ.

ມາດຖານສຳຄັນອີກອັນໜຶ່ງສຳລັບໂຮງຮຽນໃຫ້ຄວາມສຸກທີ່ຈັດຢູ່ໃນປະເພດນີ້ ແມ່ນ **ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ** ຊຶ່ງປະກອບດ້ວຍລັກສະນະພິເສດ ເຊັ່ນ: ຄວາມມີຈິດໃຈດີ, ຄວາມຈູບຈ້າວຫ້າວຫັນ, ຄວາມເປັນທຳແລະບົດບາດຂອງຄູໃນການເປັນແບບຢ່າງທີ່ດີໃຫ້ແກ່ນັກຮຽນດ້ານການສ້າງແຮງບັນດານໃຈ, ຄວາມຄິດສ້າງສັນແລະມີຄວາມສຸກ. ຜູ້ຕອບຄຳຖາມເຫັນວ່າໂຮງຮຽນຕ້ອງໃຫ້ຄວາມສຳຄັນຕໍ່ມາດຖານນີ້ ເວລາຮັບເອົາຄູເຂົ້າເຮັດວຽກ ຕ້ອງມີການປະເມີນຜົນຄວາມສາມາດຂອງເຂົາເຈົ້າ ໂດຍເນັ້ນໃສ່ບຸກຄະລິກ, ທັດສະນະຄະຕິແລະຈັນຍາບັນຫຼາຍຂຶ້ນ.

ຜູ້ຕອບຄຳຖາມຍັງໃຫ້ຄວາມສຳຄັນຕໍ່ຄ່າ**ນິຍົມແລະການປະຕິບັດດ້ານບວກ**ວ່າ ເປັນມາດຖານສຳຄັນຫຼາຍໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ຄ່ານິຍົມແລະການປະຕິບັດດັ່ງກ່າວນີ້ປະກອບດ້ວຍຄວາມຮັກ, ຄວາມເອື້ອອາທອນ, ການຍອມຮັບແລະການໃຫ້ຄວາມເຄົາລົບຄົນອື່ນ. ຍຸດທະສາດເພື່ອສົ່ງເສີມຄ່ານິຍົມແລະການປະຕິບັດເຫຼົ່ານີ້ ປະກອບດ້ວຍສິ່ງເຕືອນສະຕິທີ່ສະແດງໃຫ້ເຫັນປະຈັກຕາ ເຊັ່ນ: ໂປສເຕີ, ຮູບແຕ້ມ ແລະ 'ການຮຽນຮູ້ແບບສອງຈຸດປະສົງ' ຊຶ່ງສະແດງອອກເຖິງຄ່ານິຍົມ, ຈຸດແຂງແລະຄວາມສາມາດຕ່າງໆຂອງນັກຮຽນ ທັງໄດ້ຮັບການສົ່ງເສີມຢູ່ໃນບໍລິບົດຂອງຫົວເລື່ອງຫຼືລາຍວິຊາທາງດ້ານວິຊາການນຳອີກ.

***ແຜນວາດ 1.*** *ມາດຖານຕ່າງໆຂອງໂຮງຮຽນໃຫ້ຄວາມສຸກ*



## ຜູ້ຄົນ

- ມິດຕະພາບແລະຄວາມສຳພັນກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ
- ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ
- ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງ
- ຄ່ານິຍົມແລະການປະຕິບັດດ້ານບວກຮ່ວມກັນ
- ສະພາບແວດລ້ອມໃນການເຮັດວຽກແລະຄວາມຢູ່ດີມີສຸກຂອງຄູ
- ທັກສະແລະຄວາມສາມາດຂອງຄູ

## ຂະບວນການ

- ພາລະການຮຽນທີ່ສົມເຫດສົມຜົນແລະເປັນທຳ
- ການຮຽນແບບໝູ່ຄະນະແລະມີນ້ຳໃຈໃນການຮ່ວມມືກັນ
- ວິທີການຮຽນການສອນທີ່ມ່ວນຊື່ນແລະມີສ່ວນຮ່ວມ
- ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ
- ຈິດສຳນຶກໃນການບັນລຸຜົນແລະເຮັດໃຫ້ສຳເລັດດ້ວຍດີ
- ກິດຈະກຳແລະພິທີສຳຄັນນອກຫຼັກສູດຂອງໂຮງຮຽນ
- ການຮຽນຮູ້ແບບໝູ່ຄະນະລະຫວ່າງນັກຮຽນແລະນາຍຄູ
- ເນື້ອໃນການຮຽນທີ່ເປັນປະໂຫຍດ, ກ່ຽວຂ້ອງກັບຊີວິດແລະມີສ່ວນຮ່ວມ
- ຄວາມຢູ່ດີມີສຸກທາງດ້ານຈິດໃຈແລະການຄວບຄຸມຄວາມທຸກໃຈ

## ສະຖານທີ່

- ສະພາບແວດລ້ອມການຮຽນຮູ້ທີ່ອົບອຸ່ນແລະເປັນມິດ
- ສະພາບແວດລ້ອມທີ່ປອດໄພປອດຈາກການທະເລາະວິວາດກັນ
- ສະຖານທີ່ມີບ່ອນຮຽນແລະຫຼິ້ນທີ່ເປີດໂລ່ງແລະເປັນສີຂຽວ
- ໂຮງຮຽນທີ່ມີວິໄສທັດແລະການນຳພາ
- ປະຕິບັດລະບຽບແບບສ້າງສັນ
- ສຸຂະພາບດີ, ອະນາໄມດີແລະໂພຊະນາການດີ
- ການບໍລິຫານຄຸ້ມຄອງໂຮງຮຽນແບບປະຊາທິປະໄຕ

## ຂະບວນການ

ຂະບວນການຊຶ່ງແມ່ນປະເພດທີສອງ ປະກອບດ້ວຍວິທີວິທະຍາກ່ຽວກັບການຮຽນການສອນທີ່ສາມາດສົ່ງເສີມຄວາມຮູ້ສຶກຂອງຜູ້ຮຽນໃນເລື່ອງຄວາມຢູ່ດີມີສຸກ. ມາດຖານຕ່າງໆຢູ່ໃນປະເພດນີ້ ໄດ້ແກ່ການເຮັດໃຫ້**ພາລະການຮຽນມີຄວາມສົມເຫດສົມຜົນແລະຍຸຕິທຳ**ຫຼາຍຂຶ້ນສຳລັບນັກຮຽນ ເນື່ອງຈາກຄວາມບໍ່ສົມດຸນກັນລະຫວ່າງການຮຽນແລະການຫຼິ້ນກຳລັງແຜ່ຂະຫຍາຍ ຊຶ່ງເນັ້ນໃສ່ຄວາມຈື່ຈຳເພື່ອກຽມໃສ່ການສອບເສັງ.

ມາດຖານສຳຄັນອີກອັນໜຶ່ງຢູ່ໃນປະເພດນີ້ ແມ່ນ**ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ.** ສະນັ້ນ ໂຮງຮຽນໃຫ້ຄວາມສຸກຄວນປ່ອຍໃຫ້ຜູ້ຮຽນສະແດງຄວາມຄິດເຫັນຂອງຕົນໄດ້ຢ່າງອິດສະຫຼະ ໂດຍບໍ່ຢ້ານການເຮັດຄວາມຜິດ ດັ່ງທີ່ຜູ້ຕອບຄຳຖາມມັກເວົ້າເຖິງສະເໝີວ່າແມ່ນ 'ການຮຽນຮູ້ໂດຍບໍ່ຢ້ານກົວ' ເພື່ອໃຫ້ຄົນເຫັນຄຸນຄ່າຂອງຄວາມຜິດພາດ ວ່າແມ່ນສ່ວນໜຶ່ງຂອງຂະບວນການຮຽນຮູ້.

ອັນນີ້ຍັງເຊື່ອມໂຍງກັບມາດຖານກ່ຽວກັບ**ເນື້ອໃນການຮຽນຮູ້ທີ່ເປັນປະໂຫຍດ, ກ່ຽວຂ້ອງກັບຊີວິດແລະມີສ່ວນຮ່ວມ** ຊຶ່ງຮຽກຮ້ອງໃຫ້ເນື້ອໃນຫຼັກສູດສະທ້ອນໃຫ້ເຫັນບັນຫາທີ່ກ່ຽວຂ້ອງກັບຊີວິດຄົນເຮົາໃນປັດຈຸບັນ ຊຶ່ງມີການແນະນຳຄູວ່າ ຄວນເຮັດແນວໃດເພື່ອໃຫ້ບັນຫາເຫຼົ່ານີ້ກ່ຽວຂ້ອງກັບຊີວິດຂອງຜູ້ຮຽນ. ອີງຕາມ ຫງຽນ ຫງອກ ວັນ ທາວ ອາຍຸ 14 ປີ ຈາກໂຮງຮຽນມັດທະຍົມສາທິດຂອງສະຖາບັນວິທະຍາສາດການສຶກສາຫວຽດນາມ ທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ບອກວ່າມີຄວາມແຕກຕ່າງກັນຢ່າງສິ້ນເຊີງ ລະຫວ່າງເນື້ອໃນການຮຽນທີ່ມີການປະເມີນກັນກັບສິ່ງທີ່ເປັນປະໂຫຍດຕໍ່ຊີວິດປະຈຳວັນຂອງຄົນເຮົາ. ນາງເວົ້າວ່າ:

*ທ່ານຄິດແນວໃດກັບນັກຮຽນທີ່ໄດ້ຄະແນນສິບສ່ວນສິບ ໃນການສອບເສັງວິຊາພົນລະເມືອງສຶກສາ ຊຶ່ງເວົ້າເຖິງຄວາມຊື່ສັດ ແຕ່ຄວາມຈິງແລ້ວລັກກ່າຍເອົາໃນເວລາສອບເສັງເພື່ອໃຫ້ໄດ້ຄະແນນສູງແບບນັ້ນ? ຫຼືພວກເຮົາຮຽນຊີວະວິທະຍາເພື່ອປົກປັກຮັກສາສິ່ງແວດລ້ອມຂອງພວກເຮົາ - ນັກຮຽນບາງຄົນໄດ້ຄະແນນດີແທ້ ໃນການສອບເສັງວິຊາຊີວະວິທະຍາ ແຕ່ພວກເຂົາຊ້ຳພັດຖິ້ມຂີ້ເຫຍື້ອລົງຖະໜົນ! ພວກເຮົາຕ້ອງເນັ້ນຢ້ຳວ່າ ຈຸດປະສົງຫຼັກຂອງການສຶກສາແມ່ນເພື່ອປັບປຸງຊີວິດຈິງ ແລະຊ່ວຍພັດທະນາປະເທດຂອງພວກເຮົາ.*

*ພວກເຮົາບໍ່ຮຽນເພື່ອກາຍເປັນອັດສະລິຍະ ຫຼືເຮັດໃຫ້ສະໝອງຂອງພວກເຮົາໃຫຍ່ຂຶ້ນ! ພວກເຮົາມັກເວົ້າວ່າ 'ຄວາມຮູ້ຄືພະລັງ' ແຕ່ ດາເລ ຄາເນກີ (Dale Carnegie) ນັກປະພັນອາເມຣິກາ ບອກວ່າ 'ຄວາມຮູ້ບໍ່ແມ່ນພະລັງ ຈົນກວ່າມັນຖືກນຳໄປໃຊ້'.*

## ສະຖານທີ່

ການຈັດປະເພດທີສາມແມ່ນພື້ນທີ່ ໝາຍເຖິງປັດໄຈສະພາບເງື່ອນໄຂ ມີທັງສະພາບແວດລ້ອມທາງກາຍະພາບ ແລະບັນຍາກາດພາຍໃນໂຮງຮຽນ. ໃນຈຳນວນມາດຖານທີ່ມີໃນປະເພດນີ້ **ສະພາບແວດລ້ອມການຮຽນຮູ້ທີ່ອົບອຸ່ນແລະເປັນມິດ** ຖືກຈັດໃຫ້ເປັນປັດໄຈສຳຄັນທີ່ສຸດອັນດັບສອງ ສຳລັບໂຮງຮຽນໃຫ້ຄວາມສຸກໂດຍລວມ ຊຶ່ງສິ່ງທີ່ຄົ້ນພົບບົ່ງບອກເຖິງຄວາມຈຳເປັນຕ້ອງເນັ້ນໃສ່ການທັກທາຍກັນແລະຍິ້ມໃຫ້ກັນຫຼາຍຂຶ້ນ ລວມທັງແນະນຳດົນຕີ, ເຮັດໃຫ້ຫ້ອງຮຽນເປີດໂລ່ງ, ມີສີສັນຫຼາຍຂຶ້ນແລະມີສິ່ງວາງສະແດງທີ່ມີຄວາມໝາຍຫຼາຍຂຶ້ນ ດ້ວຍວິທີນີ້ ຈຶ່ງຈະພາໃຫ້ເກີດບັນຍາກາດທີ່ດີຫຼາຍຂຶ້ນຢູ່ໃນໂຮງຮຽນ.

**ສະພາບແວດລ້ອມທີ່ປອດໄພແລະປອດຈາກການທະເລາະວິວາດກັນ**ແມ່ນມາດຖານອີກອັນໜຶ່ງ ຊຶ່ງຜູ້ຕອບຄຳຖາມຖືວ່າມີຄວາມສຳຄັນ ແລະສິ່ງທີ່ຄົ້ນພົບໄດ້ລະບຸເຖິງຍຸດທະສາດຕ່າງໆເຊັ່ນ: ຈັດໃຫ້ມີ 'ຕັ່ງນັ່ງຈັບຄູ່ກັນ' ເພື່ອໃຫ້ຜູ້ຮຽນມີປະຕິສຳພັນຕໍ່ກັນ ແລະມີຄວາມເຂົ້າໃຈກັນແລະກັນດີຂຶ້ນ ດ້ວຍການຮຽນຮູ້ຮ່ວມກັນແລະເຮັດກິດຈະກຳການຫຼິ້ນນຳກັນ.

ຄວາມຈຳເປັນສຳລັບ**ວິໄສທັດແລະການນຳພາຂອງໂຮງຮຽນ**ຍັງຖືກນຳມາຍົກໃຫ້ເຫັນເຊັ່ນຕົວຢ່າງ ໂຮງຮຽນທີ່ເຂົ້າຮ່ວມໃນການສຳມະນາຊີ້ໃຫ້ເຫັນວ່າ ພວກເຮົາສາມາດຈັດລຽງລຳດັບຄວາມສຳຄັນຂອງຄວາມສຸກໄດ້ແນວໃດ ດ້ວຍການສະແດງອອກທາງດ້ານວິໄສທັດ, ຄະຕິສອນໃຈຫຼືຄຳຂວັນຕ່າງໆ ເພື່ອເຮັດໃຫ້ເກີດບັນຍາກາດທີ່ດີຫຼາຍຂຶ້ນ. ໃນສ່ວນທີ່ກ່ຽວກັບສະພາບແວດລ້ອມທາງກາຍະພາບນັ້ນ ຜູ້ຕອບຄຳຖາມຍັງບອກເຖິງຄວາມຈຳເປັນຕ້ອງມີ**ສະຖານທີ່ຮຽນແລະບ່ອນຫຼິ້ນທີ່ເປີດກວ້າງແລະມີທຳມະຊາດສີຂຽວ** ເພື່ອຍົກລະດັບຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນ. ຍຸດທະສາດທີ່ມີການແນະນຳປະກອບດ້ວຍການຈັດໃຫ້ມີສະຖານທີ່ພັກຜ່ອນຢ່ອນໃຈແລະມີລັກສະນະສ້າງສັນ, ມີສວນຂອງໂຮງຮຽນທັງມີການນຳໃຊ້ສະຖານທີ່ນອກຫ້ອງຮຽນເພື່ອໃຫ້ຜູ້ຮຽນສາມາດສຳຜັດກັບທຳມະຊາດໄດ້ຂະນະດຽວກັນໃຫ້ຜູ້ຮຽນໄດ້ຮຽນຮູ້ຜ່ານກິດຈະກຳຕົວຈິງ ທີ່ມີລັກສະນະຊອກຄົ້ນຫາຄຳຕອບດ້ວຍຕົນເອງ.

# ຄິດທົບທວນ, ບາດກ້າວຕໍ່ໄປແລະຂໍ້ສະຫຼຸບ

ໃນການຄິດທົບທວນກ່ຽວກັບສິ່ງທີ່ຄົ້ນພົບຈາກການວິໄຈທີ່ໄດ້ນຳສະເໜີຢູ່ໃນບົດລາຍງານນີ້ ທິດສະດີແລະຄວາມພະຍາຍາມທາງດ້ານນະໂຍບາຍຕ່າງໆ ສະແດງໃຫ້ເຫັນວ່າຄວາມສຸກຄືເປົ້າໝາຍຂອງຊີວິດຄົນເຮົາ ໂດຍຍອມຮັບວ່າການສຶກສາແລະການຮຽນຮູ້ແມ່ນພາຫະນະພື້ນຖານ ເພື່ອສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກ. ສິ່ງນີ້ຮຽກຮ້ອງໃຫ້ລະບົບການສຶກສາຈຳເປັນຕ້ອງຮັບເອົາຮູບແບບການຮຽນຮູ້ທີ່ບໍ່ແມ່ນແບບເດີມ ໂດຍປ່ອຍໃຫ້ຜູ້ຮຽນໄດ້ສາຍແວວທາງດ້ານພອນສະຫວັນ ແລະຈຸດແຂງສະເພາະຂອງຕົນອອກມາ ຂະນະດຽວກັນກໍຍອມຮັບວ່າຄວາມສຸກແມ່ນບາງຢ່າງທີ່ຕ້ອງເຮັດຮ່ວມກັນ ຊຶ່ງໄດ້ຮັບການສົ່ງເສີມດ້ວຍການຮຽນຮູ້ຈາກປະສົບການ ເພື່ອຊຸກຍູ້ຄວາມເປັນເພື່ອນມິດກັນແລະຄວາມສຳພັນກັນລະຫວ່າງສະມາຊິກຢູ່ໃນຊຸມຊົນທີ່ມີໂຮງຮຽນ.

ບົດລາຍງານນີ້ຍັງບອກພວກເຮົາອີກວ່າ ມະນຸດທຸກຄົນສາມາດຮຽນຮູ້ເພື່ອໃຫ້ມີຄວາມສຸກໄດ້ ແລະເຂົາເຈົ້າສາມາດທີ່ຈະມີຄວາມສຸກໄດ້ຈາກການຮຽນຮູ້ ດ້ວຍການສົ່ງເສີມໃຫ້ເກີດຄວາມຮັກໃນການຮຽນຮູ້ຢ່າງແທ້ຈິງ ຊຶ່ງພາໃຫ້ເກີດຄວາມຮູ້ສຶກກ່ຽວກັບການບັນລຸຜົນແລະການເຮັດໃຫ້ສຳເລັດ. ສິ່ງຢືນຢັນທີ່ໄດ້ນຳສະເໜີຢູ່ໃນບົດລາຍງານນີ້ ຍັງຊີ້ໃຫ້ເຫັນອີກວ່າ ການຈັດລຽງລຳດັບຄວາມສຳຄັນຂອງຄວາມສຸກ ແລະຄວາມຢູ່ດີມີສຸກສາມາດສົ່ງຜົນໃຫ້ມີຄວາມສຳເລັດທາງວິຊາການຫຼາຍຂຶ້ນ ແຕ່ເປັນໜ້າເສຍດາຍທີ່ມັນມີທ່າອ່ຽງໃນການສູນເສຍທາດແທ້ຂອງມັນໄປ ຍ້ອນຍັງມີການສືບຕໍ່ເນັ້ນໃສ່ 'ຕົວເລກ' ຫຼືຄະແນນສອບເສັງຊຶ່ງນິຍົມປະຕິບັດກັນຢູ່ທົ່ວໄປວ່າແມ່ນຕົວຊີ້ວັດຄຸນນະພາບການສຶກສາ. ນອກຈາກນັ້ນ ລະບົບການສຶກສາໄດ້ເນັ້ນໃສ່ຕອບສະໜອງນະໂຍບາຍເສດຖະກິດລ້ວນໆ, ສ້າງຄວາມກ້າວໜ້າທາງດ້ານເຕັກໂນໂລຊີ, ໃຫ້ຄວາມສຳຄັນຕໍ່ກັບການແຂ່ງຂັນ ຊຶ່ງຄ່ານິຍົມ ແລະ ຄວາມສາມາດດັ່ງກ່າວນັ້ນມັນສ້າງຈິນຕະນາການວ່າຈະສາມາດເພີ່ມຄວາມສຸກ ແລະ ຄວາມຢູ່ດີມີສຸກໃຫ້ຫຼາຍຂຶ້ນໄດ້ ແຕ່ຄວາມເປັນຈິງ ຄວາມສຸກເຫຼົ່ານັ້ນບໍ່ສາມາດປ່ຽນແທນໄດ້ດ້ວຍເຄື່ອງຈັກ.

ດັ່ງນັ້ນ ບົດລາຍງານນີ້ຈຶ່ງກຳນົດການຊ່ວຍເຫຼືອທີ່ຈຳເປັນສອງລະດັບ ເພື່ອເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ຄື: ລະດັບນະໂຍບາຍແລະລະດັບໂຮງຮຽນ. ການຊ່ວຍເຫຼືອນີ້ປະກອບດ້ວຍການຄຳນຶງເຖິງສິ່ງຕ່າງໆ ເຊັ່ນ: ການຈັດລຽງລຳດັບຄວາມສຳຄັນຂອງ

ຄວາມສຸກ ແລະຄວາມຢູ່ດີມີສຸກຂອງຜູ້ຮຽນ ຊຶ່ງຖືວ່າແມ່ນສ່ວນໜຶ່ງຂອງນະໂຍບາຍດ້ານການສຶກສາ, ແນະນຳຄົນຮຸ່ນໃໝ່ທີ່ເປັນ 'ຄູດີ' ພ້ອມທັງຮັບປະກັນວ່າຄ່ານິຍົມ, ຈຸດແຂງທີ່ສາມາດຊ່ວຍພັດທະນາຜູ້ຮຽນ ແລະບອກສອນເຂົາເຈົ້າກ່ຽວກັບຄວາມສຸກນັ້ນ ໄດ້ຖືກຍອມຮັບແລະໄດ້ຮັບການປະເມີນຜົນວ່າແມ່ນສ່ວນໜຶ່ງຂອງຄວາມພະຍາຍາມໃນການປະເມີນຄວາມສາມາດຂອງຜູ້ຮຽນ.

ບົດລາຍງານນີ້ໄດ້ກຳນົດບາດກ້າວຕ່າງໆ ເພື່ອແນະນຳໃຫ້ມີການປຶກສາຫາລືກັນກ່ຽວກັບນະໂຍບາຍດ້ານການສຶກສາ ຈຸດປະສົງກໍແມ່ນເພື່ອໃຫ້ໄດ້ຄວາມຄິດເຫັນຫຼາຍຂຶ້ນ ນຳໄປສູ່ຂໍ້ສະຫຼຸບແລະຂໍ້ສະເໜີທີ່ຊັດເຈນຢູ່ໃນລະດັບນະໂຍບາຍ. ໃນລະດັບໂຮງຮຽນ ຍຸດທະສາດຫຼາຍຢ່າງທີ່ໄດ້ຄັດເລືອກມາ ເພື່ອໃຫ້ບັນລຸມາດຖານຕ່າງໆຢູ່ໃນບົດລາຍງານນີ້ ຍັງແນະນຳຈຸດເລີ່ມຕົ້ນເພື່ອອົບໂຮມ ແລະເຜີຍແຜ່ຍຸດທະສາດທີ່ໂຮງຮຽນສາມາດປະເມີນແລະນຳເອົາໄປໃຊ້ໄດ້.

ຂະນະດຽວກັນ ການເນັ້ນໃສ່ 'ຕົວເລກ' ຫຼາຍເກີນໄປ ສະແດງໃຫ້ເຫັນຄວາມຈຳເປັນຕ້ອງມີການຊຸກຍູ້ຕໍ່ໄປເພື່ອສ້າງຈິດສຳນຶກ ແລະຊ່ວຍປ່ຽນແປງທັດສະນະຄະຕິກ່ຽວກັບຄວາມໝາຍຂອງການສຶກສາທີ່ມີ 'ຄຸນນະພາບ' ທັງນີ້ກໍເພື່ອໃຫ້ມະຫາຊົນຮັບຮູ້ຫຼາຍຂຶ້ນກ່ຽວກັບຄວາມສຳຄັນຂອງຄວາມສຸກ ແລະຄວາມຢູ່ດີມີສຸກໃນໂຮງຮຽນ ຢູ່ໃນໂລກທີ່ຂັບເຄື່ອນດ້ວຍການວັດແທກ, ເກນມາດຕະຖານແລະການແຂ່ງຂັນກັນທາງດ້ານປະລິມານ. ຄວາມເຊື່ອມໂຍງຂອງຫຼາຍປະເດັນທີ່ມີການສຶກສາກັນຢູ່ໃນບົດລາຍງານນີ້ ຍັງບົ່ງບອກເຖິງຄວາມເປັນໄປໄດ້ວ່າໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກຈະເພີ່ມທະວີຂຶ້ນ, ປັບປ່ຽນແລະເອົາໄປນຳໃຊ້ຢູ່ໃນພາກພື້ນອື່ນໆ ນອກຈາກພາກພື້ນອາຊີ-ປາຊີຟິກ. ເນື່ອງຈາກມີຄວາມພະຍາຍາມຫຼາຍຂຶ້ນ ໃນການວັດຄວາມສຸກແລະຄຸນນະພາບການສຶກສາ ໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກຈຶ່ງສະເໜີພື້ນຖານການວັດທີ່ສຳຄັນກ່ຽວກັບຄຸນນະພາບການສຶກສານຳອີກ.

ບົດລາຍງານນີ້ຍົກໃຫ້ເຫັນຄວາມສຳຄັນຂອງຄວາມສຸກ ແລະຄວາມຢູ່ດີມີສຸກຂອງຜູ້ຮຽນ ໂດຍລະບຸແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ອີງໃສ່ມິຕິທາງທິດສະດີແລະນະໂຍບາຍ ລວມທັງອີງຕາມການສະແດງຄວາມຄິດເຫັນຂອງຜູ້ມີສ່ວນຮ່ວມໃນລະດັບໂຮງ

ຮຽນ ທີ່ຮິບໂຮມມາໄດ້ດ້ວຍວິທີເຮັດວຽກວິໄຈເບື້ອງຕົ້ນ.

ໃນບໍລິບົດລະດັບໂລກແລະພາກພື້ນ ຜູ້ຄົນກ່າວເຖິງຄວາມສຸກແລະຄວາມຢູ່ດີມີສຸກຫຼາຍຂຶ້ນເລື້ອຍໆ ບໍ່ວ່າຈະເວົ້າຢູ່ໃນເປົ້າໝາຍການພັດທະນາທີ່ຍືນຍົງແລະການສຶກສາ ປີ 2030, ການລິເລີ່ມເຄືອຂ່າຍການສຶກສາທາງບອກລະຫວ່າງປະເທດ ຫຼືຢູ່ໃນນະໂຍບາຍຂອງຫ້າປະເທດທີ່ນຳມາສຶກສາກັນຢູ່ໃນບົດລາຍງານນີ້. ອັນນີ້ສະແດງໃຫ້ເຫັນວ່າຄຸນນະພາບການສຶກສາ ແລະຄວາມສຸກຢູ່ໃນໂຮງຮຽນບໍ່ສາມາດແຍກອອກຈາກກັນໄດ້ ແລະບໍ່ຄວນຖືວ່າຄວາມສຸກແລະຄວາມຢູ່ດີມີສຸກ ເປັນເປົ້າໝາຍຂອງລະບົບການສຶກສາທີ່ດີເທົ່ານັ້ນ ແຕ່ຍັງແມ່ນຊ່ອງທາງເຮັດໃຫ້ໄດ້ຮັບຜົນທາງດ້ານການສຶກສາດີຂຶ້ນ ລວມທັງປະສົບຄວາມສຳເລັດໃນຊີວິດແລະການງານໃນອະນາຄົດນຳອີກ.

ໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກມີມາດຖານ 22 ຢ່າງ ຈັດແບ່ງເປັນສາມປະເພດ ໄດ້ແກ່ຜູ້ຄົນ, ຂະບວນການ, ສະຖານທີ່ແລະຕົວຢ່າງຍຸດທະສາດເພື່ອບັນລຸມາດຖານແຕ່ລະຢ່າງ ແນໃສ່ເພື່ອໃຫ້ເຂົ້າໃຈໄດ້ດີກ່ຽວກັບສິ່ງທີ່ຜູ້ມີສ່ວນຮ່ວມໃນລະດັບໂຮງຮຽນບອກວ່າມີຄວາມສຳຄັນສຳລັບສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກໃນໂຮງຮຽນ.

ໂດຍລວມແລ້ວ ສິ່ງທີ່ຄົ້ນພົບຊີ້ໃຫ້ເຫັນຢ່າງຊັດເຈນເຖິງຄວາມຈຳເປັນທີ່ໂຮງຮຽນຕ້ອງໃຫ້ມີເວລາແລະພື້ນທີ່ຫຼາຍຂຶ້ນຢູ່ໃນໂຮງຮຽນ ບໍ່ວ່າຈະແມ່ນການຈັດສັນເວລາເພື່ອເຮັດກິດຈະກຳນອກຫຼັກສູດ ຫຼືວ່າການກະກຽມເພື່ອຄວາມມ່ວນຊື່ນ ແລະວິທີການຮຽນແບບມີສ່ວນຮ່ວມ ຫຼືພື້ນທີ່ເພື່ອໃຫ້ຜູ້ຮຽນໄດ້ສະແດງຄວາມຄິດເຫັນໄດ້ຢ່າງອິດສະຫຼະຫຼາຍຂຶ້ນ ຫຼືນຳໃຊ້ສະຖານທີ່ເປີດກວ້າງ, ເປັນສີຂຽວທຳມະຊາດຫຼາຍຂຶ້ນສຳລັບການຮຽນຮູ້.

ດັ່ງນັ້ນ ບົດລາຍງານນີ້ຈຶ່ງຮຽກຮ້ອງມາຍັງຜູ້ຕັດສິນບັນຫາ ທັງໃນລະດັບນະໂຍບາຍແລະລະດັບໂຮງຮຽນ ຈັດໃຫ້ມີເວລາແລະພື້ນທີ່ຫຼາຍຂຶ້ນ ສຳລັບປະເພດການຮຽນຮູ້ທີ່ສາມາດສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນ ໂດຍຫວັງວ່າຜູ້ຮຽນຈະມີຄວາມສຸກຫຼາຍຂຶ້ນ ສາມາດປະກອບສ່ວນເຮັດໃຫ້ສັງຄົມມີຄວາມສຸກຫຼາຍຂຶ້ນ ແລະເຮັດໃຫ້ໂລກມີຄວາມຜາສຸກຫຼາຍຂຶ້ນໃນທີ່ສຸດ.



# 1

# ພາກແນະນຳ

# ຄັ້ງໜຶ່ງຜູ້ໃຫຍ່ໝົດທຸກຄົນເຄີຍເປັນເດັກນ້ອຍມາກ່ອນ - ເຖິງວ່າມີພຽງບາງຄົນຈື່ຈຳໄດ້ກໍຕາມ

ເຈົ້າຊາຍນ້ອຍ ຈາກບົດປະພັນຂອງ ອອງຕວນ ເດີ ແຊງ-ເອກຊູເປຣີ (ANTOINE DE SAINT-EXUPERY)

ຜູ້ໃຫຍ່ເປັນຜູ້ອອກແບບລະບົບໂຮງຮຽນສຳລັບເດັກນ້ອຍ ແລ້ວຈະໃຫ້ເດັກນ້ອຍມີຄວາມສຸກໄດ້ແນວໃດຢູ່ໃນລະບົບໂຮງຮຽນແບບນີ້? ຄຳຖາມນີ້ເຮັດໃຫ້ພວກເຮົາຕ້ອງຄຳນຶງເຖິງຄວາມເຊື່ອມໂຍງກັນລະຫວ່າງຄວາມສຸກແລະຄຸນນະພາບຂອງໂຮງຮຽນ. ອີງຕາມ*ບົດລາຍງານກ່ຽວກັບຄວາມສຸກຢູ່ໃນໂລກ* ປີ 2015 (Helliwell, et. al., 2015) ໂຮງຮຽນທີ່ໃຫ້ຄວາມສຳຄັນກ່ຽວກັບຄວາມຢູ່ດີມີສຸກຂອງຜູ້ຮຽນມີແນວໂນ້ມທີ່ຈະມີປະສິດທິຜົນຫຼາຍຂຶ້ນ ໂດຍມີຜົນຂອງການຮຽນຮູ້ດີຂຶ້ນ ແລະຜູ້ຮຽນປະສົບຜົນສຳເລັດຢ່າງໃຫຍ່ຫຼວງໃນຊີວິດ (Layard and Hagell, 2015).

ເພື່ອສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກ ລະບົບຂອງໂຮງຮຽນຈຳເປັນຕ້ອງເຫັນຄຸນຄ່າດ້ານຈຸດແຂງແລະພອນສະຫວັນສະເພາະຂອງຜູ້ຮຽນ ໂດຍຍອມຮັບວ່າເດັກມີ 'ສະຕິປັນຍາຫຼາຍຢ່າງ' ແລະແຕ່ລະຢ່າງກໍມີຄວາມສຳຄັນເທົ່າທຽມກັນ (Gardner, 1993). ຄວາມຈິງແລ້ວ ຢູ່ໃນມາດຕາ 29 ຂອງສົນທິສັນຍາກ່ຽວກັບສິດທິເດັກ ກຳນົດໄວ້ວ່າ ການສຶກສາຄວນຮັບປະກັນການພັດທະນາຄວາມເປັນລັກສະນະສ່ວນຕົວ, ພອນສະຫວັນ, ຄວາມສາມາດທາງດ້ານຈິດໃຈແລະຮ່າງກາຍ ຕາມສັກກະຍະພາບຂອງຕົນຢ່າງເຕັມປ່ຽມ (United Nations General Assembly, 1949).

ການສະແຫວງຫາຄວາມສຸກແມ່ນຍອດປາຖະໜາຂອງສິ່ງມີຊີວິດທັງປວງ 'ເລື່ອງນີ້ເກີດຂຶ້ນມາແຕ່ດົນນານເທົ່າກັບປະຫວັດສາດ' (McMahon, 2006, p. 1). ນັກປຣັດຊະຍາ

ຈາກສ່ວນຕ່າງໆຂອງໂລກ ໄດ້ຕາມຫາຮ່ອງຮອຍປະຫວັດສາດກ່ຽວກັບເລື່ອງນີ້ມາໄດ້ຫຼາຍພັນປີແລ້ວ ນັບຕັ້ງແຕ່ ອາຣິສໂຕເຕິລ ແລະ ໂຊກຣາເຕສ (Aristotle and Socrates) ໃນສະໄໝດຶກດຳບັນຂອງປະເທດເກຣັກ, ຂົງຈື້ໃນປະເທດຈີນ ແລະສິດທັດຖະ ໂຄຕະມະ (ພະພຸດທະເຈົ້າ) ຢູ່ປະເທດອິນເດຍ. ອາຣິສໂຕເຕິລ ມັກເວົ້າສະເໝີວ່າ 'ຄວາມສຸກແມ່ນຄວາມໝາຍແລະຈຸດປະສົງຂອງຊີວິດ ຊຶ່ງແມ່ນຈຸດມຸ່ງໝາຍແລະເປົ້າໝາຍທັງໝົດ ເພື່ອການດຳລົງຢູ່ຂອງມະນຸດນັ້ນເອງ' (Crisp, 2000). ຄວາມໄຝ່ຫາຄວາມສຸກແມ່ນສ່ວນໜຶ່ງຂອງສິ່ງທີ່ມະນຸດຫາທາງໄຂວ່ຄວ້າຈົນມາຮອດທຸກມື້ນີ້ ພິສູດໄດ້ວ່າເປັນສິ່ງທີ່ກ່ຽວຂ້ອງກັບສິ່ງທີ່ຜູ້ຄົນມັກອ້າງເຖິງສະເໝີວ່າແມ່ນ 'ສາດແຫ່ງຄວາມສຸກ' ເກີດຈາກການເຄື່ອນໄຫວທາງບວກດ້ານຈິດຕະສາດ ຊຶ່ງຄົ້ນພົບໂດຍ ມາຣ໌ທິນ ເຊລິກມັນ (Martin Seligman) ໃນທ້າຍຊຸມປີ 1990 (Haidt, 2006).

ປັດຈຸບັນ ຄວາມສຸກໄດ້ກາຍມາເປັນສ່ວນໜຶ່ງບັນຈຸຢູ່ໃນວາລະນະໂຍບາຍຂອງໂລກ. ໃນປີ 2011 ກອງປະຊຸມໃຫຍ່ຂອງອົງການສະຫະປະຊາຊາດ ໄດ້ເອົາຄວາມສຸກເປັນເປົ້າໝາຍພື້ນຖານຂອງມະນຸດບັນຈຸຢູ່ໃນຍັດຕິ 65/309 ເອີ້ນວ່າ 'ຄວາມສຸກ: ມຸ່ງສູ່ແນວທາງການພັດທະນາແບບຄົບຖ້ວນສົມບູນ' ແລະຢູ່ກອງປະຊຸມລະດັບສູງໃນປີ 2012 ນຳພາໂດຍລັດຖະບານພູຖານ ພາຍໃຕ້ຫົວຂໍ້ 'ຄວາມສຸກແລະຄວາມຢູ່ດີມີສຸກ: ການນິຍາມເບົ້າຫຼອມຄວາມຄິດອັນໃໝ່' ຊຶ່ງຈັດຂຶ້ນທີ່ສຳນັກງານໃຫຍ່ຂອງອົງການສະຫະປະຊາດທີ່ນະຄອນນິວຢອກ. *ບົດລາຍງານກ່ຽວກັບຄວາມສຸກຢູ່ໃນໂລກ* ປະຈຳປີ 2015 ຊຶ່ງເປັນເອກະສານກ່ຽວກັບກອງປະຊຸມທີ່ພິມເຜີຍແຜ່ເປັນຄັ້ງທຳອິດ ບອກວ່າ ປັດຈຸບັນ ຜູ້ຄົນໃຫ້ຄວາມສຳຄັນເລື່ອງຄວາມສຸກຫຼາຍຂຶ້ນ ແລະຍອມຮັບວ່າມັນເປັນເຄື່ອງຊີ້ວັດທີ່ຖືກຕ້ອງກ່ຽວກັບ 'ຄວາມກ້າວໜ້າທາງສັງຄົມແລະເປົ້າໝາຍນະໂຍບາຍຂອງລັດ' (Helliwell et. al, 2015). ເນື່ອງຈາກພວກເຮົາເລີ່ມວາລະໃໝ່ຂອງການພັດທະນາໃນລະດັບໂລກ ດັ່ງນັ້ນ ເປົ້າໝາຍການພັດທະນາທີ່ຍືນຍົງ ຊຶ່ງມີການລິເລີ່ມທີ່ນະຄອນນິວຢອກ ເດືອນກັນຍາ 2015 ຈຶ່ງສະທ້ອນໃຫ້ເຫັນຄວາມຄິດກ່ຽວກັບຄວາມຢູ່ດີມີສຸກຢູ່ໃນຈຸດປະສົງແລະເປົ້າໝາຍຕ່າງໆ (United Nations General Assembly, 2015a).

ບໍ່ພຽງແຕ່ບາງປະເທດທີ່ເລີ່ມຖືເອົາຄວາມສຸກເປັນຈຸດປະສົງຂອງນະໂຍບາຍການພັດທະນາຂອງຕົນ ແຕ່ຄວາມສຸກກໍມີຄວາມສຳຄັນຫຼາຍຂຶ້ນຢູ່ໃນນະໂຍບາຍການສຶກສານຳ

ອີກ. ຕະຫຼອດສະຕະວັດທີຊາວ ແນວທາງການສຶກສາທົ່ວໄປເນັ້ນໃສ່ການກະກຽມຜູ້ຮຽນສໍາລັບໂລກທີ່ຜູ້ຄົນຕ້ອງເຮັດວຽກພິເສດ ຢູ່ໃນບໍລິບົດຂອງການພັດທະນາ ແລະການແຂ່ງຂັນດ້ານເສດຖະກິດທີ່ກໍາລັງຂະຫຍາຍຕົວ.

ປັດຈຸບັນ ຄວາມບໍ່ໝັ້ນຄົງ, ຄວາມບໍ່ເທົ່າທຽມກັນ, ການເຄື່ອນຍ້າຍແລະຄວາມທຸກໃຈໃນຊີວິດທີ່ກໍາລັງເພີ່ມຂຶ້ນ ພ້ອມກັບຄວາມທຸກຍາກ, ຄວາມຂັດແຍ່ງແລະຄວາມວິຕົກກັງວົນກ່ຽວກັບສິ່ງແວດລ້ອມ ໝາຍຄວາມວ່າພວກເຮົາຄວນມີຄວາມຄາດຫວັງຫຼາຍຂຶ້ນຈາກລະບົບການສຶກສາ ໂດຍສະເພາະພວກເຮົາຈໍາເປັນຕ້ອງໃຫ້ມີລະບົບການສຶກສາທີ່ມີບົດບາດໃນການຮອງຮັບສິ່ງທ້າທາຍເຫຼົ່ານີ້ ຢູ່ໃນໂລກທີ່ມີການປ່ຽນແປງຢ່າງໄວວາແລະບໍ່ແນ່ນອນ.

ການວິໄຈສະແດງໃຫ້ເຫັນວ່າ ປະເທດທີ່ມີຄວາມບໍ່ເທົ່າທຽມກັນຢູ່ໃນລະດັບສູງນັ້ນ ມີທ່າອ່ຽງທີ່ປະຊາຊົນຂອງຕົນຈະມີບັນຫາ ນັບແຕ່ບັນຫາດ້ານສັງຄົມແລະອາລົມຄວາມຮູ້ສຶກຫຼາຍກວ່າປະເທດທີ່ມີຄວາມບໍ່ເທົ່າທຽມກັນຢູ່ໃນລະດັບຕໍ່າ ແລະປະຊາຊົນທັງສອງປະເທດນີ້ມີແນວໂນ້ມທີ່ຈະມີຄວາມສຸກໜ້ອຍກວ່າປະເທດທີ່ມີຄວາມເທົ່າທຽມຫຼາຍກວ່າ (Wilkinson and Pickett, 2011). ໃນນະຂະດຽວກັນ ໄພຄຸກຄາມຈາກພວກຫົວຮຸນແຮງສຸດຂົ້ວທີ່ເພີ່ມທະວີຂຶ້ນ ເຮັດໃຫ້ໂລກເປັນບ່ອນທີ່ຜູ້ຄົນບໍ່ຍອມຮັບຄວາມຄິດເຫັນທີ່ແຕກຕ່າງ. ອີງຕາມ*ແຜນປະຕິບັດງານເພື່ອປ້ອງກັນລັດທິນິຍົມໃຊ້ຄວາມຮຸນແຮງສຸດຂົ້ວ*ຂອງເລຂາທິການໃຫຍ່ອົງການສະຫະປະຊາຊາດ ສະແດງໃຫ້ເຫັນເຖິງຄວາມຈໍາເປັນທີ່ການສຶກສາຕ້ອງພັດທະນາ 'ທັກສະດ້ານການປະພຶດແລະອາລົມທາງສັງຄົມ ຊຶ່ງສາມາດຊ່ວຍໃຫ້ເກີດການຢູ່ຮ່ວມກັນໂດຍສັນຕິແລະຄວາມຍອມຮັບຄວາມຄິດເຫັນທີ່ແຕກຕ່າງ' (United Nations General Assembly, 2015b, p. 18). ປັດໄຈພາຍນອກທັງໝົດເຫຼົ່ານີ້ມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ໂຮງຮຽນ ຊຶ່ງແມ່ນສະຖາບັນຕ່າງໆ ທີ່ມີບົດບາດໃນຖານະທີ່ເປັນລະບົບໃຫ້ການສະໜັບສະໜູນສົ່ງເສີມຄວາມຢູ່ດີມີສຸກຂອງຜູ້ຮຽນ ແລະເຮັດໃຫ້ເກີດຄວາມຮູ້ສຶກຜູກພັນໂດຍສະເພາະເວລາທີ່ໂຄງສ້າງ ແລະຄ່ານິຍົມຂອງຄອບຄົວທີ່ເຄີຍປະຕິບັດກັນມາ ກໍາລັງຖືກກັດເຊາະເທື່ອລະໜ້ອຍ (OECD, 2011).

ປັດໄຈພາຍໃນ ເຊັ່ນ: ສະພາບແວດລ້ອມການຮຽນຮູ້ບໍ່ດີ, ຄວາມບໍ່ເຂົ້າໃຈບັນຫາລະ

ອ່ງດອ່ອນຂອງນັກການສຶກສາ, ຫຼັກສູດລ້າສະໄໝ, ການເນັ້ນໃສ່ເນື້ອໃນວິຊາການຫຼາຍເກີນໄປນັ້ນ ເປັນຜົນກະທົບບໍ່ດີຕໍ່ຄວາມຢູ່ດີມີສຸກຂອງຜູ້ຮຽນ ສາມາດເຮັດໃຫ້ໂຮງຮຽນກາຍເປັນສະຖານທີ່ບໍ່ໃຫ້ຄວາມສຸກໄດ້ເລີຍ. ນອກຈາກນັ້ນ ທັງຜູ້ຮຽນແລະນັກການສຶກສາພົບຄວາມກົດດັນເພີ່ມຂຶ້ນ ຍ້ອນການເນັ້ນໃສ່ຄະແນນແລະການສອບເສັງຫຼາຍ ພ້ອມທັງມີຄວາມກົດດັນຢ່າງບໍ່ມີຂໍ້ສົງໄສ ເພາະຢາກເຮັດໃຫ້ດີກວ່າຄູ່ແຂ່ງຈາກປະເທດໃກ້ຄຽງ ໃນການປະເມີນຄວາມສາມາດດ້ານວິຊາການຂອງນັກຮຽນລະຫວ່າງປະເທດແລະໃນພາກພື້ນ ຊຶ່ງຫຼາຍປະເທດໃຊ້ເປັນເກນວັດຜົນການສຶກສາ ເພື່ອສົມທຽບໃສ່ປະເທດອື່ນ. ຄວາມກົດດັນນີ້ສະທ້ອນໃຫ້ເຫັນຈາກການເນັ້ນໃສ່ຜົນທາງດ້ານວິຊາການຢ່າງເຄັ່ງຄັດ ຊຶ່ງທຳກັນຢູ່ໃນປັດຈຸບັນ. ຄວາມກົດດັນໃນການຮຽນດ້ານວິຊາການທີ່ກຳລັງເພີ່ມທະວີຂຶ້ນນີ້ ພາໃຫ້ເກີດແນວໂນ້ມທີ່ໜ້າຕົກໃຈ ຄື: ຄວາມບໍ່ໄວ້ວາງໃຈກັນລະຫວ່າງນັກຮຽນ, ການຊິງດີຊິງເດັ່ນກັນ, ການທະເລາະວິວາດກັນ ແລະການໃຊ້ຄວາມຮຸນແຮງຢູ່ໃນໂຮງຮຽນມີຫຼາຍຂຶ້ນ ທັງຜູ້ຮຽນກໍມີຄວາມຢ້ານກົວຫຼາຍຂຶ້ນ ທີ່ຈະສະແດງລັກສະນະສ່ວນຕົວຂອງຕົນອອກມາແລະຢ້ານເຮັດສິ່ງທີ່ຜິດ. ອາການທີ່ 'ພາໃຫ້ເປັນບໍ່ເກີດແຫ່ງຄວາມທຸກໃຈ' ເຫຼົ່ານີ້ ສະທ້ອນໃຫ້ເຫັນຄວາມຈຳເປັນທີ່ລະບົບການສຶກສາຕ້ອງປ່ຽນແປງໂຮງຮຽນ ບໍ່ເປັນພຽງບ່ອນໃຫ້ຄວາມຮູ້ເທົ່ານັ້ນ ແຕ່ໃຫ້ເປັນບ່ອນທີ່ມີສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການເຕີບໃຫຍ່ຂະຫຍາຍຕົວ, ການພັດທະນາການດ້ານສັງຄົມແລະອາລົມຄວາມຮູ້ສຶກຂອງຜູ້ຮຽນນຳອີກ.

ປັດຈຸບັນ ມີການຍອມຮັບຫຼາຍຂຶ້ນກ່ຽວກັບຄວາມຈຳເປັນເພື່ອປະເມີນການຮຽນ ໂດຍເບິ່ງຂ້າມຜົນການຮຽນທາງວິຊາການທີ່ເຄັ່ງຄັດ ແລະໃຫ້ຄວາມສຳຄັນໃນການວັດທາງດ້ານສັງຄົມແລະອາລົມຄວາມຮູ້ສຶກຈາກການຮຽນຮູ້ ຊຶ່ງນຳໄປສູ່ການສົ່ງເສີມຄວາມຢູ່ດີມີສຸກຂອງຜູ້ຮຽນ. ລາຍາຣ໌ດ ແລະ ຮາເຈລລ໌ (Layard and Hagell) ໃຫ້ຂໍ້ຄິດວ່າ 'ຖ້າທ່ານເຫັນວ່າສິ່ງໃດມີຄຸນຄ່າ ກໍໃຫ້ວັດສິ່ງນັ້ນ. ຖ້າໂຮງຮຽນບໍ່ວັດຄວາມຢູ່ດີມີສຸກຂອງເດັກນ້ອຍແຕ່ໄປວັດການພັດທະນາດ້ານຄວາມຮູ້ແລ້ວ ຜູ້ຄົນມັກຈະຄິດເຖິງເລື່ອງຫຼັງນີ້ມາກ່ອນສະເໝີ'. ຄວາມຈິງແລ້ວ ລະບົບການສຶກສາລວມທັງໂຮງຮຽນ ຕ້ອງຫຼີກເວັ້ນການເນັ້ນໃສ່ການສອນແລະການສອບເສັງຕາມມາດຕະຖານ ແລ້ວຫັນມາກຳນົດແລະວັດຄຸນນະພາບ ໂດຍກ້າວຂ້າມການຮຽນດ້ານວິຊາການຕາມລາຍວິຊາໃນລະດັບປະຖົມ ໂດຍເຫັນຄຸນຄ່າແລະບົ່ມເພາະພອນສະຫວັນ, ທັກສະແລະຄວາມສາມາດສະເພາະທີ່ຫຼາກຫຼາຍຂອງຜູ້ຮຽນ (Zhao, 2015). ເທົ່ານັ້ນຍັງບໍ່ພໍ ຕ້ອງຊອກຄົ້ນເອົາສັກກະຍະພາບດ້ານການສຶກສາອອກ

ມາໃຫ້ໄດ້ ເພື່ອສົ່ງເສີມຄວາມສຸກຂອງຜູ້ຮຽນນຳອີກ, ຕ້ອງໃຫ້ຜູ້ຮຽນມີທັກສະແລະໄດ້ຮັບແຮງຈູງໃຈຫຼາຍຂຶ້ນ ເພື່ອໃຫ້ເຂົາເຈົ້າສາມາດປະກອບສ່ວນເຂົ້າໃນການສ້າງສັງຄົມທີ່ສະຫງົບສຸກ, ເປັນທຳ, ຍືນຍົງແລະມີຄວາມສຸກຫຼາຍຂຶ້ນໃນທີ່ສຸດ. ອັນນີ້ເປັນສັນຍານບົ່ງບອກວ່າໂຮງຮຽນຈຳເປັນຕ້ອງກາຍເປັນບ່ອນທີ່ໃຫ້ຄວາມສຸກຫຼາຍຂຶ້ນຢ່າງທີ່ບໍ່ເຄີຍເປັນມາກ່ອນເລີຍ.

ອົງການດ້ານການສຶກສາ, ວິທະຍາສາດແລະວັດທະນະທຳຂອງອົງການສະຫະປະຊາຊາດ (ຢູເນສໂກ) ຍອມຮັບຄວາມສຳຄັນດ້ານສັງຄົມ ແລະອາລົມຄວາມຮູ້ສຶກຈາກການຮຽນຮູ້ມາດົນນານແລ້ວ ດັ່ງທີ່ສະທ້ອນໃຫ້ເຫັນຢູ່ໃນພັນທະກິດຂອງອົງການສະຫະປະຊາຊາດເພື່ອສົ່ງເສີມສັນຕິພາບດ້ວຍການສຶກສາ. ໃນປີ 1972 ບົດລາຍງານຂອງອົງການຢູເນສໂກພາຍໃຕ້ຫົວຂໍ້ *ການຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການ* ສະແດງໃຫ້ເຫັນຄວາມສຳຄັນຂອງການສຶກສາ ເພື່ອບັນລຸຄວາມຕ້ອງການຂອງມະນຸດໄດ້ຢ່າງຄົບຖ້ວນສົມບູນ (Faure et. all., 1972) ແລະໃນປີ 1996 ບົດລາຍງານ ຊື່ວ່າ *ການຮຽນຮູ້: ຄຸນຄ່າຢູ່ພາຍໃນ* ໄດ້ລະບຸສີ່ເສົາຄ້ຳຂອງການຮຽນຮູ້ ຄື: ຮຽນເພື່ອຮູ້, ຮຽນຮູ້ເພື່ອເຮັດ, ຮຽນເພື່ອຢູ່ຮ່ວມກັນຢ່າງສັນຕິ ແລະ ຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການ, ແລະ ໃນນີ້ແມ່ນໄດ້ເນັ້ນຮຽນຮູ້ເພື່ອຢູ່ຮ່ວມກັນຢ່າງສັນຕິ ເປັນເປົ້າໝາຍສູງສຸດຂອງການຮຽນ ຖືເອົາເປັນເປົ້າໝາຍທີ່ຈະຕ້ອງບັນລຸໃຫ້ໄດ້ (Delors et. al., 1996). ການໃຫ້ຄວາມສຳຄັນດ້ານສັງຄົມແລະອາລົມຄວາມຮູ້ສຶກຈາກການຮຽນຮູ້ຍັງສະທ້ອນໃຫ້ເຫັນຢູ່ໃນຄວາມໝາຍໝັ້ນຕັ້ງໃຈຂອງອົງການຢູເນສໂກ ທີ່ມີຕໍ່ການສຶກສາເພື່ອການພັດທະນາທີ່ຍືນຍົງ. ວຽກຂອງອົງການເສີມຂະຫຍາຍກ່ຽວກັບການສຶກສາຄວາມເປັນພົນລະເມືອງຂອງໂລກ ແລະ 'ການລິເລີ່ມການສຶກສາລະດັບໂລກຄັ້ງທຳອິດ' ຂອງເລຂາທິການໃຫຍ່ອົງການສະຫະປະຊາຊາດຊຶ່ງເລີ່ມຕົ້ນໃນປີ 2012 ລະບຸວ່າ ການສົ່ງເສີມຄວາມເປັນພົນລະເມືອງຂອງໂລກ ແມ່ນໜຶ່ງໃນຈຳນວນບຸລິມະສິດສາມຢ່າງໃນລະດັບໂລກ. ນອກຈາກນັ້ນ ວາລະໃໝ່ດ້ານການສຶກສາລະດັບໂລກ - ການສຶກສາ ປີ 2030 ຊຶ່ງແມ່ນເປົ້າໝາຍທີສີ່ຂອງການພັດທະນາທີ່ຍືນຍົງນັ້ນ ປະກອບດ້ວຍເປົ້າໝາຍທີ່ເນັ້ນໃສ່ຄວາມຮູ້ແລະທັກສະທີ່ຈຳເປັນ ເພື່ອສົ່ງເສີມການພັດທະນາທີ່ຍືນຍົງ, ວັດທະນະທຳສັນຕິສຸກແລະຄວາມເປັນພົນລະເມືອງຂອງໂລກ.

ສາມາດເວົ້າໄດ້ວ່າ ການເຮັດໃຫ້ຜູ້ຮຽນມີທັກສະ, ທັດສະນະຄະຕິແລະຄ່ານິຍົມກ່ຽວກັບການໃຊ້ຊີວິດຢູ່ຮ່ວມກັນ ແລະ 'ເປັນມະນຸດ' ທີ່ມີຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ,

ຍອມຮັບຄວາມຄິດທີ່ແຕກຕ່າງ, ການສື່ສານແລະຄວາມສ້າງສັນ ກ່ອນອື່ນຈຳເປັນຕ້ອງຮັບປະກັນໃຫ້ມີຄວາມຢູ່ດີມີສຸກ ແລະການພັດທະນາທີ່ມີອົງປະກອບຄົບຖ້ວນພາຍໃນສະພາບແວດລ້ອມຂອງໂຮງຮຽນ. ຄວາມຈິງແລ້ວ ຢູ່ໃນການສຶກສາຄົ້ນຄວ້າໃນລະດັບພາກພື້ນກ່ຽວກັບ*ການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ, ນະໂຍບາຍການສຶກສາແລະຄວາມເປັນຈິງຢູ່ອາຊີ-ປາຊີຟິກ* ພົບວ່າ ເຖິງວ່າຄວາມຄິດນີ້ອາດສະທ້ອນໃຫ້ເຫັນຢູ່ນະໂຍບາຍຂອງຊາດແລະຫຼັກສູດການສຶກສາ ແຕ່ກໍມີສິ່ງຢືນຢັນພຽງໜ້ອຍດຽວວ່າ ວິໄສທັດທີ່ຍິ່ງໃຫຍ່ຂອງການສຶກສາເພື່ອສັນຕິພາບ ຈະໄດ້ນຳໄປສູ່ພາກປະຕິບັດໃນສະພາບຄວາມເປັນຈິງຢູ່ໃນໂຮງຮຽນແລະຫ້ອງຮຽນ (UNESCO, 2014). ເພື່ອຈຸດປະສົງນີ້ ຫ້ອງການອົງການຢູເນສໂກປະຈຳພາກພື້ນອາຊີ-ປາຊີຟິກ (UNESCO Bangkok) ຈຶ່ງໄດ້ລິເລີ່ມໂຄງການໂຮງຮຽນໃຫ້ຄວາມສຸກໃນປີ 2014 ເພື່ອສົ່ງເສີມຄວາມສຳຄັນຂອງຄວາມສຸກຢູ່ໃນໂຮງຮຽນ ໂດຍແນໃສ່ເພື່ອສົ່ງເສີມຄວາມຢູ່ດີມີສຸກແລະການພັດທະນາການທີ່ມີອົງປະກອບຄົບຖ້ວນຂອງຜູ້ຮຽນ.

ບົດລາຍງານນີ້ສະເໜີສິ່ງທີ່ຄົ້ນພົບຈາກການສຶກສາຄົ້ນຄວ້າທີ່ໄດ້ລິເລີ່ມພາຍໃຕ້ໂຄງການໂຮງຮຽນໃຫ້ຄວາມສຸກ ໂດຍແນໃສ່ການສ້າງໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ. ໂດຍສະເພາະແລ້ວ ການສຶກສາຄົ້ນຄວ້ານີ້ມີຈຸດມຸ່ງໝາຍເພື່ອກຳນົດມາດຖານຕ່າງໆ ທີ່ອາດເປັນສ່ວນປະກອບເຂົ້າຢູ່ໃນໂຮງຮຽນໃຫ້ຄວາມສຸກ ລວມທັງຍຸດທະສາດເພື່ອບັນລຸມາດຖານແຕ່ລະຢ່າງຢູ່ໃນບໍລິບົດຂອງໂຮງຮຽນ. ໂຄງປະກອບນີ້ໄດ້ຮັບການສ້າງຂຶ້ນ ອີງຕາມການປຶກສາຫາລືກັບຜູ້ມີສ່ວນຮ່ວມໃນລະດັບໂຮງຮຽນ ແລະໄດ້ວາງໂຄງສ້າງມາດຖານຕ່າງໆຢູ່ໃນສາມຫົວເລື່ອງໃຫຍ່: 1) ຜູ້ຄົນ ໝາຍເຖິງຄວາມສຳພັນກັນທາງສັງຄົມລະຫວ່າງສະມາຊິກຢູ່ໃນຊຸມຊົນທີ່ມີໂຮງຮຽນ, 2) ຂະບວນການ ໝາຍເຖິງວິທີການຮຽນແລະການສອນ, ແລະ 3) ສະຖານທີ່ ໝາຍເຖິງປັດໄຈຕາມສະພາບເງື່ອນໄຂ.

ໂຄງປະກອບນີ້ຍັງເຊື່ອມໂຍງກັບການລິເລີ່ມອື່ນໆ ເຊັ່ນ: ໂຮງຮຽນຕົ້ນແບບທີ່ເປັນມິດກັບເດັກນ້ອຍ ຊຶ່ງອົງການຢູນິເຊັບໄດ້ຕັ້ງຂຶ້ນ. ຄວາມຈິງແລ້ວ ໂຮງຮຽນຕົ້ນແບບທີ່ເປັນມິດກັບເດັກນ້ອຍແລະໂຄງການໂຮງຮຽນໃຫ້ຄວາມສຸກມີອົງປະກອບບາງຢ່າງຄ້າຍຄືກັນ ໂດຍສະເພາະກ່ຽວກັບການສົ່ງເສີມຄວາມຢູ່ດີມີສຸກຂອງຜູ້ຮຽນ ແລະປັບປຸງຄຸນນະພາບການສຶກສາໂດຍກ້າວຂ້າມຄວາມຄິດກ່ຽວກັບຜົນການຮຽນທາງດ້ານວິຊາການ. ໃນຂະນະດຽວກັນທັງສອງຢ່າງນີ້ກໍມີບາງດ້ານທີ່ແຕກຕ່າງກັນ. ຂະນະທີ່ໂຮງຮຽນຕົ້ນແບບທີ່ເປັນມິດກັບເດັກ

ນ້ອຍໃຊ້ວິທີອີງໃສ່ສິດທິເດັກ ເຮັດຂຶ້ນຕາມສົນທິສັນຍາກ່ຽວກັບສິດທິເດັກຢູ່ໃນຂອບເຂດທີ່ກວ້າງ ກວມເອົາສິ່ງປຸກສ້າງ, ສຸຂະພາບ, ຄວາມປອດໄພ, ຫຼັກປະກັນ, ໂພຊະນາການແລະຄວາມຢູ່ດີມີສຸກດ້ານຈິດຕະສາດ (UNICEF, 2009) ໂຄງການໂຮງຮຽນໃຫ້ຄວາມສຸກຊ້ຳພັດເນັ້ນໃສ່ຄວາມສຸກທາງດ້ານຄຸນນະພາບການສຶກສາ ໂດຍສະເພາະໂຄງການນີ້ເນັ້ນໃສ່ມິຕິທາງດ້ານຈິດຕະສາດສັງຄົມແລະອາລົມຄວາມຮູ້ສຶກໃນການຮຽນຮູ້ ເພື່ອສົ່ງເສີມຄວາມສຸກຢູ່ໃນບໍລິບົດຂອງໂຮງຮຽນ ໂດຍເອົາປະສົບການທີ່ໄດ້ຈາກການເຂົ້າໂຮງຮຽນ ເຮັດໃຫ້ຜູ້ຮຽນມີຄວາມຢູ່ດີມີສຸກ, ການເຕີບໃຫຍ່ຂະຫຍາຍຕົວແລະມີການພັດທະນາການ.

ສ່ວນໃຫຍ່ບົດລາຍງານນີ້ມີເປົ້າໝາຍແນໃສ່ລະດັບນະໂຍບາຍ ລວມທັງລະດັບໂຮງຮຽນ. ຂະນະທີ່ດ້ານໜຶ່ງມີຈຸດມຸ່ງໝາຍຢາກໃຫ້ຜູ້ກຳນົດນະໂຍບາຍຮັບປະກັນວ່າ ລະບົບການສຶກສາໄດ້ໃຫ້ຄວາມສຳຄັນຕໍ່ຄວາມສຸກ ແລະຄວາມຢູ່ດີມີສຸກຂອງຜູ້ຮຽນ ອີກດ້ານໜຶ່ງແນໃສ່ແລກປ່ຽນຄວາມຄິດເຫັນແລະການປະຕິບັດກັບໂຮງຮຽນຕ່າງໆ ຊຶ່ງສາມາດສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກໃນລະດັບໂຮງຮຽນ. ເນື່ອງຈາກບົດລາຍງານນີ້ມີຄວາມກ່ຽວຂ້ອງກັບການລິເລີ່ມຕ່າງໆ ເຊັ່ນ: ຈິດຕະສາດທາງບວກຫຼືການສຶກສາທາງບວກ ລວມທັງການສຶກສາຄວາມເປັນພົນລະເມືອງຂອງໂລກ ໃນຈຳນວນສິ່ງອື່ນໆ ດັ່ງນັ້ນ ບົດລາຍງານນີ້ຈຶ່ງມີເປົ້າໝາຍແນໃສ່ນັກວິໄຈແລະນັກວິຊາການ ລວມທັງຊຸມຊົນທີ່ມີການພັດທະນາດ້ານການສຶກສາໃນວົງກວ້າງນຳອີກ. ອັນສຸດທ້າຍ ພວກເຮົາຫວັງວ່າໂຄງປະກອບໂຮງຮຽນໃຫ້ຄວາມສຸກນີ້ ຈະເປັນຈຸດເລີ່ມຕົ້ນຂອງສິ່ງອ້າງອີງທີ່ສຳຄັນສຳລັບການວັດຄຸນນະພາບການຮຽນຢູ່ໃນໂຮງຮຽນ ຊຶ່ງເບິ່ງໄປໄກກວ່າຜົນການຮຽນທາງດ້ານວິຊາການ ທີ່ເຄັ່ງຄັດຢູ່ພາກພື້ນອາຊີ-ປາຊີຟິກແລະເຂດອື່ນໆ.

ບົດລາຍງານນີ້ເລີ່ມຕົ້ນດ້ວຍການນຳສະເໜີຂອບເຂດຂອງການວິໄຈ ສຳລັບການສຶກສາຄົ້ນຄວ້າ ຊຶ່ງປະກອບດ້ວຍຂອບເຂດແນວຄິດ ແລະວິທີການວິໄຈທີ່ນຳໃຊ້ຢູ່ໃນບົດທີສອງ. ຕໍ່ຈາກນັ້ນ ບົດທີສາມໄດ້ລົງເລິກເລື່ອງຄວາມເປັນມາກ່ຽວກັບບໍລິບົດໃນລະດັບໂລກແລະພາກພື້ນ ໂດຍໃຫ້ມີການສົນທະນາແລກປ່ຽນພື້ນຖານພາກທິດສະດີແລະປຣັດຊະຍາ ສຳລັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ໂດຍສະເໜີການລິເລີ່ມໃນລະດັບໂລກ ທີ່ເຊື່ອມໂຍງຄວາມສຸກແລະຄວາມຢູ່ດີມີສຸກ ທັງອະທິບາຍກໍລະນີສຶກສາເປັນແຕ່ລະປະເທດທີ່ກ່ຽວຂ້ອງກັບນະໂຍບາຍດ້ານການພັດທະນາແລະການສຶກສາຢູ່ພາກພື້ນອາຊີ-ປາຊີຟິກ.

ຂໍ້ມູນເບື້ອງຕົ້ນທີ່ຮັບໂຮມມາໄດ້ ຈາກຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນ ໄດ້ນຳມາສັງລວມເຂົ້າກັນເພື່ອເຮັດເປັນໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກຢູ່ໃນບົດທີສີ່ ຊຶ່ງສະເໜີ 22 ມາດຖານ ພາຍໃຕ້ສາມຫົວເລື່ອງໃຫຍ່ທີ່ເຊື່ອມໂຍງກັນ ລວມທັງຕົວຢ່າງຍຸດທະສາດ ເພື່ອບັນລຸມາດຖານແຕ່ລະຢ່າງ. ຕໍ່ຈາກນັ້ນ ຈະມີການຄິດທົບທວນກ່ຽວກັບບັນຫາ, ບາດກ້າວຕໍ່ໄປວ່າຈະເຮັດແນວໃດແລະຂໍ້ສະຫຼຸບຢູ່ໃນບົດທີຫ້າ.



# ໒

# ການອອກແບບງານວິໄຈ ແລະວິທີວິທະຍາ

ບົດລາຍງານແລະໂຄງປະກອບໂຮງຮຽນໃຫ້ຄວາມສຸກທີ່ນຳສະເໜີນີ້ ອີງໃສ່ສິ່ງທີ່ຄົ້ນພົບ ຊຶ່ງຮິບໂຮມໄດ້ຈາກວິທີການວິໄຈຫຼາຍຢ່າງ. ເນື່ອງຈາກບົດລາຍງານນີ້ເນັ້ນໃສ່ປະເທດຕ່າງໆຢູ່ພາກພື້ນອາຊີ-ປາຊີຟິກໃນວົງກວ້າງ ດັ່ງນັ້ນ ຈຶ່ງບໍ່ໄດ້ລົງເລິກປະເທດໃດໜຶ່ງໂດຍສະເພາະເຈາະຈົງ ແຕ່ຖອດຖອນເອົາປະສົບການທີ່ຫຼາກຫຼາຍຂອງແຕ່ລະປະເທດ[1] ໂດຍສິ່ງທີ່ຄົ້ນພົບຊຶ່ງມີຄວາມກ່ຽວຂ້ອງກັບພາກສ່ວນອື່ນໆຂອງໂລກ. ບົດລາຍງານນີ້ນຳສະເໜີຂອບເຂດງານວິໄຈໂດຍລວມ ປະກອບດ້ວຍກອບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ລວມທັງຂໍ້ສັນນິຖານເບື້ອງຕົ້ນກ່ຽວກັບມາດຖານສຳລັບໂຮງຮຽນໃຫ້ຄວາມສຸກ. ຕໍ່ຈາກນັ້ນ ກໍມີການສຶກສາວິທີການວິໄຈ ເພື່ອກຳນົດເປັນມາດຖານສຸດທ້າຍທີ່ຈະປະກອບເຂົ້າຢູ່ໂຮງຮຽນໃຫ້ຄວາມສຸກ ລວມທັງຕົວຢ່າງຍຸດທະສາດ ເພື່ອບັນລຸມາດຖານແຕ່ລະຢ່າງ ກ່ອນຈະມີການປຶກສາຫາລືກັນກ່ຽວກັບຂໍ້ຈຳກັດຂອງການວິໄຈ.

# ກອບແນວຄິດ

ກອບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ (ແຜນວາດ 2) ເອົາມາຈາກພັນທະກິດຂອງອົງການຢູເນສໂກໃນວົງກວ້າງ ເພື່ອສົ່ງເສີມໃຫ້ເກີດສັນຕິພາບດ້ວຍການສຶກສາ ໂດຍສະເພາະຈາກສອງໃນຈຳນວນສີ່ເສົາຄ້ຳຂອງການຮຽນຮູ້ ຄື: ຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ ແລະຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການ ລວມທັງດ້ານຈິດຕະສາດທາງບວກ. ຂະນະທີ່ການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ ປະກອບດ້ວຍຄຸນສົມບັດທີ່ຈຳເປັນ ຊຶ່ງອີງໃສ່ຄວາມສຳພັນກັນ ມີຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ, ການຍອມຮັບຄວາມຄິດທີ່ແຕກຕ່າງ, ເຄົາລົບຄວາມຫຼາກຫຼາຍ, ການສື່ສານກັນແລະການເຮັດວຽກເປັນໝູ່ຄະນະ (UNESCO, 2014) ສ່ວນເສົາຄ້ຳກ່ຽວກັບການຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການເວົ້າເຖິງຄຸນສົມບັດຊຶ່ງເກີດຈາກພາຍໃນຕົວບຸກຄົນຫຼາຍກວ່າ ເຊັ່ນ: ຄວາມສ້າງສັນ, ການຄິດແບບວິພາກທາງເລິກ, ການສ້າງແຮງກະຕຸ້ນຕົວເອງ, ຄວາມພາກພຽນພະຍາຍາມແລະການເບິ່ງໂລກໃນແງ່ດີ (Faure et. al., 1972). ກອບແນວຄິດອັນນີ້ຍັງນຳໃຊ້ອົງປະກອບບາງສ່ວນ

1 ສັງລວມປະສົບການເປັນແຕ່ລະປະເທດທີ່ສະທ້ອນໃຫ້ເຫັນຢູ່ທົ່ວໄປໃນວິທີການວິໄຈນັ້ນ ນຳສະເໜີຢູ່ເອກະສານແນບທີ 1.

ຂອງຈິດຕະສາດທາງບວກນຳອີກ ເພື່ອເປັນແນວຄວາມຄິດຫຼັກທາງດ້ານທິດສະດີກ່ຽວກັບຄວາມຢູ່ດີມີສຸກ ຊຶ່ງມີຫ້າຢ່າງດ້ວຍກັນ ຄື: ອາລົມຄວາມຮູ້ສຶກທີ່ດີ, ການມີສ່ວນຮ່ວມ, ຄວາມສຳພັນກັນ, ຄວາມໝາຍແລະການເຮັດໃຫ້ສຳເລັດຜົນ (Seligman, 2012).

***ແຜນວາດ 2.*** *ກອບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ*




ອີງຕາມກອບແນວຄິດນີ້ ຈຶ່ງມີການຕັ້ງຂໍ້ສັນນິຖານເບື້ອງຕົ້ນອັນໜຶ່ງຂຶ້ນມາປະກອບດ້ວຍມາດຖານຕ່າງໆທີ່ເປັນໄປໄດ້ ຊຶ່ງອາດເປັນສ່ວນປະກອບໃຫ້ແກ່ໂຮງຮຽນໃຫ້ຄວາມສຸກ ໂດຍເອົາມາຈາກສິ່ງທີ່ຄົ້ນພົບຈາກການສຶກສາຄົ້ນຄວ້າແຫຼ່ງຂໍ້ມູນຕ່າງໆ ໃນການສຶກສາແນວຄິດແລະສິ່ງລິເລີ່ມທີ່ເຊື່ອມໂຍງກັບຄວາມຢູ່ດີມີສຸກຂອງຜູ້ຮຽນ. ຂໍ້ສັນນິຖານເບື້ອງຕົ້ນນີ້ໄດ້ນຳໃຊ້ເປັນສິ່ງອ້າງອີງຢູ່ໃນການສຶກສາຄົ້ນຄວ້າທັງໝົດ. ອີງໃສ່ຜົນການວິໄຈຂັ້ນຕົ້ນ ຂໍ້ສັນນິຖານເບື້ອງຕົ້ນນີ້ (ຕາຕະລາງ 1) ໄດ້ຮັບການເສີມຂະຫຍາຍໃຫ້ສົມບູນຂຶ້ນຕື່ມໃນເວລາຕໍ່ມາ ແລະໄດ້ຮັບການພັດທະນາໃຫ້ກາຍເປັນມາດຖານຕ່າງໆ ທີ່ນຳສະເໜີຢູ່ໃນບົດທີສີ່ຊຶ່ງເວົ້າເຖິງໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ.

***ຕາຕະລາງ 1.*** *ຂໍ້ສັນນິຖານເບື້ອງຕົ້ນກ່ຽວກັບມາດຖານສຳລັບໂຮງຮຽນໃຫ້ຄວາມສຸກ*

| ຜູ້ຄົນ | ຂະບວນການ | ສະຖານທີ່ |
|---|---|---|
| ການຜູກມິດກັບນັກຮຽນຄົນອື່ນໆ (ຢູ່ໃນຊັ້ນດຽວກັນ ແລະຊັ້ນຮຽນອື່ນ) | ການຮຽນຮູ້ເປັນໝູ່ຄະນະ (ມີການຊ່ວຍເຫຼືອ ແລະສະໜັບສະໜູນຈາກນັກຮຽນຄົນອື່ນໆ) | ພື້ນທີ່ສຳລັບການຫຼິ້ນຢູ່ນອກຫ້ອງຮຽນແລະເປັນສີຂຽວທຳມະຊາດ |
| ຄວາມສຳພັນອັນດີລະຫວ່າງນັກຮຽນແລະຄູ | ເນື້ອໃນການຮຽນຮູ້ທີ່ເປັນປະໂຫຍດຕໍ່ຊີວິດປະຈຳວັນຂອງຄົນເຮົາ | ການວາງສະແດງສິ່ງປະຈັກຕາທີ່ມີລັກສະນະສ້າງສັນ |
| ຊ່ວຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ | ພາລະການຮຽນຮູ້ຢ່າງສົມເຫດສົມຜົນ (ວຽກບ້ານ ແລະການສອບເສັງ) | ສະພາບແວດລ້ອມການຮຽນຮູ້ທີ່ອົບອຸ່ນແລະເປັນມິດ |
| ມີການສະໜັບສະໜູນຈາກຊຸມຊົນທ້ອງຖິ່ນ | ມີອິດສະຫຼະໃນການສະແດງຄວາມຄິດເຫັນຢູ່ໃນໂຮງຮຽນແລະໃນຫ້ອງຮຽນ | ມີຄວາມສະດວກສະບາຍສຳລັບນັກຮຽນທີ່ມີຄວາມຕ້ອງການແລະມີພູມຫຼັງທີ່ແຕກຕ່າງກັນ |
| ມີການຊຸກຍູ້ຈາກພໍ່ແມ່ | ມີກິດຈະກຳການຮຽນຮູ້ທີ່ໜ້າສົນໃຈແລະມີສ່ວນຮ່ວມ | ມີໂພຊະນາການທີ່ດີ |
| ມີການນຳພາຂອງໂຮງຮຽນ | ມີຄວາມຄິດເຫັນຈາກຄູຢູ່ເລື້ອຍໆ | ໂຮງຮຽນປອດໄພແລະປອດຈາກການທະເລາະວິວາດກັນ, ຄວາມທຸກໃຈ ແລະການຊິງດີຊິງເດັ່ນກັນ |
| | ມີກິດຈະກຳນອກຫຼັກສູດ | |
| | ມີການຮຽນຮູ້ຢູ່ນອກຫ້ອງຮຽນ | |

# ວິທີການ

ວິທີການວິໄຈທີ່ນໍາໃຊ້ ມີລັກສະນະຄຸນນະພາບລ້ວນໆ. ວິທີການເຫຼົ່ານີ້ໄດ້ຮັບການເລືອກເຟັ້ນ ໂດຍມີຈຸດມຸ່ງໝາຍເພື່ອໃຫ້ເຂົ້າໃຈວ່າມີປັດໄຈຫຍັງແດ່ທີ່ເວົ້າເຖິງໂຮງຮຽນໃຫ້ຄວາມສຸກ ແລະ ຕໍ່ຈາກນັ້ນ 'ກໍມີການກໍານົດຕົວແປທີ່ສາມາດວັດໄດ້ ຫຼືຮັບຟັງຄວາມຄິດເຫັນຂອງຜູ້ທີ່ບໍ່ມີສິດມີສຽງ' (Creswell, 2007, p. 40). ໝາຍຄວາມວ່າ ບົດລາຍງານນີ້ສະແຫວງຫາຄວາມເຂົ້າໃຈຕົວແປກ່ຽວກັບໂຮງຮຽນໃຫ້ຄວາມສຸກ ອີງໃສ່ຄວາມຄິດເຫັນຂອງຜູ້ທີ່ຢູ່ໃນລະດັບໂຮງຮຽນ ຊຶ່ງຜູ້ຄົນມັກຈະບໍ່ໄດ້ຍິນໄດ້ຟັງ. ຕໍ່ຈາກນັ້ນ ມີການກໍານົດມາດຖານສໍາລັບໂຮງຮຽນໃຫ້ຄວາມສຸກ ອີງໃສ່ການແປຄວາມໝາຍຂອງຄວາມຄິດເຫັນຮ່ວມກັນຂອງຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນ. ດັ່ງນັ້ນ ການສຶກສາຄົ້ນຄວ້ານີ້ຈຶ່ງໃຊ້ວິທີແບບມີສ່ວນຮ່ວມ ໂດຍມີການສ້າງໂຄງປະກອບຂຶ້ນມາດ້ວຍການສຶກສາຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ ພ້ອມດຽວກັນນັ້ນກໍມີການກວດຄືນຄວາມຖືກຕ້ອງດ້ວຍວິທີການສັງເກດແລະເອົາຈາກປະສົບການນໍາອີກ.

ວິທີການຕ່າງໆປະກອບດ້ວຍການສຶກສາຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ, ກອງປະຊຸມທາງວິຊາການກັບໂຮງຮຽນຂອງປະເທດສະມາຊິກອາຊຽນ (ASEAN)[2], ການສໍາຫຼວດ ແລະການສໍາມະນາ ຊຶ່ງຈັດຂຶ້ນລະຫວ່າງເດືອນມິຖຸນາ ປີ 2014 ແລະເດືອນພະຈິກ ປີ 2015. ວິທີການເຫຼົ່ານີ້ ແຕ່ລະຢ່າງລ້ວນແຕ່ຮັບໃຊ້ຈຸດປະສົງສະເພາະໃນການສ້າງໂຄງປະກອບໂຮງຮຽນໃຫ້ຄວາມສຸກ.

## ການສຶກສາຄົ້ນຄວ້າຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ

ການສຶກສາຄົ້ນຄວ້າຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການດໍາເນີນໄປຕັ້ງແຕ່ເວລາເລີ່ມຕົ້ນໂຄງການໂຮງຮຽນໃຫ້ຄວາມສຸກໃນເດືອນມິຖຸນາ ປີ 2014 ຈົນຮອດເດືອນພະຈິກ ປີ 2015 ໂດຍມີຈຸດປະສົງຫຼັກໃນການຊອກຫາຄໍານິຍາມແລະຂອບເຂດຂອງຄວາມສຸກ ລວມທັງລະບຸຫົວເລື່ອງສະເພາະ ໃນບໍລິບົດຂອງໂຮງຮຽນ. ຜົນທີ່ໄດ້ຈາກການສຶກສາຄົ້ນຄວ້າຂໍ້

2 ປະຊາຄົມປະເທດອາຊຽນປະກອບດ້ວຍສະມາຊິກສິບປະເທດ ຄື: ບຣູໄນ ດາຣູຊາລາມ, ກໍາປູເຈຍ, ອິນໂດນີເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທແລະຫວຽດນາມ.

ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ ຄືມີການກຳນົດມາດຖານທີ່ເປັນໄປໄດ້ເພື່ອຕັ້ງຂໍ້ສັນນິຖານເບື້ອງຕົ້ນ ດັ່ງທີ່ສະເໜີຢູ່ຕາຕະລາງ 1.

ການສຶກສາຄົ້ນຄວ້າຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ ມີການກວດເບິ່ງຄືນເອກະສານຕ່າງໆໃນວົງກວ້າງ ຊຶ່ງແມ່ນການສຶກສາຄົ້ນຄວ້າທາງດ້ານສັງຄົມ, ເສດຖະກິດແລະຈິດຕະສາດ ໂດຍສະເພາະແມ່ນການສຶກສາດ້ານຈິດຕະສາດທາງບວກແລະການສຶກສາທາງບວກ. ນອກຈາກນັ້ນ ຍັງມີການວິເຄາະເອກະສານ ແລະບົດລາຍງານຕ່າງໆທີ່ກ່ຽວຂ້ອງກັບນະໂຍບາຍລະດັບໂລກ, ພາກພື້ນແລະນະໂຍບາຍສະເພາະເຈາະຈົງຂອງແຕ່ລະປະເທດ ໂດຍສະເພາະກ່ຽວກັບມິຕິການຮຽນຮູ້ທາງສັງຄົມ ແລະອາລົມຄວາມຮູ້ສຶກ, ແນວຄິດກ່ຽວກັບການສຶກສາແລະການລິເລີ່ມຕ່າງໆທີ່ກ່ຽວຂ້ອງກັນຂອງອົງການຢູເນສໂກແລະອົງການອື່ນໆ.

ເນື່ອງຈາກແມ່ນສ່ວນໜຶ່ງຂອງການສຶກສາຄົ້ນຄວ້າຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ ຈຶ່ງໄດ້ເຮັດກໍລະນີສຶກສາຢູ່ໃນປະເທດຕ່າງໆ ບ່ອນທີ່ມີແນວຄິດໃຫ້ຄວາມສຳຄັນໃນເລື່ອງຄວາມສຸກແລະຄວາມຢູ່ດີມີສຸກ ຊຶ່ງສະທ້ອນໃຫ້ເຫັນຢູ່ໃນນະໂຍບາຍການສຶກສາລະດັບຊາດ ໄດ້ແກ່ພູຖານ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ສິງກະໂປແລະວານູອາຕູ. ທັດສະນະລວມໂດຍສັງເຂບກ່ຽວກັບກໍລະນີສຶກສາເຫຼົ່ານີ້ແຕ່ລະຢ່າງຂອງແຕ່ລະປະເທດນັ້ນ ຈະໄດ້ນຳສະເໜີຢູ່ບົດທີສາມ.

## ກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນຂອງປະເທດອາຊຽນ

ໃນເດືອນພະຈິກ ປີ 2014 ໄດ້ມີການປຶກສາຫາລືກັນເປັນເວລາສອງຊົ່ວໂມງກັບນັກຮຽນແລະຄູ ຊຶ່ງເປັນຕົວແທນໂຮງຮຽນ[3] ຈາກເກົ້າປະເທດອາຊຽນ.[4] ການປຶກສາຫາລືແມ່ນສ່ວນໜຶ່ງຂອງກອງປະຊຸມທາງວິຊາການ ຊຶ່ງສູນຂ່າວກ່ຽວກັບຊາວໜຸ່ມ ແລະເດັກນ້ອຍອາ

3 ໂຮງຮຽນຫຼາຍປະເພດທີ່ເຂົ້າຮ່ວມກອງປະຊຸມທາງວິຊາການ ຊຶ່ງປະກອບດ້ວຍໂຮງຮຽນຂອງລັດ, ວິຊາຊີບ, ເອກະຊົນແລະນາໆຊາດ. ສ່ວນລາຍລະອຽດຄົບຖ້ວນ ກະລຸນາເບິ່ງເອກະສານແນບທີ 1.

4 ຕົວແທນຂອງໂຮງຮຽນຈາກເກົ້າປະເທດໃນຈຳນວນສະມາຊິກປະຊາຄົມອາຊຽນສິບປະເທດ ທີ່ເຂົ້າຮ່ວມກອງປະຊຸມທາງວິຊາການ ໄດ້ແກ່ ບຣູໄນ ດາຣູຊາລຳ, ກຳປູເຈຍ, ອິນໂດນີເຊຍ, ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ໄທແລະຫວຽດນາມ ມີພຽງສິງກະໂປເທົ່ານັ້ນທີ່ບໍ່ໄດ້ສົ່ງຕົວແທນເຂົ້າຮ່ວມ.

ຊຸມຈັດຂຶ້ນທີ່ບາງກອກ ປະເທດໄທ.

ການປຶກສາຫາລືເລີ່ມຕົ້ນດ້ວຍການໃຫ້ທັດສະນະລວມໂດຍສັງເຂບວ່າ ແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກໝາຍເຖິງຫຍັງ ແລະເປັນຫຍັງໂຮງຮຽນຈຳເປັນຕ້ອງໃຫ້ຄວາມສຸກແກ່ຜູ້ຮຽນ. ຕິດຕາມມາດ້ວຍການເຮັດກິດຈະກຳສອງປະເພດ. ກິດຈະກຳທີໜຶ່ງແມ່ນການຜະລິດໂປສເຕີກ່ຽວກັບໂຮງຮຽນໃຫ້ຄວາມສຸກຢູ່ໃນແຕ່ລະປະເທດ. ໃນການເຮັດໂປສເຕີນີ້ ຄູແລະນັກຮຽນຂອງແຕ່ລະປະເທດຈະຈັບກຸ່ມກັນ ແລະມີການແຈກຢາຍເຈ້ຍຂາວເພື່ອແຕ້ມໂປສເຕີໃຫ້ ໂດຍແຕ່ລະປະເທດຈະມີທຸງຊາດເປັນເຄື່ອງໝາຍ ພ້ອມທັງມີຮູບໃບໜ້າຄົນ 'ດີໃຈ' ແລະ 'ໂສກເສົ້າ' ດັ່ງທີ່ສະແດງຢູ່ແຜນວາດ 3.

***ແຜນວາດ 3.*** *ເຈ້ຍໂປສເຕີເປົ່າທີ່ໃຊ້ກັນຢູ່ກອງປະຊຸມວິຊາການກ່ຽວກັບໂຮງຮຽນຂອງປະເທດອາຊຽນ*




ໝົດທຸກກຸ່ມໄດ້ຮັບການຂໍຮ້ອງໃຫ້ຄິດໄຕ່ຕອງກ່ຽວກັບບໍລິບົດຂອງປະເທດຕົນເອງ ແລະພິຈາລະນາວ່າແມ່ນຫຍັງທີ່ອາດເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກຫຼືເປັນບ່ອນບໍ່ໃຫ້ຄວາມສຸກ ແລ້ວໃຫ້ຂຽນຄຳເວົ້າສຳຄັນໃສ່ແຜ່ນໂປສເຕີນັ້ນ. ຕໍ່ຈາກນັ້ນ ເຂົາເຈົ້າໄດ້ຮັບເຊີນໃຫ້ນຳສະເໜີແຜ່ນໂປສເຕີຂອງຕົນຕໍ່ກຸ່ມອື່ນໆ.

ກິດຈະກຳທີສອງແມ່ນການປຸງແຕ່ງ 'ອາຫານ' ສຳລັບໂຮງຮຽນໃຫ້ຄວາມສຸກ ໂດຍເຮັດຈາກ 'ເຄື່ອງປະກອບອາຫານ' ຢູ່ໃນຖົງໜຶ່ງ. ເພື່ອເຮັດກິດຈະກຳນີ້ ຜູ້ເຂົ້າຮ່ວມແບ່ງອອກເປັນສີ່ທີມ (ນັກຮຽນສອງທີມແລະຄູສອງທີມ). ໝົດທຸກທີມເລືອກເອົາ 'ເຄື່ອງປະກອບອາຫານ' ທີ່ພວກຕົນຄິດວ່າ ມີຄວາມສຳຄັນທີ່ສຸດ ເພື່ອເຮັດໃຫ້ເກີດໂຮງຮຽນໃຫ້ຄວາມສຸກ. ເຄື່ອງປະກອບອາຫານມີບັດເປັນເຄື່ອງໝາຍ ກ່ຽວກັບມາດຖານຕ່າງໆຈາກຂໍ້ສັນນິຖານເບື້ອງຕົ້ນ (ຕາຕະລາງ 1) ລວມທັງບັດເປົ່າ ເພື່ອໃຫ້ກຸ່ມຕ່າງໆສາມາດຕື່ມ 'ເຄື່ອງປະກອບອາຫານ' ຂອງຕົນເອງໄດ້.

ດ້ວຍການເຮັດກິດຈະກຳເຫຼົ່ານີ້ ຈຶ່ງເກັບກຳໄດ້ກ່ຽວກັບທັດສະນະຂອງຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນວ່າແມ່ນຫຍັງແດ່ທີ່ເປັນສ່ວນປະກອບເຂົ້າຢູ່ໃນໂຮງຮຽນໃຫ້ຄວາມສຸກ

ແລ້ວເອົາມາປຽບທຽບໃສ່ມາດຖານຕ່າງໆຢູ່ໃນຂໍ້ສັນນິຖານເບື້ອງຕົ້ນ ເພື່ອໃຫ້ຮູ້ໄດ້ວ່າແມ່ນຫຍັງສຳຄັນທີ່ສຸດ.

## ການສຳຫຼວດໂຮງຮຽນໃຫ້ຄວາມສຸກ

ການສຳຫຼວດທາງອອນລາຍນ໌[5] ໄດ້ຮັບການອອກແບບເພື່ອຮິບໂຮມຄວາມຄິດເຫັນຂອງນັກຮຽນ, ຄູ, ຜູ້ອຳນວຍການ, ພໍ່ແມ່ນັກຮຽນ, ພະນັກງານທີ່ຊ່ວຍວຽກຢູ່ໃນໂຮງຮຽນແລະມະຫາຊົນທົ່ວໄປ[6] ຢູ່ພາກພື້ນອາຊີ-ປາຊີຟິກ ກ່ຽວກັບວ່າແມ່ນຫຍັງທີ່ເປັນສ່ວນປະກອບຢູ່ໃນໂຮງຮຽນໃຫ້ຄວາມສຸກ. ການສຳຫຼວດນີ້ປະກອບດ້ວຍຄຳຖາມກ່ຽວກັບຄວາມເປັນມາສີ່ຢ່າງ ແລະຕາມດ້ວຍຄຳຖາມເປີດແລະປິດສີ່ຄຳຖາມ ຄື:

1. ແມ່ນຫຍັງທີ່ສາມາດເຮັດໃຫ້ໂຮງຮຽນກາຍເປັນບ່ອນໃຫ້ຄວາມສຸກໄດ້?
2. ແມ່ນຫຍັງທີ່ສາມາດເຮັດໃຫ້ໂຮງຮຽນກາຍເປັນບ່ອນບໍ່ໃຫ້ຄວາມສຸກ?
3. ແມ່ນຫຍັງທີ່ເຮັດໃຫ້ການຮຽນການສອນຢູ່ໃນໂຮງຮຽນມ່ວນຊື່ນ ແລະສະໜຸກສະໜານ?
4. ຈາກປະສົບການຂອງຕົນ ທ່ານສາມາດເຮັດຫຍັງໄດ້ແດ່ເພື່ອໃຫ້ໝັ້ນໃຈໄດ້ວ່າ ນັກຮຽນໝົດທຸກຄົນຮູ້ສຶກວ່າ ເຂົາເຈົ້າມີສ່ວນຮ່ວມຢູ່ໃນໂຮງຮຽນ?

ຜູ້ທີ່ສົນໃຈສາມາດເຂົ້າໄປອ່ານໄດ້ທາງອອນລາຍນ໌ ລະຫວ່າງເດືອນມັງກອນແລະເດືອນພຶດສະພາ ປີ 2015 ຊຶ່ງມີເປັນພາສາອັງກິດ, ຈີນ, ຍີ່ປຸ່ນ, ເກົາຫຼີ, ຣັດເຊຍ, ໄທ ໂດຍນັກວິໄຈໄດ້ຮິບໂຮມຫຼາຍກວ່າ 650 ຄຳຖາມ (ແຜນວາດ 4). ຜູ້ຕອບຄຳຖາມສ່ວນໃຫຍ່ແມ່ນນັກຮຽນ ດັ່ງນັ້ນ ບົດລາຍງານນີ້ສ່ວນຫຼາຍເອົາມາຈາກມິຕິຂອງຜູ້ຮຽນ. ຍ້ອນມີຈຸດມຸ່ງໝາຍເພື່ອໃຫ້ໄດ້ມິຕິທີ່ແຕກຕ່າງກັນຫຼາຍທີ່ສຸດ ດັ່ງນັ້ນ ຈຶ່ງບໍ່ມີການກຳນົດຂະໜາດຕົວຢ່າງສະເພາະເຈາະຈົງໄວ້ ແຕ່ປ່ອຍໃຫ້ການສຳຫຼວດນີ້ເປີດກວ້າງ ແລະໃຫ້ມະຫາຊົນທີ່ເຂົ້າຮ່ວມດ້ວຍຄວາມສະໝັກໃຈ ສາມາດເຂົ້າເຖິງໄດ້. ໃນຈຳນວນວິທີການວິໄຈຕ່າງໆທີ່ນຳມາໃຊ້ນັ້ນ ການສຳຫຼວດແມ່ນສິ່ງສຳຄັນທີ່ສຸດໃນການກຳນົດມາດຖານຕ່າງໆສຳລັບໂຮງຮຽນໃຫ້ຄວາມສຸກຈາກຜູ້ຄົນໃນວົງກວ້າງ.

5 ສຳລັບການສຳຫຼວດທີ່ສົມບູນ (ເປັນພາສາອັງກິດ) ໃຫ້ເບິ່ງຢູ່ເອກະສານແນບທີ 2.

6 ໃນບໍລິບົດຂອງການສຳຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກນີ້ ຄຳວ່າ ມະຫາຊົນທົ່ວໄປ ໝາຍເຖິງປະຊາຊົນ ຊຶ່ງບໍ່ແມ່ນພໍ່ແມ່ນັກຮຽນ, ບໍ່ແມ່ນຜູ້ທີ່ເຮັດວຽກຫຼືສຶກສາຮ່ຳຮຽນຢູ່ໃນສະພາບແວດລ້ອມຂອງໂຮງຮຽນ.

***ແຜນວາດ 4.*** *ຄຳຕອບເພື່ອການສຳຫຼວດທີ່ໄດ້ຈາກເພດຍິງ-ຊາຍ, ກຸ່ມຜູ້ທີ່ມີສ່ວນຮ່ວມ, ປະເພດໂຮງຮຽນແລະພາສາ.*












ຫົວເລື່ອງໃຫຍ່ແລະຫົວເລື່ອງຍ່ອຍທີ່ເຊື່ອມໂຍງກັບພາກສ່ວນອື່ນ ໄດ້ຖືກກຳນົດຂຶ້ນຈາກຂໍ້ມູນການສຳຫຼວດ. ຕໍ່ມາ ມີການໃສ່ລະຫັດເປັນເຄື່ອງໝາຍກັບສິ່ງເຫຼົ່ານີ້. ເນື່ອງຈາກທີມງານວິໄຈໄດ້ທຳການບັນທຶກບາງລະຫັດໄວ້ໃນເບື້ອງຕົ້ນ ເພື່ອເປັນແນວທາງໃຫ້ແກ່ການວິເຄາະຂໍ້ມູນ ດັ່ງນັ້ນ ຈຶ່ງມີການເຮັດລະຫັດແບບເປີດກວ້າງ ເພື່ອໃຫ້ມີຫົວເລື່ອງອອກມາຈາກຂໍ້ມູນ ແລະບໍ່ຈຳກັດການວິເຄາະ (Creswell, 2007). ຈຳນວນຂອງລະຫັດຈຳກັດຢູ່ 30 ແຕ່ເຖິງແນວໃດກໍຍັງຮັກສາຫົວເລື່ອງທີ່ເນັ້ນໃສ່ ເພື່ອສາມາດຕິດຕາມຫົວເລື່ອງເຫຼົ່ານີ້ໄດ້ຢູ່ເລື້ອຍໆ ຢ່າງຖືກຕ້ອງທ່ຽງຕົງຫຼາຍຂຶ້ນ. ຕໍ່ຈາກນັ້ນກໍມີການໃສ່ລະຫັດຄຳຕອບເປັນລາຍບຸກຄົນ ເພື່ອໃຫ້ໄດ້ຄວາມຄິດເຫັນກ່ຽວກັບຫົວເລື່ອງທີ່ເວົ້າເຖິງຫຼາຍທີ່ສຸດຈາກຄຳຕອບທັງໝົດລວມທັງຈາກຕົວແປສະເພາະເຈາະຈົງ ເຊັ່ນ: ດ້ານພາສາ, ເພດຍິງ-ຊາຍ, ກຸ່ມຜູ້ທີ່ມີສ່ວນຮ່ວມແລະປະເພດໂຮງຮຽນ. ລະຫັດເຫຼົ່ານີ້ຫຼືຫົວເລື່ອງຫຼັກ ໄດ້ກາຍມາເປັນມາດຖານຕ່າງໆສຳລັບໂຮງຮຽນໃຫ້ຄວາມສຸກ ດັ່ງທີ່ຈະນຳສະເໜີຢູ່ບົດທີສີ່.

## ການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ

ການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກຖືກຈັດຂຶ້ນໃນວັນທີ 4 ແລະ 5 ມິຖຸນາ ປີ 2015 ຢູ່ທີ່ບາງກອກ ປະເທດໄທ ໂດຍເຊື້ອເຊີນຜູ້ຕາງໜ້າທັງໝົດ 20 ຄົນ ຈາກຫົກປະເທດທີ່ໄດ້ຮັບການຄັດເລືອກໃຫ້ມາເຂົ້າຮ່ວມ ຄື: ພູຖານ, ອິນເດຍ, ສາທາລະນະລັດເກົາຫຼີ, ໄທແລະຫວຽດນາມ (ຕາຕະລາງ 2). ແຕ່ລະໂຮງຮຽນມີນັກຮຽນຄົນໜຶ່ງ, ຄູຄົນໜຶ່ງແລະຜູ້ອຳນວຍການຄົນໜຶ່ງເປັນຜູ້ຕາງໜ້າ ຍົກເວັ້ນໂຮງຮຽນນາໆຊາດໃໝ່ຂອງປະເທດໄທທີ່ເປັນເຈົ້າພາບໃນການຈັດສຳມະນາຄັ້ງນີ້ ສາມາດສົ່ງນັກຮຽນເຂົ້າຮ່ວມນຳຫຼາຍກວ່າປະເທດອື່ນ. ເນື່ອງຈາກຜູ້ຕາງໜ້າໂຮງຮຽນຕ່າງໆຈາກເຫດສະບານ ອາກິຕະ ຂອງຍີ່ປຸ່ນ ບໍ່ສາມາດມາເຂົ້າຮ່ວມໄດ້ ຈຶ່ງມີການນຳສະເໜີຂໍ້ມູນກ່ຽວກັບໂຮງຮຽນເຫຼົ່ານີ້ຢູ່ໃນການສຳມະນາ ໂດຍອີງໃສ່ການວິໄຈທີ່ອົງການຢູເນສໂກປະຈຳບາງກອກເປັນຜູ້ເຮັດ.

*ຕາຕະລາງ 2. ໂຮງຮຽນທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ*

| ປະເທດ | ຊື່ໂຮງຮຽນ | ປະເພດໂຮງຮຽນ/ທີ່ຕັ້ງ | ຜູ້ຕາງໜ້າຈາກກຸ່ມຜູ້ທີ່ມີສ່ວນຮ່ວມ |
|---|---|---|---|
| **ພູຖານ** | ມັດທະຍົມຕົ້ນ ພົມາກັດເຊລ (Pemagatshel) | ຂອງລັດ, ຢູ່ຊົນນະບົດ | ນັກຮຽນ (1), ຄູ (1), ຜູ້ອຳນວຍການ (1) |
| **ອິນເດຍ** | ສະຖາບັນວິທະຍາສິລປ໌ (Vidyashilp Academy) | ຂອງເອກະຊົນ, ຢູ່ໃນຕົວເມືອງ | ນັກຮຽນ (1), ຄູ (1), ຜູ້ອຳນວຍການ (1) |
| **ສາທາລະນະລັດເກົາຫຼີ** | ໂຮງຮຽນປະຖົມແດກູ ກາຊັງ (Daegu Gachang) | ຂອງລັດ, ຢູ່ຊົນນະບົດ/ໃນລະດັບແຂວງ | ນັກຮຽນ (1), ຄູ (1), ຜູ້ອຳນວຍການ (1) |
| **ໄທ** | ໂຮງຮຽນນາໆຊາດໃໝ່ຂອງໄທ | ໂຮງຮຽນນາໆຊາດຂອງເອກະຊົນ/ຢູ່ໃນຕົວເມືອງ | ນັກຮຽນ (1), ຄູ (1), ຜູ້ອຳນວຍການ (1) |
| | ໂຮງຮຽນມັດທະຍົມສາທິດຈຸລາລົງກອນ | ໂຮງຮຽນສາທິດຂອງລັດ/ໃນຕົວເມືອງ | ນັກຮຽນ (1), ຄູ (1), ຜູ້ອຳນວຍການ (1) |
| **ຫວຽດນາມ** | ໂຮງຮຽນມັດທະຍົມຕົ້ນທົດລອງຂອງສະຖາບັນວິທະຍາສາດການສຶກສາຫວຽດນາມ | ໂຮງຮຽນທົດລອງຂອງລັດ/ໃນຕົວເມືອງ | ນັກຮຽນ (1), ຄູ (1), ຜູ້ອຳນວຍການ (1) |

ໂຮງຮຽນທີ່ໄດ້ຮັບການຄັດເລືອກໃຫ້ເຂົ້າຮ່ວມການສຳມະນາ ຍ້ອນວ່າເຂົາເຈົ້າມີສ່ວນຮ່ວມທາງພາກປະຕິບັດສິ່ງທີ່ຄິດຄົ້ນຂຶ້ນໃໝ່ແລະເປັນຜົນດີ ຊຶ່ງເປັນໄປຕາມແນວຄິດໂຮງຮຽນໃຫ້ຄວາມສຸກ. ຂັ້ນຕອນການຄັດເລືອກ ຄືເຊື້ອເຊີນໂຮງຮຽນຕ່າງໆຢູ່ພາກພື້ນອາຊີ-ປາຊີຟິກ ໃຫ້ສົ່ງຄຳຮ້ອງຂະໜາດສັ້ນມາໃຫ້ ໂດຍໃຫ້ເລົ່າກ່ຽວກັບສິ່ງທີ່ໄດ້ປະຕິບັດຢູ່ໃນໂຮງຮຽນຂອງຕົນ ແລະໃຫ້ອະທິບາຍວ່າ ສິ່ງເຫຼົ່ານັ້ນກ່ຽວຂ້ອງກັບຂໍ້ສັນນິຖານເບື້ອງຕົ້ນແນວໃດ.

ຈຸດປະສົງລວມຂອງການສຳມະນາ ຄືເພື່ອເສີມຂະຫຍາຍໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ ເພື່ອສ້າງຂໍ້ສະດວກໃຫ້ແກ່ການນຳໄປປະຕິບັດໃນສະພາບເງື່ອນໄຂທີ່ຫຼາກຫຼາຍ. ອັນນີ້ປະກອບດ້ວຍການປຶກສາຫາລືຮ່ວມກັນ ເພື່ອໃຫ້ມີຄວາມເຂົ້າໃຈຮ່ວມກັນກ່ຽວກັບມາດຖານທີ່ລະບຸຢູ່ໃນຂໍ້ສັນນິຖານ ແລະເພື່ອກຳນົດຍຸດທະສາດ, ແນວທາງແລະວິທີການສຳລັບໂຮງຮຽນຕ່າງໆ ເພື່ອຕອບສະໜອງແຕ່ລະມາດຖານເຫຼົ່ານັ້ນ. ການສຳມະນານີ້ເຮັດໃຫ້ມາດຖານຕ່າງໆ ທີ່ໄດ້ລະບຸໄວ້ຢູ່ໃນການສຳຫຼວດຄັ້ງນີ້ອຸດົມສົມບູນຫຼາຍຂຶ້ນແລະຜູ້ທີ່ມີສ່ວນຮ່ວມລະດັບໂຮງຮຽນສາມາດນຳໄປໃຊ້ໄດ້ ຂະນະດຽວກັນກໍສາມາດເສີມຂະຫຍາຍການຄົ້ນຄວ້າກ່ຽວກັບສິ່ງທີ່ປະຕິບັດໄດ້ດີຕໍ່ໄປໄດ້ອີກຕື່ມ ເພື່ອຕອບສະໜອງມາດຖານຕ່າງໆ.

ມູນນິທິ ຈັມປ໌ (The JUMP! Foundation)[7] ຊຶ່ງເປັນຜູ້ອຳນວຍຄວາມສະດວກໃນການຈັດສຳມະນາຄັ້ງນີ້ໄດ້ດຳເນີນການເລື່ອງນີ້ ໂດຍເລີ່ມຈາກການໃຫ້ໂຮງຮຽນຕ່າງໆທີ່ປະຕິບັດໄດ້ດີທີ່ສຸດ ນຳສະເໜີກ່ຽວກັບສິ່ງທີ່ພວກຕົນໄດ້ເຮັດ ຕາມມາດ້ວຍກິດຈະກຳທາງພາກປະຕິບັດແລະມີປະຕິສຳພັນຕໍ່ກັນສີ່ຢ່າງ[8] ທີ່ໄດ້ຮັບການອອກແບບມາ ເພື່ອຮັບເອົາມຸມມອງຕ່າງໆທີ່ກ່ຽວຂ້ອງກັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກຂອງແຕ່ລະປະເທດ, ໂຮງຮຽນ, ຜູ້ທີ່ມີສ່ວນຮ່ວມແລະເປັນລາຍບຸກຄົນ.

7 ມູນນິທິ ຈັມປ໌ ແມ່ນອົງການທີ່ສະໜອງການສຶກສາໂດຍຜ່ານປະສົບການ ກໍ່ຕັ້ງຂຶ້ນມາເພື່ອສ້າງແຮງບັນດານໃຈ, ໃຫ້ສິດທິ, ສົ່ງເສີມການເປັນຜູ້ນຳແລະການເປັນພົນລະເມືອງໂລກຂອງຊາວໜຸ່ມ ໂດຍຈັດໃຫ້ມີໂຄງການຕ່າງໆ. ການຈັດສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກຂອງເຂົາເຈົ້າ ໃຫ້ຄວາມໝັ້ນໃຈໄດ້ວ່າຜູ້ເຂົ້າຮ່ວມໝົດທຸກຄົນສາມາດສະແດງຄວາມຄິດເຫັນໃນເວລາເຮັດກິດຈະກຳ ແລະໄດ້ຮັບການຊຸກຍູ້ໃຫ້ຄິດກ່ຽວກັບບັນຫາຈາກມິຕິຕ່າງໆ. ສຳລັບຂໍ້ມູນກ່ຽວກັບມູນນິທິ ຈັມປ໌ ກະລຸນາເບິ່ງຢູ່ http://jumpfoundation.org/

8 ສັງລວມລະອຽດກ່ຽວກັບກິດຈະກຳເຫຼົ່ານີ້ ສາມາດເບິ່ງໄດ້ຢູ່ເອກະສານແນບທີ 3.

# ຂໍ້ຈໍາກັດ

ບົດລາຍງານນີ້ສະເໜີການສຶກສາທີ່ມີລັກສະນະຄົ້ນຄວ້າກ່ຽວກັບແນວຄິດທີ່ເປັນນາມມະທໍາອັນໜຶ່ງ ຊຶ່ງອາດແມ່ນເທື່ອທໍາອິດທີ່ໄດ້ມີການສຶກສາປະເພດນີ້ຢູ່ໃນພາກພື້ນອາຊີ-ປາຊີຟິກ. ໂດຍອີງໃສ່ສິ່ງທີ່ຄົ້ນພົບຈາກວິທີການວິໄຈລັກສະນະຄຸນນະພາບລ້ວນໆ ບົດລາຍງານນີ້ໃຊ້ວິທີແປຄວາມໝາຍໃນການວິເຄາະຂໍ້ມູນ ຊຶ່ງອາດມີອິດທິພົນຕໍ່ສິ່ງທີ່ຄົ້ນພົບໂດຍບໍ່ໄດ້ຕັ້ງໃຈ. ນອກຈາກນັ້ນ ບົດລາຍງານນີ້ບໍ່ມີຈຸດປະສົງຈະນໍາສະເໜີ ຫຼືສະທ້ອນບັນຫາຢູ່ພາກພື້ນອາຊີ-ປາຊີຟິກທັງໝົດ. ຕົວຢ່າງກໍລະນີສຶກສາຂອງແຕ່ລະປະເທດທີ່ນໍາສະເໜີຢູ່ໃນບົດທີສາມ ມີຈຸດມຸ່ງໝາຍເພື່ອສະແດງໃຫ້ເຫັນຕົວຢ່າງຂອງປະເທດຕ່າງໆ ທີ່ໃຫ້ຄວາມສໍາຄັນໃນເລື່ອງຄວາມສຸກ ແລະຄວາມຢູ່ດີມີສຸກຢູ່ໃນນະໂຍບາຍດ້ານການພັດທະນາແລະການສຶກສາ. ກ່ຽວກັບໂຮງຮຽນທີ່ໄດ້ຮັບການຄັດເລືອກ ເພື່ອເຂົ້າຮ່ວມການສໍາມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ສິ່ງເຫຼົ່ານີ້ບໍ່ມີຈຸດປະສົງທີ່ຈະສະທ້ອນໃຫ້ເຫັນສະພາບການຂອງປະເທດເຂົາເຈົ້າ ຫຼືໂຮງຮຽນຢູ່ໃນເຂດທີ່ດ້ອຍໂອກາດ ແຕ່ວ່າເຂົາເຈົ້າໄດ້ຮັບການຄັດເລືອກອີງຕາມສິ່ງທີ່ປະຕິບັດໄດ້ດີແລະຄິດຄົ້ນຂຶ້ນໃໝ່ ໂດຍຈຸດມຸ່ງໝາຍສຸດທ້າຍກໍຄື ສິ່ງເຫຼົ່ານີ້ສາມາດນໍາໄປປະຕິບັດໄດ້ຢ່າງກວ້າງຂວາງ ເພື່ອປະໂຫຍດຂອງໝົດທຸກໂຮງຮຽນ ລວມທັງໂຮງຮຽນຢູ່ເຂດດ້ອຍໂອກາດ ຫຼືບ່ອນທີ່ຊັບພະຍາກອນມີຈໍາກັດນໍາອີກ.

ກ່ຽວກັບການສໍາຫຼວດໂຮງຮຽນໃຫ້ຄວາມສຸກ ເນື່ອງຈາກຄວາມຫຼາກຫຼາຍທາງດ້ານພາສາຢູ່ໃນພາກພື້ນ ການເຂົ້າໄປຊອກອ່ານເບິ່ງການສໍາຫຼວດອາດມີຂໍ້ຈໍາກັດ ເພາະວ່າໄດ້ເຮັດເປັນພຽງແຕ່ຫົກພາສາເທົ່ານັ້ນ ຍ້ອນມີຊັບພະຍາກອນຈໍາກັດ. ໃນຂະນະດຽວກັນກໍໄດ້ມີການເຜີຍແຜ່ການສໍາຫຼວດຢ່າງກວ້າງຂວາງເທົ່າທີ່ຈະເຮັດໄດ້ ຜ່ານທາງເຄືອຂ່າຍລະດັບພາກພື້ນແລະລະດັບໂລກ, ທາງສື່ສັງຄົມອອນລາຍນ໌ແລະບົດຄວາມທາງເວັບໄຊດ໌. ອັນນີ້ເຮັດໃຫ້ການສໍາຫຼວດມີລັກສະນະເປີດກວ້າງທາງອອນລາຍນ໌ ເພື່ອໃຫ້ມະຫາຊົນທົ່ວໄປສາມາດເຂົ້າໄປຊອກອ່ານໄດ້ ແລະບໍ່ມີຂໍ້ຈໍາກັດດ້ານຂະໜາດຂອງຕົວຢ່າງຫຼືອັດຕາສ່ວນຂອງຜູ້ຕອບຄໍາຖາມຈາກເພດຍິງ-ຊາຍ, ກຸ່ມຜູ້ທີ່ມີສ່ວນຮ່ວມຫຼືປະເພດໂຮງຮຽນໂດຍສະເພາະເຈາະຈົງ. ຢູ່ບ່ອນໃດທີ່ບຸກຄົນຕ່າງໆສະໝັກໃຈເຂົ້າຮ່ວມໃນການສໍາຫຼວດນັ້ນ ຍັງສະແດງອອກໃຫ້ເຫັນເຖິງໜຶ່ງໃນຂໍ້ຈໍາກັດຂອງການສໍາຫຼວດແບບນີ້ ຍ້ອນວ່າຜູ້ທີ່ໃຫ້ຄວາມສົນໃຈສະເພາະໃນຫົວຂໍ້ນີ້ແລະສາມາດເຂົ້າອິນເຕີເນັດໄດ້ນັ້ນ ມີແນວໂນ້ມທີ່ຈະເຂົ້າຮ່ວມໃນການ

ສຳຫຼວດຫຼາຍກວ່າປະຊາຊົນທົ່ວໄປ (Bethlehem, 2010).

ລັກສະນະເປີດກວ້າງຂອງການສຳຫຼວດ ເຮັດໃຫ້ເກີດຄວາມແຕກຕ່າງບາງຢ່າງຂອງຂະໜາດຢູ່ໃນຕົວຢ່າງເຫຼົ່ານີ້ຢູ່ທົ່ວໝົດທຸກກຸ່ມ ໝາຍຄວາມວ່າ ຖ້າມີຕົວແປສອງອັນຫຼືຫຼາຍກວ່ານັ້ນ ພວກເຮົາບໍ່ສາມາດເອົາມາສົມທຽບກັນໄດ້. ດັ່ງນັ້ນ ການເອົາກໍລະນີສຶກສາບາງຢ່າງມານຳສະເໜີຈຶ່ງເປັນປະໂຫຍດ. ຕົວຢ່າງ: ມີນັກຮຽນພຽງຄົນດຽວໃນຈຳນວນຜູ້ຕອບຄຳຖາມ 121 ຄົນ ທີ່ເຮັດສຳເລັດການສຳຫຼວດເປັນພາສາຣັດເຊຍ. ສະນັ້ນ ຜົນທີ່ໄດ້ຮັບຈຶ່ງບໍ່ສາມາດຖືເອົາມາອ້າງວ່າເປັນຕົວແທນຂອງນັກຮຽນທີ່ປາກພາສາຣັດເຊຍໄດ້ເລີຍ. ສຳລັບຜູ້ຕອບຄຳຖາມທີ່ເຮັດສຳເລັດການສຳຫຼວດເປັນພາສາຍີ່ປຸ່ນ ປະກົດວ່າຄຳຕອບສ່ວນໃຫຍ່ມາຈາກໂຮງຮຽນຕ່າງໆຢູ່ເຂດສະບານ ອາກິຕະ ຊຶ່ງເປັນທີ່ຮູ້ຈັກກັນດີໃນເລື່ອງການໃຫ້ຄວາມສຳຄັນກ່ຽວກັບໂຮງຮຽນໃຫ້ຄວາມສຸກແລະຄວາມຢູ່ດີມີສຸກ. ອັນນີ້ໝາຍຄວາມວ່າຜົນທີ່ໄດ້ຮັບອາດບໍ່ສະທ້ອນມິຕິທົ່ວປະເທດຍີ່ປຸ່ນໄດ້ ແຕ່ເຖິງແນວໃດກໍເປີດໂອກາດໃຫ້ມີການສັງລວມເອົາຄວາມຄິດແລະມິຕິຈາກໂຮງຮຽນຕ່າງໆ ທີ່ລຶ້ງເຄີຍກັບການປະຕິບັດຕາມທິດທາງແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກແດ່ແລ້ວ.

ເມື່ອມີການວິເຄາະແລະໃສ່ລະຫັດຄຳຕອບຈາກການສຳຫຼວດ ເຮັດໃຫ້ມີຜົນຮັບທາງດ້ານປະລິມານຂະໜາດຕົວຢ່າງທີ່ບໍ່ເທົ່າກັນ ໝາຍຄວາມວ່າ ພວກເຮົາບໍ່ສາມາດຫາຂໍ້ສະຫຼຸບໄດ້ລະຫວ່າງຕົວແປດ້ວຍກັນແລະທົ່ວໝົດທຸກອັນໄດ້ ໂດຍອີງໃສ່ຕົວເລກທີ່ໄດ້ຮັບ. ດັ່ງນັ້ນຄວາມແຕກຕ່າງເຫຼົ່ານີ້ສະແດງໃຫ້ເຫັນວ່າ ຕົວເລກຕ່າງໆເຫຼົ່ານີ້ບໍ່ສາມາດນຳມາອ້າງອີງທາງສະຖິຕິໄດ້ເລີຍຢູ່ໃນບົດລາຍງານນີ້ ແຕ່ເປັນພຽງສິ່ງບົ່ງບອກເຖິງຄວາມສຳຄັນທີ່ມີຕໍ່ບາງຫົວເລື່ອງໃນຈຳນວນສິ່ງອື່ນໆເທົ່ານັ້ນ.

ແນວໃດກໍດີ ເນື່ອງຈາກວ່າຈຸດປະສົງລວມຂອງການສຶກສາຄົ້ນຄວ້ານີ້ ແມ່ນເພື່ອຊອກຫາຄຳນິຍາມໃນວົງກວ້າງຂອງສິ່ງທີ່ປະກອບເຂົ້າຢູ່ໃນໂຮງຮຽນໃຫ້ຄວາມສຸກຫຼາຍກວ່າ 'ການວັດ' ລະດັບຄວາມສຸກຢູ່ໃນໂຮງຮຽນ ວິທີການເຫຼົ່ານີ້ຈຶ່ງໄດ້ເປີດໂອກາດໃຫ້ມີການຄົ້ນຄວ້າຢ່າງເປີດກວ້າງກ່ຽວກັບຕົວແປ ຫຼື 'ມາດຖານຕ່າງໆ' ສຳລັບໂຮງຮຽນໃຫ້ຄວາມສຸກ. ສິ່ງສຳຄັນທີ່ສຸດຄື ສິ່ງເຫຼົ່ານີ້ໄດ້ເປີດໂອກາດໃຫ້ນັກຮຽນ, ຄູແລະພໍ່ແມ່ນັກຮຽນໄດ້ສະແດງຄວາມຄິດເຫັນ ເພື່ອເປັນພື້ນຖານໃຫ້ແກ່ໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ສະ

ນັ້ນ ບົດລາຍງານນີ້ຈຶ່ງໃຫ້ສິ່ງອ້າງອີງທີ່ມີຄຸນຄ່າ ອີງໃສ່ຄວາມຄິດເຫັນຂອງຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນ ໂດຍມີສິ່ງຢືນຢັນຈາກແຫຼ່ງອື່ນໆມາສະໜັບສະໜູນ ເພື່ອເປັນທ່າແຮງໃຫ້ແກ່ການຂະຫຍາຍງານວິໄຈອອກໄປອີກຕື່ມ.



# 3

# ບໍລິບົດລະດັບໂລກ ແລະລະດັບພາກພື້ນ

ຄວາມສຸກແມ່ນຍອດປາຖະໜາຂອງນັກປຣັດຊະຍາມາເປັນເວລາດົນນານແລ້ວ ຜູ້ກຳນົດນະໂຍບາຍ, ນັກເສດຖະສາດ, ນັກວິທະຍາສາດ, ນັກການສຶກສາແລະນັກຈິດຕະສາດກໍເຊັ່ນດຽວກັນ. ເມື່ອມາເບິ່ງພັນທະກິດຂອງອົງການສະຫະປະຊາຊາດກ່ຽວກັບສັນຕິພາບໃນວົງກວ້າງ ລວມທັງພັນທະກິດຂອງອົງການຢູເນສໂກກ່ຽວກັບການສຶກສາແລ້ວ ຕ່າງກໍຍອມຮັບວ່າມີຄວາມເຊື່ອມໂຍງກັນລະຫວ່າງສັນຕິພາບແລະຄວາມສຸກ. ເວລາຜ່ານໄປຫຼາຍກວ່າ 2,500 ປີແລ້ວ ຄຳສອນຂອງພະພຸດທະເຈົ້າ ຫຼື*ທັມມະປາດະ (The Dhammapada)* ຢ້ຳວ່າ ‘ບໍ່ມີຄວາມສຸກໃດທີ່ຈະສູງສົ່ງກວ່າສັນຕິສຸກ’ (Fronsdal, 2005, p. 50). ເມື່ອບໍ່ດົນນີ້ບົດບັນທຶກຂອງເລຂາທິການໃຫຍ່ (2013) ຊື່ວ່າ *ຄວາມສຸກ: ກ້າວໄປສູ່ວິທີການພັດທະນາທີ່ມີອົງປະກອບຄົບຖ້ວນ* ເນັ້ນຢ້ຳວ່າ ສັນຕິສຸກແມ່ນໜຶ່ງໃນຈຳນວນປັດໄຈຕັດສິນທີ່ສຳຄັນສຳລັບຄວາມສຸກຂອງປະເທດ (United Nations General Assembly, 2013). ຄວາມຈິງແລ້ວ ຄວາມສຸກແມ່ນຫົວໃຈສຳຄັນຂອງປຣັດຊະຍາແລະສາດສະໜາ, ປັດຈຸບັນຄວາມສຸກສະທ້ອນໃຫ້ເຫັນຢູ່ໃນນະໂຍບາຍ ຊຶ່ງບັນຈຸຢູ່ໃນວາລະຂອງນະໂຍບາຍລະດັບໂລກ, ນະໂຍບາຍດ້ານການພັດທະນາແລະການສຶກສາຫຼາຍຂຶ້ນ ທັງເປັນຈຸດສົນໃຈສຳຄັນຂອງການລິເລີ່ມໃນລະດັບໂລກ ເພື່ອການພັດທະນາແລະຄວາມກ້າວໜ້າຂອງມະນຸດ.

ເໜືອສິ່ງອື່ນໃດ ຄວາມຄິດກ່ຽວກັບຄວາມສຸກມັກຖືກຍົກຂຶ້ນມາເວົ້າຢູ່ໃນວິຊາຮຽນຕ່າງໆວ່າແມ່ນຄວາມສຳຄັນຂອງການສຶກສາ ຫຼື ‘ການຮຽນຮູ້’ ໂດຍເຂົ້າໃຈກັນດີວ່າ ການສຶກສາແມ່ນວິທີແລະຈຸດປະສົງເພື່ອສົ່ງເສີມເຮັດໃຫ້ເກີດຄວາມສຸກ. ບໍ່ວ່າຈະຢູ່ໃນທິດສະດີກ່ຽວກັບຄວາມສຸກຂອງ ອາຣິສໂຕເຕິລ (Aristotle), ຈິດຕະສາດທາງບວກ, ນະໂຍບາຍກ່ຽວກັບຄວາມສຸກ ຫຼືຢູ່ໃນດັດສະນີຊີ້ວັດຄວາມສຸກຢູ່ໃນໂລກປັດຈຸບັນກໍຕາມ ການສຶກສາກໍມັກຈະເວົ້າເຖິງເລື່ອງນີ້ຢູ່ສະເໝີ. ຄວາມເຊື່ອມໂຍງກັນລະຫວ່າງຄວາມສຸກ ແລະການຮຽນຮູ້ຍັງບອກວ່າ ຄວາມສຸກແມ່ນບາງຢ່າງທີ່ສາມາດບົ່ມສອນກັນໄດ້ແລະຮຽນຮູ້ໄດ້. ໃນການຂຽນບົດຄວາມຢູ່ໃນ*ວາລະສານຄູ* ທຣີວໍ໌ ລີ (Trevor Lee) ຜູ້ອຳນວຍການໂຮງຮຽນຄົນໜຶ່ງຢູ່ປະເທດອັງກິດ ໃຫ້ທັດສະນະວ່າໂຮງຮຽນມີບົດບາດສຳຄັນໃນ ‘ການສອນກ່ຽວກັບຄວາມສຸກ’ ຫຼືຢ່າງໜ້ອຍກໍແມ່ນສ້າງຄ່ານິຍົມ, ຈຸດແຂງແລະຄວາມສາມາດ ຊຶ່ງສາມາດບົ່ມສອນກ່ຽວກັບຄວາມສຸກໄດ້. ອັນນີ້ແມ່ນ ‘ການເຮັດໃຫ້ເກີດຄວາມສຸກໂດຍຜ່ານການສຶກສາ’ ຊຶ່ງໂຮງຮຽນເປັນບ່ອນເຮັດໃຫ້ເກີດຄວາມສຸກ ລວມທັງໃຫ້ການສຶກສາເພື່ອໃຫ້ມີຄວາມສຸກ ໂດຍທີ່ໂຮງຮຽນຊີ້ຊ່ອງທາງຢ່າງຊັດເຈນໃຫ້ແກ່ຜູ້ຮຽນ ວ່າຈະບັນລຸຄວາມສຸກໄດ້ແນວໃດ (Lee, 2001, p. 31).

ຍ້ອນຄວາມຄິດນີ້ ບົດນີ້ຈຶ່ງແບ່ງໂຄງຮ່າງອອກເປັນສາມພາກ. ທຳອິດພາກ ກ. ສຶກສາທິດສະດີກ່ຽວກັບຄວາມສຸກຕັ້ງແຕ່ປຣັດຊະຍາສະໄໝບູຮານຈົນມາຮອດປັດຈຸບັນ. ຕໍ່ມາພາກ ຂ. ເບິ່ງບໍລິບົດລະດັບໂລກໃນວົງກວ້າງ ກ່ຽວກັບແນວໂນ້ມຂອງໂລກແລະແນວໂນ້ມດ້ານການສຶກສາ ລວມທັງຄວາມສຸກຢູ່ໃນໂຄງປະກອບພັນທະກິດຂອງອົງການຢູເນສໂກ. ພາກ ຄ. ຄົ້ນຫາວ່າມີການຈັດລຽງລຳດັບຄວາມສຳຄັນຂອງຄວາມສຸກແນວໃດ ແລະມີການສະທ້ອນຄວາມສຸກຢູ່ໃນນະໂຍບາຍ ການພັດທະນາແລະການສຶກສາແນວໃດ ໂດຍຍົກເອົາກໍລະນີສຶກສາຈາກຫ້າປະເທດມາທຳການສຶກສາໃນລັກສະນະສັງເຂບ.

# ກ. ທິດສະດີກ່ຽວກັບຄວາມສຸກ

ໃນການຄົ້ນຫາຄວາມເປັນມາທາງດ້ານທິດສະດີແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກນັ້ນ ກ່ອນອື່ນໝົດຄວນໃຫ້ຄວາມສຳຄັນໃນການໃຫ້ຄຳນິຍາມຄຳວ່າ ຄວາມສຸກແລະຄວາມຢູ່ດີມີສຸກ ຊຶ່ງຍົກມາເວົ້າເພື່ອແລກປ່ຽນທັດສະນະກັນຢູ່ຕະຫຼອດບົດລາຍງານສະບັບນີ້. ພວກເຮົາສາມາດນິຍາມຄວາມສຸກວ່າແມ່ນສະພາບອາລົມຄວາມຮູ້ສຶກ ຫຼືສະພາບທີ່ເຮັດໃຫ້ເກີດອາລົມທາງບວກ ສ່ວນຄວາມຢູ່ດີມີສຸກໝາຍເຖິງຄຸນຄ່າ ຫຼືຖືວ່າແມ່ນສິ່ງທີ່ດີສຳລັບຄົນຜູ້ໜຶ່ງ (Haybron, 2013). ອີງຕາມຈຸດປະສົງຂອງການສຶກສາຄົ້ນຄວ້ານີ້ ຄຳວ່າ 'ຄວາມສຸກ' ແມ່ນສິ່ງກະຕຸ້ນຄວາມສົນໃຈເປັນພິເສດ 'ເພາະວ່າມັນເຮັດໃຫ້ສ່ວນບຸກຄົນເປັນຜູ້ຕັດສິນວ່າ ແມ່ນຫຍັງທີ່ມີຄວາມສຳຄັນສຳລັບເຂົາເຈົ້າ ແທນທີ່ຈະແມ່ນຄວາມຄິດຂອງຜູ້ຊ່ຽວຊານ. ຈຸດປະສົງ, ຄວາມເປັນເລີດ, ຄວາມຜູກພັນ ແລະຄວາມເອົາໃຈໃສ່ຕົນເອງຈະບໍ່ມີຄຸນຄ່າຫຍັງໝົດ ຖ້າສິ່ງເຫຼົ່ານີ້ບໍ່ໄດ້ຊ່ວຍສ່ວນບຸກຄົນໃນການສ້າງຊີວິດທີ່ເພິ່ງພໍໃຈຫຼາຍຂຶ້ນສຳລັບຕົນເອງແລະຄົນອື່ນໆ (Diener et. al., 1998, p. 37). ຕົວຢ່າງ *ບົດລາຍງານກ່ຽວກັບຄວາມສຸກຢູ່ໃນໂລກ* ເລືອກໃຊ້ຄຳວ່າຄວາມສຸກກົງກັນຂ້າມກັບດ້ານວິຊາການ ທຽບຄຽງກັບ 'ຄວາມຢູ່ດີກິນດີແບບອັດຕະວິໄສ' ຊຶ່ງຜູ້ຄົນສາມາດເຂົ້າເຖິງຫຼາຍຂຶ້ນ ແລະດຶງດູດຄວາມສົນໃຈຜູ້ຄົນໃນວົງກວ້າງຫຼາຍຂຶ້ນ (Helliwell et. al., 2015). ຍ້ອນຄຳນິຍາມນີ້ ພວກເຮົາຄວນຈົດຈຳໄວ້ວ່າ ເຖິງວ່າພາກນີ້ຂອງບົດລາຍງານບໍ່ໄດ້ເວົ້າລະອຽດເຖິງທິດສະດີກ່ຽວກັບຄວາມສຸກ ແຕ່ກໍໄດ້ຍົກເອົາຕົວຢ່າງທີ່ຄັດເລືອກຊຶ່ງໃຫ້ຄວາມເປັນມາກ່ຽວກັບແນວຄິດຂອງໂຮງຮຽນໃຫ້ຄວາມສຸກ.

## ປັດຊະຍາກ່ຽວກັບຄວາມສຸກ

ຕາມຄວາມຄິດຂອງປະເທດຕາເວັນຕົກແລະຕາເວັນອອກ ນັກປັດຊະຍາສະໄໝບູຮານໃຫ້ຂໍ້ຄິດກ່ຽວກັບຄວາມສຸກຢູ່ໃນຜົນງານການຂຽນຂອງຕົນ.[9] ນັກປັດຊະຍາແຕ່ລະທ່ານໄດ້ກຳນົດຫົວເລື່ອງທີ່ຜູກພັນກັບໂລກປັດຈຸບັນ ແລະຊີວິດປະຈຳວັນຂອງພວກເຮົາ ລວມທັງແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ອີງຕາມພະພຸດທະເຈົ້າ ມະນຸດສາມາດບັນລຸຄວາມສຸກໄດ້ດ້ວຍພະລັງອຳນາດຂອງຈິດ ໂດຍເອົາຊະນະຄວາມຕ້ອງການແລະຄວາມຢາກ, ໃຫ້ຈິດໃຈສະຫງົບ, ສັນຕິ ແລະ ຄິດໃນທາງບວກ (Fronsdal, 2005). ສາດສະໜາພຸດບອກວ່າຄວາມສຸກແມ່ນບາງຢ່າງ ຊຶ່ງບໍ່ພຽງແຕ່ເປັນຫົວໃຈສຳຄັນສຳລັບຄວາມເປັນຢູ່ຂອງແຕ່ລະບຸກຄົນເທົ່ານັ້ນ ແຕ່ແມ່ນບາງຢ່າງທີ່ລວມກັນເປັນໝູ່ ຊຶ່ງແບ່ງປັນກັບຄົນອື່ນໆ. ອັນນີ້ອອກມາຈາກຄວາມຕ້ອງການຂອງພວກເຮົາທີ່ຕ້ອງມີຄວາມເປັນເພື່ອນມິດ ແລະການສຳພັນອັນດີຕໍ່ກັນເພື່ອໃຫ້ເກີດຄວາມສຸກ. ດັ່ງທີ່ບອກໄວ້ຢູ່ໃນ*ທັມມະປາດະ* ຫຼືຄຳສອນຂອງພະພຸດທະເຈົ້າວ່າ 'ຄວາມສຸກແມ່ນການມີເພື່ອນມິດໃນຍາມຈຳເປັນ' (Fronsdal, 2005, p. 80). ດັ່ງນັ້ນ ຈຶ່ງບໍ່ເປັນເລື່ອງແປກທີ່ຄວາມເປັນເພື່ອນມິດແລະຄວາມສຳພັນອັນດີຕໍ່ກັນແມ່ນໜຶ່ງໃນຈຳນວນມາດຖານສຳຄັນສຳລັບໂຮງຮຽນໃຫ້ຄວາມສຸກດັ່ງທີ່ຈະໄດ້ຄົ້ນຄວ້າອີກຕື່ມຢູ່ໃນບົດທີສີ່.

ອີງຕາມ ໂຊກຣາເຕັສ (Socrates) ຄວາມສຸກບໍ່ເປັນພຽງແຕ່ເປົ້າໝາຍຂອງຊີວິດເທົ່ານັ້ນ ແຕ່ແມ່ນບາງຢ່າງທີ່ 'ສາມາດບັນລຸໄດ້ແລະບົ່ມສອນກັນໄດ້' ດ້ວຍຄວາມພະຍາຍາມຂອງມະນຸດ ໂດຍສະເພາະດ້ວຍການຍຶດຖືຄຸນນະທຳ (Beebe, 2003). ຄວາມພະຍາຍາມເພື່ອຍຶດຖືຄຸນນະທຳອັນນີ້ ເຊື່ອມໂຍງກັບການຮຽນຮູ້ ບໍ່ພຽງແຕ່ການພັດທະນາທັກສະທາງດ້ານບຸກຄະລິກ, ຄ່ານິຍົມແລະທັດສະນະຄະຕິ ແຕ່ຍັງກ່ຽວກັບວ່າ ພວກເຮົາມີຄວາມສຳພັນກັບຄົນອື່ນແນວໃດຢູ່ໃນໂຮງຮຽນ ຊຶ່ງສຳລັບຜູ້ຮຽນແລ້ວແມ່ນໂລກນ້ອຍໆທີ່ສຳຄັນຢ່າງຍິ່ງຂອງສັງຄົມ. ຢູ່ອີກຊີກໂລກໜຶ່ງ ຂົງຈື້ (Confucius) ບອກວ່າ ການມີຄວາມສຳພັນທາງສັງຄົມແມ່ນບໍ່ເກີດແຫ່ງຄວາມສຸກ ແລະການຮຽນຮູ້ສາມາດເຮັດໃຫ້ເກີດຄວາມສຸກໄດ້ (Yao,

9 ສຳລັບທັດສະນະລວມກ່ຽວກັບປັດຊະຍາຕ່າງໆທີ່ເວົ້າເຖິງຄວາມສຸກຢ່າງຄົບຖ້ວນແລະເຂົ້າເຖິງໄດ້ ຊຶ່ງເອົາມາເປັນສິ່ງອ້າງອີງຢູ່ໃນພາກນີ້ ເອົາມາຈາກເວັບໄຊດ໌ http://www.pursuit-of-happiness.org/history-of-happiness/

2003). ອັນນີ້ໄດ້ເວົ້າຢູ່ໃນບົດກະວີດັ່ງນີ້: 'ການຮຽນ… [ແລະ] ປະຕິບັດໃຫ້ຖືກເວລາບໍ່ແມ່ນຄວາມມ່ວນຊື່ນບໍ? ການມີໝູ່ເພື່ອນຈາກທາງໄກມາຢ້ຽມຢາມ ບໍ່ແມ່ນຄວາມສຸກເຊັ່ນດຽວກັນບໍ?' (Dietz, 2010, p. 222). ອັນນີ້ບໍ່ພຽງແຕ່ສະທ້ອນໃຫ້ເຫັນເຖິງການມີຄວາມສຳພັນກັບຄົນອື່ນເທົ່ານັ້ນ ແຕ່ຍັງເນັ້ນເຖິງຄວາມສຳຄັນຂອງຄວາມຮັກໃນການຮຽນຮູ້ ແລະການຮຽນຮູ້ເພື່ອເອົາໄປໝູນໃຊ້ເຂົ້າໃນຊີວິດປະຈຳວັນວ່າມີຄວາມສຳຄັນແນວໃດ.

ຕໍ່ມາ ອາຣິສໂຕເຕິລ (Aristotle) ບອກວ່າ ຄວາມສຸກບໍ່ພຽງແຕ່ແມ່ນເປົ້າໝາຍແຫ່ງການດຳລົງຢູ່ຂອງມະນຸດເທົ່ານັ້ນ ແຕ່ແມ່ນບາງຢ່າງທີ່ອີງໃສ່ການປະຕິບັດຄຸນສົມບັດດ້ານຈາລິຍະທຳດ້ວຍການທີ່ຜູ້ຄົນມີຄຸນນະທຳຕໍ່ກັນ ຄື: ຄວາມເປັນເພື່ອນມິດກັນ, ຄວາມຍຸຕິທຳແລະການເປັນພົນລະເມືອງ (Crisp, 2000). ທ່ານຍັງເບິ່ງການສຶກສາໃນລັກສະນະຫຼາຍມິຕິ ຊຶ່ງປະກອບດ້ວຍສີ່ຂະແໜງຄື: 1) ການອ່ານແລະການຂຽນ, 2) ການບໍລິຫານຮ່າງກາຍ, 3) ດົນຕີ ແລະ 4) ການແຕ້ມຮູບ. ການອ່ານ, ການຂຽນແລະການແຕ້ມຮູບຖືວ່າແມ່ນຄວາມສາມາດທີ່ເປັນປະໂຫຍດ ສ່ວນການບໍລິຫານຮ່າງກາຍ ເຮັດໃຫ້ເກີດພະລັງຄວາມກ້າຫານ ສ່ວນດົນຕີນັ້ນມີຄວາມຈຳເປັນເພື່ອສ້າງຄວາມເພິ່ງພໍໃຈ (Jowett, 1994; Newman, 2010).

ໃນບັນດານັກຄິດທີ່ຍິ່ງໃຫຍ່ ຊຶ່ງເກີດໃນຍຸກແສງສະຫວ່າງທາງປັນຍາໃນສະຕະວັດທີສິບເຈັດນັ້ນ ຈອຫ໌ນ ລ໊ອຄ (John Locke) ນັກປຣັດຊະຍາອັງກິດໄດ້ໃຊ້ຄຳວະລີວ່າ 'ການສະແຫວງຫາຄວາມສຸກ' ຢູ່ໃນວັນນະກຳຊິ້ນເອກຊື່ວ່າ *ບົດເລື່ອງກ່ຽວກັບຄວາມເຂົ້າໃຈຕໍ່ມະນຸດ*. ລ໊ອຄ ຄົ້ນຄວ້າການສຶກສາດ້ວຍຫຼາຍມິຕິ ຄື: ຈິດຕະສາດ, ປຣັດຊະຍາແລະສາດສະໜາ ຊຶ່ງມີ 'ຄວາມກ່ຽວຂ້ອງກັບຄວາມຢູ່ດີມີສຸກທາງດ້ານຮ່າງກາຍ, ຈິດໃຈແລະຈິດວິນຍານຂອງເດັກນ້ອຍ' (Aldrich, 1994, p. 68). ໂຈຮານ ແປສຕາໂລຊີ (Johann Pestalozzi) ຊຶ່ງບາງຄົນຍົກໃຫ້ເປັນ 'ບິດາຂອງການສິດສອນທີ່ທັນສະໄໝ' ໄດ້ຮັບອິດທິພົນທາງຄວາມຄິດມາຈາກ ຈອຫ໌ນ ລ໊ອຄ໌. ໂຈຮານ ແປສຕາໂລຊີ ພະຍາຍາມຄົ້ນຫາວ່າການສຶກສາສາມາດນຳເອົາຄວາມສຸກມາໃຫ້ຄົນເຮົາໄດ້ແນວໃດ ແລະປັບປຸງສະພາບຂອງມະນຸດໃຫ້ດີຂຶ້ນໄດ້ແນວໃດ ໂດຍເນັ້ນໃສ່ 'ຄວາມເປັນທັງໝົດຢູ່ໃນຕົວເດັກນ້ອຍ' ໂດຍກ້າວຂ້າມຜົນການຮຽນດ້ານວິຊາການ ເພື່ອສົ່ງເສີມການພັດທະນາທາງດ້ານຮ່າງກາຍ, ຈິດໃຈແລະຈິດຕະສາດ. ທ່ານຍູ້ດັນໃຫ້ມີການສຶກສາແກ່ເດັກນ້ອຍໂດຍສ້າງຄວາມສົມດຸນກັນເປັນຢ່າງດີ

ຂອງອົງປະກອບສາມຢ່າງ ຄື: ຫົວ (ການພັດທະນາທາງດ້ານສະຕິປັນຍາ), ໃຈ (ພັດທະນາທາງດ້ານອາລົມຄວາມຮູ້ສຶກ) ແລະມື (ການພັດທະນາທາງດ້ານຮ່າງກາຍ) (Brühlmeter, 2010). ສິ່ງທັງໝົດເຫຼົ່ານີ້ແມ່ນຫົວໃຈສຳຄັນຂອງແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ກ່ອງຂໍ້ຄວາມ 1 ມີລາຍການກ່ຽວກັບແງ່ມຸມຕ່າງໆທີ່ກ່ຽວຂ້ອງຫຼາຍທີ່ສຸດກັບວິທີການສຶກສາຂອງທ່ານ ແປສຕາໂລຊີ ຊຶ່ງສິ່ງທີ່ຄົ້ນພົບຈາກການສຶກສາຄົ້ນຄວ້າກໍໄດ້ສະທ້ອນອອກມາໃຫ້ເຫັນແລະຄົ້ນຄວ້າກັນຢູ່ໃນບົດທີສີ່.

***ກ່ອງຂໍ້ຄວາມ 1.*** *ວິທີການດ້ານຕ່າງໆກ່ຽວກັບການສຶກສາຂອງທ່ານ ແປສຕາໂລຊີ ທີ່ຄັດເລືອກມາ.*

- ການຮຽນການສອນໂດຍເອົາເດັກເປັນໃຈກາງ
- ຄວາມມີອິດສະຫຼະຂອງຜູ້ຮຽນ
- ຄວາມສຳພັນກັນລະຫວ່າງນັກຮຽນແລະຄູ
- ການຮຽນໂດຍຜ່ານປະສົບການ ດ້ວຍວິທີການສອນທາງພາກປະຕິບັດແລະແບບມີສ່ວນຮ່ວມ
- ການຮຽນຕາມຫຼັກສູດແບບປະສົມປະສານວິຊາຕ່າງໆ
- ຄວາມເຊື່ອຖືກັນໂດຍອີງໃສ່ຄວາມຮັກແພງ ບໍ່ແມ່ນຄວາມຢ້ານກົວ
- ການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນໃນການຮຽນຮູ້

*Source:* Adapted from Brühlmeier, 2010; Soetard, 1994.

ຂໍ້ມູນອ້າງອີງໂດຍກົງກ່ຽວກັບຄວາມສຸກຢູ່ໃນການສຶກສາຍັງພົບເຫັນຢູ່ໃນຜົນງານຂອງທ່ານ ທຊຸເນ່ຊາບູໂຣ ມະກິຄຸຊິ (Tsunesaburo Makiguchi) ນັກການສຶກສາຊາວຍີ່ປຸ່ນໃນປີ 1930 ຊື່ວ່າ *ລະບົບການສິດສອນທີ່ສ້າງຄຸນຄ່າ.* ອີງຕາມທ່ານ ກູມາກາຍ (Kumagai) (2000), ທ່ານ ມະກິຄຸຊິ ເບິ່ງການບັນລຸຄວາມສຸກແມ່ນເປົ້າໝາຍການສິດສອນທີ່ສ້າງຄຸນຄ່າ ຊຶ່ງ 'ການສຶກສາຊີ້ຊ່ອງທາງໃຫ້ຄົນມີຄວາມຮູ້ໃນທິດທາງທີ່ເຂົາເຈົ້າສາມາດບັນລຸຄວາມສຸກໄດ້' (Kumagai, 2000, p. 35)

## ສາດແຫ່ງຄວາມສຸກ

ປຣັດຊະຍາກ່ຽວກັບຄວາມສຸກໄດ້ເຂົ້າມາມີບົດບາດສຳຄັນຢູ່ໃນການພັດທະນາ ທີ່ຜູ້ຄົນມັກເອີ້ນວ່າແມ່ນ 'ສາດແຫ່ງຄວາມສຸກ' ຊຶ່ງມາຈາກການຄິດຄົ້ນຈິດຕະສາດທາງບວກໂດຍທ່ານ ມາຣ໌ຕິນ ເຊລິກມັນ (Martin Seligman) ໃນທ້າຍຊຸມປີ 1990. ຈິດຕະສາດທາງບວກສາມາດໃຫ້ຄຳນິຍາມໄດ້ດັ່ງນີ້:

*ຈິດຕະສາດທາງບວກແມ່ນການສຶກສາຄົ້ນຄວ້າທາງວິທະຍາສາດກ່ຽວກັບຈຸດແຂງ ທີ່ສາມາດເຮັດໃຫ້ສ່ວນບຸກຄົນແລະຊຸມຊົນປະສົບຄວາມສຳເລັດໄດ້. ວິຊານີ້ໄດ້ຮັບການວາງຮາກຖານໄວ້ດ້ວຍຄວາມເຊື່ອທີ່ວ່າ ຜູ້ຄົນປາຖະໜາຢາກໃຊ້ຊີວິດຢ່າງມີຄວາມໝາຍແລະທຳໜ້າທີ່ໃຫ້ສຳເລັດ ໂດຍນຳໃຊ້ສິ່ງທີ່ມີຢູ່ໃນຕົວເຂົາເຈົ້າໃຫ້ໄດ້ດີທີ່ສຸດ ແລະສົ່ງເສີມປະສົບການຂອງຕົນດ້ວຍຄວາມຮັກ, ການງານແລະການຫຼິ້ນມ່ວນຊື່ນ.*

- ສູນຈິດຕະສາດທາງບວກ ທີ່ມະຫາວິທະຍາໄລ ເພັນຊິວາເນຍ

ຢູ່ໃນປຶ້ມຂອງຕົນທີ່ຊື່ວ່າ *ຄວາມສຸກທີ່ແທ້ຈິງ* ເຊລິກມັນ (2002) ລະບຸສາມເສົາຄ້ຳຢູ່ໃນຈິດຕະສາດທາງບວກ ຄື: ອາລົມຄວາມຮູ້ສຶກທາງບວກ, ອຸປະນິໄສທາງບວກແລະສະຖາບັນທາງບວກ. ໂດຍສະເພາະສະຖາບັນທາງບວກຖືວ່າເປັນສິ່ງທີ່ 'ເຊີດຊູຄຸນນະທຳຊຶ່ງຊ່ວຍສະໜັບສະໜູນຄວາມຮູ້ສຶກທາງບວກ' (Seligman, 2004, p. 80). ສະຖາບັນທາງບວກຊ່ວຍຜູ້ຄົນໃຫ້ 'ກຳນົດແລະນຳໃຊ້ຈຸດແຂງສູງສຸດຂອງຕົນ ເພື່ອໃຫ້ເປັນສ່ວນໜຶ່ງແລະຮັບໃຊ້ບາງຢ່າງທີ່ໃຫຍ່ກວ່າ' ທີ່ຕົນເອງເປັນຢູ່ (Ibid, p. 86). ຄວາມເຊື່ອມໂຍງກັນລະຫວ່າງການສຶກສາກັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກນັ້ນຈະມີຄວາມຊັດເຈນຫຼາຍຂຶ້ນ - ອາລົມທາງບວກເວົ້າເຖິງຄວາມຮູ້ສຶກ ສ່ວນອຸປະນິໄສເວົ້າເຖິງທັກສະດ້ານສັກກະຍະພາບແລະຄວາມສາມາດທີ່ສາມາດພັດທະນາໄດ້ ໂດຍຜ່ານການຮຽນຮູ້ ສ່ວນສະຖາບັນສາມາດຕີຄວາມໝາຍໄດ້ວ່າແມ່ນໂຮງຮຽນຕ່າງໆນັ້ນເອງ.

ເຊລິກມັນ ຍັງໄດ້ກຳນົດຄຸນນະທຳສຳຄັນຫົກຢ່າງ ທີ່ມີການຍອມຮັບກັນຢູ່ໃນທຸກວັດທະນະທຳ ຊຶ່ງປະກອບດ້ວຍພູມປັນຍາແລະຄວາມຮູ້, ຄວາມກ້າຫານ, ມະນຸດສະທຳ, ຄວາມເປັນທຳ, ຄວາມຍັບຍັ້ງຊັ່ງໃຈ, ຈິດວິນຍານແລະຄວາມເຂົ້າໃຈສັບພະສິ່ງໂດຍຜ່ານປະສົບການ (Seligman, 2002). ອີງໃສ່ການທົບທວນໃນວົງກວ້າງກ່ຽວກັບເນື້ອຄວາມຢູ່ໃນສາດ

ສະໜາແລະປຣັດຊະຍາຕ່າງໆ ຈຶ່ງໄດ້ມີການເສີມຂະຫຍາຍຄຸນນະທໍາແຕ່ລະຢ່າງຈາກຈໍານວນທັງໝົດ ໃຫ້ເປັນຈຸດແຂງດ້ານບຸກຄະລິກ 24 ຢ່າງ (Peterson and Seligman, 2004).[10] ສິ່ງເຫຼົ່ານີ້ຫຼາຍຢ່າງສະທ້ອນໃຫ້ເຫັນບໍ່ທາງໃດກໍທາງໜຶ່ງຢູ່ໃນໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ ເຊັ່ນ: ຄວາມສ້າງສັນ, ຄວາມຮັກໃນການຮຽນ, ຄວາມມີຈິດໃຈດີແລະການເຮັດວຽກເປັນໝູ່ຄະນະ (Values in Action, 2015). ຄຸນນະທໍາແລະຈຸດແຂງດ້ານບຸກຄະລິກເຫຼົ່ານີ້ ສະແດງອອກເປັນຮູບພາບຢູ່ໃນແຜນວາດ 5.

***ແຜນວາດ 5.*** *ຄຸນນະທໍາຫົກຢ່າງແລະຈຸດແຂງດ້ານບຸກຄະລິກ 24 ຢ່າງຢູ່ໃນຈິດຕະສາດທາງບວກ*




*Source:* Adapted from Values in Action 2015.

ຢູ່ໃນຜົນງານຕໍ່ມາຊື່ *ຄວາມເບັ່ງບານ* ຊຶ່ງພິມໃນປີ 2012 ທ່ານ ເຊລິກມັນ ໄດ້ໃຫ້ທິດສະດີກ່ຽວກັບຄວາມຢູ່ດີມີສຸກ ທີ່ປະກອບດ້ວຍຫ້າອົງປະກອບທີ່ສາມາດວັດໄດ້ ຊຶ່ງເປັນທີ່ຮູ້ຈັກດ້ວຍຄໍາຫຍໍ້ວ່າ ເພີຣ໌ມາ (PERMA) ຄື: 1) ອາລົມຄວາມຮູ້ສຶກທາງບວກ, 2) ການມີສ່ວນຮ່ວມ, 3) ຄວາມສໍາພັນກັນ, 4) ຄວາມໝາຍແລະຄວາມປະສົບຜົນສໍາເລັດ (Seligman, 2012). ດັ່ງທີ່ຈະມີການຄົ້ນຄວ້າກັນຢູ່ໃນບົດທີສີ່ ອົງປະກອບຫ້າຢ່າງນີ້ຊຶ່ງຖືກສ້າງຂຶ້ນດ້ວຍການປະຕິບັດຄຸນນະທໍາຫົກຢ່າງ ລວມທັງຈຸດແຂງດ້ານບຸກຄະລິກ 24 ຢ່າງ ທັງໝົດນີ້ສະ

10 ລະບົບຈັດປະເພດຈຸດແຂງດ້ານບຸກຄະລິກແລະຄຸນນະທໍາ ລວມທັງການສໍາຫຼວດຈຸດແຂງດ້ານບຸກຄະລິກ ສາມາດເຂົ້າໄປເບິ່ງຢູ່ເວັບໄຊດ໌ຂອງສະຖາບັນເວຍ (VIA Institute) ກ່ຽວກັບບຸກຄະລິກ: http://www.viacharacter.org/www/Character-Strengths/VIA-Classification

ແດງອອກຢ່າງຫຼວງຫຼາຍຢູ່ໃນໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ.

ໃນຄວາມໝາຍອັນນີ້ ຢູ່ໃນບົດຄວາມໜຶ່ງ ທ່ານ ເຊລິກມັນ ແລະນັກວິໄຈຄົນອື່ນໆ ໃຫ້ທັດສະນະວ່າ ຄວາມຈິງແລ້ວຄວາມສຸກສາມາດສອນກັນໄດ້ຢູ່ໃນໂຮງຮຽນ (Seligman et. al., 2009). ບໍ່ພຽງແຕ່ສາມາດສອນກັນໄດ້ເທົ່ານັ້ນ ແຕ່ຍັງມີສິ່ງພິສູດໄດ້ວ່າ 'ການມີຄວາມຢູ່ດີມີສຸກຫຼາຍຂຶ້ນນັ້ນເປັນພະລັງເກື້ອໜູນເຮັດໃຫ້ການຮຽນດີຂຶ້ນ' ດ້ວຍການເສີມຂະຫຍາຍຄວາມສົນໃຈ, ຄວາມຄິດສ້າງສັນແລະຄວາມຄິດແບບເຊື່ອມໂຍງຂອງຜູ້ຮຽນ (Ibid, p. 294). ນອກຈາກການຮຽນດີຂຶ້ນ ບົດຄວາມນີ້ໄດ້ຍູ້ດັນໃຫ້ມີຫຼັກສູດກ່ຽວກັບຄວາມຢູ່ດີມີສຸກໃນໂຮງຮຽນ ເພື່ອແກ້ໄຂບັນຫາຄວາມກົດດັນທາງດ້ານຈິດໃຈ ແລະເຮັດໃຫ້ຜູ້ຮຽນມີຄວາມເພິ່ງພໍໃຈຫຼາຍຂຶ້ນ. ບົດຄວາມນີ້ເນັ້ນເປັນພິເສດວ່າ ໂຮງຮຽນເປັນບ່ອນຈັດຕັ້ງທີ່ປະເສີດເລີດລ້ຳ 'ເພາະວ່າຄົນໜຸ່ມນ້ອຍສ່ວນຫຼາຍໄປເຂົ້າໂຮງຮຽນ ແລະໂຮງຮຽນໃຫ້ໂອກາດແລະສົ່ງເສີມຄວາມຢູ່ດີມີສຸກຂອງເຂົາເຈົ້າໃນວົງກວ້າງ' (Ibid, p. 295).

ຍັງມີງານວິໄຈອື່ນກ່ຽວກັບດ້ານນີ້ທີ່ຊີ້ໃຫ້ເຫັນວ່າ ຄວາມສຸກທີ່ເດັກນ້ອຍໄດ້ຮັບຈາກການປະຕິບັດດ້ານຄຸນນະທຳແລະຈຸດແຂງດ້ານບຸກຄະລິກນັ້ນ ພົວພັນເຖິງຜົນສຳເລັດດ້ານການຮຽນຮູ້ໃນລະດັບທີ່ສູງຂຶ້ນໄປ ແລະເຊື່ອມໂຍງກັບຄວາມສຳເລັດທາງດ້ານວຽກງານໃນອະນາຄົດ. ຕົວຢ່າງ: ການປະຕິບັດຕົນຢ່າງມີລະບຽບວິໄນ ຖືວ່າເປັນສິ່ງບົ່ງບອກລ່ວງໜ້າທີ່ດີຂຶ້ນສຳລັບການຮຽນດ້ານວິຊາການຫຼາຍກວ່າຄວາມສາມາດທາງດ້ານສະຕິປັນຍາ (ໄອຄິວ) (Duckworth and Seligman, 2005) ແລະໄວໜຸ່ມທີ່ມີຄວາມສຸກມີແນວໂນ້ມທີ່ຈະມີລາຍໄດ້ຫຼາຍກວ່າໄວໜຸ່ມທີ່ມີຄວາມສຸກໜ້ອຍກວ່າ ເມື່ອເຂົາເຈົ້າມີອາຍຸ 15 ປີ ຂຶ້ນໄປ (Diener, 2002). ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ການບັນລຸຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນ ບໍ່ເປັນແຕ່ພຽງຈຸດປະສົງໃນຕົວມັນເອງເທົ່ານັ້ນ ແຕ່ຍັງເປັນຊ່ອງທາງນຳໄປສູ່ຜົນການສຶກສາທີ່ດີຂຶ້ນ ລວມທັງຄວາມສຳເລັດທີ່ເປັນໄປໄດ້ໃນຊີວິດ ແລະການງານໃນອະນາຄົດ.

ເມື່ອບໍ່ດົນມານີ້ ມີການລິເລີ່ມອັນໜຶ່ງໂດຍເຄືອຂ່າຍການສຶກສາທາງບວກລະຫວ່າງປະເທດ ເປັນຜູ້ເລີ່ມຕົ້ນໃນຕົ້ນປີ 2015 ຊຶ່ງໃຫ້ຄຳນິຍາມການສຶກສາທາງບວກວ່າແມ່ນກຽວຄູ່ທາງວິຊາການ ທີ່ປະກອບດ້ວຍບຸກຄະລິກແລະຄວາມຢູ່ດີມີສຸກ (IPEN, 2016a). ໂດຍ

ເຄືອຂ່າຍການສຶກສາທາງບວກລະຫວ່າງປະເທດເອົາຜູ້ມີສ່ວນຮ່ວມລະດັບໂຮງຮຽນ ລວມທັງສະຖາບັນການສຶກສາ, ລັດຖະບານແລະອົງການທີ່ກ່ຽວຂ້ອງມາເຮັດວຽກຮ່ວມກັນ ໂດຍມີຈຸດມຸ່ງໝາຍເພື່ອໃຫ້ມີບົດບາດສຳຄັນໃນການກຳນົດນະໂຍບາຍ ເພື່ອປະຕິຮູບການສຶກສາ, ປ່ຽນແປງການປະຕິບັດທາງດ້ານການສຶກສາ ແລະສະໜັບສະໜູນການຮ່ວມມືກັນຂອງຊຸມຊົນກ່ຽວກັບການສຶກສາທາງບວກທີ່ກຳລັງເຕີບໃຫຍ່ຂະຫຍາຍຕົວ (IPEN, 2016b). ຄວາມຈິງແລ້ວຈິດຕະສາດທາງບວກແລະການເຄື່ອນໄຫວ ດ້ານການສຶກສາທາງບວກພາໃຫ້ເກີດງານວິໄຈແລະການລິເລີ່ມທີ່ແຜ່ຂະຫຍາຍເປັນຈຳນວນຫຼວງຫຼາຍຢ່າງທີ່ບໍ່ເຄີຍເປັນມາກ່ອນ ໃນຈຳນວນນີ້ຈະຍົກເອົາມາເປັນຕົວຢ່າງພຽງສ່ວນໜຶ່ງເທົ່ານັ້ນ.

ຈາກມິຕິຕ່າງໆເຫຼົ່ານີ້ ຄວາມຄິດເລື່ອງການຄິດເຖິງຄົນອື່ນມາກ່ອນສະແດງອອກຢ່າງເຂັ້ມຂົ້ນ. ພະພຸດທະເຈົ້າແລະຂົງຈື້ຮັບຮູ້ຄວາມຈຳເປັນກ່ຽວກັບຄວາມເປັນມິດກັນແລະທິດສະດີຂອງ ເຊລິກມັນ ກ່ຽວກັບຄວາມຢູ່ດີມີສຸກເມື່ອບໍ່ດົນມານີ້ ຖືວ່າຊີວິດທີ່ມີຄວາມໝາຍແມ່ນການນຳເອົາຄຸນນະທຳແລະຈຸດແຂງມາໃຊ້ເພື່ອຈຸດປະສົງທີ່ຍິ່ງໃຫຍ່. ມິຕິທັງໝົດນີ້ສ່ອງແສງໃຫ້ເຫັນວ່າ ຄວາມສຸກນັ້ນສາມາດສະແຫວງຫາໄດ້ຈາກແກ່ນແທ້ຂອງການພັດທະນາການຂອງມະນຸດແນວໃດ. ຄວາມຄິດທາງດ້ານປຣັດຊະຍາ ແລະວິທະຍາສາດກ່ຽວກັບຄວາມສຸກຍັງເນັ້ນບົດບາດພື້ນຖານທີ່ວ່າ ການສຶກສາສາມາດເປັນທັງບໍ່ເກີດແຫ່ງຄວາມສຸກແລະເປັນຈຸດປະສົງຂອງການສຶກສາໄປນຳພ້ອມ.

# ຂ. ການລິເລີ່ມໃນລະດັບໂລກ

ຄວາມສຸກກຳລັງກາຍເປັນສ່ວນໜຶ່ງຂອງວາລະນະໂຍບາຍລະດັບໂລກຊຶ່ງກຳລັງເພີ່ມທະວີຂຶ້ນເລື້ອຍໆ. ແນວໂນ້ມຂອງໂລກທີ່ມີການປ່ຽນແປງຢ່າງທີ່ບໍ່ເຄີຍເປັນມາກ່ອນກຳລັງເຮັດໃຫ້ມີຄວາມຈຳເປັນຕ້ອງໃສ່ໃຈໃນເລື່ອງຄວາມສຸກ ແລະຄວາມຢູ່ດີມີສຸກໃນລະດັບສູງສຸດ. ສະນັ້ນ ພາກນີ້ຈະສຶກສາແນວທາງທີ່ວ່າຊຸມຊົນນາໆຊາດເອົາຄວາມສຸກ ແລະຄວາມຢູ່ດີມີສຸກເຊື່ອມໂຍງເຂົ້າກັບວາລະການພັດທະນາລະດັບໂລກ ແລະແນວຄິດເຫຼົ່ານີ້ສະທ້ອນອອກມາຢູ່ໃນພັນທະກິດ ແລະໂຄງປະກອບຂອງອົງການຢູເນສໂກແນວໃດ ເຊັ່ນຢູ່ໃນການສຶກສາ ປີ 2030 ລວມທັງຮາກຖານດ້ານປຣັດຊະຍາຂອງອົງການນຳອີກ. ພາກນີ້ຍັງຈະສຶກ

ສາການລິເລີ່ມໃນລະດັບໂລກໂດຍສັງເຂບຈາກທັງພາຍໃນ ແລະນອກລະບົບອົງການສະຫະປະຊາຊາດ ຊຶ່ງຫາວິທີທາງເຮັດໃຫ້ຄວາມສຸກ ແລະຄວາມຢູ່ດີມີສຸກກາຍເປັນບັນຫາສຳຄັນ ໂດຍສະເພາະກ່ຽວກັບການວັດຄວາມສຳເລັດດ້ານການພັດທະນາຂອງປະເທດຕ່າງໆ.

## ແນວໂນ້ມຂອງໂລກ

ຂະນະທີ່ພວກເຮົາປັບຕົວໃຫ້ເຂົ້າກັບໂລກທີ່ກຳລັງປ່ຽນແປງຢ່າງທີ່ບໍ່ເຄີຍເປັນມາກ່ອນ ແນວໂນ້ມບາງຢ່າງຂອງໂລກຮຽກຮ້ອງໃຫ້ຈຳເປັນຕ້ອງເອົາຄວາມສຸກເປັນບຸລິມະສິດຢູ່ໃນນະໂຍບາຍດ້ານການພັດທະນາ ລວມທັງນະໂຍບາຍດ້ານການສຶກສານຳອີກ. ການປ່ຽນແປງຢ່າງໄວວາທີ່ເພີ່ມທະວີຂຶ້ນໝາຍເຖິງສັງຄົມຂອງພວກເຮົານັບມື້ກາຍເປັນລັກສະນະຫຼາຍວັດທະນະທຳປະສົມກັນ - ຈຳເປັນຕ້ອງເຄົາລົບຄວາມຫຼາກຫຼາຍແລະຄວາມລະອຽດອ່ອນທາງດ້ານວັດທະນະທຳຂອງຄົນອື່ນ (UNESCO, 2014). ຂະນະດຽວກັນ ພວກເຮົາເຫັນການເພີ່ມຂຶ້ນຂອງລັດທິໃຊ້ຄວາມຮຸນແຮງຢ່າງສຸດຂົ້ວ ນຳໄປສູ່ສັງຄົມທີ່ບໍ່ຍອມຮັບຄວາມຄິດທີ່ແຕກຕ່າງຫຼາຍຂຶ້ນ. ຍິ່ງໄປກວ່ານັ້ນ ຄວາມບໍ່ເທົ່າທຽມກັນທີ່ກຳລັງເພີ່ມທະວີຂຶ້ນລະຫວ່າງຄົນຮັ່ງແລະຄົນທຸກ ກຳລັງສ້າງຄວາມແຕກແຍກຢ່າງໃຫຍ່ຫຼວງຢູ່ໃນສັງຄົມຕ່າງໆ. ຄວາມເສື່ອມໂຊມຂອງສິ່ງແວດລ້ອມຮຽກຮ້ອງໃຫ້ພວກເຮົາທຸກຄົນຕ້ອງເຄົາລົບຢຳເກງທຳມະຊາດ ແລະສິ່ງແວດລ້ອມທີ່ຢູ່ອ້ອມຕົວພວກເຮົາ (Ibid). ຄຽງຄູ່ກັນໄປນັ້ນ ຄວາມກ້າວໜ້າຢ່າງໄວວາທາງດ້ານເຕັກໂນໂລຊີ ຊຶ່ງນຳຜົນປະໂຫຍດຫຼາຍຢ່າງມາໃຫ້ຄົນເຮົາ ແຕ່ກໍເຮັດໃຫ້ຜູ້ຄົນ 'ຮັບເອົາຂໍ້ມູນເກີນຄວາມຈຳເປັນ' ຫຼື 'ມົນລະພິດທາງດ້ານຂໍ້ມູນ'. ຜູ້ຊ່ຽວຊານດ້ານປະສາດວິທະຍາໃຫ້ທັດສະນະວ່າ ຂະນະທີ່ເຕັກໂນໂລຊີ ເຊັ່ນ: 'ສມາຣ໌ຕໂຟນ', ສື່ສັງຄົມອອນລາຍນ໌ແລະອີເມລໄດ້ໃຫ້ຂໍ້ມູນຈຳນວນຫຼວງຫຼາຍພາຍມາກ ແຕ່ກໍເປັນໄປໄດ້ຍາກທີ່ມະນຸດເຮົາຈະຕາມທັນມັນໄດ້ ແລະຄວາມພະຍາຍາມຂອງພວກເຮົາທີ່ຈະເຮັດໃຫ້ໄດ້ແນວນັ້ນ ກໍ່ໃຫ້ເກີດຮູບແບບການເຮັດວຽກທີ່ເປັນອັນຕະລາຍຕໍ່ສຸຂະພາບ ຜົນທີ່ຕາມມາກໍຄື ຄົນເຮົາມີຄວາມທຸກໃຈຫຼາຍຂຶ້ນ ແລະໃນທີ່ສຸດກໍເຮັດໃຫ້ພວກເຮົາບໍ່ມີຄວາມສຸກຫຼາຍຂຶ້ນ (Levitin, 2015). ເພື່ອຮອງຮັບແນວໂນ້ມເຫຼົ່ານີ້ ຜູ້ຊ່ຽວຊານຈາກຂະແໜງວິຊາຕ່າງໆ ຈຶ່ງໄດ້ຈັດຕັ້ງການດຳເນີນການເຄື່ອນໄຫວເພື່ອຄວາມສຸກຂຶ້ນມາໃນປີ 2010 ຊຶ່ງປະກອບດ້ວຍຈິດຕະສາດ, ການສຶກສາ, ເສດຖະສາດແລະນະວັດຕະກຳທາງສັງຄົມ (Action for Happiness, 2016).

ລັກສະນະຂອງການເຮັດວຽກກໍາລັງມີການປ່ຽນແປງເຊັ່ນດຽວກັນ. ໃນບາງກໍລະນີ ນາຍຈ້າງບໍ່ໄດ້ເອົາໃຈໃສ່ປານໃດກັບຜົນທາງດ້ານວິຊາການຂອງລູກຈ້າງທີ່ເຮັດວຽກໃນອະນາຄົດແລະປັດຈຸບັນ ແຕ່ຈະໃສ່ໃຈດ້ານທັກສະແລະຄວາມສາມາດຫຼາຍກວ່າ ຊຶ່ງຈະພາໃຫ້ເຂົາເຈົ້າສາມາດນໍາມາໃຊ້ກັບສະຖານທີ່ເຮັດວຽກໄດ້ດີຂຶ້ນ ເຊັ່ນ: ການສື່ສານກັນແລະການເຮັດວຽກເປັນໝູ່ຄະນະ. ຄວາມຈິງແລ້ວ ເມື່ອມີຄວາມກ້າວໜ້າທາງເຕັກໂນໂລຊີໃໝ່ ໝາຍຄວາມວ່າອີກບໍ່ດົນເຄື່ອງຍົນກົນໄກກໍຈະເຂົ້າມາແທນທີ່ວຽກງານຫຼາຍຢ່າງທີ່ພວກເຮົາເຮັດລວມທັງອາຊີບທີ່ຜູ້ຄົນເອີ້ນວ່າວຽກຢູ່ໃນຫ້ອງການ. ຜູ້ຊ່ຽວຊານບາງຄົນເຊື່ອວ່າ ອີກ 20 ປີຂ້າງໜ້າ ເຄື່ອງຍົນກົນໄກຈະສາມາດເຂົ້າມາທໍາໜ້າທີ່ແທນອາຊີບທີ່ພວກເຮົາກໍາລັງເຮັດໄດ້ເກືອບເຄິ່ງໜຶ່ງ (Frey and Osborne, 2015, p. 1). ການຍາດແຍ່ງອາຊີບທີ່ມີຢ່າງຈໍາກັດກໍາລັງເພີ່ມທະວີຂຶ້ນເລື້ອຍໆ ແລະເລື່ອງນີ້ສະທ້ອນໃຫ້ເຫັນຢູ່ໃນສັງຄົມຂອງໂລກນ້ອຍໆຄືໂຮງຮຽນນັ້ນເອງ. ອັນນີ້ເປັນສັນຍານບົ່ງບອກວ່າ ການສຶກສາຈໍາເປັນຕ້ອງເນັ້ນໃສ່ທັກສະແລະຄວາມສາມາດຢ່າງທີ່ບໍ່ເຄີຍເປັນມາກ່ອນ ຊຶ່ງເປັນສິ່ງທີ່ເຄື່ອງຍົນກົນໄກບໍ່ສາມາດເຮັດແທນຄົນເຮົາໄດ້ ເຊັ່ນ: ຄວາມສ້າງສັນ, ການສື່ສານກັນແລະການແກ້ໄຂບັນຫາດ້ວຍການຮ່ວມມືກັນ.

## ວາລະຂອງການພັດທະນາໃນລະດັບໂລກ

ໃນປີ 2011 ກອງປະຊຸມໃຫຍ່ຂອງອົງການສະຫະປະຊາຊາດໄດ້ຜ່ານຍັດຕິ 65/309 ຊື່ວ່າ 'ຄວາມຜາສຸກສູ່ແນວທາງການພັດທະນາທີ່ມີອົງປະກອບຄົບຖ້ວນ' ໂດຍຍອມຮັບວ່າການສະແຫວງຫາຄວາມສຸກແມ່ນເປົ້າໝາຍພື້ນຖານຂອງມະນຸດ (United Nations General Assembly, 2011). ຍັດຕິນີ້ຮຽກຮ້ອງໃຫ້ປະເທດທີ່ເປັນສະມາຊິກສ້າງຕົວຊີ້ວັດຂຶ້ນມາເພື່ອ 'ໃຫ້ຄວາມສໍາຄັນຕໍ່ການສະແຫວງຫາຄວາມສຸກແລະຄວາມຢູ່ດີມີສຸກໃນວຽກພັດທະນາ ໂດຍໃຫ້ມີການແນະນໍາເລື່ອງນີ້ຢູ່ໃນນະໂຍບາຍດ້ານສາທາລະນະຂອງຕົນ' (Ibid, p. 1). ເພື່ອປະຕິບັດຕາມຍັດຕິນີ້ ໃນປີ 2012 ລັດຖະບານພູຖານໄດ້ຈັດກອງປະຊຸມລະດັບສູງຢູ່ຫ້ອງການໃຫຍ່ຂອງອົງການສະຫະປະຊາຊາດທີ່ນະຄອນນິວຢອກ ຊື່ວ່າ 'ຄວາມສຸກແລະຄວາມຢູ່ດີມີສຸກ: ການໃຫ້ຄໍານິຍາມກ່ຽວກັບເບົ້າຫຼອມຄວາມຄິດອັນໃໝ່ດ້ານເສດຖະກິດ' ຊຶ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 800 ຄົນ ປະກອບດ້ວຍຜູ້ນໍາປະເທດ, ຜູ້ນໍາທາງຈິດວິນຍານ, ຜູ້ຊ່ຽວຊານ, ຜູ້ຕາງໜ້າຈາກອົງການພາກປະຊາສັງຄົມ ແລະສື່ມວນຊົນ (Royal Government of Bhutan, 2012). ປະເທດສະມາຊິກໄດ້ນໍາສະເໜີແລະແລກ

ປຸ່ມທັດສະນະຂອງຕົນຕາມລຳດັບກັນກ່ຽວກັບການສະແຫວງຫາຄວາມສຸກ ແລະຄວາມຢູ່ດີມີສຸກ ຕໍ່ມາເລຂາທິການໃຫຍ່ອົງການສະຫະປະຊາຊາດກໍໄດ້ພິມເຜີຍແຜ່ບັນທຶກກ່ຽວກັບນະໂຍບາຍຫຼາຍຢ່າງທີ່ກຳນົດອອກມາ ເພື່ອນຳໄປປະຕິບັດໃນລະດັບໂລກ, ລະດັບພາກພື້ນແລະລະດັບຊາດ ຄຽງຄູ່ໄປກັບໂຄງການຕ່າງໆ, ການວິໄຈແລະການລິເລີ່ມອື່ນໆທີ່ກ່ຽວຂ້ອງກັບເລື່ອງນີ້ (United Nations General Assembly, 2013).

ເມື່ອເອົາວາລະໃໝ່ຂອງການພັດທະນາລະຫວ່າງປະເທດເຂົ້າໃນນະໂຍບາຍ ຈຶ່ງເລີ່ມມີກອງປະຊຸມໃຫຍ່ຂອງອົງການສະຫະປະຊາຊາດ ເພື່ອລິເລີ່ມເປົ້າໝາຍການພັດທະນາທີ່ຍືນຍົງຢູ່ນະຄອນນິວຢອກໃນເດືອນກັນຍາ ປີ 2015 ຊຶ່ງສະທ້ອນຄວາມຄິດທີ່ໃຫ້ຄວາມສຳຄັນໃນເລື່ອງຄວາມຢູ່ດີມີສຸກ ໃຫ້ມີຢູ່ທົ່ວຈຸດປະສົງແລະເປົ້າໝາຍຕ່າງໆ (United Nations General Assembly, 2015a). ຕົວຢ່າງເປົ້າໝາຍການພັດທະນາທີ່ຍືນຍົງທີ 3 ທີ່ເວົ້າເຖິງສຸຂະພາບນັ້ນ ຊອກຫາຊ່ອງທາງ 'ຮັບປະກັນໃຫ້ຊີວິດຄົນເຮົາມີສຸຂະພາບດີ ແລະສົ່ງເສີມຄວາມຢູ່ດີມີສຸກສຳລັບໝົດທຸກຄົນໃນທຸກເກນອາຍຸ' (Ibid, p. 14). ເປົ້າໝາຍການພັດທະນາທີ່ຍືນຍົງທີ 9 ເວົ້າເຖິງອຸດສາຫະກຳ, ນະວັດຕະກຳແລະພື້ນຖານໂຄງລ່າງ ຊຶ່ງປະກອບດ້ວຍເປົ້າໝາຍອັນໜຶ່ງທີ່ລະບຸໂດຍກົງ ເຖິງຄວາມຈຳເປັນຕ້ອງສະໜັບສະໜູນການພັດທະນາທາງດ້ານເສດຖະກິດແລະຄວາມຢູ່ດີມີສຸກ (Ibid, p. 14). ເປົ້າໝາຍການພັດທະນາທີ່ຍືນຍົງທີ 16 ຊຶ່ງແນໃສ່ 'ສົ່ງເສີມສັງຄົມທີ່ສະຫງົບສຸກແລະມີສ່ວນຮ່ວມ' (Ibid, p. 14). ການສຶກສາມີບົດບາດໃຫຍ່ຫຼວງໃນການພັດທະນາລະດັບໂລກ ເຊັ່ນເປົ້າໝາຍການພັດທະນາທີ່ຍືນຍົງທີ 4 ແນໃສ່ 'ຮັບປະກັນໃຫ້ມີການສຶກສາທີ່ມີຄຸນນະພາບ, ມີສ່ວນຮ່ວມແລະເປັນທຳ ທັງສົ່ງເສີມໃຫ້ທຸກຄົນມີໂອກາດໄດ້ຮຽນຮູ້ຕະຫຼອດຊີວິດ' (Ibid, p. 14) ແລະຍັງມີຫຼາຍແງ່ມຸມທີ່ກ່ຽວຂ້ອງຢ່າງຍິ່ງກັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ.

## ແນວໂນ້ມດ້ານການສຶກສາ

ປະເທດຕ່າງໆມັກຊີ້ວັດຄວາມສຳເລັດ ຫຼືລະດັບການພັດທະນາຂອງຕົນ ໂດຍອີງໃສ່ຈຳນວນແລະຕົວເລກ ເຊັ່ນ: ຕົວຊີ້ວັດເສດຖະກິດ. ລະບົບການສຶກສາຕາມທີ່ປະຕິບັດກັນນັ້ນກໍຍັງອີງໃສ່ຈຳນວນແລະຕົວເລກ ເພື່ອວັດຄວາມສຳເລັດຂອງຕົນແລະວັດຄວາມກ້າວໜ້າຂອງຜູ້ຮຽນ. ເຊັ່ນຕົວຢ່າງ: ອາດມີການຕັດສິນຄຸນນະພາບການສຶກສາໂດຍພິຈາລະນາຜົນການຮຽນຂອງນັກຮຽນຈາກການສອບເສັງ, ການປະເມີນໃນລະດັບຊາດຫຼືລະຫວ່າງປະ

ເຫດ. ໃນສະພາບເງື່ອນໄຂແບບນີ້ ນັກຮຽນມີຄວາມກົດດັນທາງດ້ານຈິດໃຈ ເພື່ອໃຫ້ໄດ້ຄະແນນສູງ ເພາະເຂົາເຈົ້າຕ້ອງແຂ່ງຂັນກັບຄົນອື່ນ ເພື່ອໃຫ້ໄດ້ເຂົ້າຮຽນຢູ່ມະຫາວິທະຍາໄລດີທີ່ສຸດ. ອັນນີ້ພາໃຫ້ເກີດການຮຽນພາກພິເສດເປັນການສ່ວນຕົວເພີ່ມຂຶ້ນ ແລະບາງກໍລະນີພາໃຫ້ເກີດການທະເລາະວິວາດ, ໃຊ້ຄວາມຮຸນແຮງຢູ່ໃນໂຮງຮຽນ ກໍລະນີຮ້າຍແຮງທີ່ສຸດແມ່ນການຂ້າຕົວຕາຍຂອງໄວໜຸ່ມ.

ຄວາມກົດດັນສຳລັບໂຮງຮຽນ ລວມທັງນັກຮຽນເພື່ອປັບປຸງຜົນການຮຽນໃນພາກວິຊາໃຫ້ດີຂຶ້ນ ເຮັດໃຫ້ຄວາມສົນໃຈໃນມິຕິດ້ານອື່ນໆຂອງການຮຽນຮູ້ມີໜ້ອຍລົງ ເຊັ່ນ: ການຮຽນຮູ້ທາງດ້ານສັງຄົມແລະອາລົມຄວາມຮູ້ສຶກ ຊຶ່ງເປັນທີ່ເຂົ້າໃຈກັນດີວ່າເປັນການສົ່ງເສີມຄວາມສຸກ. ຢູ່ໃນບົດຄວາມທີ່ຊື່ວ່າ ໂຮງຮຽນລັກສະນະສ້າງສັນ ໂຣບິນຊັນ ແລະ ລູ (Robinson and Lou) (2015) ຮຽກຮ້ອງໃຫ້ມີການຫັນປ່ຽນລະບົບການສຶກສາຈາກການສຶກສາທີ່ຖືເອົາ 'ການສອບເສັງເປັນແຮງຂັບເຄື່ອນ' ຊຶ່ງໃຫ້ຄວາມສຳຄັນເລື່ອງຄະແນນຫຼາຍເກີນໄປ ຫຼຸດຄວາມສຳຄັນກ່ຽວກັບການແຂ່ງຂັນສອບເສັງລະຫວ່າງປະເທດ ແລະ ການອອກຂໍ້ສອບທີ່ເປັນມາດຕະຖານດຽວ, ຫັນມາໃຫ້ຄວາມສຳຄັນຕໍ່ກັບການພັດທະນາຄວາມຄິດສ້າງສັນຢູ່ໃນຕົວຂອງນັກຮຽນ. ເຂົາເຈົ້າຍັງໃຫ້ທັດສະນະວ່າ ບັນຫາທີ່ແທ້ຈິງຄື ປະເທດຕ່າງໆ/ຜູ້ກຳນົດນະໂຍບາຍໄດ້ເອົາຕາຕະລາງການແຂ່ງຂັນລະຫວ່າງປະເທດມາບັງຄັບໃຫ້ລະບົບໂຮງຮຽນໃຊ້ເປັນເກນມາດຕະຖານ ເພື່ອສົມທຽບແລະເປັນເກນວັດຜົນການຮຽນຂອງຕົນກັບຄົນອື່ນໆ (Robinson and Lou, 2015). ໃນປີ 2006 ເຊີ ເຄັນ ໂຣບິນຊັນ (Sir Ken Robinson) ໃຫ້ທັດສະນະວ່າ ຄວາມຈິງແລ້ວໂຮງຮຽນ 'ທຳລາຍຄວາມຄິດສ້າງສັນ' ແລະບອກວ່າປັດຈຸບັນ 'ຄວາມສ້າງສັນມີຄວາມສຳຄັນຕໍ່ການສຶກສາເທົ່າກັບການອ່ານອອກຂຽນເປັນ ດັ່ງນັ້ນ ພວກເຮົາຄວນປະຕິບັດກັບມັນດ້ວຍເງື່ອນໄຂແບບດຽວກັນ' (Robinson, 2006). ນອກຈາກນັ້ນ ໂຣບິນຊັນ ແລະ ລູ (2015) ຍັງໂຕ້ແຍ້ງອີກວ່າ ເລື່ອງນີ້ຈຳເປັນຕ້ອງໃຫ້ວິຊາສິລະປະ ຊຶ່ງມີຄວາມສຳຄັນເທົ່າກັບລາຍວິຊາດ້ານວິຊາການ. ນອກຈາກຄວາມຄິດສ້າງສັນແລ້ວ ເຂົາເຈົ້າຍັງແນະນຳຄວາມສາມາດສຳຄັນແປດຢ່າງ ທີ່ການສຶກສາຄວນເຮັດໃຫ້ເກີດຢູ່ໃນຕົວນັກຮຽນ ຄື: ຄວາມຢາກຮູ້ຢາກເຫັນ, ການຕຳນິວິຈານ, ການສື່ສານກັນ, ການຮ່ວມມືກັນ, ຄວາມເອື້ອອາທອນ, ຄວາມສະຫງົບທາງດ້ານຈິດໃຈແລະຄວາມເປັນພົນລະເມືອງ.

## ພັນທະກິດແລະຂອບເຂດໜ້າວຽກຂອງອົງການຢູເນສໂກ

ວິໄສທັດກ່ຽວກັບການສຶກສາທີ່ນຳສະເໜີຢູ່ໃນຖະແຫຼງການ ອິນຊອນ (Incheon) ຊຶ່ງຮັບຮອງເອົາຢູ່ໃນກອງປະຊຸມອະພິປາຍການສຶກສາລະດັບໂລກ (ເດືອນພຶດສະພາ ປີ 2015) ເວົ້າເຖິງຫົວເລື່ອງຫຼາຍຢ່າງຊຶ່ງເວົ້າເຖິງແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ໂດຍສະເພາະແລ້ວມີການລະບຸສິ່ງເຫຼົ່ານີ້ຢູ່ໃນຄາດໝາຍ 4.7 (Target 4.7) ຂອງເປົ້າໝາຍການພັດທະນາທີ່ຍືນຍົງທີ 4 ນຳອີກ ຄື:

*ໃນປີ 2030 ພວກເຮົາຕ້ອງໝັ້ນໃຈໃຫ້ໄດ້ວ່າຜູ້ຮຽນໝົດທຸກຄົນມີຄວາມຮູ້ແລະທັກສະທີ່ຈຳເປັນ ເພື່ອສົ່ງເສີມການພັດທະນາ ຊຶ່ງນອກຈາກສິ່ງອື່ນໆແລ້ວ ແມ່ນດ້ວຍການສຶກສາເພື່ອການພັດທະນາທີ່ຍືນຍົງແລະຮູບແບບການດຳລົງຊີວິດທີ່ຍືນຍົງ, ສິດທິມະນຸດ, ຄວາມເທົ່າທຽມທາງເພດ, ສົ່ງເສີມວັດທະນະທຳສັນຕິສຸກ ແລະບໍ່ໃຊ້ຄວາມຮຸນແຮງ, ການເປັນພົນລະເມືອງໂລກ, ການຮູ້ຄຸນຄ່າຄວາມຫຼາກຫຼາຍທາງວັດທະນະທຳ ແລະການປະກອບສ່ວນຂອງວັດທະນະທຳໃຫ້ແກ່ການພັດທະນາທີ່ຍືນຍົງ.*

(United Nations General Assembly, 2015, p.14)

ສາມາດເວົ້າໄດ້ວ່າ ການເນັ້ນໃສ່ທັກສະເພື່ອສ້າງໂລກທີ່ມີຄວາມສະຫງົບສຸກ, ເປັນທຳແລະຍືນຍົງຫຼາຍຂຶ້ນນັ້ນ ເປັນທີ່ເຂົ້າໃຈກັນວ່າແມ່ນຄວາມສາມາດ, ຄ່ານິຍົມ, ຄຸນນະທຳຫຼືຈຸດແຂງທີ່ເຊື່ອມໂຍງກັບການປະພຶດ ແລະລັກສະນະພິເສດຂອງຄົນເຮົາ ຊຶ່ງໄດ້ຍົກຂຶ້ນມາສົນທະນາກັນກ່ອນໜ້ານີ້.

ນັບແຕ່ມີການລິເລີ່ມເລື່ອງນີ້ໃນປີ 1945 ເປັນຕົ້ນມາ ອົງການຢູເນສໂກໄດ້ເຮັດໃຫ້ດ້ານສຳຄັນຂອງການຮຽນຮູ້ເຫຼົ່ານີ້ເປັນຮູບເປັນຮ່າງຂຶ້ນມາ. ລັດຖະທຳມະນູນຂອງອົງການຢູເນສໂກບອກວ່າ 'ແມ່ນພາຍໃນຈິດໃຈຂອງຜູ້ຊາຍ [ແລະແມ່ຍິງ] ທີ່ຈຳເປັນຕ້ອງມີເກາະປ້ອງກັນ ເພື່ອໃຫ້ເກີດຄວາມສະຫງົບສຸກ'. ການໃຫ້ຄວາມສຳຄັນກັບພະລັງທາງຈິດໃຈນັ້ນກ່ຽວຂ້ອງກັບປຣັດຊະຍາຜ່ານມາ ທີ່ບອກເຖິງຄວາມສຳຄັນຂອງການຮຽນຮູ້ແລະການສຶກສາຊຶ່ງແມ່ນຊ່ອງທາງສະແຫວງຫາຄວາມສຸກໄດ້ ແລະເຮັດໃຫ້ມີສັງຄົມທີ່ສະຫງົບສຸກຫຼາຍຂຶ້ນ.

ພັນທະກິດຂອງອົງການຢູເນສໂກເພື່ອສົ່ງເສີມສັນຕິພາບດ້ວຍການສຶກສານັ້ນ ວິວັດທະນາການມາໄດ້ກວ່າ 70 ປີແລ້ວ. ໃນປີ 1972 ບົດລາຍງານກ່ຽວກັບຈຸດຫັນປ່ຽນຊື່ວ່າ *ຮຽນຮູ້ເພື່ອໃຫ້ເປັນ* ຊຶ່ງຄະນະກຳມາທິການລະຫວ່າງປະເທດກ່ຽວກັບການພັດທະນາການສຶກສາເປັນຜູ້ກະກຽມນັ້ນ ໄດ້ເນັ້ນໃສ່ການພັດທະນາຈຸດແຂງຂອງຄົນເຮົາແລະສະແດງໃຫ້ເຫັນດ້ານສຳຄັນຂອງຄວາມຢູ່ດີມີສຸກ ໂດຍຄົ້ນຄວ້າສະພາບການສຶກສາຢູ່ໃນໂລກ (Faure, 1972). ທ່ານ ເອັດກາຣ໌ ຟາວຣ໌ (Edgar Faure) ປະທານຄະນະກຳມາທິການໄດ້ເນັ້ນເຖິງຄວາມສຳຄັນກ່ຽວກັບການບັນລຸຜົນ, ຄວາມອຸດົມສົມບູນດ້ານລັກສະນະສ່ວນຕົວ, ພົນລະເມືອງ ລວມທັງ 'ນັກຄິດຄົ້ນດ້ານເຕັກນິກແລະນັກສານຝັນທີ່ສ້າງສັນ' ໂດຍແນໃສ່ຄວາມຈຳເປັນທີ່ການສຶກສາຕ້ອງບົ່ມສອນດ້ານເຫຼົ່ານີ້ ເພື່ອໃຫ້ຄົນເຮົາເປັນດັ່ງທີ່ຕົນປາຖະໜາຢາກຈະ 'ເປັນ'. ເກືອບ 25 ປີ ຕໍ່ມາ ຄືປີ 1996 ຄະນະກຳມາທິການດ້ານການສຶກສາລະຫວ່າງປະເທດສຳລັບສະຕະວັດທີຊາວເອັດ ໄດ້ພິມເຜີຍແຜ່ບົດລາຍງານອີກສະບັບໜຶ່ງຊື່ວ່າ *ການຮຽນຮູ້: ຂຸມຊັບຢູ່ພາຍໃນ.* ບົດລາຍງານນີ້ລະບຸສີ່ເສົາຄ້ຳຂອງການຮຽນຮູ້ ຄື: ຮຽນເພື່ອໃຫ້ຮູ້, ຮຽນເພື່ອເຮັດເປັນ, ຮຽນເພື່ອອາໄສຢູ່ຮ່ວມກັນແລະຮຽນເພື່ອໃຫ້ເປັນ (Delors, 1996). ໃນການຍອມຮັບຄວາມສຳຄັນຂອງສີ່ເສົາຄ້ຳນີ້ ບົດຄວາມນີ້ເນັ້ນຄວາມຈຳເປັນຕ້ອງເອົາໃຈໃສ່ເສົາຄ້ຳທີສາມຫຼາຍກວ່າ ຄືການຮຽນຮູ້ເພື່ອອາໄສຢູ່ຮ່ວມກັນ ເພື່ອເປັນການສົ່ງເສີມສັນຕິພາບດ້ວຍການສຶກສາ:

*ການຮຽນຮູ້ເພື່ອອາໄສຢູ່ຮ່ວມກັນດ້ວຍການສ້າງຄວາມເຂົ້າໃຈຄົນອື່ນ, ປະຫວັດສາດ, ປະເພນີແລະຄຸນຄ່າທາງຈິດວິນຍານຂອງພວກເຂົາເຈົ້າ ແລະສ້າງຈິດໃຈໃໝ່ຂຶ້ນມາບົນພື້ນຖານອັນນີ້ ໂດຍຮັບຮູ້ການເພິ່ງພາອາໄສຊຶ່ງກັນແລະກັນຂອງພວກເຮົາທີ່ກຳລັງເຕີບໂຕຂຶ້ນ ແລະວິເຄາະຄວາມສ່ຽງແລະສິ່ງທ້າທາຍກ່ຽວກັບອະນາຄົດຮ່ວມກັນ ຊຶ່ງຈະຊັກຊວນໃຫ້ຜູ້ຄົນປະຕິບັດໂຄງການ ຫຼືຈັດການກັບຄວາມຂັດແຍ່ງທີ່ບໍ່ສາມາດຫຼີກລ່ຽງໄດ້ດ້ວຍສະຕິປັນຍາແລະສັນຕິວິທີ.*

(Ibid, p. 22).

ບົດລາຍງານ ແລນດ໌ມາກ (Landmark) ເຫຼົ່ານີ້ລວມທັງປຣັດຊະຍາທີ່ເນັ້ນຍ້ຳນັ້ນໄດ້ລະບຸສອງມິຕິທີ່ສຳຄັນຢ່າງຍິ່ງ ກ່ຽວກັບການປັບປຸງຄວາມສຸກຂອງຜູ້ຮຽນ. ຂະນະທີ່ການຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການ ກ່າວເຖິງຂີດຄວາມສາມາດຂອງຜູ້ຮຽນເພື່ອ

ພັດທະນາທັກສະສ່ວນບຸກຄົນ ເຊັ່ນ: ຄວາມຄິດສ້າງສັນ, ການຄິດແບບວິພາກທາງເລິກ ແລະການເບິ່ງໂລກໃນແງ່ດີ ການຮຽນຮູ້ເພື່ອອາໄສຢູ່ຮ່ວມກັນເວົ້າເຖິງການພັດທະນາທັກສະສ່ວນບຸກຄົນຂອງຜູ້ຮຽນ ເຊັ່ນ: ຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ, ການຕິດຕໍ່ພົວພັນກັນ, ການເຮັດວຽກເປັນໝູ່ຄະນະແລະຄວາມເຂົ້າໃຈບັນຫາລະອຽດອ່ອນທາງດ້ານວັດທະນະທຳ.

ການລິເລີ່ມແລະດ້ານຕ່າງໆທີ່ເປັນບຸລິມະສິດເມື່ອບໍ່ດົນມານີ້ຂອງອົງການຢູເນສໂກ ຊຶ່ງປະກອບດ້ວຍວັດທະນະທຳສັນຕິສຸກ, ການສຶກສາເພື່ອການພັດທະນາທີ່ຍືນຍົງ ລວມທັງການສຶກສາເພື່ອຄວາມເປັນພົນລະເມືອງໂລກ ອີງໃສ່ປຣັດຊະຍາທີ່ເນັ້ນຢ້ຳວ່າການສຶກສາແມ່ນຫົນທາງເຮັດໃຫ້ມີສັງຄົມສະຫງົບສຸກຫຼາຍຂຶ້ນ. ບົດລາຍງານຂອງອົງການຢູເນສໂກສຳລັບພາກພື້ນອາຊີ-ປາຊີຟິກ ກ່ຽວກັບການຮຽນຮູ້ເພື່ອອາໄສຢູ່ຮ່ວມກັນສະທ້ອນໃຫ້ເຫັນປຣັດຊະຍາອັນນີ້ ໂດຍບອກວ່າ 'ການສຶກສາແມ່ນເຄື່ອງມືສຳຄັນທີ່ສຸດ ເພື່ອໃຫ້ຄົນໜຸ່ມແລະຮຸ່ນຄົນຊຶ່ງຈະເປັນຜູ້ນຳໃນອະນາຄົດມີຄວາມຮູ້, ທັກສະແລະທັດສະນະຄະຕິ ເພື່ອແກ້ໄຂຄວາມມີອະຄະຕິຕໍ່ກັນແລະການເປັນປໍລະປັກຕໍ່ກັນ ເພື່ອສ້າງສັງຄົມທີ່ສະຫງົບສຸກ, ອົດທົນອົດກັ້ນແລະເປັນທຳຫຼາຍຂຶ້ນ' (UNESCO, 2014, p. v). ບົດລາຍງານນີ້ຍົກໃຫ້ເຫັນຄວາມສຳຄັນໃນການປະເມີນຜົນການຮຽນ ໂດຍຄຳນຶ່ງເຖິງທັກສະແລະຄວາມສາມາດ ຊຶ່ງມີຈຸດແຂງໃນການສົ່ງເສີມຄວາມສຸກ ແລະເນັ້ນຢ້ຳວ່າການສົ່ງເສີມປະເມີນທັກສະແລະຄວາມສາມາດດັ່ງກ່າວ ຈະເປັນສ່ວນສຳຄັນຢູ່ໃນຂະບວນການປະຕິຮູບນະໂຍບາຍການສຶກສາຢູ່ຕໍ່ໄປ (UNESCO, 2014). ຄວາມພະຍາຍາມດັ່ງກ່າວຖືກຍົກຂຶ້ນມາໃຫ້ເຫັນຢູ່ໃນ *ການສຶກສາເພື່ອຄວາມເປັນພົນລະເມືອງໂລກ: ຫົວຂໍ້ແລະຈຸດປະສົງຂອງການຮຽນຮູ້ຂອງ* ອົງການຢູເນສໂກ ຊຶ່ງແມ່ນຄູ່ມືແນະນຳທຳອິດກ່ຽວກັບການສິດສອນຫົວຂໍ້ນີ້ (UNESCO, 2015a). ອີງໃສ່ເອກະສານກ່ຽວກັບຈຸດຫັນປ່ຽນທີ່ອົງການຢູເນສໂກພິມອອກກ່ຽວກັບສອງເສົາຄ້ຳ ຄື: ຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການແລະຮຽນຮູ້ເພື່ອອາໄສຢູ່ຮ່ວມກັນ, *ການສຶກສາແບບຄິດກັນໃໝ່: ກ້າວໄປສູ່ສິ່ງທີ່ດີໃນລະດັບໂລກຮ່ວມກັນ?* ແລະຮຽກຮ້ອງໃຫ້ມີການປຶກສາຫາລືກັນຄືນໃໝ່ກ່ຽວກັບວິໄສທັດທີ່ມີລັກສະມະນຸດສະທຳຫຼາຍຂຶ້ນຢູ່ໃນການສຶກສາ (UNESCO, 2015b).

## ການລິເລີ່ມອື່ນໆໃນລະດັບໂລກ

ການລິເລີ່ມອື່ນໆຫຼາຍຢ່າງທັງຢູ່ໃນແລະນອກລະບົບອົງການສະຫະປະຊາຊາດ ສະແດງໃຫ້ເຫັນວ່າມີການນຳເອົາຄວາມສຸກ ແລະຄວາມຢູ່ດີມີສຸກມາເຊື່ອມປະສານກັນຫຼາຍຂຶ້ນ ໃຫ້ເປັນເກນວັດການພັດທະນາປະເທດຕ່າງໆ ໃນຄວາມພະຍາຍາມທີ່ຈະປັບປຸງເພື່ອໃຫ້ກ້າວພົ້ນຈາກຕົວຊີ້ວັດທາງດ້ານເສດຖະກິດ. ສິ່ງເຫຼົ່ານີ້ປະກອບດ້ວຍຄວາມພະຍາຍາມຫຼາຍຢ່າງ ເພື່ອຊີ້ວັດລະດັບຄວາມສຸກ ແລະຄວາມຢູ່ດີມີສຸກຢູ່ໃນປະເທດຕ່າງໆ. *ບົດລາຍງານກ່ຽວກັບຄວາມສຸກຢູ່ໃນໂລກ* ແມ່ນຕົວຢ່າງອັນໜຶ່ງ. ການພິມບົດລາຍງານປະຈຳປີເທື່ອທີໜຶ່ງ ເປັນການກະກຽມສຳລັບກອງປະຊຸມລະດັບສູງ ໃນປີ 2012 ກ່ຽວກັບຄວາມສຸກແລະສືບຕໍ່ພິມເຜີຍແຜ່ໃຫ້ເປັນສ່ວນໜຶ່ງຂອງເຄືອຂ່າຍຍັດຕິຂອງອົງການສະຫະປະຊາຊາດເພື່ອການພັດທະນາທີ່ຍືນຍົງ. ການສຳຫຼວດແລະດັດສະນີຊີ້ວັດອື່ນໆ ຊຶ່ງຊອກຫາຊ່ອງທາງຊີ້ວັດຄວາມສຸກແລະຄວາມຢູ່ດີມີສຸກນັ້ນ ປະກອບດ້ວຍດັດສະນີຊີ້ວັດຄວາມສຸກຢູ່ໃນໂລກຂອງມູນນິທິເສດຖະສາດໃໝ່, ການສຳຫຼວດຄ່ານິຍົມຢູ່ໃນໂລກ, ການສຳຫຼວດຄວາມຄິດເຫັນລະດັບໂລກຂອງ ກາລລັບ (Gallup World Pool), ການສຳຫຼວດດ້ານສັງຄົມຢູ່ໃນເອີຣົບ, ຕົວຊີ້ວັດອາລົມຂອງຄົນເອີຣົບ, ຕົວຊີ້ວັດອາລົມຂອງຄົນອາຊີ, ຕົວຊີ້ວັດອາລົມຂອງຄົນລາຕິນໂນ, ດັດສະນີຊີ້ວັດການພັດທະນາມະນຸດຂອງອົງການສະຫະປະຊາຊາດເພື່ອການພັດທະນາ, ດັດສະນີຊີ້ວັດຊີວິດທີ່ດີຂຶ້ນຂອງອົງການເພື່ອການຮ່ວມມືທາງດ້ານເສດຖະກິດແລະການພັດທະນາ (United States 2013). ໂດຍສະເພາະດັດສະນີຊີ້ວັດຊີວິດທີ່ດີຂຶ້ນ ຜູ້ຄົນຍອມຮັບວ່າ ການສຶກສາແມ່ນໜຶ່ງໃນປັດໄຈທີ່ຈຳເປັນ 11 ຢ່າງສຳລັບຄຸນນະພາບຊີວິດ (OECD, 2015b). ນອກຈາກການລິເລີ່ມນີ້ ໃນປີ 2012 ອົງການເພື່ອການຮ່ວມມືທາງດ້ານເສດຖະກິດແລະການພັດທະນາຍັງເອົາຕົວຊີ້ວັດກ່ຽວກັບຄວາມສຸກຂອງນັກຮຽນເຂົ້າເປັນສ່ວນໜຶ່ງຂອງໂຄງການປະເມີນຄວາມສາມາດດ້ານວິຊາການຂອງນັກຮຽນລະຫວ່າງປະເທດນຳອີກ. ດັ່ງນັ້ນ ໃນປີ 2018 ໂຄງການປະເມີນນັກຮຽນລະຫວ່າງປະເທດຈະເອົາແບບສອບຖາມທີ່ເວົ້າເຖິງຄວາມຢູ່ດີມີສຸກປະກອບເຂົ້ານຳ ຊຶ່ງຈະສຶກສາຄວາມເຊື່ອມໂຍງກັນລະຫວ່າງຄວາມຢູ່ດີມີສຸກໃນວົງກວ້າງຂອງຜູ້ຮຽນແລະຜົນການຮຽນຂອງເຂົາເຈົ້າເປັນເກນວັດດ້ານທັກສະທາງສັງຄົມແລະອາລົມຄວາມຮູ້ສຶກ, ສະພາບເງື່ອນໄຂຂອງການຮຽນເຊັ່ນ: ໂຮງຮຽນ, ຄອບຄົວແລະຊຸມຊົນ ລວມທັງຜົນທີ່ໄດ້ຮັບຕ່າງໆ ເຊັ່ນ: ການສຶກສາ, ຕະຫຼາດແຮງງານ, ສຸຂະພາບແລະຄວາມເພິ່ງພໍໃຈໃນຊີວິດ (OECD, 2015a).

# ຄ. ຄວາມສຸກຢູ່ໃນນະໂຍບາຍ

ບາງປະເທດຍອມຮັບເອົາຄວາມສຸກເປັນເປົ້າໝາຍຢູ່ໃນນະໂຍບາຍການພັດທະນາ ແລະການສຶກສາຂອງຕົນຢ່າງເປັນທາງການໃນລະດັບທີ່ແຕກຕ່າງກັນ. ປະເທດເຫຼົ່ານີ້ໄດ້ແກ່ພູຖານ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ສິງກະໂປແລະອານູອາຕູ. ເນື່ອງຈາກບາງປະເທດອາດຈະສະທ້ອນຄວາມສຸກອອກມາໃຫ້ເຫັນຢູ່ໃນນະໂຍບາຍຂອງຕົນ ເພາະວ່າປຣັດຊະຍານີ້ເປັນໄປຕາມວັດທະນະທຳແລະທັດສະນະທ້ອງຖິ່ນຂອງຕົນກ່ຽວກັບ 'ຄວາມສຸກ' ປະເທດອື່ນຈຶ່ງໄດ້ສ້າງນະໂຍບາຍເຫຼົ່ານີ້ຂຶ້ນມາເປັນການຮອງຮັບໂດຍກົງຕໍ່ລະດັບຄວາມເຂົ້າໃຈກ່ຽວກັບການບໍ່ມີຄວາມສຸກຢູ່ໃນປະເທດອີງໃສ່ປັດໄຈຕ່າງໆ.

### ພູຖານ

ຜູ້ຄົນທົ່ວໂລກຮູ້ຈັກລາຊະອາຈັກພູຖານຢູ່ເທືອກເຂົາຫິມາໄລ ຍ້ອນໃຫ້ຄວາມສຳຄັນກ່ຽວກັບຄວາມສຸກຢູ່ໃນວິໄສທັດໃນການພັດທະນາປະເທດຂອງຕົນ ໂດຍໃຊ້ແນວຄິດຄວາມສຸກມວນລວມຂອງຊາດເປັນວິທີວັດຄວາມກ້າວໜ້າຂອງການພັດທະນາຮອບດ້ານ ແທນທີ່ຈະໃຊ້ຕົວຊີ້ວັດທາງດ້ານເສດຖະກິດລ້ວນໆ (United Nations General Assembly, 2013). ລັດຖະທຳມະນູນຂອງພູຖານໃນປີ 2008 ສະໜັບສະໜູນການສະແຫວງຫາຄວາມສຸກມວນລວມຂອງຊາດ ໂດຍກຳນົດບົດບາດຂອງລັດຖະບານ ເພື່ອ 'ຮັບປະກັນໃຫ້ມີຄວາມສະຫງົບສຸກ, ຄວາມໝັ້ນຄົງ, ຄວາມຢູ່ດີມີສຸກແລະຄວາມສຸກຂອງປະຊາຊົນ' (Royal Government of Bhutan, 2008, p. 28). ຄວາມສຸກມວນລວມຂອງຊາດອີງໃສ່ສີ່ເສົາຄໍ້,[11] ຊຶ່ງເສີມຂະຫຍາຍເປັນເກົ້າຂະແໜງຂອງຄວາມຢູ່ດີມີສຸກ (ແຜນວາດ 6). ສິ່ງເຫຼົ່ານີ້ປະກອບດ້ວຍການສຶກສາ, ຄວາມຢູ່ດີມີສຸກດ້ານຈິດຕະສາດແລະຄວາມສາມາດໃນການຢູ່ລອດຂອງຊຸມຊົນ (GNH Centre Bhutan 2015).

11 ສີ່ເສົາຄໍ້ຂອງຄວາມສຸກມວນລວມຂອງຊາດແມ່ນການປົກຄອງທີ່ດີ, ການພັດທະນາເສດຖະກິດ-ສັງຄົມທີ່ຍືນຍົງ, ການອະນຸລັກແລະສົ່ງເສີມວັດທະນະທຳແລະການປົກປັກຮັກສາສິ່ງແວດລ້ອມ.

***ແຜນວາດ 6.*** *ເກົ້າຂະແໜງຂອງຄວາມສຸກມວນລວມຂອງຊາດ*




*Source:* Adapted from GNH Centre Bhutan, 2015.

ອີງໃສ່ຂະແໜງເຫຼົ່ານີ້ ຈຶ່ງມີການສ້າງດັດສະນີຊີ້ວັດຄວາມສຸກມວນລວມຂອງຊາດໃນປີ 2010 ຊຶ່ງປະກອບດ້ວຍ 33 ຕົວບົ່ງຊີ້. ດັດສະນີຊີ້ວັດຖືກສ້າງຂຶ້ນເພື່ອເປັນທາງເລືອກໃຫ້ແກ່ເກນວັດການພັດທະນາທີ່ເຄີຍໃຊ້ກັນມາ ແລະໃຫ້ເປັນເກນວັດຄວາມສຸກດ້ວຍຫຼາຍມິຕິ (ເປົ້າໝາຍການພັດທະນາຢູ່ພູຖານ) ຊຶ່ງເນັ້ນໃສ່ຄວາມສຸກເປັນແຕ່ລະບຸກຄົນໜ້ອຍລົງແຕ່ຈະເນັ້ນໃສ່ຄວາມສຸກຂອງຄົນເປັນກຸ່ມຫຼາຍຂຶ້ນ (Ura et. al., 2012). ຈຳນວນ 33 ຕົວບົ່ງຊີ້ນີ້ຈັດແບ່ງເປັນສີ່ປະເພດທີ່ຢູ່ໃນຂະແໜງຄວາມຢູ່ດີມີສຸກທາງດ້ານຈິດຕະສາດ (ຄວາມເພິ່ງພໍໃຈໃນຊີວິດ, ອາລົມຄວາມຮູ້ສຶກ, ອາລົມດ້ານລົບແລະຈິດວິນຍານ) ແລະມີສີ່ປະເພດຢູ່ໃນຂະແໜງການສຶກສາ (ການອ່ານອອກຂຽນເປັນ, ການເຂົ້າໂຮງຮຽນ, ຄວາມຮູ້ແລະຄ່ານິຍົມ) (Ibid).

ນະໂຍບາຍແຫ່ງຊາດຂອງພູຖານກ່ຽວກັບການໃຫ້ການສຶກສາເລື່ອງຄວາມສຸກມວນລວມຂອງຊາດ ຢ້ຳເຖິງບົດບາດພື້ນຖານຂອງການສຶກສາໃນການສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນ. ນະໂຍບາຍນີ້ມີຈຸດມຸ່ງໝາຍເພື່ອເຜີຍແຜ່ຄວາມສຸກມວນລວມ

ຂອງຊາດຢູ່ໃນຫຼັກສູດແລະການສອນດ້ວຍວິໄສທັດກ່ຽວກັບ 'ສັງຄົມທີ່ມີການສຶກສາແລະຮູ້ແຈ້ງກ່ຽວກັບ "ຄະຢາລຢອງ ກາຄິດ ເປລຊອມ" (gyalyong gakid pelzom) [ຄວາມສຸກມວນລວມຂອງຊາດ] ເພື່ອໃຫ້ເກີດສັນຕິສຸກດ້ວຍຕົວມັນເອງແລະໃຫ້ເກີດສັນຕິສຸກຢູ່ໃນໂລກ, ເສີມສ້າງແລະເຮັດໃຫ້ຍືນຍົງດ້ວຍອຸດົມການອັນສູງສົ່ງ ແລະຄວາມກະຕືລືລົ້ນແບບສ້າງສັນຂອງພົນລະເມືອງພວກເຮົາ' (Ministry of Education [Bhutan], 2012, p. 6). ນອກຈາກນັ້ນ ນະໂຍບາຍນີ້ຍັງກຳນົດໜຶ່ງໃນຈຳນວນຈຸດປະສົງຕ່າງໆວ່າ 'ເພື່ອສ້າງກຸ່ມຄົນທີ່ເປັນນັກການສຶກສາ ຜູ້ທີ່ພຽບພ້ອມດ້ວຍຄວາມສາມາດແລະມີຄວາມກະຕືລືລົ້ນສູງ ເປັນຜູ້ທຸ່ມເທແລະມອບຄວາມຮັກໃຫ້ແກ່ເດັກນ້ອຍ, ຮັກໃນການຮຽນເປັນຊີວິດຈິດໃຈ ທັງເປັນຜູ້ທີ່ເຫັນຄຸນຄ່າຂອງການສຶກສາໄດ້ຢ່າງເລິກເຊິ່ງວ່າເປັນເຄື່ອງມືດ້ານບວກໃນການໃຫ້ສິດອຳນາດແກ່ຄົນເຮົາໄດ້ເຮັດບາງສິ່ງບາງຢ່າງໄດ້' (Ibid, p. 6)

ອີງຕາມ ບລິກແນລລ໌ (Bricknell) (2012) ນະໂຍບາຍໃຫ້ການສຶກສາກ່ຽວກັບຄວາມສຸກມວນລວມຂອງຊາດໃຫ້ຄວາມສຳຄັນຕໍ່ອົງປະກອບຕ່າງໆ ເຊັ່ນ: ການຮ່ວມມືກັນລະຫວ່າງຜູ້ທີ່ມີສ່ວນຮ່ວມ, ໂດຍສະເພາະການມີສ່ວນຮ່ວມຂອງນັກຮຽນຢູ່ໃນໂຮງຮຽນ, ຄອບຄົວ, ຊຸມຊົນ, ຄວາມຍືນຍົງ, ການບໍລິການຂອງຊຸມຊົນແລະການປະຕິບັດດ້ານການສຶກສາ ຊຶ່ງເຮັດໃຫ້ນັກຮຽນສາມາດ 'ຢຸດພັກແລະຄິດໄຕ່ຕອງ' ເພື່ອເຮັດໃຫ້ຈິດໃຈຜ່ອງໃສ ເພາະວ່າ 'ການສຶກສາແມ່ນກ່ຽວກັບຫົວໃຈແລະຈິດໃຈ ກໍຄືຫົວໃຈແລະວິນຍານນັ້ນເອງ' (Bricknell, 2012, p. 59). ຊັງໂມ (Zangmo) (2014) ກໍເຊັ່ນດຽວກັນ ບອກວ່າຫຼັກສູດທີ່ເວົ້າເຖິງຄວາມສຸກມວນລວມຂອງຊາດ ໂດຍສະເພາະແລ້ວປະກອບດ້ວຍການທຳສະມາທິແລະການເພັ່ງພິນິດ ຊຶ່ງຖືວ່າມີຄວາມຈຳເປັນສຳລັບການພັດທະນາທາງອາລົມຄວາມຮູ້ສຶກຂອງນັກຮຽນ ຊຶ່ງມີຄວາມສຳຄັນເທົ່າກັບຜົນການຮຽນດ້ານວິຊາການຂອງເຂົາເຈົ້າ.

ແບບແຜນການສຶກສາຂອງພູຖານ (2014-2024) ສົ່ງເສີມວິໄສທັດດ້ານການສຶກສາສຳລັບຄວາມສຸກມວນລວມຂອງຊາດ ແລະເນັ້ນຄວາມສຳຄັນຂອງ 'ວັດທະນະທຳທາງບວກຢູ່ໃນໂຮງຮຽນ' ຊຶ່ງສາມາດເຮັດໃຫ້ຜົນການຮຽນພາກວິຊາການ ລວມທັງການພັດທະນາທີ່ຄົບຖ້ວນສົມບູນຂອງຜູ້ຮຽນ ໂດຍອີງໃສ່ຄ່ານິຍົມກ່ຽວກັບຄວາມສຸກມວນລວມຂອງຊາດ (Ministry of Education [Bhutan], 2014). ຫົວໃຈສຳຄັນຂອງການສຶກສາກ່ຽວກັບຄວາມສຸກມວນລວມຂອງຊາດ ຄືໃຫ້ຄວາມສຳຄັນຕໍ່ຄວາມຍືນຍົງ ແລະການປົກປັກຮັກສາ

ສິ່ງແວດລ້ອມ ດ້ວຍການສ້າງ 'ໂຮງຮຽນສີຂຽວ' ເປັນສ່ວນໜຶ່ງ ຢູ່ໃນພາລະກິດທາງດ້ານນະໂຍບາຍ (Ministry of Education [Bhutan], 2014). ໂຮງຮຽນສີຂຽວເພື່ອພູຖານສີຂຽວເວົ້າເຖິງຄວາມຄິດກ່ຽວກັບສະພາບແວດລ້ອມທາງທຳມະຊາດ ຊຶ່ງແມ່ນສະພາບເງື່ອນໄຂທີ່ມີລັກສະນະ 'ປະສົມປະສານຫຼາຍຢ່າງເຂົ້າກັນເພື່ອການຮຽນຮູ້' ໂດຍມີຈຸດປະສົງສອງຢ່າງ ມີທັງ 'ການປົກປັກຮັກສາແລະຮຽນຮູ້ກ່ຽວກັບສິ່ງແວດລ້ອມ' (Drakpa and Dorji, 2013, p. 314). ຄວາມຄິດກ່ຽວກັບການເຮັດໃຫ້ເປັນສີຂຽວນີ້ຖືກກຳນົດຕໍ່ໄປອີກໂດຍອົງປະກອບແປດຢ່າງຫຼືມິຕິຕ່າງໆຂອງໂຮງຮຽນສີຂຽວ (ແຜນວາດ 7) ຊຶ່ງທັງໝົດນີ້ກ່ຽວພັນກັບມາດຖານຕ່າງໆຢູ່ໃນໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ.

***ແຜນວາດ 7.*** *ແປດມິຕິຂອງ 'ໂຮງຮຽນສີຂຽວເພື່ອປະເທດພູຖານສີຂຽວ'*

| | | | |
|---|---|---|---|
| **ທຳມະຊາດຫຼືສິ່ງແວດລ້ອມສີຂຽວ**<br>ກ່ຽວຂ້ອງກັບທຳພັກໂຮງຮຽນທີ່ເປັນສີຂຽວ ໃຊ້ເປັນທັງພື້ນທີ່ການຮຽນຮູ້ພາກປະຕິບັດຕົວຈິງລວມທັງການປູກພືດຜົນ. | **ການປູກຈິດສຳນຶກທາງດ້ານສະຕິປັນຍາ**<br>ເນັ້ນໃສ່ຈິດໃຈຂອງຜູ້ຮຽນທີ່ 'ອຸດົມສົມບູນ' ແລະການຮັບເອົາຄວາມຄິດໃໝ່, ລັກສະນະສ້າງສັນ, ຄິດຄົ້ນສິ່ງໃໝ່ແລະວິພາກທາງເລິກ. | **ການປູກຈິດສຳນຶກທາງດ້ານວິຊາການ**<br>ກ່ຽວຂ້ອງກັບຄວາມຮູ້ຢ່າງເລິກເຊິ່ງເຖິງຖອງຜ່ານຫຼາຍເຊັ່ນ ຄົນໃນການສ້າງການຮຽນຮູ້ວິຊາຄະນິດສາດ, ປະຫວັດສາດ ແລະອື່ນໆ. | **ການປູກຈິດສຳນຶກທາງດ້ານສັງຄົມ**<br>ເນັ້ນໃສ່ການເປັນເພື່ອນມິດກັນ, ຄວາມສຳພັນກັນ, ຄວາມເຂົ້າໃຈກັນ, ການແບ່ງປັນ, ການພົບປະສັງສັນລະຫວ່າງໂຮງຮຽນ, ຄອບຄົວແລະຊຸມຊົນໃນວົງກວ້າງແມ່ນພື້ນຖານສຳລັບ 'ການຮຽນຮູ້ເພື່ອອາໄສຢູ່ຮ່ວມກັນແລະການຮຽນຮູ້ຮ່ວມກັນ'. |
| **ການປູກຈິດສຳນຶກທາງດ້ານວັດທະນະທຳ**<br>ກ່ຽວຂ້ອງກັບການສະແດງອອກແລະເຮັດບຸນສົນກິນທານທາງສາດສະໜາ, ປຣັດຊະຍາ, ສິລະປະ, ພາສາແລະສະຖາປະນິກຢູ່ພາຍໃນໂຮງຮຽນ. | **ການປູກຈິດສຳນຶກທາງດ້ານຈິດວິນຍານ**<br>ເນັ້ນໃສ່ການດຳລົງຢູ່ຂອງສິ່ງທີ່ຍິ່ງໃຫຍ່ຫຼືສິ່ງປະກົດຢູ່ ຖືວ່າເປັນສ່ວນໜຶ່ງທາງດ້ານປະສົບການຂອງທັງນັກຮຽນແລະຄູ. | **ການປູກຈິດສຳນຶກທາງດ້ານສຸນທະລີ**<br>ເວົ້າເຖິງການເບິ່ງໂລກໃນແງ່ດີລວມທັງຄວາມສາມາດໃນການຊຶມຊັບຄວາມງົດງາມ ອີງໃສ່ຄຸນຄ່າຂອງຄວາມບໍລິສຸດຜຸດຜ່ອງແລະຄວາມເປັນຈິງ. | **ການປູກຝັງດ້ານຈາລິຍະທຳ**<br>ກ່ຽວພັນກັບການສອນແລະການຮຽນ ຖືວ່າເປັນຂະບວນການຊຶ່ງເຮັດໃຫ້ຜູ້ຮຽນສາມາດຈຳແນກຄວາມແຕກຕ່າງລະຫວ່າງສິ່ງຖືກສິ່ງຜິດ ຫຼືຄວາມດີຄວາມຊົ່ວ. |

*Source:* Adapted from Drakpa and Dorji, 2013

ແປດມິຕິນີ້ສະທ້ອນໃຫ້ເຫັນປຣັດຊະຍາທີ່ຢູ່ເບື້ອງຫຼັງຄວາມຄິດໂຮງຮຽນໃຫ້ຄວາມສຸກແລະມາດຖານຕ່າງໆທີ່ກ່າວເຖິງຢູ່ໃນໂຄງປະກອບໂຮງຮຽນໃຫ້ຄວາມສຸກ. ເນື່ອງຈາກເປັນສ່ວນໜຶ່ງຂອງແນວຄິດກ່ຽວກັບ 'ໂຮງຮຽນສີຂຽວເພື່ອປະເທດພູຖານສີຂຽວ' ມິຕິເຫຼົ່ານີ້ຈຶ່ງໃຫ້ຕົວຢ່າງວ່າ ມີການຄິດນະໂຍບາຍກ່ຽວກັບການສຶກສາແນວໃດໃນລະດັບຊາດ ຈຶ່ງສາມາດເຊື່ອມໂຍງແລະນຳໄປໃຊ້ໂດຍກົງໄດ້ໃນລະດັບໂຮງຮຽນ.

## ຍີ່ປຸ່ນ

ໃນປີ 2010 ຫ້ອງການຂອງຄະນະລັດຖະບານຍີ່ປຸ່ນໄດ້ຕັ້ງຄະນະກຳມາທິການກ່ຽວກັບການວັດຄວາມຢູ່ດີມີສຸກ ແລະໃນປີ 2012 ໄດ້ທຳການສຳຫຼວດຄັ້ງທຳອິດກ່ຽວກັບຄຸນນະພາບຊີວິດຂອງປະຊາຊົນ (United Nations General Assemply, 2013). ໃນຂະນະທີ່ດັດສະນີຊີ້ວັດຊີວິດທີ່ດີຂຶ້ນ ຊຶ່ງສົມທຽບກັບຄວາມຢູ່ດີມີສຸກຂອງປະຊາຊົນໃນບັນດາປະເທດທີ່ເປັນສະມາຊິກຂອງອົງການ ເພື່ອການຮ່ວມມືທາງດ້ານເສດຖະກິດແລະການພັດທະນາສະແດງໃຫ້ເຫັນວ່າ ປະເທດຍີ່ປຸ່ນເຮັດໄດ້ດີກວ່າປະເທດທີ່ເປັນສະມາຊິກຂອງອົງການນີ້ ທີ່ມີລະດັບປານກາງທາງດ້ານການສຶກສາ, ລາຍໄດ້, ອາຊີບແລະຄວາມໝັ້ນຄົງໃນຊີວິດ. ອັນນີ້ສະແດງໃຫ້ເຫັນວ່າ ປະເທດຍີ່ປຸ່ນປະຕິບັດໄດ້ຕ່ຳກວ່າລະດັບປານກາງທາງດ້ານຄວາມຢູ່ດີມີສຸກແບບອັດຕະວິໄສແລະປັດໄຈທີ່ກ່ຽວຂ້ອງ ເຊັ່ນ: ຄວາມສົມດຸນກັນລະຫວ່າງການງານກັບຊີວິດ (OECD, 2015c).

ໃນຊຸມປີຜ່ານມາ ປະເທດຍີ່ປຸ່ນມີຄວາມວິຕົກກັງວົນຫຼາຍຂຶ້ນໃນລະດັບຊາດກ່ຽວກັບຄວາມສຸກ ແລະຄວາມຢູ່ດີມີສຸກຂອງປະຊາຊົນ ຊຶ່ງສ່ວນໜຶ່ງອາດເປັນຍ້ອນບັນຫາສຸຂະພາບຈິດຊຶ່ງມັກເກີດຂຶ້ນໃນອັດຕາທີ່ສູງ ແລະລະດັບຄວາມທຸກໃຈຂອງຜູ້ຄົນທີ່ມີໃນລະດັບສູງຢູ່ພາຍໃນປະເທດ. ອີງຕາມການສຳຫຼວດການດຳລົງຊີວິດຂອງປະຊາຊົນໃນລະດັບຊາດປີ 2013 ນັ້ນ 48 ເປີເຊັນຂອງຜູ້ຕອບຄຳຖາມທີ່ມີອາຍຸເກີນ 12 ປີ ບອກວ່າ ມີຄວາມທຸກໃຈຫຼືມີຄວາມວິຕົກກັງວົນກ່ຽວກັບຊີວິດປະຈຳວັນຂອງພວກຕົນ (Ministry of Health, Labour and Welfare [Japan] 2013). ໃນການສຳຫຼວດທີ່ເຮັດໃນປີ 2010 ຜູ້ຕອບຄຳຖາມໃນເກນອາຍຸ 12 ປີ ຫາ 19 ປີ ລາຍງານວ່າສາເຫດຕົ້ນຕໍຂອງຄວາມທຸກໃຈກ່ຽວຂ້ອງກັບຜົນການຮຽນແລະຜົນການສອບເສັງດ້ານວິຊາການຕ່າງໆ (Ministry of Health, Labour and Welfare [Japan], 2010). ຄວາມທຸກໃຈອາດເປັນຜົນເນື່ອງມາຈາກລະດັບສູງຂອງການທະເລາະວິວາດກັນ ຊຶ່ງຂໍ້ມູນປີ 2013 ບົ່ງບອກວ່າ 48.4 ເປີເຊັນ ຂອງໂຮງຮຽນປະຖົມ ແລະ 65.5 ເປີເຊັນຂອງໂຮງຮຽນມັດທະຍົມຕົ້ນ ໄດ້ລາຍງານກໍລະນີການທະເລາະວິວາດທີ່ເກີດຂຶ້ນໃນປີນັ້ນ (Ministry of Internal Affairs and Communications [Japan], 2014). ຄວາມທຸກໃຈທີ່ມີລະດັບສູງນີ້ສະທ້ອນອອກມາໃຫ້ເຫັນຢູ່ໃນອັດຕາການຂ້າຕົວຕາຍຂອງຄົນໜຸ່ມຮຸ່ນໃໝ່ຂອງຍີ່ປຸ່ນ ຊຶ່ງມີອັດຕາສູງທີ່ສຸດໃນໂລກ (WHO, 2015). ໃນປີ 2011 ການຂ້າຕົວຕາຍມີ 10.2 ເປີເຊັນ ໃນຈຳນວນນີ້ເປັນຜູ້ທີ່ບັນລຸນິຕິພາວະຊຶ່ງມີອາຍຸ

15 ແລະ 19 ປີ ຊຶ່ງມີສະຖິຕິການຂ້າຕົວຕາຍຢູ່ໃນສາມອັນດັບຕົ້ນໆຂອງຜູ້ທີ່ຂ້າຕົວຕາຍຫຼາຍທີ່ສຸດໃນຈໍານວນໝົດທຸກກຸ່ມອາຍຸຢູ່ໃນປະເທດ (Japan Cabinet Office, 2013).

ນະໂຍບາຍດ້ານການສຶກສາຂອງຍີ່ປຸ່ນສະທ້ອນໃຫ້ເຫັນເຖິງຄວາມວິຕົກກັງວົນຊຶ່ງມີເພີ່ມຂຶ້ນກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກຂອງປະຊາຊົນ. ຕົວຢ່າງກົດໝາຍກ່ຽວກັບການສຶກສາຢູ່ໃນໂຮງຮຽນ ປີ 2007 ຖືວ່າເປັນການຫັນປ່ຽນຄັ້ງໃຫຍ່ດ້ານທິດທາງການສຶກສາໃນປະເທດຍີ່ປຸ່ນ ຊຶ່ງເນັ້ນໃສ່ຄວາມສໍາຄັນໃນການສົ່ງເສີມທັດສະນະຄະຕິດ້ານບວກເພື່ອການຮຽນຮູ້, ເສີມຂະຫຍາຍເອກະລັກສະເພາະບຸກຄົນ, ພັດທະນາຄວາມຮູ້ສຶກໃນຄວາມເຫັນອົກເຫັນໃຈຄົນອື່ນ, ການເພິ່ງຕົນເອງແລະສົ່ງເສີມຄວາມເປັນພົນລະເມືອງໂລກໃນຂະນະດຽວກັນ ກໍອະນຸລັກຮັກສາວັດທະນະທໍາ ແລະປະເພນີທ້ອງຖິ່ນເຊັ່ນດຽວກັນ (MEXT, 2011). ນອກຈາກນັ້ນ ທິດຊີ້ນໍາກ່ຽວກັບການພັດທະນາຫຼັກສູດຂອງຊາດຍັງໄດ້ສົ່ງເສີມຫຼັກການກ່ຽວກັບ 'ຄວາມປິຕິຍິນດີໃນການໃຊ້ຊີວິດ' ຊຶ່ງໃຫ້ຄວາມສໍາຄັນຕໍ່ການພັດທະນາທີ່ມີຄວາມສົມດຸນກັນເປັນຢ່າງດີ ຄື 'ຈິ -ໂຕະກຸ - ໄຕ' (Chi-Toku-Tai) ໝາຍເຖິງຄວາມເປັນເລີດທາງວິຊາການ, ບຸກຄະລິກຮອບດ້ານແລະສຸຂະພາບທາງດ້ານຮ່າງກາຍແລະຈິດໃຈ (MEXT, n.d.).

ເທດສະບານ ອາກິຕະ ແລະ ຟູກຸອິ (Akita and Fukui) ໄດ້ໃຫ້ຄວາມສໍາຄັນເລື່ອງແນວຄິດກ່ຽວກັບຄວາມສຸກຢູ່ໃນນະໂຍບາຍແລະແຜນການຍ່ອຍໃນລະດັບຊາດຂອງຕົນ. 'ແຜນຍຸດທະສາດເພື່ອສອນໃຫ້ນັກຮຽນສາມາດຕັ້ງຄໍາຖາມໄດ້ສາມລະດັບ' ຕົວຢ່າງ: ຫາຊ່ອງທາງເຮັດໃຫ້ນັກຮຽນສາມາດບັນລຸເປົ້າໝາຍການຮຽນຮູ້ດ້ວຍການສ້າງຄວາມສໍາພັນກັນ, ແກ້ໄຂບັນຫາຮ່ວມກັນ, ການພັດທະນາຄວາມສໍາພັນບົນພື້ນຖານການໃຫ້ຄວາມເຄົາລົບຊຶ່ງກັນແລະກັນ ຜ່ານການເຮັດກິດຈະກໍາຕ່າງໆ, ແລກປ່ຽນປະສົບການແລະມີປະຕິສໍາພັນກັບຜູ້ຄົນທີ່ມີພູມຫຼັງທີ່ຫຼາກຫຼາຍ (UNESCO, 2014). ແຜນການພື້ນຖານສໍາລັບການສຶກສາ ໄລຍະຫ້າປີຂອງເທດສະບານ ຟູກຸອິ ກໍມີລັກສະນະເຊັ່ນດຽວກັນຄື ສົ່ງເສີມໃຫ້ການຊ່ວຍເຫຼືອເດັກນ້ອຍທາງດ້ານຮ່າງກາຍແລະຈິດຕະສາດ ເພື່ອຮັບປະກັນເຮັດໃຫ້ໂຮງຮຽນປອດຈາກການທະເລາະວິວາດກັນແລະເດັກນ້ອຍມີໂພຊະນາການທີ່ດີ. ແຜນການນີ້ຍັງມີຈຸດມຸ່ງໝາຍເພື່ອສ້າງວັດທະນະທໍາແຫ່ງຄວາມໄວ້ເນື້ອເຊື່ອໃຈກັນຢູ່ໃນໂຮງຮຽນນໍາອີກ ຊຶ່ງພົວພັນເຖິງຄອບຄົວແລະຊຸມຊົນໃນທ້ອງຖິ່ນ ທັງຊຸກຍູ້ໃຫ້ມີສ່ວນຮ່ວມດ້ານກິລາ

ແລະການຫຼິ້ນຕ່າງໆຢູ່ນອກຫ້ອງຮຽນ (Education Bureau of Fukui Prefecture, 2011).

ອາກິຕະ ແລະ ຟູກຸອິ ຢູ່ໃນຈຳນວນເທດສະບານຕ່າງໆໃນຍີ່ປຸ່ນທີ່ຜົນການສອບເສັງຂອງນັກຮຽນຢູ່ໃນເກນສູງທີ່ສຸດ ຊຶ່ງມີການສອບເສັງທັງດ້ານຄວາມຮູ້ດ້ານວິຊາການແລະການນຳໃຊ້ຄວາມຮູ້ເຂົ້າໃນຊີວິດປະຈຳວັນ (National Institute for Educational Policy Research, 2015). ໂດຍສະເພາະ ໃນປີ 2015 ຈາກການປະເມີນການນຳໃຊ້ຄວາມຮູ້ຂອງນັກຮຽນເທດສະບານທັງສອງວ່າ ມີຜົນອອກມາດີໃນຫຼາຍລະດັບການສຶກສາ ໂດຍໃນຊັ້ນປະຖົມ ອາກິຕະ ແລະ ຟູກຸອິ ໄດ້ຄອງອັນດັບທີໜຶ່ງແລະທີສາມ ໄດ້ທີໜຶ່ງແລະທີສອງສຳລັບຊັ້ນມັດທະຍົມຕົ້ນຕາມອັນດັບກັນ. ສາມາດເວົ້າໄດ້ວ່າ ເທດສະບານເຫຼົ່ານີ້ໄດ້ໃຫ້ຄວາມສຳຄັນເລື່ອງຄວາມສຸກ ແລະຄວາມຢູ່ດີມີສຸກຫຼາຍກວ່າຜົນການຮຽນດ້ານວິຊາການ ຊຶ່ງອາດອະທິບາຍເຖິງຄວາມສຳເລັດຂອງນັກຮຽນໄດ້ຢູ່ໃນການສອບເສັງເຫຼົ່ານີ້. ອັນນີ້ໝາຍຄວາມວ່າ ຜົນການຮຽນສູງທາງດ້ານວິຊາການ ສາມາດເປັນໜຶ່ງໃນຜົນປະໂຫຍດຂອງການໃຫ້ຄວາມສຳຄັນທາງດ້ານການສຶກສາທີ່ບໍ່ແມ່ນວິຊາການ.

## ສາທາລະນະລັດເກົາຫຼີ

ສາທາລະນະລັດເກົາຫຼີຜະເຊີນກັບສິ່ງທ້າທາຍຫຼາຍຢ່າງທາງດ້ານສັງຄົມ ທີ່ສະທ້ອນອອກມາທາງອັດຕາການຂ້າຕົວຕາຍຢູ່ໃນປະເທດນີ້ ໂດຍເປັນອັນດັບສອງໃນອັດຕາສູງທີ່ສຸດໃນໂລກ (OECD, 2015d). ອີງຕາມດັດສະນີຊີ້ວັດຊີວິດທີ່ດີຂຶ້ນຂອງອົງການຮ່ວມມືດ້ານເສດຖະກິດແລະການພັດທະນານັ້ນ ໃນປີ 2015 ຊາວເກົາຫຼີມີການຊ່ວຍເຫຼືອດ້ານເຄືອຂ່າຍທາງສັງຄົມໃນລະດັບຕ່ຳສຸດໃນບັນດາປະເທດຂອງອົງການຮ່ວມມືກັນດ້ານເສດຖະກິດແລະການພັດທະນາ ຊຶ່ງຄວາມເພິ່ງພໍໃຈໃນຊີວິດກໍຍັງຢູ່ຕ່ຳກວ່າອັດຕາສະເລ່ຍຂອງປະເທດໃນອົງການນີ້ (OECD, 2015e). ເຖິງວ່າເກົາຫຼີຈັດຢູ່ໃນອັນດັບສູງທາງດ້ານສາທາ, ຜົນຂອງການສຶກສາ, ລາຍໄດ້ແລະຄວາມຮັ່ງມີ ເມື່ອທຽບໃສ່ປະເທດອື່ນໆຂອງອົງການຮ່ວມມືດ້ານເສດຖະກິດແລະການພັດທະນາກໍຕາມ ແຕ່ຕົວຊີ້ວັດກ່ຽວກັບຄວາມຢູ່ດີມີສຸກຂອງເດັກນ້ອຍສະແດງໃຫ້ເຫັນວ່າ ປະເທດນີ້ຈັດຢູ່ໃນສາມອັນດັບສຸດທ້າຍຂອງປະເທດເຫຼົ່ານັ້ນເມື່ອເວົ້າທາງດ້ານ 'ສະພາບແວດລ້ອມທາງສັງຄົມແລະຄອບຄົວ' ໂດຍສະເພາະເມື່ອເວົ້າທາງດ້ານ 'ຄວາມຮູ້ສຶກຜູກພັນ' ແລະ 'ການໃຊ້ເວລາຢູ່ກັບພໍ່ແມ່' (Ibid).

ເຖິງຈະເປັນໜຶ່ງໃນບັນດາປະເທດທີ່ມີຜົນການຮຽນສູງທີ່ສຸດຢູ່ໃນໂຄງການປະເມີນຄວາມສາມາດດ້ານວິຊາການຂອງນັກຮຽນລະຫວ່າງປະເທດກໍຕາມ ຜົນທີ່ອອກມາໃນປີ 2012 ຍັງຊີ້ໃຫ້ເຫັນວ່າ ເດັກນ້ອຍເກົາຫຼີອາຍຸ 15 ປີ ລາຍງານວ່າ ເຂົາເຈົ້າເປັນພວກທີ່ບໍ່ມີຄວາມສຸກທີ່ສຸດໃນບັນດາປະເທດທີ່ເຂົ້າຮ່ວມທັງໝົດ (OECD, 2013, p. 24). ການທີ່ເດັກນ້ອຍເກົາຫຼີບໍ່ມີຄວາມສຸກນີ້ ເປັນຍ້ອນລະບົບການສຶກສາ ໂດຍສະເພາະເຈາະຈົງແລ້ວເປັນຍ້ອນຄວາມກົດດັນທາງດ້ານຈິດໃຈ ເພື່ອຢາກເກັ່ງທາງດ້ານວິຊາການ. ການສຶກສາຄົ້ນຄວ້າໃນປີ 2013 ພົບວ່າສາເຫດສອງຢ່າງທີ່ເຮັດໃຫ້ນັກຮຽນອາຍຸລະຫວ່າງ 9 ຫາ 11 ປີ ມີຄວາມທຸກໃຈຫຼາຍທີ່ສຸດແມ່ນການສອບເສັງແລະວຽກບ້ານນັ້ນເອງ ຕໍ່ມາກໍແມ່ນຄວາມຫຍຸ້ງຍາກກ່ຽວກັບຄວາມສຳພັນກັບພໍ່ແມ່ ອັນເປັນຜົນມາຈາກຄະແນນຢູ່ໃນໂຮງຮຽນຂອງເຂົາເຈົ້າ (Korea Institution for Health and Social Affairs, 2013). ຄວາມກົດດັນທາງດ້ານຈິດໃຈນີ້ອາດອະທິບາຍໄດ້ວ່າ ເປັນຫຍັງນັກຮຽນເກົາຫຼີສ່ວນຫຼາຍຈຶ່ງພາກັນຮຽນພາກພິເສດເປັນການສ່ວນຕົວ. ຈາກສະຖິຕິຂອງ ປີ 2013 ບົ່ງບອກວ່າ 70.5 ຂອງນັກຮຽນ (ໂຮງຮຽນຊັ້ນປະຖົມ, ຊັ້ນກາງແລະຊັ້ນສູງ) ໄດ້ຮັບການສຶກສາພາກພິເສດເປັນການສ່ວນຕົວ (Hankuk Bang Jeonghwan Foundation 2013).

ການໃຊ້ຄວາມຮຸນແຮງແລະການທະເລາະວິວາດກັນຊຶ່ງມີຫຼາຍຂຶ້ນຢູ່ໃນໂຮງຮຽນ ກາຍເປັນເລື່ອງວິຕົກກັງວົນທີ່ກຳລັງເພີ່ມຂຶ້ນຢູ່ໃນສາທາລະນະລັດເກົາຫຼີ ແລະປະກົດວ່າສິ່ງເຫຼົ່ານີ້ອາດເຊື່ອມໂຍງກັບຄວາມກົດດັນທາງດ້ານຈິດໃຈຂອງຜູ້ຮຽນ ເພື່ອຢາກປະສົບຜົນສຳເລັດທາງດ້ານວິຊາການ. ການວິເຄາະສະຖານະການຊຶ່ງເຮັດຂຶ້ນໃນປີ 2013 ພົບວ່າ 32.2 ເປີເຊັນຂອງນັກຮຽນຢູ່ໃນເກນອາຍຸລະຫວ່າງ 9 ຫາ 17 ປີ ບອກວ່າພວກຕົນຖືກລັງແກ ສ່ວນອີກ 21.5 ເປີເຊັນ ບອກວ່າຕົນເອງທະເລາະວິວາດກັບນັກຮຽນຄົນອື່ນ. ອີງຕາມ ເບອີ ຈູມີ (Bae Joo-mi) ຜູ້ຊ່ຽວຊານຈາກສະຖາບັນໃຫ້ຄຳປຶກສາແກ່ຊາວໜຸ່ມເກົາຫຼີ ການແຂ່ງຂັນໄດ້ຕື່ມເຊື້ອໄຟໃຫ້ແກ່ການທະເລາະວິວາດກັນ ຍ້ອນຢາກປະສົບຄວາມສຳເລັດຢູ່ໃນສັງຄົມແຕ່ກໍຍັງເກີດຂຶ້ນຢູ່ໃນໂຮງຮຽນນຳອີກ ທັງເປັນຍ້ອນບໍ່ເຫັນຄວາມສຳຄັນດ້ານທັກສະທີ່ບໍ່ແມ່ນວິຊາການ ຊຶ່ງກະຕຸ້ນໃຫ້ເດັກນ້ອຍໄດ້ພັດທະນາ 'ບຸກຄະລິກສ່ວນຕົວທາງດ້ານສຸຂະພາບແລະຈາລິຍະທຳ' ທັງຢູ່ໃນໂຮງຮຽນແລະຢູ່ທີ່ເຮືອນ (Lee, 2012). ການວິເຄາະກ່ຽວກັບຄວາມຫວັງແລະຄວາມເປັນຈິງທີ່ນັກຮຽນເຄີຍໄດ້ສຳຜັດໃນຊີວິດ ສະແດງໃຫ້ເຫັນເຖິງຄວາມແຕກຕ່າງກັນຢ່າງສິ້ນເຊີງລະຫວ່າງສອງຢ່າງນີ້ ດັ່ງທີ່ສະແດງໃຫ້ເຫັນຢູ່ແຜນວາດ 8.

ຍົກຕົວຢ່າງ ເຖິງວ່ານັກຮຽນຫຼາຍກວ່າ 60 ເປີເຊັນ ບອກວ່າເຂົາເຈົ້າຫວັງຈະໄດ້ພັກຜ່ອນຢູ່ເຮືອນ ພາຍຫຼັງທີ່ຮຽນຢູ່ໂຮງຮຽນ ແຕ່ຕາມຄວາມເປັນຈິງແລ້ວ ມີນັກຮຽນໜ້ອຍກວ່າ 6 ເປີເຊັນ ທີ່ລາຍງານວ່າໄດ້ເຮັດແບບນັ້ນ. ລັກສະນະດຽວກັນນີ້ ຂະນະທີ່ພວກເດັກນ້ອຍເກືອບເຄິ່ງໜຶ່ງບອກວ່າ ເຂົາເຈົ້າຫວັງຈະໄດ້ຫຼິ້ນກັບໝູ່ເພື່ອນຫຼັງຈາກເລີກໂຮງຮຽນແລ້ວ ແຕ່ຄວາມຈິງມີພຽງເດັກນ້ອຍປະມານ 23 ເປີເຊັນທີ່ເຮັດແນວນັ້ນ (Korea Institution for Health and Social Affairs, 2013).

***ແຜນວາດ 8.*** *ຄວາມຫວັງແລະຄວາມເປັນຈິງທີ່ເດັກນ້ອຍເກົາຫຼີເຮັດກິດຈະກຳຫຼັງຈາກເລີກໂຮງຮຽນ (ຄິດໄລ່ເປັນເປີເຊັນ).*




*Source:* Adapted from Korea institution for Health and Social Affairs, 2013

ຍ້ອນຮັບຮູ້ສັນຍານທີ່ໜ້າຕົກໃຈກ່ຽວກັບການບໍ່ມີຄວາມສຸກຂອງນັກຮຽນເກົາຫຼີ ລັດຖະບານສາທາລະນະລັດເກົາຫຼີຈຶ່ງໄດ້ວາງນະໂຍບາຍຢ່າງຊັດເຈນກ່ຽວກັບການສົ່ງເສີມຄວາມ

ສຸກຢູ່ໃນການສຶກສາ. ນັບຕັ້ງແຕ່ການສາບານຕົວເຂົ້າຮັບຕໍາແໜ່ງໃນປີ 2013 ຂອງປະທານາທິບໍດີ ປັກ ກຶນເຮ (Park Geun-hye) ລັດຖະບານໄດ້ສົ່ງເສີມແນວຄິດເລື່ອງ 'ການສຶກສາທີ່ໃຫ້ຄວາມສຸກ' ໂດຍໃຊ້ຄໍາຂວັນ 'ການສຶກສາທີ່ໃຫ້ຄວາມສຸກແກ່ທຸກຄົນແລະພອນສະຫວັນທີ່ສ້າງສັນທີ່ຫຼອມອະນາຄົດ' ຍ້ອນຄວາມຄິດນີ້ເອງ ຈຶ່ງມີການລິເລີ່ມນະໂຍບາຍ ແລະແຜນການສຶກສາລະດັບຊາດປະຈໍາປີ (Ministry of Education [Republic of Korea], 2014). ດັ່ງນັ້ນ ນະໂຍບາຍການສຶກສາລະດັບຊາດ ໃນປີ 2013 ຈຶ່ງບັນຈຸເອົາຈຸດປະສົງສໍາຄັນທີ່ສຸດ ຄືການສຶກສາຕ້ອງຊ່ວຍສົ່ງເສີມຄວາມໄຝ່ຝັນແລະພອນສະຫວັນຂອງນັກຮຽນ (Ministry of Education [Republic of Korea], 2013a). ອີງໃສ່ນະໂຍບາຍນີ້ ລັດຖະບານໄດ້ເລີ່ມເຮັດການຊີ້ວັດ ເພື່ອແກ້ໄຂບັນຫາການບໍ່ມີຄວາມສຸກຂອງນັກຮຽນ ເຊັ່ນ: ແນະນໍາໃຫ້ມີກາຍະສຶກສາແລະຄວາມພະຍາຍາມຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມທຸກໃຈຂອງນັກຮຽນລົງ ຊຶ່ງກ່ຽວຂ້ອງກັບການສອບເສັງເຂົ້າມະຫາວິທະຍາໄລ (ກ່ອງຂໍ້ຄວາມ 2).

***ກ່ອງຂໍ້ຄວາມ 2.*** *ແຜນການແລະນະໂຍບາຍດ້ານການສຶກສາຢູ່ສາທາລະນະລັດເກົາຫຼີ.*

- ເນັ້ນໃສ່ຫຼັກສູດທີ່ສົ່ງເສີມຄວາມໄຝ່ຝັນແລະພອນສະຫວັນຂອງນັກຮຽນ (ໄຕມາດທີ່ບໍ່ມີການສອບເສັງ, ການສຶກສາເພື່ອສ້າງບຸກຄະລິກ, ປຶ້ມຫຼັກສູດທີ່ແນະນໍາກ່ຽວກັບການສອບເສັງ).[12]
- ບໍລິການດ້ານໃຫ້ຄໍາປຶກສາໂດຍເອົານັກຮຽນເປັນໃຈກາງ, ດ້ານວິຊາການແລະດ້ານອາຊີບ ທີ່ເໝາະສົມກັບແຕ່ລະບຸກຄົນ.
- ເພີ່ມທະວີວິຊາກາຍະສຶກສາຢູ່ທີ່ໂຮງຮຽນ.
- ສ້າງບັນຍາກາດທີ່ເອື້ອອໍານວຍຕໍ່ການເຮັດວຽກເພື່ອໃຫ້ນາຍຄູມີໃຈຈົດຈໍ່ໃສ່ການສິດສອນ.
- ເຮັດໃຫ້ການສອບເສັງເຂົ້າວິທະຍາໄລງ່າຍຂຶ້ນເພື່ອຫຼຸດຜ່ອນພາລະດ້ານການໃຊ້ຈ່າຍແລະຄວາມກົດດັນທາງດ້ານຈິດຕະສາດຍ້ອນການສອບເສັງເຫຼົ່ານີ້.

*Source:* Ministry of Education of the Republic of Korea, 2013a, p3.

12 ອັນນີ້ອີງຕາມຂໍ້ສັນນິຖານວ່າ ການສອບເສັງທີ່ເນັ້ນໃສ່ປຶ້ມຫຼັກສູດຢ່າງສົມເຊີງຈະຫຼຸດຜ່ອນຄວາມຕ້ອງການຂອງນັກຮຽນທີ່ຢາກເຂົ້າຮຽນພາກພິເສດເປັນການສ່ວນຕົວ.

ສິ່ງນະໂຍບາຍຫຼັກດ້ານການສຶກສາຢູ່ໃນແຜນແມ່ບົດກ່ຽວກັບການສຶກສາສໍາລັບປີ 2014 ຂອງກະຊວງສຶກສາສາມາດກໍານົດຊ່ອງທາງ ເພື່ອປັບປຸງຄວາມສຸກຢູ່ໃນການສຶກສາດ້ວຍ: 1) ການໃຫ້ມີລະບົບໄຕມາດທີ່ບໍ່ມີການສອບເສັງ ຊຶ່ງແທນທີ່ຈະມີການສອບເສັງ ນັກຮຽນສາມາດເບີກບານມ່ວນຊື່ນກັບການເຮັດກິດຈະກໍາຮຽນຮູ້ໂດຍຜ່ານປະສົບການແລະຈັດໃຫ້ມີ 'ອາທິດເພື່ອຄົ້ນຫາອາຊີບທີ່ນັກຮຽນສົນໃຈ'; 2) ໃຫ້ມີຫຼັກສູດທີ່ປະສົມປະສານສິລະປະສາດເຂົ້າກັບວິທະຍາສາດ ເພື່ອບົ່ມເພາະພອນສະຫວັນທີ່ສ້າງສັນ; 3) ການເນັ້ນໃສ່ຄວາມເປັນມະນຸດ, ສິລະປະ, ກິລາແລະການສ້າງບຸກຄະລິກດ້ວຍການເຮັດກິດຈະກໍາແລະສະໂມສອນ ແລະ 4) ມີນະໂຍບາຍເຮັດໃຫ້ໂຮງຮຽນປອດໄພແລະປາສະຈາກການໃຊ້ຄວາມຮຸນແຮງ ຊຶ່ງເປັນຊ່ອງທາງເຮັດໃຫ້ນັກຮຽນມີສຸຂະພາບຈິດທີ່ດີ ໂດຍຈັດໃຫ້ມີລະບົບໃຫ້ຄໍາປຶກສາຢ່າງບໍ່ເປີດເຜີຍ, ການສຶກສາເປັນການສ່ວນຕົວເພື່ອປ້ອງກັນການກໍ່ກວນທາງໂລກຊາຍເບີແລະຕິດຕາມນັກຮຽນຜູ້ມີຄວາມສ່ຽງທີ່ຈະມີຄວາມກົດດັນທາງດ້ານຈິດໃຈຕັ້ງແຕ່ຕອນເລີ່ມຕົ້ນ (Ministry of Education [Republic of Korea], 2014).

ລະບົບໄຕມາດທີ່ບໍ່ມີການສອບເສັງນີ້ໄດ້ຮັບຄວາມສົນໃຈເປັນພິເສດ. ອີງຕາມກະຊວງສຶກສາ ເຫດຜົນໃນການລິເລີ່ມອັນນີ້ແມ່ນເພື່ອສ້າງບຸກຄະລິກຂອງຜູ້ຮຽນແລະປູກຝັງຄວາມຄິດສ້າງສັນ, ສົ່ງເສີມຄວາມສຸກແລະຫຼຸດຜ່ອນຄວາມທຸກໃຈຂອງຜູ້ຮຽນ, ໃຫ້ໂອກາດແກ່ຜູ້ຮຽນໄດ້ພັດທະນາພອນສະຫວັນແລະສ້າງຄວາມຝັນເພື່ອອະນາຄົດຂອງຕົນ (Ministry of Education [Republic of Korea], 2013b). ຕໍ່ບັນຫາສຸດທ້າຍນີ້ ຂໍ້ມູນຂອງກະຊວງສຶກສາ (2013b) ສະແດງໃຫ້ເຫັນວ່າ ນັກຮຽນຊັ້ນປະຖົມ 11.2 ເປີເຊັນ, ຊັ້ນກາງ 34.4 ເປີເຊັນແລະຊັ້ນສູງ 32.3 ເປີເຊັນ ບອກວ່າພວກຕົນ 'ບໍ່ມີຄວາມຝັນສໍາລັບອະນາຄົດເລີຍ'. ການທີ່ເປັນແບບນີ້ເຂົ້າໃຈກັນວ່າເປັນຍ້ອນເຂົາເຈົ້າມີເວລາໜ້ອຍເກີນໄປໃນການຄົ້ນຫາພອນສະຫວັນແລະຄວາມສົນໃຈຂອງຕົນ ເພື່ອສະທ້ອນອອກມາຢູ່ໃນຄວາມຝັນສໍາລັບອະນາຄົດນັ້ນເອງ. ນັກວິພາກຄົນສໍາຄັນກ່ຽວກັບການລິເລີ່ມນີ້ອ້າງວ່າ ບໍ່ມີກິດຈະກໍາຢ່າງພຽງພໍເພື່ອປະຕິບັດລະບົບໄຕມາດທີ່ບໍ່ມີການສອບເສັງ ແລະມັນອາດເພີ່ມພາລະໃຫ້ແກ່ຄູ ຫຼືມີຜົນກະທົບດ້ານລົບຕໍ່ຄວາມສາມາດໃນການຮຽນຮູ້ຂອງຜູ້ຮຽນກໍເປັນໄດ້ (Lee, 2015). ແນວໃດກໍດີ ຜູ້ສະໜັບສະໜູນການລິເລີ່ມນີ້ຄິດວ່າ ການພັກຈາກສອບເສັງສາມາດເຮັດໃຫ້ນັກຮຽນມີເວລາຄິດໄຕ່ຕອງກ່ຽວກັບພອນສະຫວັນແລະຄວາມສົນໃຈຂອງຕົນ ຊຶ່ງອາດເປັນຜົນດີໃນໄລຍະຍາວສໍາລັບອະນາຄົດຂອງເຂົາເຈົ້າ. ການລິເລີ່ມທີ່ກໍາລັງມີການທົດລອງ

ກັນໃນປັດຈຸບັນ ມີແນວໂນ້ມທີ່ຈະເສີມຂະຫຍາຍສູ່ລະດັບອື່ນຂອງການສຶກສາ ແລະປະຕິບັດເປັນປະຈຳຫຼາຍຂຶ້ນ ຖ້າມັນເຮັດໃຫ້ເກີດຜົນສຳເລັດແກ່ການພັດທະນາແລະຄວາມຢູ່ດີມີສຸກຂອງຜູ້ຮຽນ.

ຄວາມພະຍາຍາມທາງດ້ານນະໂຍບາຍ ເພື່ອສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຂອງນັກຮຽນ ໄດ້ລິເລີ່ມໃນລະດັບແຂວງຢູ່ສາທາລະນະລັດເກົາຫຼີ ໂດຍສະເພາະໃນເຂດຕົວເມືອງ ແດກູ (Daegu). ນະໂຍບາຍການສຶກສາຂອງເມືອງ ແດກູ ຊື່ວ່າ 'ສ້າງຝັນ, ຄວາມຫວັງແລະຄວາມສຸກ' ມີຍຸດທະສາດສຳຄັນສີ່ຢ່າງ ຄື: 1) ປູກຝັງຄວາມສາມາດສຳຄັນຫ້າຢ່າງຂອງນັກຮຽນ (ດ້ານສັງຄົມ, ຈາລິຍະທຳ, ວິຊາການ, ຮ່າງກາຍແລະອາລົມຄວາມຮູ້ສຶກ), 2) ສະໜັບສະໜູນການສຶກສາທີ່ເນັ້ນໃສ່ຄວາມສາມາດ, 3) ສ້າງສະພາບແວດລ້ອມທີ່ປອດໄພແລະເພິ່ງພໍໃຈດ້ານການຮ່ຳຮຽນ ແລະ 4) ສ້າງຊຸມຊົນທີ່ມີການສຶກສາໂດຍອີງໃສ່ຄວາມໄວ້ເນື້ອເຊື່ອໃຈກັນແລະຄວາມສຸກ (Daegu Metropolitan Office of Education, 2013). ດັ່ງນັ້ນ ຫ້ອງການສຶກສາເຂດເມືອງ ແດກູ ຈຶ່ງໄດ້ສ້າງຫຼັກສູດແລະກິດຈະກຳຕ່າງໆຂຶ້ນມາ ປະກອບດ້ວຍ 'ຫຼັກສູດກ່ຽວກັບເວລາແຫ່ງຄວາມສຸກແບບມີປະຕິສຳພັນກັນ ລະຫວ່າງນັກຮຽນແລະຄູ' ຊຶ່ງມີຈຸດມຸ່ງໝາຍເພື່ອສົ່ງເສີມການສື່ສານກັນ ແລະການເຄົາລົບນັບຖືກັນລະຫວ່າງນັກຮຽນແລະຄູ ດ້ວຍການໃຫ້ເຂົາເຈົ້າເຮັດກິດຈະກຳຮ່ວມກັນແລະເຂົ້າຮ່ວມພິທີສຳຄັນຕ່າງໆນຳກັນ. ຫ້ອງການສຶກສາຍັງຕັ້ງຫ້ອງການໃຫ້ຄຳປຶກສາຢູ່ໃນໂຮງຮຽນນຳອີກ ຊຶ່ງເປັນບ່ອນທີ່ຜູ້ໃຫ້ຄຳປຶກສາມືອາຊີບ ແລະມີຄວາມເຫັນອົກເຫັນໃຈຄົນອື່ນ ມາຊ່ວຍນັກຮຽນແກ້ບັນຫາຄວາມຫຍຸ້ງຍາກແລະຄວາມພະຍາຍາມສູ້ຊົນທີ່ພວກເຂົາເຈົ້າອາດຜະເຊີນຢູ່ (Daegu Metropolitan Office of Education, 2013).

## ສິງກະໂປ

*ບົດລາຍງານກ່ຽວກັບຄວາມສຸກຢູ່ໃນໂລກ* ປີ 2015 ໄດ້ຈັດອັນດັບສິງກະໂປໃຫ້ເປັນປະເທດທີ່ມີຄວາມສຸກທີ່ສຸດໃນອາຊີ (Hellwell, et. al., 2015) ແລະຜົນຂອງໂຄງການປະເມີນຄວາມສາມາດທາງດ້ານວິຊາການຂອງນັກຮຽນລະຫວ່າງປະເທດພົບວ່າ ເດັກນ້ອຍອາຍຸ 15 ປີ ຢູ່ສິງກະໂປ ບໍ່ພຽງແຕ່ຮຽນເກັ່ງທີ່ສຸດເທົ່ານັ້ນ ແຕ່ຍັງເປັນພວກທີ່ມີຄວາມສຸກທີ່ສຸດຢູ່ໂຮງຮຽນນຳອີກ (OECD, 2013). ເນື່ອງຈາກຕົວບົ່ງຊີ້ຄວາມສຸກໃນການຊີ້ວັດເຫຼົ່ານີ້ອາດຈະບໍ່ຈຳເປັນຕ້ອງສອດຄ່ອງກັບຄຳນິຍາມຕ່າງໆກ່ຽວກັບຄວາມສຸກທີ່ຄົ້ນຄວ້າຢູ່ໃນ

ບົດລາຍງານນີ້ ຜົນຮັບຂອງສິງກະໂປແນະນຳວ່າ ຄວາມສຸກລະດັບສູງເຂົ້າກັນໄດ້ກັບການຮຽນທີ່ດີເລີດທາງດ້ານວິຊາການ.

ແນວໃດກໍດີ ເຖິງວ່າການຈັດອັນດັບຄວາມສຸກຂອງນັກຮຽນຈະມີຄະແນນສູງກໍຕາມ ມີການລະບຸວ່າ ລະບົບການສຶກສາຂອງສິງກະໂປເປັນ 'ຕົວກໍ່ບັນຫາໃຫ້ເກີດຄວາມກົດດັນທາງດ້ານຈິດໃຈ' (Hill, 2010). ການສຳຫຼວດໃນປີ 2001 ໂດຍອົງການຢູນິເຊຟ ພົບວ່າ ຄວາມວິຕົກກັງວົນຍ້ອນການສອບເສັງແມ່ນໜຶ່ງໃນສາເຫດໃຫຍ່ທີ່ສຸດ ຊຶ່ງເປັນຕົ້ນຕໍພາໃຫ້ນັກຮຽນໃນເກນອາຍຸ 14 ປີ ທີ່ມີການສຳຫຼວດບອກວ່າ ເຂົາເຈົ້າບໍ່ມີຄວາມສຸກເລີຍ ຊຶ່ງ 36 ເປີເຊັນບອກວ່າ ການເສັງຕົກແມ່ນສິ່ງທີ່ເຂົາເຈົ້າຢ້ານກົວທີ່ສຸດ (UNICEF 2001). ຄວາມກົດດັນແລະຄວາມທຸກໃຈຍັງເກີດຈາກພາລະການຮຽນຫຼາຍຂອງນັກຮຽນນຳອີກ, ການຮຽນພາກພິເສດເປັນການສ່ວນຕົວ ແລະຄວາມກົດດັນຈາກພໍ່ແມ່ທີ່ຢາກໃຫ້ລູກຂອງຕົນໄດ້ຄະແນນສູງນັ້ນເອງ (Dave, 2015).

ເນື່ອງຈາກຍອມຮັບວ່ານັກຮຽນສິງກະໂປມີຄວາມທຸກໃຈໃນລະດັບສູງຢູ່ທີ່ໂຮງຮຽນ ກະຊວງສຶກສາຈຶ່ງໄດ້ດຳເນີນມາດຕະການຫຼາຍອັນ. ຕົວຢ່າງ: ໃນປີ 2012 ມີການຊອກຫາວິທີຫຼຸດຜ່ອນການສອບແຂ່ງຂັນທີ່ບໍ່ເປັນຜົນດີຕໍ່ສຸຂະພາບ ໂດຍບໍ່ມີການແຈ້ງຊື່ນັກຮຽນທີ່ສອບເສັງໄດ້ໃນລະດັບຕົ້ນໆຢູ່ໃນການສອບເສັງຈົບຊັ້ນປະຖົມ, ບໍ່ມີການໃຫ້ຄະແນນການຮຽນຊັ້ນມັດທະຍົມທີ່ເນັ້ນໃສ່ຜົນການສອບເສັງຂອງນັກຮຽນອີກຕໍ່ໄປ ແລະດ້ວຍການຫຼຸດຜ່ອນການໃຫ້ລາງວັນແກ່ສະຖາບັນ ທີ່ເນັ້ນໃສ່ການປະສົບຄວາມສຳເລັດທາງດ້ານວິຊາການ (Ang, 2012).

ການປະຕິຮູບທີ່ພວມດຳເນີນຢູ່ນີ້ກຳລັງມີການແນະນຳກັນຢູ່ ຊຶ່ງປະກອບດ້ວຍການກວດເບິ່ງຄືນ ກ່ຽວກັບການຍອມຮັບເອົາການປະສົບຄວາມສຳເລັດທີ່ບໍ່ເປັນວິຊາການເຂົ້າຢູ່ໃນໂຮງຮຽນ ແລະເອົາສິ່ງນີ້ເປັນການກະຕຸ້ນໃຫ້ນັກຮຽນພັດທະນາຕົນເອງຮອບດ້ານແລະມີຄວາມຈູບຈ້າວຫ້າວຫັນຫຼາຍຂຶ້ນ, ຫຼຸດເນື້ອໃນຫຼັກສູດການຮຽນລົງ ເພື່ອໃຫ້ມີເນື້ອທີ່ສຳລັບການຮຽນຮູ້, ນຳໃຊ້ຄວາມຮູ້ໄດ້ຢ່າງເລິກເຊິ່ງ, ທັງກວດເບິ່ງຄືນກ່ຽວກັບການສອບເສັງແລະວິທີການປະເມີນ 'ເພື່ອຫຼຸດຜ່ອນການເອື່ອຍອີງໃສ່ການຮຽນຮູ້ແບບທ່ອງຈຳ, ຊຸກຍູ້ການຮຽນຢ່າງມີອິດສະຫຼະແລະຮຽນຈາກການທົດລອງເຮັດຕົວຈິງ' (Ministry of Education

[Singapore] 2016a).

ນອກຈາກນີ້ ສິ່ງທີ່ກະຊວງສຶກສາເພີ່ມເຕີມໃສ່ຄຳປາໄສຂອງປະທານາທິບໍດີໃນປີ 2016 ໃນມໍ່ໆນີ້ ໄດ້ສະແດງໃຫ້ເຫັນການຈັດລຽງຄວາມສຳຄັນສຳລັບການສຶກສາ ທີ່ແນໃສ່ເພີ່ມທະວີຄວາມສຸກ ແລະຄວາມຢູ່ດີມີສຸກຂອງນັກຮຽນ. ສິ່ງເຫຼົ່ານີ້ປະກອບດ້ວຍຄວາມໝັ້ນໃຈໃນການເອົາສິ່ງຈຳເປັນໃນການຮຽນຮູ້ແລະປະຫວັດຄວາມເປັນມາທັງໝົດເຂົ້າໃນໂຮງຮຽນ ໂດຍກະຕຸ້ນໃຫ້ນັກຮຽນພັດທະນາຄວາມຮັກໃນການຮຽນ 'ເພື່ອເອົາສິ່ງດີທີ່ສຸດຢູ່ໃນຕົວເດັກນ້ອຍແຕ່ລະຄົນອອກມາ ບໍ່ວ່ານັກຮຽນຍິງແລະນັກຮຽນຊາຍຄົນນັ້ນຈະມີຈຸດເລີ່ມຕົ້ນແນວໃດກໍຕາມ', ຫຼຸດຜ່ອນ 'ການເນັ້ນໃສ່ຜົນທາງດ້ານວິຊາການຫຼາຍເກີນໄປ' ເພື່ອເອື້ອອຳນວຍໃຫ້ເກີດການສຶກສາທີ່ມີອົງປະກອບຄົບຖ້ວນ ຊຶ່ງຈະເຮັດໃຫ້ນັກຮຽນສາມາດສະແຫວງຫາຄວາມສົນໃຈໃນວົງກວ້າງແລະພັດທະນາທັກສະໄດ້ຫຼາຍຢ່າງ (Ministry of Education [Singapore], 2016b).

ກະຊວງສຶກສາຍັງໄດ້ແນະນຳການຮຽນຮູ້ດ້ານອາລົມທາງສັງຄົມນຳອີກ ຊຶ່ງແມ່ນວິທີພັດທະນາຜູ້ຮຽນແບບມີອົງປະກອບຄົບຖ້ວນ ຊຶ່ງສົ່ງເສີມຄວາມສຳພັນກັນທາງບວກ (Yeo, 2011). ກະຊວງນີ້ຍອມຮັບວ່າ 'ສະພາບແວດລ້ອມທີ່ປອດໄພແລະເອົາໃຈໃສ່ກັນຢູ່ໃນໂຮງຮຽນ' ຊຶ່ງຄວາມສຳພັນອັນດີລະຫວ່າງນັກຮຽນແລະຄູມີຄວາມສຳຄັນຢ່າງຍິ່ງຕໍ່ການສອນແລະແນະນຳການຮຽນຮູ້ດ້ານອາລົມທາງສັງຄົມ ທັງເປັນຜົນຮັບທີ່ດີທາງດ້ານວິຊາການ (Ministry of Education [Singapore], 2015). ຢູ່ສິງກະໂປ ການຮຽນຮູ້ດ້ານອາລົມທາງສັງຄົມເນັ້ນໃສ່ຫຼັກການຊີ້ນຳສີ່ຢ່າງ ຄື: 1) ເອົາຄ່ານິຍົມຫຼັກຂອງສິງກະໂປບັນຈຸເຂົ້າໃນຫຼັກສູດ; 2) ຮັບປະກັນໃຫ້ມີການເຜີຍແຜ່ແລະມີການສອນກ່ຽວກັບຄວາມສາມາດທາງດ້ານສັງຄົມແລະອາລົມຄວາມຮູ້ສຶກຢູ່ໃນຫ້າຂະແໜງດ້ານຄວາມຕື່ນຕົວ, ຈິດສຳນຶກທາງສັງຄົມ, ການຄວບຄຸມຕົນເອງ, ການຈັດການເລື່ອງການພົວພັນກັບຄົນອື່ນແລະການຕັດສິນບັນຫາຢ່າງມີຄວາມຮັບຜິດຊອບ; 3) ສ້າງສະພາບແວດລ້ອມຢູ່ໃນໂຮງຮຽນໃຫ້ເປັນບ່ອນເອື້ອອຳນວຍແລະເປັນສິ່ງຊ່ວຍພັດທະນາຄວາມສາມາດຕ່າງໆເຫຼົ່ານີ້ ແລະ 4) ຮັບປະກັນໃຫ້ຜູ້ຮຽນໄດ້ສະແດງບຸກຄະລິກແລະການເປັນພົນລະເມືອງດີອອກມາ ໂດຍອີງໃສ່ຄວາມສາມາດແລະຄ່ານິຍົມຫຼັກ (Ministry of Education [Singapore], 2015).

ການຮຽນຮູ້ດ້ານອາລົມທາງສັງຄົມໄດ້ຖືກບັນຈຸເຂົ້າຢູ່ໃນຫຼັກສູດການສຶກສາກ່ຽວກັບການສ້າງບຸກຄະລິກແລະຄວາມເປັນພົນລະເມືອງຂອງກະຊວງສຶກສາ ຊຶ່ງເນັ້ນໃສ່ຄ່ານິຍົມຫຼັກ ຄື: ການໃຫ້ຄວາມເຄົາລົບກັນ, ຄວາມຮັບຜິດຊອບ, ການຟື້ນຟູໃຫ້ກັບຄືນມາເປັນເໝືອນເດີມ, ການເຂົ້າກັບຄົນອື່ນ, ການໃສ່ໃຈກັນແລະການປະສົມກົມກືນ ຊຶ່ງຖືເປັນຮາກຖານໃຫ້ແກ່ການມີບຸກຄະລິກທີ່ດີ. ໂດຍອີງຕາມຄ່ານິຍົມຫຼັກເຫຼົ່ານີ້ ຫຼັກສູດໄດ້ລະບຸຄວາມສາມາດແລະທັກສະຕ່າງໆຂອງການຮຽນຮູ້ດ້ານອາລົມທາງສັງຄົມທີ່ກ່ຽວຂ້ອງກັບຄວາມເປັນພົນລະເມືອງ ໃຫ້ເປັນອົງປະກອບຂອງການອ່ານອອກຂຽນເປັນຂອງປະຊາຊົນ, ຄວາມເຂົ້າໃຈກ່ຽວກັບສະພາບການຂອງໂລກ ແລະທັກສະທີ່ປະສົມປະສານວັດທະນະທຳຕ່າງໆ ຊຶ່ງປະກອບດ້ວຍຊີວິດທີ່ຫ້າວຫັນຢູ່ໃນຊຸມຊົນ, ຄວາມເຂົ້າໃຈກ່ຽວກັບສະພາບການຂອງໂລກ; ເອກະລັກຂອງຊາດແລະດ້ານວັດທະນະທຳ, ຄວາມຮັບຮູ້ແລະເຂົ້າໃຈກ່ຽວກັບວັດທະນະທຳແລະສັງຄົມ (Ministry of Education of Singapore, 2012).

ຫຼັກການແນະນຳສຳລັບການພັດທະນາຫຼັກສູດກ່ຽວກັບການສຶກສາດ້ານບຸກຄະລິກແລະຄວາມເປັນພົນລະເມືອງ ປະກອບດ້ວຍການເອົານັກຮຽນເປັນໃຈກາງ, ການສຶກສາໂດຍເນັ້ນໃສ່ຄ່ານິຍົມ, ການສະແດງອອກທາງດ້ານບຸກຄະລິກຢ່າງສົມດຸນແລະຄວາມເປັນພົນລະເມືອງ ດ້ວຍການເສີມຂະຫຍາຍດ້ານຕ່າງໆຈາກຕົນເອງໄປສູ່ໂລກແລະປະສົບການໃນຊີວິດຂອງນັກຮຽນ. ໂດຍສະເພາະສິ່ງທີ່ເຊື່ອມໂຍງກັບໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກນັ້ນແມ່ນຫຼັກການເພື່ອການຮຽນການສອນ ທີ່ຍອມຮັບວ່ານາຍຄູເປັນຕົວຢ່າງທີ່ດີ ສະນັ້ນ ທັດສະນະຄະຕິແລະຄຸນສົມບັດຄວນສະທ້ອນໃຫ້ເຫັນຄ່ານິຍົມຫຼັກ. ຫຼັກການນີ້ອີງຕາມຄວາມຄິດທີ່ວ່າຢູ່ໂຮງຮຽນບໍ່ສອນພຽງແຕ່ຄ່ານິຍົມ ແຕ່ຕ້ອງ 'ໃຫ້ເຂົ້າໃຈ' ຫຼື 'ນຳໃຊ້ກັບຊີວິດ' ໂດຍຜ່ານປະສົບການຊຶ່ງຍອມຮັບວ່າ ຄຸນນະພາບ, ຄວາມສຳພັນລະຫວ່າງຄູແລະນັກຮຽນ, ການໃສ່ໃຈດ້ານສະພາບແວດລ້ອມຈະເປັນສິ່ງຈຳເປັນສຳລັບການພັດທະນາບຸກຄະລິກຂອງນັກຮຽນ, ຮັບຮູ້ຄວາມຈຳເປັນຂອງຄູໃນການນຳໃຊ້ວິທີຕ່າງໆ ແລະໃຫ້ພໍ່ແມ່ນັກຮຽນເປັນຄູ່ຮ່ວມງານຢູ່ໃນໂຮງຮຽນ.

ຫຼັກສູດນີ້ກຳນົດວິທີການສອນບາງຢ່າງທີ່ເນັ້ນໃສ່ຂະບວນການ ຊຶ່ງເປີດໂອກາດໃຫ້ມີການພັດທະນາຄວາມສາມາດຕາມຄວາມຕ້ອງການ ປະກອບດ້ວຍການເລົ່ານິທານ, ການສະແດງບົດບາດສົມມຸດ, ການຮຽນຮູ້ຈາກປະສົບການ, ການສົນທະນາກັນແລະການຮຽນຮູ້

ຮ່ວມກັນ (Ministry of Education [Singapore], 2012). ຫຼັກສູດນີ້ຍັງມີຄ່ານິຍົມຢູ່ໃນການລິເລີ່ມໃນທາງປະຕິບັດທີ່ໃຫ້ປະສົບການດ້ານການຮຽນຮູ້ນໍາອີກ ຊຶ່ງຜູ້ຮຽນສາມາດປະກອບສ່ວນເຂົ້າໃນຊຸມຊົນຢ່າງມີຄວາມໝາຍ (Thaiyalan, 2015). ຫຼັກສູດນີ້ມີວິທີໜ້າສົນໃຈສໍາລັບການປະເມີນ ໂດຍນັກຮຽນມີບົດບາດສໍາຄັນໃນຂະບວນການປະເມີນ ຊຶ່ງໃຊ້ວິທີການປະເມີນຕົນເອງແລະໃຫ້ໝູ່ເພື່ອນປະເມີນໃຫ້ ດ້ວຍວິທີນີ້ ນັກຮຽນໄດ້ຮັບຮູ້ມາດຖານການປະເມີນໄດ້ຢ່າງຊັດເຈນ ເພື່ອໃຫ້ເຂົາເຈົ້າສາມາດຕິດຕາມຄວາມກ້າວໜ້າດ້ວຍຕົນເອງ ແລະຕັ້ງເປົ້າໝາຍສໍາລັບເຂົາເຈົ້າເອງ ທັງໃຫ້ນາຍຄູປຶກສາຫາລືກັນເອງກ່ຽວກັບຂະບວນການ ເພື່ອຮັບປະກັນຫຼັກການສະແດງຄວາມຄິດເຫັນຮອບດ້ານຫຼາຍຂຶ້ນ (Ministry of Education [Singapore], 2012).

## ວານູອາຕູ

ໃນປີ 2006 ດັດສະນີຊີ້ວັດຄວາມສຸກຢູ່ໃນໂລກຂອງມູນນິທິເສດຖະສາດໃໝ່ ດ້ວຍການວັດທີ່ເນັ້ນໃສ່ຕົວຊີ້ວັດສາມຢ່າງກ່ຽວກັບຄວາມຢູ່ດີມີສຸກ ຄື: ຄວາມພໍໃຈໃນຊີວິດ, ເການອາຍຸຍືນແລະພຶດຕິກໍາຂອງຄົນທີ່ສ້າງຄວາມເສຍຫາຍໃຫ້ແກ່ລະບົບນິເວດ (NEF, 2006). ໃນປີ 2012 ປະເທດນີ້ໄດ້ທົດລອງໃຊ້ 'ຕົວຊີ້ວັດທີ່ຕ່າງຈາກສິ່ງທີ່ເຄີຍເຮັດມາກ່ຽວກັບຄວາມຢູ່ດີມີສຸກສໍາລັບ ເມລານີເຊຍ' (Melanesia) ຊຶ່ງມີຈຸດມຸ່ງໝາຍສະທ້ອນຄ່ານິຍົມຂອງ ເມລານີເຊຍ ໂດຍອີງໃສ່ການສໍາຫຼວດທີ່ກວມເອົາສາມດ້ານຄື: ການເຂົ້າເຖິງຊັບພະຍາກອນ, ການປະຕິບັດທາງວັດທະນະທໍາແລະຄວາມສາມາດໃນການຢູ່ລອດຂອງຊຸມຊົນ. ການສໍາຫຼວດຄວາມຢູ່ດີມີສຸກທີ່ເບິ່ງປັດໄຈທາງດ້ານບຸກຄົນແລະຄົວເຮືອນ ໂດຍຄໍານຶງເຖິງຫຼາຍດ້ານທີ່ມີຄວາມສໍາຄັນຕໍ່ຄວາມຢູ່ດີມີສຸກ ເຊັ່ນ: ການສຶກສາ, ການໃຫ້ຄວາມເຄົາລົບກັນ, ການມີສ່ວນຮ່ວມດ້ານວັດທະນະທໍາແລະການປົກປັກຮັກສາສະພາບແວດລ້ອມ (MNCC, 2012).

ແນວຄິດກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກສະທ້ອນໃຫ້ເຫັນຢູ່ໃນນະໂຍບາຍການສຶກສາແຫ່ງຊາດຂອງ ວານູອາຕູ. ຕົວຢ່າງຍຸດທະສາດຂະແໜງສຶກສາຂອງ ວານູອາຕູ (ປີ 2007-2016) ໄດ້ໃຫ້ວິໄສທັດສໍາລັບ 'ລະບົບການສຶກສາທີ່ໃສ່ໃຈຕໍ່ກັນ ຊຶ່ງໃຫ້ຄົນໜຸ່ມທຸກຄົນມີທັກສະຕະຫຼອດຊີວິດ, ຄ່ານິຍົມ, ຄວາມໝັ້ນໃຈໃນການເພິ່ງພາຕົນເອງແລະເພື່ອປະກອບສ່ວນເຂົ້າໃນການພັດທະນາ ວານູອາຕູ ໂດຍເຮັດວຽກເປັນຄູ່ຮ່ວມງານກັບຜູ້ທີ່ມີ

ສ່ວນຮ່ວມທຸກຄົນ ຊຶ່ງເຮັດໃຫ້ໂຮງຮຽນມີການບໍລິຫານທີ່ດີ' (ໃຊ້ຊີວິດແລະຮຽນຮູ້ ປີ 2011). ຄ້າຍຄືກັນນີ້ ຈຸດປະສົງຂອງຖະແຫຼງການກ່ຽວກັບຫຼັກສູດແຫ່ງຊາດ ວານູອາຕູ ປີ 2010 ກໍແມ່ນເພື່ອໃຫ້ນັກຮຽນສາມາດພັດທະນາທັກສະທີ່ຈະໃຫ້ເຂົາເຈົ້າມີໂອກາດ 'ໃຊ້ຊີວິດຢ່າງມີຄວາມສຸກແລະສັນຕິ' (Ministry of Education [Vanuatu], 2010, p. 2). ວິໄສທັດອັນນີ້ແມ່ນ 'ສະພາບແວດລ້ອມການຮຽນການສອນທີ່ມີການຊ່ວຍເຫຼືອກັນ ແລະເອົາໃຈໃສ່ຕໍ່ກັນ' (Ibid, p. 10), c] ທັງເຮັດເປັນລາຍການວ່າການໃສ່ໃຈຕໍ່ກັນ, ການແບ່ງປັນແລະການມີສ່ວນຮ່ວມ ແມ່ນໜຶ່ງໃນຜົນຮັບທີ່ສຳຄັນຫົກຢ່າງຂອງການສຶກສາລະດັບຊາດ (Ibid, p. 31). ຖະແຫຼງການນີ້ເວົ້າເຖິງສີ່ເສົາຄ້ຳຂອງການຮຽນຮູ້ໂດຍກົງ ໂດຍສະເພາະການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ, ເອົາຄວາມຢູ່ດີມີສຸກແລະຄວາມສຸກເປັນລາຍການທີ່ເຊື່ອມໂຍງກັບຄວາມສາມາດຕ່າງໆ ເຊັ່ນ: ການໃຫ້ຄວາມເຄົາລົບກັນ, ຄວາມສ້າງສັນ, ການສື່ສານກັນ, ຄວາມໝັ້ນໃຈໃນຕົວເອງ, ຄວາມຮັບຮູ້ແລະການສະແດງອອກທາງດ້ານຄວາມຮູ້ສຶກ.

ຂໍ້ມູນກ່ຽວກັບການຮຽນການສອນຂອງຊາດ ວານູອາຕູ ຍັງສະທ້ອນໃຫ້ເຫັນຄວາມມຸ່ງມາດປາຖະໜາທີ່ຈະສົ່ງເສີມຄວາມຢູ່ດີມີສຸກຂອງນັກຮຽນ. ຕົວຢ່າງ: ຄູ່ມືການສອນວິຊາປະຫວັດສາດຂອງຄູ ທີ່ສະພາວັດທະນະທຳແຫ່ງຊາດ ວານູອາຕູ ເຮັດຂຶ້ນໃນປີ 2005 ແນະນຳວ່າ ສຳລັບການຂຶ້ນສອນແຕ່ລະບົດຮຽນ ຄູຕ້ອງໃຫ້ນັກຮຽນເຮັດບົດຝຶກຫັດ ເຊັ່ນ: ຕັ້ງຄຳຖາມເພື່ອຄວາມເຂົ້າໃຈ, ການສົນທະນາແລກປ່ຽນກັນ ແລະການຄິດກວ້າງໄກເພື່ອສົ່ງເສີມຄວາມເຂົ້າໃຈແລະຄວາມສາມາດຂອງຜູ້ຮຽນໃນການຄິດແບບວິພາກທາງເລິກ (Vanuatu National Cultural Council, 2005). ຄູ່ມືນີ້ຍັງແນໃສ່ສົ່ງເສີມການມີສ່ວນຮ່ວມຂອງນັກຮຽນຢູ່ໃນຂະບວນການຮຽນຮູ້ ແລະເຮັດໃຫ້ນັກຮຽນສາມາດມີປະຕິສຳພັນຕໍ່ກັນຢູ່ໃນກຸ່ມນຳອີກ. ຄູ່ມືໄດ້ຮັບການອອກແບບໃນລັກສະນະເພື່ອກະຕຸ້ນນັກຮຽນໃຫ້ມີຄວາມສ້າງສັນ ທັງແນະນຳໃຫ້ຄູ 'ຊຸກຍູ້ນັກຮຽນໃຫ້ຄິດແບບສ້າງສັນ' ໂດຍບອກວ່າ 'ບໍ່ມີຄຳຕອບຖືກຫຼືຄຳຕອບຜິດ. ນັກຮຽນຄວນໃຫ້ເຫດຜົນທີ່ດີໄດ້ສຳລັບການຕັດສິນໃຈຂອງຕົນ' (Ibid, p. 42). ສາມາດເວົ້າໄດ້ວ່າ ບັນຫານີ້ເຊື່ອມໂຍງກັບມາດຖານຫຼາຍຢ່າງຢູ່ໃນໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ ເຊັ່ນ: ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ ລວມທັງການເຮັດວຽກເປັນໝູ່ຄະນະແລະມີຈິດໃຈໃນການຮ່ວມມືກັນ ຈະມີການສຶກສາຄົ້ນຄວ້າກັນຢູ່ບົດທີສີ່.

## ສະຫຼຸບກ່ຽວກັບບົດນີ້

ບົດນີ້ໄດ້ສຶກສາບໍລິບົດທາງດ້ານສັງຄົມ-ການເມືອງກ່ຽວກັບຄວາມສຸກ ຊຶ່ງປະກອບດ້ວຍ: ທິດສະດີກ່ຽວກັບຄວາມສຸກ, ການລິເລີ່ມໃນລະດັບໂລກແລະຄວາມສຸກຢູ່ໃນນະໂຍບາຍດ້ວຍການຍົກເອົາກໍລະນີສຶກສາຂອງຫ້າປະເທດມາເປັນສິ່ງອ້າງອີງ. ທິດສະດີຕ່າງໆກ່ຽວກັບຄວາມສຸກທີ່ເອົາມາສຶກສາກັນໃນທີ່ນີ້ຍອມຮັບວ່າ ການສຶກສາທີ່ເຮັດໃຫ້ຜູ້ຮຽນສາມາດເຂົ້າໃຈຕົນເອງແລະເຂົ້າໃຈຄົນອື່ນ ສາມາດເປັນບໍ່ເກີດຂອງຄວາມສຸກໄດ້ໃນຕົວມັນເອງ ແລະຄົນເຮົາສາມາດຮຽນຮູ້ທີ່ຈະມີຄວາມສຸກໄດ້. ທິດສະດີຕ່າງໆນີ້ລ້ວນແຕ່ໃຫ້ທັດສະນະກ່ຽວກັບວ່າ ການສຶກສາແມ່ນຂະແໜງທີ່ປະກອບດ້ວຍຫຼາຍມິຕິ ມີດ້ານວິຊາການ, ສັງຄົມ, ອາລົມຄວາມຮູ້ສຶກແລະຮ່າງກາຍ. ຕົວຢ່າງຢູ່ໃນຈິດຕະສາດທາງບວກ ໂຮງຮຽນສົ່ງເສີມຄວາມສຸກໂດຍຊຸກຍູ້ນັກຮຽນດ້ວຍການພັດທະນາຄຸນນະທຳຫຼື 'ຈຸດແຂງທາງດ້ານບຸກຄະລິກ' ຢູ່ໃນບໍລິບົດໜ້າວຽກຂອງອົງການຢູເນສໂກທີ່ເວົ້າເຖິງ 'ຄວາມສາມາດຫຼາຍຢ່າງປະສົມປະສານກັນ (UNESCO, 2016). ນອກຈາກນີ້ຍັງມີການຍອມຮັບວ່າ ຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນນຳໄປສູ່ການຮຽນຮູ້ທີ່ດີຂຶ້ນ, ລະດັບການບັນລຸຜົນແລະຄວາມສຳເລັດດີຂຶ້ນໃນເວລາຕໍ່ມາຢູ່ໃນຊີວິດ.

ຄວາມສຸກແລະຄວາມຢູ່ດີມີສຸກໄດ້ຖືກຍອມຮັບຫຼາຍຂຶ້ນວ່າ ເປັນບຸລິມະສິດລະດັບໂລກ ຊຶ່ງບັນຈຸຢູ່ໃນວາລະຂອງການພັດທະນາລະຫວ່າງປະເທດ. ເລື່ອງນີ້ເປັນຜົນມາຈາກການຮັບຮູ້ວ່າ ຄວາມກົດດັນທາງດ້ານຈິດໃຈຂອງຄົນເຮົາ ເນື່ອງຈາກໂລກເຮົາໃນປັດຈຸບັນກຳລັງມີການປ່ຽນແປງຢ່າງທີ່ບໍ່ເຄີຍເປັນມາກ່ອນ ລວມທັງການປ່ຽນແປງລັກສະນະຂອງວຽກ ຊຶ່ງອາດນຳຄົນເຮົາໄປສູ່ການບໍ່ມີຄວາມສຸກ ສະນັ້ນ ຈຳເປັນຕ້ອງປັບປ່ຽນແລະປ່ຽນແປງລະບົບການສຶກສາ ແລ້ວຫັນໄປໃຫ້ຄວາມສຳຄັນດ້ານການຮຽນຮູ້ 'ສິ່ງທີ່ບໍ່ເປັນວິຊາການ'. ຢູ່ໃນການສຶກສາໃນລະດັບຊາດແລະລະດັບໂລກ ໄດ້ມີຄວາມພະຍາຍາມທີ່ຈະວັດຄວາມຢູ່ດີມີສຸກ, ທັກສະແລະຄວາມສາມາດທີ່ສົ່ງເສີມໃຫ້ເກີດຄວາມສຸກແລະຄວາມຢູ່ດີມີສຸກ. ເປົ້າໝາຍທີສີ່ຂອງການພັດທະນາທີ່ຍືນຍົງໄດ້ຍົກໃຫ້ເຫັນບັນຫານີ້ ຊຶ່ງຈະເວົ້າເຖິງການສົ່ງເສີມທັກສະແລະຄວາມສາມາດທີ່ສະທ້ອນອອກມາຢູ່ແນວຄິດຕ່າງໆ ເຊັ່ນ: ການຮຽນຮູ້ເພື່ອໃຫ້ເປັນຕາມສິ່ງທີ່ຕົນເອງຕ້ອງການແລະການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ ລວມທັງການສຶກສາເພື່ອການພັດທະນາທີ່ຍືນຍົງແລະການສຶກສາກ່ຽວກັບການເປັນພົນລະເມືອງໂລກ.

ກໍລະນີສຶກສາຂອງຫ້າປະເທດທີ່ນຳສະເໜີໃນທີ່ນີ້ໄດ້ແກ່ພູຖານ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ສິງກະໂປ ແລະ ວານູອາຕູ ຊີ້ໃຫ້ເຫັນວ່າ ປະເທດເຫຼົ່ານີ້ໄດ້ຍອມຮັບເອົາຄວາມສຸກແລະຄວາມຢູ່ດີມີສຸກເຂົ້າຢູ່ໃນນະໂຍບາຍດ້ານການພັດທະນາ ແລະການສຶກສາໃນເງື່ອນໄຂທີ່ແຕກຕ່າງກັນ. ເຖິງວ່າແຕ່ລະປະເທດເຫຼົ່ານີ້ອາດມີເຫດຜົນສຳລັບການຈັດອັນດັບຄວາມສຳຄັນກ່ຽວກັບແນວຄິດເຫຼົ່ານີ້ກໍຕາມ ນະໂຍບາຍບາງຢ່າງຂອງເຂົາເຈົ້າກໍຄ້າຍຄືກັນ. ອັນທຳອິດ ໝົດທຸກປະເທດລ້ວນແຕ່ມີຄວາມຄິດກ່ຽວກັບຄວາມສຳຄັນຂອງຄວາມສັນຕິສຸກແລະຄວາມຍືນຍົງເພື່ອຄວາມສຸກໃນລະດັບທີ່ແຕກຕ່າງກັນ. ນະໂຍບາຍຂອງປະເທດເຫຼົ່ານີ້ຍັງມີຄວາມຄ້າຍຄືກັນໃນການຊອກຫາຊ່ອງທາງນຳໃຊ້ການສຶກສາ ເພື່ອບັນລຸເປົ້າໝາຍລະດັບຊາດຫຼືພັດທະນາຄ່ານິຍົມຂອງຊາດ. ຕົວຢ່າງການໃຫ້ການສຶກສາເລື່ອງນະໂຍບາຍກ່ຽວກັບຄວາມສຸກມວນລວມແຫ່ງຊາດຂອງພູຖານ ໄດ້ສະແຫວງຫາຊ່ອງທາງເພື່ອສາມາດບັນລຸຄວາມສຸກມວນລວມຂອງຊາດ. ນະໂຍບາຍຂອງສິງກະໂປສົ່ງເສີມການຮຽນຮູ້ດ້ານສັງຄົມແລະອາລົມຄວາມຮູ້ສຶກ ລວມທັງການສຶກສາເພື່ອການເປັນພົນລະເມືອງນັ້ນແມ່ນເພື່ອປັບປຸງຄ່ານິຍົມຫຼັກຂອງຊາດໃຫ້ແຂງແກ່ນ. ການສຶກສາຢູ່ ວານູອາຕູ ຊ່ວຍເຊີດຊູວັດທະນະທຳແລະຊຸມຊົນທ້ອງຖິ່ນ. ນະໂຍບາຍກ່ຽວກັບ 'ຄວາມປິຕິຍິນດີໃນການໃຊ້ຊີວິດ' ຂອງຍີ່ປຸ່ນແລະນະໂຍບາຍ 'ການສຶກສາເພື່ອຄວາມສຸກ' ຂອງສາທາລະນະລັດເກົາຫຼີກໍຄ້າຍຄືກັນ ຄືຫາທາງປັບປຸງເຮັດໃຫ້ຊີວິດຂອງນັກຮຽນດີຂຶ້ນ ໂດຍມີຈຸດມຸ່ງໝາຍລວມໃນການສ້າງສັງຄົມທີ່ມີຄວາມສຸກຫຼາຍຂຶ້ນ. ນະໂຍບາຍຂອງທັງຫ້າປະເທດນີ້ຍັງລະບຸຄວາມເຂົ້າໃຈທົ່ວໄປວ່າ ການທີ່ຈະສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກໄດ້ນັ້ນ ຈຳເປັນຕ້ອງເຮັດໃຫ້ລະບົບການສຶກສາກ້າວຂ້າມການຮຽນຮູ້ດ້ານວິຊາການ ໂດຍບັນຈຸຂະແໜງສັງຄົມ, ອາລົມຄວາມຮູ້ສຶກແລະຮ່າງກາຍເຂົ້ານຳ. ດັ່ງນັ້ນ ໝົດທຸກປະເທດເຫຼົ່ານີ້ຈຶ່ງຍອມຮັບແບບດຽວກັນວ່າ ການສຶກສາຄວນເປັນ 'ລັກສະນະທີ່ມີອົງປະກອບຄົບຖ້ວນ' ເພື່ອສົ່ງເສີມໃຫ້ເກີດຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນນັ້ນເອງ.




# 4

# ໂຄງປະກອບຂອງ ໂຮງຮຽນໃຫ້ຄວາມສຸກ

ບົດນີ້ສະເໜີໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກ ອີງໃສ່ຄຳນິຍາມຂອງຜູ້ທີ່ມີສ່ວນຮ່ວມກ່ຽວກັບສິ່ງທີ່ປະກອບເຂົ້າໃນໂຮງຮຽນໃຫ້ຄວາມສຸກ. ດັ່ງທີ່ຫົວໃຈສຳຄັນຂອງບົດລາຍງານນີ້ແມ່ນການຄົ້ນຫາວ່າ ຄວາມສຸກແລະຄວາມຢູ່ດີມີສຸກຕາມທີ່ຄົນເຂົ້າໃຈນັ້ນ ໄດ້ຖືກນຳໄປສູ່ການປະຕິບັດແນວໃດ ອີງຕາມມິຕິຂອງເຂົາເຈົ້າ. ໃນການຮັບຮູ້ຄວາມເຂົ້າໃຈຂອງຜູ້ທີ່ມີສ່ວນຮ່ວມນັ້ນມີຄວາມສຳຄັນຫຼາຍ ເນື່ອງຈາກພໍ່ແມ່ນັກຮຽນ, ຄູແລະຜູ້ທີ່ມີສ່ວນຮ່ວມອື່ນໆໃນລະດັບໂຮງຮຽນແມ່ນຜູ້ທີ່ມີບົດບາດສຳຄັນທີ່ສຸດ ໃນການເອົາວິໄສທັດໃດໜຶ່ງສອດແຊກເຂົ້າໃນການສຶກສາ (Delors, 1996). ການເນັ້ນໃສ່ລະດັບໂຮງຮຽນຍັງເປັນສຽງສະທ້ອນຮຽກຮ້ອງໃຫ້ມີການປ່ຽນແປງການສຶກສາຢ່າງເຖິງຮາກເຖິງເຫງົ້າ (Robinson and Lou, 2015).

ບົດນີ້ເລີ່ມຕົ້ນດ້ວຍທັດສະນະລວມກ່ຽວກັບມາດຖານຂອງໂຮງຮຽນໃຫ້ຄວາມສຸກ ໂດຍເອົາການວິເຄາະສິ່ງສຳຄັນທີ່ຄົ້ນພົບຈາກການສຳຫຼວດໂຮງຮຽນໃຫ້ຄວາມສຸກມາສະໜັບສະໜູນ. ໝວດຕ່າງໆຕໍ່ມາ ຈະສຶກສາເບິ່ງການຈັດປະເພດທີ່ສຳຄັນທີ່ສຸດຂອງໂຄງປະກອບອັນນີ້ ຄື: ຜູ້ຄົນ, ຂະບວນການແລະສະຖານທີ່. ໝວດເຫຼົ່ານີ້ສຶກສາແຕ່ລະມາດຖານຢ່າງລະອຽດຖີ່ຖ້ວນຫຼາຍຂຶ້ນ ລວມທັງຕົວຢ່າງຍຸດທະສາດທີ່ຄິດຂຶ້ນໃໝ່ແລະມີຄວາມຫວັງ ເພື່ອຕອບສະໜອງໃຫ້ແຕ່ລະມາດຖານ. ຕົວຢ່າງຕ່າງໆທີ່ຍົກມາເວົ້າຢູ່ໃນບົດນີ້ ນອກຈາກສິ່ງທີ່ບໍ່ໄດ້ລະບຸໄວ້ ແມ່ນອີງໃສ່ສິ່ງທີ່ຄົ້ນພົບຈາກການສຳຫຼວດ, ກອງປະຊຸມທາງວິຊາການແລະການສຳມະນາ.

# ກ. ການນຳສະເໜີມາດຖານຕ່າງໆ

ມາດຖານຕ່າງໆສຳລັບໂຮງຮຽນໃຫ້ຄວາມສຸກທີ່ສະເໜີຢູ່ໃນຕາຕະລາງ 3 ໄດ້ຮັບການຄັດເລືອກ ໂດຍອີງໃສ່ການວິເຄາະຂໍ້ມູນທີ່ເກັບກຳໄດ້ຢ່າງເລິກເຊິ່ງ ດ້ວຍການສຳຫຼວດໂຮງຮຽນໃຫ້ຄວາມສຸກແລະມີຈຸດມຸ່ງໝາຍເພື່ອນຳສະເໜີ 'ຄວາມຄິດເຫັນລວມ' ຂອງຜູ້ຕອບຄຳຖາມ. ຄວາມສຳຄັນຂອງໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກປະກອບດ້ວຍ 22 ມາດຖານ ເມື່ອຈັດເປັນກຸ່ມແລ້ວ ແບ່ງເປັນສາມປະເພດ ຄື: 1) ຜູ້ຄົນ: ເວົ້າເຖິງຄວາມສຳພັນກັນທາງດ້ານສັງຄົມ, 2) ຂະບວນການ: ເວົ້າເຖິງວິທີການຮຽນແລະການສອນ ແລະ 3) ສະຖານທີ່: ເວົ້າເຖິງປັດໄຈສະພາບເງື່ອນໄຂຕ່າງໆ. ການຈັດແບ່ງສາມປະເພດນີ້ມີຄວາມກ່ຽວພັນກັນແລະຊ່ວຍສະໜັບສະໜູນກັນແລະກັນ.

***ຕາຕະລາງ 3.*** *ມາດຖານໂຮງຮຽນໃຫ້ຄວາມສຸກ*

| ຜູ້ຄົນ | ຂະບວນການ | ສະຖານທີ່ |
| --- | --- | --- |
| ຄວາມເປັນເພື່ອນມິດກັນ ແລະຄວາມສຳພັນກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ | ພາລະການຮຽນຮູ້ຢ່າງສົມເຫດສົມຜົນແລະເປັນທຳ | ສະພາບແວດລ້ອມການຮຽນທີ່ອົບອຸ່ນແລະເປັນມິດ |
| ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ | ມີຈິດໃຈໃນການຮຽນຮູ້ແບບໝູ່ຄະນະແລະຮ່ວມມືກັນ | ສະພາບແວດລ້ອມທີ່ປອດໄພແລະປອດຈາກການທະເລາະວິວາດກັນ |
| ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງ | ວິທີການຮຽນການສອນຢ່າງມ່ວນຊື່ນແລະມີສ່ວນຮ່ວມ | ມີເນື້ອທີ່ບ່ອນຮຽນແລະຫຼິ້ນທີ່ເປີດກວ້າງແລະເປັນສີຂຽວ |
| ຄຸນຄ່າແລະການປະຕິບັດດ້ານບວກຮ່ວມກັນ | ຄວາມມີອິດສະຫຼະ, ຄວາມສ້າງສັນ ແລະການມີສ່ວນຮ່ວມຂອງຜູ້ຮຽນ | ໂຮງຮຽນທີ່ມີວິໄສທັດແລະມີການນຳພາ |
| ສະພາບການເຮັດວຽກແລະຄວາມຢູ່ດີມີສຸກຂອງຄູ | ຈິດສຳນຶກໃນການບັນລຸຜົນແລະການເຮັດໃຫ້ສຳເລັດດ້ວຍດີ | ລະບຽບວິໄນດີ |
| ທັກສະແລະຄວາມສາມາດຂອງຄູ | ກິດຈະກຳແລະພິທີສຳຄັນນອກຫຼັກສູດຂອງໂຮງຮຽນ | ສຸຂະພາບດີ, ອະນາໄມດີແລະໂພຊະນາການດີ |
| | ການຮຽນຮູ້ແບບໝູ່ຄະນະລະຫວ່າງນັກຮຽນແລະຄູ | ການບໍລິຫານຄຸ້ມຄອງໂຮງຮຽນແບບປະຊາທິປະໄຕ |
| | ເນື້ອໃນການຮຽນຮູ້ທີ່ເປັນປະໂຫຍດ, ກ່ຽວຂ້ອງກັບຊີວິດ ແລະມີສ່ວນຮ່ວມ | |
| | ຄວາມຢູ່ດີມີສຸກທາງດ້ານຈິດໃຈແລະການຄວບຄຸມຄວາມທຸກໃຈ | |

ການສໍາຫຼວດນີ້ແນໃສ່ເພື່ອໃຫ້ໄດ້ມິຕິເຫຼົ່ານີ້ ດ້ວຍການຕັ້ງຄໍາຖາມໃຫຍ່ສີ່ຢ່າງ ຄື: 1) ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ? 2) ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກ? ແມ່ນຫຍັງທີ່ເຮັດໃຫ້ການຮຽນການສອນມ່ວນຊື່ນແລະສະໜຸກສະໜານ? ສາມາດເຮັດຫຍັງໄດ້ແດ່ ເພື່ອໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນໍາ? ໝວດນີ້ຈະສຶກສາສິ່ງທີ່ຄົ້ນພົບຊຶ່ງເປັນສ່ວນສໍາຄັນສໍາລັບແຕ່ລະຄໍາຖາມເຫຼົ່ານີ້ ແລະສະເໜີສິ່ງທີ່ຄ້າຍຄືກັນແລະສິ່ງທີ່ແຕກຕ່າງກັນຂອງຄໍາຕອບຂອງຜູ້ທີ່ສົ່ງມາ ອີງຕາມເພດຍິງ-ຊາຍແລະປະເພດຂອງຜູ້ທີ່ມີສ່ວນຮ່ວມ (ນັກຮຽນ, ຄູ ແລະອື່ນໆ) ທັງປະເພດໂຮງຮຽນ (ຂອງລັດ, ເອກະຊົນ, ນາໆຊາດແລະອື່ນໆ).

## ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ?

ຜູ້ທີ່ຕອບຄໍາຖາມຈາກໝົດທຸກກຸ່ມຂອງຜູ້ທີ່ມີສ່ວນຮ່ວມ ໄດ້ເນັ້ນໃຫ້ເຫັນຄວາມສໍາຄັນຢ່າງຍິ່ງກ່ຽວກັບການມີປະຕິສໍາພັນຕໍ່ກັນຂອງມະນຸດ ດັ່ງທີ່ສະແດງຢູ່ແຜນວາດ 9. ຜູ້ຕອບຄໍາຖາມເນັ້ນເຖິງຄວາມສໍາຄັນຂອງການ**ເປັນເພື່ອນມິດກັນແລະຄວາມສໍາພັນກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ** ຊຶ່ງເຂົາເຈົ້າຄິດວ່າ ຄວນອີງໃສ່ບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈກັນ, ການໃຫ້ຄວາມເຄົາລົບກັນແລະການຍອມຮັບຄວາມຄິດເຫັນຂອງຄົນອື່ນ. ເຂົາເຈົ້າຄິດວ່າຊຸມຊົນທີ່ມີໂຮງຮຽນຄວນໃຫ້ໝົດທຸກຄົນເຂົ້າມາມີສ່ວນຮ່ວມນໍາໂດຍບໍ່ຈໍາແນກຖານະທາງສັງຄົມ ແລະປະຕິບັດຕໍ່ທຸກຄົນຢ່າງເທົ່າທຽມກັນ. ປັດໄຈສໍາຄັນອີກອັນໜຶ່ງສໍາລັບໂຮງຮຽນໃຫ້ຄວາມສຸກທີ່ຜູ້ຕອບຄໍາຖາມເວົ້າເຖິງ ແມ່ນ**ສະພາບແວດລ້ອມການຮຽນຮູ້ທີ່ອົບອຸ່ນແລະເປັນມິດ** ທັງດ້ານບັນຍາກາດແລະພື້ນຖານໂຄງລ່າງ ຊຶ່ງປະກອບດ້ວຍຊຸມຊົນທີ່ມີໂຮງຮຽນທີ່ປອດໄພ, ສະອາດແລະເປັນສີຂຽວ ປອດຈາກການທະເລາະວິວາດກັນ ໂດຍໃຫ້ມີເນື້ອທີ່ນອກຫ້ອງຮຽນສໍາລັບການຫຼິ້ນ, ກິລາ, ມີອາຫານກິນແຊບຊ້ອຍດີຕໍ່ສຸຂະພາບຢ່າງບໍ່ຕ້ອງຈ່າຍເງິນ. ຜູ້ຕອບຄໍາຖາມຍັງເວົ້າເຖິງ**ຄວາມເປັນອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ**ນໍາອີກ ຊຶ່ງໄດ້ຮັບການກະຕຸ້ນດ້ວຍກິດຈະກໍາສ້າງສັນແລະແບບລົງມືເຮັດ ຊຶ່ງປະກອບດ້ວຍການຮຽນຮູ້ຈາກປະສົບການຢູ່ໃນຫ້ອງຮຽນ ແລະນອກຫ້ອງຮຽນ, ການໄປຢ້ຽມຢາມພາກສະໜາມແລະກິດຈະກໍານອກຫຼັກສູດ. ເຂົາເຈົ້າຄິດວ່າກິດຈະກໍາທີ່ເໝາະສົມຈະເຮັດໃຫ້ຜູ້ຮຽນສາມາດສະແດງຄວາມຄິດເຫັນຂອງຕົນແລະຮຽນຮູ້ຢ່າງອິດສະຫຼະໄດ້ໂດຍບໍ່ຕ້ອງຢ້ານວ່າຈະເຮັດຜິດ ຊຶ່ງໄດ້ແກ່ 'ການຮຽນຮູ້ໂດຍບໍ່ຕ້ອງຢ້ານກົວຫຍັງເລີຍ' ເຮັດໃຫ້ນັກຮຽນເກີດຄວາມຮັກມັກໃນການຮຽນຮູ້ຕາມທໍາມະຊາດ ແລະມີຄວາມກະຕືລືລົ້ນທີ່

ຈະຖາມສິ່ງທີ່ຕົນເອງກຳລັງຮຽນຢູ່ ຂະນະດຽວກັນກໍເປີດພື້ນທີ່ໃຫ້ນັກຮຽນໄດ້ສ້າງຝັນແລະພັດທະນາພອນສະຫວັນຂອງເຂົາເຈົ້າ. ຜູ້ຕອບຄຳຖາມຄິດວ່າ ນັກຮຽນຈຳເປັນຕ້ອງມີຄວາມຮູ້ສຶກຜູກພັນກັນ, ມີເອກະລັກຮ່ວມກັນແລະສິ່ງນີ້ສາມາດສ້າງຂຶ້ນໄດ້ດ້ວຍ**ນ້ຳໃຈການເຮັດວຽກເປັນໝູ່ຄະນະແລະຮ່ວມມືກັນ** ບໍ່ພຽງແຕ່ລະຫວ່າງນັກຮຽນເທົ່ານັ້ນ ແຕ່ລະຫວ່າງນັກຮຽນກັບຄູນຳອີກ. ປັດໄຈນີ້ອີງໃສ່ອີກປັດໄຈໜຶ່ງ ຄື**ທັດສະນະແລະຄຸນສົມບັດດ້ານບວກຂອງຄູ** ຊຶ່ງຜູ້ຕອບຄຳຖາມບອກວ່າແມ່ນຄວາມມີຈິດໃຈດີ, ຄວາມຈູບຈ້າວຫ້າວຫັນແລະຄວາມທ່ຽງທຳ ລວມທັງບົດບາດຂອງຄູໃນການຊ່ວຍໃຫ້ເກີດແຮງບັນດານໃຈ, ຄວາມຄິດສ້າງສັນແລະສຸດທ້າຍກາຍເປັນຕົວຢ່າງຜູ້ທີ່ມີຄວາມສຸກສຳລັບນັກຮຽນ.

***ແຜນວາດ 9.*** *ປັດໄຈອັນດັບຕົ້ນໆສຳລັບໂຮງຮຽນໃຫ້ຄວາມສຸກ*

| 1 | 2 | 3 | 4 | 5 |
|---|---|---|---|---|
| ຄວາມເປັນເພື່ອນມິດກັນແລະຄວາມສຳພັນກັນໃນຊຸມຊົນທີ່ມີໂຮງຮຽນ | ສະພາບແວດລ້ອມການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ | ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ | ມີນ້ຳໃຈໃນການຮຽນແບບໝູ່ຄະນະແລະຮ່ວມມືກັນ | ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ |

ໂດຍລວມແລ້ວຜູ້ຕອບຄຳຖາມ (ໂດຍສະເພາະຜູ້ອຳນວຍການໂຮງຮຽນ) ຄິດວ່າໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ສົ່ງເສີມການພັດທະນາການຂອງຜູ້ຮຽນຢ່າງມີອົງປະກອບຄົບຖ້ວນ ຊຶ່ງປະກອບດ້ວຍຄວາມຢູ່ດີມີສຸກທາງດ້ານຈິດໃຈ, ຮ່າງກາຍແລະຈິດຕະສາດ ທັງໃຫ້ການຊ່ວຍເຫຼືອດ້ານອາລົມຄວາມຮູ້ສຶກ ເພື່ອໃຫ້ເປັນ 'ບ່ອນທີ່ເດັກນ້ອຍສາມາດເຕີບໃຫຍ່ຂະຫຍາຍຕົວໄດ້'. ອີງຕາມນັກຮຽນຊາຍຊັ້ນມັດທະຍົມໃນຍີ່ປຸ່ນຄົນໜຶ່ງ ໂຮງຮຽນໃຫ້ຄວາມສຸກໝາຍເຖິງ 'ການກຳນົດເອົາສິ່ງທີ່ໃຫ້ຄວາມສຸກອັນໜຶ່ງໃນແຕ່ລະມື້ ກ່ອນຈະໄປໂຮງຮຽນ' ຊຶ່ງບົ່ງບອກເຖິງຄວາມສຳຄັນຕໍ່ຄວາມຄິດກ່ຽວກັບລະດັບຄວາມສຸກຂອງນັກຮຽນ.

ການສົມທຽບອີງຕາມພາສາທີ່ໄດ້ທໍາການສໍາຫຼວດໄປນັ້ນ ເຮັດໃຫ້ມີຂໍ້ສັງເກດທີ່ໜ້າສົນໃຈບາງຢ່າງ.[13] ໃນການຕອບຄໍາຖາມວ່າແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ຄໍາຕອບໃຫ້ແກ່ການສໍາຫຼວດທີ່ເຮັດເປັນພາສາຍີ່ປຸ່ນໄດ້ເນັ້ນຫຼາຍກ່ຽວກັບ 'ຄວາມສາມັກຄີປອງດອງກັນ' ຢູ່ໃນໂຮງຮຽນທີ່ເກີດຈາກການ 'ທັກທາຍກັນ' ແລະ 'ຍິ້ມໃຫ້ກັນ' ຊຶ່ງຖືວ່າມີຄວາມສໍາຄັນຫຼາຍ ຕໍ່ການສ້າງສະພາບແວດລ້ອມຂອງການຮຽນຮູ້ແບບເປັນມິດຕໍ່ກັນ. ແນວໃດກໍດີ ຄໍາຕອບສໍາລັບການສໍາຫຼວດເປັນພາສາຈີນຊີ້ໃຫ້ເຫັນວ່າ ໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ນັກຮຽນມີອິດສະຫຼະ ແລະມີຄວາມກົດດັນໜ້ອຍຈາກການສອບເສັງ ສ່ວນຄໍາຕອບສໍາລັບການສໍາຫຼວດເປັນພາສາເກົາຫຼີບອກວ່າ ໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ໃຫ້ຜູ້ຮຽນມີອິດສະຫຼະທີ່ຈະໄຝ່ຝັນແລະເປັນບ່ອນທີ່ປອດຈາກການທະເລາະວິວາດກັນ. ຄໍາຕອບສໍາລັບການສໍາຫຼວດເປັນພາສາຣັດເຊຍແລະໄທນັ້ນ ຊໍ້າພັດເນັ້ນເປັນພິເສດກ່ຽວກັບຄວາມສໍາຄັນຂອງຄວາມມີລະບຽບວິໄນ, ກົດເກນແລະນັກຮຽນທີ່ປະພຶດດີ.

ລະຫວ່າງຜູ້ຕອບຄໍາຖາມທີ່ເປັນເພດຊາຍ-ຍິງນັ້ນ ສັງເກດໄດ້ວ່າບໍ່ມີຄວາມແຕກຕ່າງກັນຫຼາຍ ໂດຍທັງສອງກຸ່ມນີ້ມີສີ່ໃນຫ້າມາດຖານໃນອັນດັບຕົ້ນໆທີ່ຄ້າຍຄືກັນ. ການວິເຄາະຄໍາຕອບຂອງຜູ້ທີ່ມີສ່ວນຮ່ວມປະເພດຕ່າງໆໃນລະດັບໂຮງຮຽນນັ້ນ ພົບວ່າຜູ້ທີ່ມີສ່ວນຮ່ວມໝົດທຸກກຸ່ມ ແລະໂຮງຮຽນໝົດທຸກປະເພດເນັ້ນໃສ່ຄວາມສໍາຄັນໃນການສ້າງຄວາມເປັນເພື່ອນມິດຕໍ່ກັນແລະຄວາມສໍາພັນກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ ທັງໃຫ້ຄວາມສໍາຄັນກ່ຽວກັບສະພາບແວດລ້ອມຂອງການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ. ປັດໄຈຫຼັງນີ້ຖືວ່າມີຄວາມສໍາຄັນເປັນພິເສດສໍາລັບນັກຮຽນ, ຜູ້ອໍານວຍການໂຮງຮຽນແລະຜູ້ຕອບຄໍາຖາມຈາກໂຮງຮຽນທຸກປະເພດ ຍົກເວັ້ນໂຮງຮຽນນາໆຊາດຊຶ່ງເນັ້ນໃສ່ການເຮັດວຽກເປັນໝູ່ຄະນະແລະມີນໍ້າໃຈໃນການຮ່ວມມືກັນຫຼາຍຂຶ້ນ.

13 ເຖິງວ່າບໍ່ມີບົດສະຫຼຸບຈາກແຕ່ລະປະເທດ ນອກຈາກການສໍາຫຼວດທີ່ເຮັດເປັນພາສາອັງກິດແລະການສໍາຫຼວດເປັນພາສາຣັດເຊຍໃນບາງລະດັບ ຜູ້ຕອບຄໍາຖາມເກືອບທັງໝົດທີ່ເຂົ້າຮ່ວມໃນການສໍາຫຼວດທີ່ເຮັດເປັນພາສາຈີນ, ຍີ່ປຸ່ນ, ເກົາຫຼີແລະໄທນັ້ນລ້ວນແຕ່ເປັນຜູ້ທີ່ອາໄສຢູ່ປະເທດເຫຼົ່ານີ້ທັງນັ້ນ.

## ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກ?

ດັ່ງທີ່ສະເໜີໃຫ້ເຫັນຢູ່ໃນແຜນວາດ 10 ຜູ້ຕອບຄຳຖາມຄິດວ່າ ປັດໄຈທີ່ສາມາດເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກນັ້ນ ກ່ຽວຂ້ອງກັບການມີປະຕິສຳພັນຕໍ່ກັນຂອງມະນຸດລະຫວ່າງຜູ້ມີສ່ວນຮ່ວມຢູ່ໃນຊຸມຊົນທີ່ມີໂຮງຮຽນ. ປັດໄຈທີ່ກ່າວເຖິງຫຼາຍທີ່ສຸດແມ່ນ**ສະພາບແວດລ້ອມທີ່ບໍ່ປອດໄພອັນເກີດຈາກການທະເລາະວິວາດກັນ** ໂດຍມີການໃຊ້ຄວາມຮຸນແຮງຢູ່ໃນໂຮງຮຽນ ຍ້ອນນັກຮຽນບໍ່ໃຫ້ຄວາມເຄົາລົບຕໍ່ກັນ. ປັດໄຈນີ້ເຊື່ອມໂຍງກັບປະເດັນອື່ນໆ ເຊັ່ນ: ຄວາມຢ້ານກົວ, ຄວາມວິຕົກກັງວົນ, ຄວາມໂດດດ່ຽວປ່ຽວໃຈແລະການປະເມີນຕົນເອງຕ່ຳຂອງຜູ້ຮຽນ. ປັດໄຈສຳຄັນອີກອັນໜຶ່ງ ຊຶ່ງຜູ້ຕອບຄຳຖາມຈາກໝົດທຸກກຸ່ມຂອງຜູ້ທີ່ມີສ່ວນຮ່ວມເວົ້າເຖິງສິ່ງທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກນັ້ນແມ່ນ**ພາລະການຮຽນຫຼາຍແລະຄວາມທຸກໃຈຍ້ອນການສອບເສັງເອົາຄະແນນ** ເຊັ່ນ: ການບັງຄັບໃຫ້ຮຽນເປັນເວລາດົນນານແລະຄວາມບໍ່ສົມດຸນກັນລະຫວ່າງການຮຽນກັບການຫຼິ້ນ ລວມທັງການທ່ອງໃຫ້ຈຳແທນທີ່ຈະໃຫ້ເຂົ້າໃຈສິ່ງທີ່ຮຽນ ເພາະຕ້ອງໃຫ້ໄດ້ຄະແນນດີໃນການສອບເສັງ. ອີງຕາມຄູຄົນໜຶ່ງຈາກອິນໂດນີເຊຍ ພາລະການຮຽນຫຼາຍແລະຄວາມທຸກໃຈເກີດຈາກການ 'ເນັ້ນໃສ່ມາດຕະຖານ, ເນັ້ນວັດຄວາມສາມາດແລະຜົນຂອງການຮຽນ ແທນທີ່ຈະເນັ້ນໃສ່ຄວາມເປັນມະນຸດ'.

ປັດໄຈຕໍ່ໄປທີ່ຜູ້ຄົນກ່າວເຖິງຫຼາຍທີ່ສຸດ ຊຶ່ງເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໃຫ້ຄວາມສຸກແມ່ນ**ສະພາບແວດລ້ອມຂອງການຮຽນຮູ້ແລະບັນຍາກາດທີ່ບໍ່ດີຢູ່ໃນໂຮງຮຽນ** ໂດຍມີການເວົ້າເຖິງຫຼາຍທີ່ສຸດ ໃນດ້ານການເຂົ້າໃຈແຈ້ງກ່ຽວກັບບັນຫາແລະການປະພຶດຕ່າງໆ ຕົວຢ່າງ: ຄວາມຮູ້ສຶກກົດດັນຈິດໃຈ, ການເມີນເສີຍ, ຄວາມມືດງຽບ, ລວມທັງ 'ການບໍ່ຍິ້ມໃຫ້ກັນ', ການຂາດຄວາມໄວ້ເນື້ອເຊື່ອໃຈກັນ ແລະຄວາມບໍ່ລົງລອຍກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ. ອີກປັດໄຈໜຶ່ງຕາມທີ່ຍອມຮັບກັນວ່າແມ່ນສິ່ງທີ່ເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໃຫ້ຄວາມສຸກນັ້ນ ແມ່ນ**ທັດສະນະຄະຕິແລະຄຸນສົມບັດດ້ານລົບຂອງຄູ** ຊຶ່ງປະກອບດ້ວຍຄຸນສົມບັດຕ່າງໆ ເຊັ່ນ: ເຂັ້ມງວດ, ບໍ່ມີນ້ຳໃຈ, ບໍ່ມີຄວາມເປັນທຳ, ບໍ່ຊຸກຍູ້ຊ່ວຍເຫຼືອ, ບໍ່ມີຄວາມຈິງໃຈ ແລະໃຊ້ວິທີການສອນແບບເດີມຕາມທີ່ເຄີຍປະຕິບັດກັນມາ. ຕາມມິຕິຂອງນັກຮຽນຊາຍມັດທະຍົມຄົນໜຶ່ງຈາກອິນເດຍ ທັດສະນະຄະຕິແລະຄຸນສົມບັດໝາຍເຖິງ 'ຄູບາງຄົນປະຕິບັດຕົນເໝືອນກັບເປັນສັດຕູ ຊຶ່ງເຮັດໃຫ້ເດັກນ້ອຍຢ້ານກົວຈົນເລີ່ມກຽດຊັງຄູແລະໂຮງຮຽນແຫ່ງນັ້ນໄປເລີຍ'. ບັນຫານີ້ພົວພັນກັບອີກປັດໄຈໜຶ່ງຊຶ່ງຜູ້ທີ່ມີສ່ວນຮ່ວມເວົ້າເຖິງ

ຄື: **ຄວາມສຳພັນທີ່ບໍ່ດີຕໍ່ກັນ**ຢູ່ໃນຊຸມຊົນທີ່ມີໂຮງຮຽນ ບໍ່ວ່າຈະແມ່ນລະຫວ່າງນັກຮຽນແລະຄູດ້ວຍກັນ ຫຼືລະຫວ່າງນັກຮຽນແລະຄູ. ຜູ້ຕອບຄຳຖາມບອກວ່າ ຄວາມບໍ່ໃສ່ໃຈກັນ, ຄວາມເຫັນແກ່ຕົວແລະການຊິງດີຊິງເດັ່ນກັນແມ່ນລັກສະນະຂອງຄວາມສຳພັນທີ່ບໍ່ດີຕໍ່ກັນ. ໂດຍລວມແລ້ວ ປັດໄຈທີ່ເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໃຫ້ຄວາມສຸກທີ່ສຸດນັ້ນ ໂດຍພື້ນຖານແລ້ວ ເກີດຈາກຄົນເຮົາແລະການປະພຶດຂອງເຂົາເຈົ້ານັ້ນເອງ ທີ່ເປັນຕົວກຳນົດປັດໄຈທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກ.

***ແຜນວາດ 10:*** *ປັດໄຈອັນດັບຕົ້ນທ້າຍຢ່າງສຳລັບໂຮງຮຽນທີ່ບໍ່ໃຫ້ຄວາມສຸກ*

1. ສະພາບແວດລ້ອມທີ່ບໍ່ປອດໄພຊຶ່ງພາໃຫ້ເກີດການທະເລາະວິວາດກັນ
2. ປະລິມານການຮຽນຫຼາຍແລະຄວາມທຸກໃຈຍ້ອນການສອບເສັງເອົາຄະແນນ
3. ສະພາບແວດລ້ອມຂອງການຮຽນຮູ້ແລະບັນຍາກາດບໍ່ດີຢູ່ໃນໂຮງຮຽນ
4. ທັດສະນະຄະຕິແລະຄຸນສົມບັດດ້ານລົບຂອງຄູ
5. ຄວາມສຳພັນທີ່ບໍ່ດີຕໍ່ກັນ

ຄຳຕອບສຳລັບການສຳຫຼວດເປັນພາສາຍີ່ປຸ່ນລະບຸຢ່າງຊັດເຈນກ່ຽວກັບໂຮງຮຽນທີ່ບໍ່ໃຫ້ຄວາມສຸກ ວ່າແມ່ນສະຖານທີ່ຊຶ່ງມີສະພາບແວດລ້ອມແລະບັນຍາກາດຂອງການຮຽນຮູ້ທີ່ບໍ່ດີຢູ່ໃນໂຮງຮຽນ ຊຶ່ງສະແດງອອກໃຫ້ເຫັນດ້ວຍ 'ອາລົມທີ່ຫົດຫູ່ສິ້ນຫວັງ', 'ຄວາມມິດງຽບ', 'ບໍ່ມີການຍິ້ມໃຫ້ກັນ' ແລະຄວາມບໍ່ສົນໃຈຄົນອື່ນ. ຄຳຕອບສຳລັບການສຳຫຼວດເປັນພາສາຣັດເຊຍ ມີທ່າອ່ຽງທີ່ຈະເນັ້ນໃສ່ຄວາມສຳພັນກັນລະຫວ່າງຜູ້ທີ່ມີສ່ວນຮ່ວມຫຼາຍກວ່າ ທັງມີຄວາມຈຳເປັນຕ້ອງປັບປຸງການສື່ສານກັນແລະໃຫ້ພໍ່ແມ່ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ. ໃນບັນດາກຸ່ມຜູ້ທີ່ມີສ່ວນຮ່ວມແລະປະເພດໂຮງຮຽນທັງໝົດ ຜູ້ຕອບຄຳຖາມສ່ວນໃຫຍ່ຄິດວ່າປັດໄຈສອງຢ່າງທີ່ເປັນຕົວຕັດສິນຫຼາຍທີ່ສຸດ ຊຶ່ງມີແນວໂນ້ມເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໃຫ້ຄວາມສຸກນັ້ນ ແມ່ນສະພາບແວດລ້ອມທີ່ບໍ່ປອດໄພ ຊຶ່ງເຮັດໃຫ້ນັກຮຽນຕົກເປັນຜູ້ຮັບເຄາະຈາກການທະເລາະວິວາດກັນ, ພາລະການຮຽນຫຼາຍແລະຄວາມທຸກໃຈ. ໂຮງຮຽນຂອງລັດເນັ້ນໃສ່ຄວາມສຳຄັນຂອງສະພາບແວດລ້ອມ ແລະບັນຍາກາດການຮຽນຮູ້ທີ່ບໍ່ດີ ລວມທັງສະພາບແວດລ້ອມທີ່ບໍ່ປອດໄພ ຊຶ່ງເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກ ສ່ວນໂຮງຮຽນນາໆຊາດຊ້ຳພັດບອກຢູ່ໃນລາຍການວ່າ ການນຳພາທີ່ບໍ່ດີແມ່ນປັດໄຈສຳຄັນ ຊຶ່ງແມ່ນປັດໄຈໜຶ່ງທີ່ຜູ້ຕອບຄຳຖາມຈາກໂຮງຮຽນປະເພດອື່ນໆບໍ່ໄດ້ລາຍງານວ່າ ມີຄວາມສຳຄັນ.

## ແມ່ນຫຍັງທີ່ສາມາດເຮັດໃຫ້ການຮຽນການສອນມີຄວາມມ່ວນຊື່ນແລະສະໜຸກສະໜານ?

ໃນບັນດາກຸ່ມທັງໝົດ ປັດໄຈຊຶ່ງເປັນທີ່ເຂົ້າໃຈກັນວ່າເປັນສິ່ງທີ່ເຮັດໃຫ້ການຮຽນການສອນມີຄວາມມ່ວນຊື່ນແລະສະໜຸກສະໜານນັ້ນ ເກີດຈາກການຈັດປະເພດກ່ຽວກັບຂະບວນການແລະຜູ້ຄົນ ດັ່ງທີ່ລະບຸຢູ່ໃນແຜນວາດ 11. ປັດໄຈທີ່ໄດ້ຮັບການກ່າວເຖິງຫຼາຍທີ່ສຸດແມ່ນ**ຄວາມຫຼາກຫຼາຍຂອງວິທີການຮຽນການສອນທີ່ມ່ວນຊື່ນແລະສະໜຸກສະໜານ** ຊຶ່ງຜູ້ຕອບຄຳຖາມໄດ້ໃຫ້ລາຍການກ່ຽວກັບວິທີການຕ່າງໆ ເຊັ່ນ: ການຮຽນຮູ້ໂດຍເນັ້ນໃສ່ໂຄງການຫຼືຈາກປະສົບການ ແລະການສຶກສາແບບຄົ້ນຫາຄວາມຈິງ ຊຶ່ງເປີດໂອກາດໃຫ້ນັກຮຽນນຳໃຊ້ສິ່ງທີ່ຮຽນຮູ້ເຂົ້າໃນຊີວິດປະຈຳວັນ. ດັ່ງທີ່ນາຍຄູຍິງຄົນໜຶ່ງຢູ່ໂຮງຮຽນຂອງລັດຈາກກາຊັກສະຖານ (Kazakhstan) ບອກວ່າ 'ການສອນຄວນເປັນໜ້າສົນໃຈ, ໃຫ້ຄວາມມ່ວນຊື່ນ, ມີສາລະແລະມີຊີວິດຊີວາ'. ຜູ້ຕອບຄຳຖາມຈາກໝົດທຸກກຸ່ມຍັງໄດ້ໃຫ້ຄວາມສຳຄັນຢ່າງສູງກ່ຽວກັບ**ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ** ທັງເນັ້ນຢ້ຳວ່າຜູ້ຮຽນຄວນມີອິດສະຫຼະໃນການສະແດງຄວາມຄິດເຫັນທີ່ຫຼາກຫຼາຍຂອງຕົນໂດຍບໍ່ຢ້ານວ່າຖືກຫຼືຜິດ, ບໍ່ຢ້ານວ່າຈະເຮັດຜິດ ແລະມີພື້ນທີ່ພຽງພໍໃນການເຂົ້າຮ່ວມການຮຽນຮູ້ຊຶ່ງຈະກະຕຸ້ນຄວາມໄຝ່ຝັນ, ຄວາມສ້າງສັນແລະຈິນຕະນາການຂອງເຂົາເຈົ້າ. ປັດໄຈອີກອັນໜຶ່ງທີ່ຜູ້ຄົນທົ່ວໄປກ່າວເຖິງແມ່ນການເຮັດ**ວຽກເປັນໝູ່ຄະນະ ແລະມີຈິດໃຈໃນການຮ່ວມມືກັນ** ຊຶ່ງຜູ້ຕອບຄຳຖາມເວົ້າເຖິງຄວາມສຳຄັນກ່ຽວກັບການຮຽນຮູ້ໃນລັກສະນະຮ່ວມມືກັນຂອງຜູ້ຮຽນ. ປັດໄຈຄ້າຍຄືກັນນີ້ແມ່ນ**ການຮຽນຮູ້ເປັນໝູ່ຄະນະລະຫວ່າງຄູແລະນັກຮຽນ** ໂດຍເນັ້ນໃສ່ຄວາມຮ່ວມມືກັນລະຫວ່າງນັກຮຽນແລະຄູ ແລະເນັ້ນໃສ່ຈຸດປະສົງແລະເປົ້າໝາຍທີ່ມີຮ່ວມກັນ. ອີງຕາມນັກຮຽນຍິງຊັ້ນມັດທະຍົມຄົນໜຶ່ງຈາກຍີ່ປຸ່ນ ເລື່ອງນີ້ໝາຍເຖິງ 'ການໃຊ້ເວລາເພື່ອຕິດຕໍ່ພົວພັນຢ່າງໃກ້ຊິດກັນແລະພ້ອມພາກັນເຮັດບາງຢ່າງໃຫ້ສຳເລັດ'. ປັດໄຈນີ້ຂຶ້ນຢູ່ກັບ**ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ**ຢ່າງຫຼວງຫຼາຍ ເພາະວ່າສິ່ງເຫຼົ່ານີ້ເຮັດໃຫ້ຄູມີການຕິດຕໍ່ພົວພັນແລະຮ່ວມມືກັບນັກຮຽນດີຂຶ້ນ.

***ແຜນວາດ 11.*** *ປັດໄຈອັນດັບຕົ້ນຫ້າຢ່າງທີ່ເຮັດໃຫ້ການຮຽນການສອນມ່ວນຊື່ນແລະສະໜຸກສະໜານ*




ການປຽບທຽບກັນຂອງຄຳຕອບທີ່ອີງຕາມພາສາ ພົບວ່ານັກຮຽນທີ່ໃຫ້ຄຳຕອບແກ່ການສຳຫຼວດເປັນພາສາຍີ່ປຸ່ນໃຫ້ທັດສະນະວ່າ 'ການຮຽນຮູ້ທີ່ມ່ວນຊື່ນແລະມີສ່ວນຮ່ວມ' ຖືວ່າແມ່ນສິ່ງທີ່ເຮັດຮ່ວມກັນຫຼາຍແລະປະກອບດ້ວຍກິດຈະກຳຕ່າງໆ ເຊັ່ນ: ການແກ້ໄຂບັນຫາຮ່ວມກັນແລະເຮັດໂຄງການເປັນກຸ່ມ ໂດຍເນັ້ນໃສ່ຄວາມເຊື່ອມໂຍງກັນລະຫວ່າງການຮຽນຮູ້ແລະການຮ່ວມມືກັບຄົນອື່ນ. ດັ່ງທີ່ນັກຮຽນປະຖົມຂອງລັດຜູ້ໜຶ່ງອະທິບາຍວ່າ ອັນນີ້ໝາຍເຖິງ 'ການສຶກສາຮ່ຳຮຽນຮ່ວມກັນໂດຍເຫັນຄວາມສຳຄັນຂອງກັນແລະກັນ'. ກຸ່ມຜູ້ທີ່ມີສ່ວນຮ່ວມ ແລະປະເພດໂຮງຮຽນຕ່າງໆບໍ່ມີຄວາມເຫັນແຕກຕ່າງກັນເລີຍ ເມື່ອເວົ້າເຖິງລະດັບຄວາມສຳຄັນທີ່ມີຕໍ່**ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ** ຊຶ່ງຖືວ່າແມ່ນປັດໄຈໜຶ່ງທີ່ເຮັດໃຫ້ການຮຽນການສອນສະໜຸກສະໜານຫຼາຍຂຶ້ນ. ຜູ້ທີ່ມີສ່ວນຮ່ວມແລະປະເພດໂຮງຮຽນສ່ວນຫຼາຍ ຍົກເວັ້ນຜູ້ອຳນວຍການໂຮງຮຽນຄິດວ່າ **ຄວາມຫຼາກຫຼາຍຂອງວິທີການຮຽນການສອນທີ່ມ່ວນຊື່ນແລະມີສ່ວນຮ່ວມ**ແມ່ນປັດໄຈສຳຄັນທີ່ສຸດຊຶ່ງເຮັດໃຫ້ການຮຽນແລະການສອນສະໜຸກສະໜານ. ເປັນໜ້າສົນໃຈທີ່**ການເຮັດວຽກເປັນໝູ່ຄະນະແລະມີນ້ຳໃຈໃນການຮ່ວມມືກັນ** ຖືກຈັດຢູ່ໃນອັນດັບສູງສຸດສຳລັບພວກນັກຮຽນ ແຕ່ບໍ່ຢູ່ໃນຫ້າປັດໄຈອັນດັບຕົ້ນສຳລັບກຸ່ມອື່ນໆຂອງຜູ້ທີ່ມີສ່ວນຮ່ວມ.

## ສາມາດເຮັດຫຍັງໄດ້ແດ່ເພື່ອໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນຳ?

ລັກສະນະສຳຄັນອັນໜຶ່ງຂອງໂຮງຮຽນໃຫ້ຄວາມສຸກ ແມ່ນການເຮັດໃຫ້ນັກຮຽນທີ່ມີພູມຫຼັງໝົດທຸກປະເພດ ຮູ້ສຶກວ່າເຂົາເຈົ້າເປັນສ່ວນໜຶ່ງຂອງຊຸມຊົນທີ່ມີໂຮງຮຽນ. ຫ້າປັດໄຈອັນດັບຕົ້ນທີ່ເຮັດໃຫ້ຜູ້ຮຽນຮູ້ສຶກວ່າມີສ່ວນຮ່ວມນຳ ສະແດງໃຫ້ເຫັນຢູ່ໃນແຜນວາດ 12. ປັດໄຈທີ່ຜູ້ຕອບຄຳຖາມທັງໝົດທີ່ກ່າວເຖິງຫຼາຍທີ່ສຸດ ໂດຍສະເພາະພວກນັກຮຽນນັ້ນ ແມ່ນ

**ຄຸນຄ່າ, ການປະຕິບັດດ້ານບວກແລະຮ່ວມມືກັນ**ປະກອບດ້ວຍຄວາມຮັກແພງກັນ, ເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ, ຄວາມເອື້ອອາທອນ, ການຍອມຮັບກັນແລະກັນ, ການໃຫ້ຄວາມເຄົາລົບກັນແລະປະສົບການຮ່ວມກັນດ້ວຍການເຮັດວຽກເປັນໝູ່ຄະນະ ແລະການຮ່ວມມືກັນຊຶ່ງເຮັດໃຫ້ເກີດຄວາມຮູ້ສຶກຜູກພັນ ລວມທັງຄວາມເປັນທຳທາງດ້ານໂອກາດ, ການສິດສອນແບບມີສ່ວນຮ່ວມ, ບໍ່ຍອມກົ້ມຫົວໃຫ້ແກ່ຄວາມມີອະຄະຕິຕໍ່ກັນແລະຄວາມບໍ່ຍຸຕິທຳ. ອັນນີ້ກ່ຽວຂ້ອງກັບປັດໄຈອີກອັນໜຶ່ງທີ່ຜູ້ຄົນມັກເວົ້າເຖິງຫຼາຍ ຄື: **ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງ** ຊຶ່ງເວົ້າເຖິງການເຄົາລົບຄວາມແຕກຕ່າງທາງສາດສະໜາ, ວັດທະນະທຳແລະຖານະທາງດ້ານສັງຄົມ-ເສດຖະກິດແລະຈຸດພິເສດທາງເພດ ລວມທັງເຄົາລົບຄວາມສາມາດແລະບໍ່ມີຄວາມສາມາດທີ່ແຕກຕ່າງກັນ.

ຫົວເລື່ອງສຳຄັນອັນໜຶ່ງຊຶ່ງປະກົດໃຫ້ເຫັນຫຼາຍກວ່າບັນຫາອື່ນໆນັ້ນ ແມ່ນຄວາມສຳຄັນຂອງ**ການແບ່ງປັນປະສົບການແລະການເຮັດກິດຈະກຳນອກຫຼັກສູດ** ຊຶ່ງນັກຮຽນສາມາດຮຽນຮູ້ເພື່ອເຮັດວຽກແລະໃຊ້ຊີວິດຮ່ວມກັນດ້ວຍການຫຼິ້ນກິລາ, ງານວັດທະນະທຳ, ເຮັດວຽກກັບຊຸມຊົນຢູ່ເຂດນອກ ແລະເຮັດກິດຈະກຳປະຈຳເດືອນໃນການສ້າງທີມ. ດັ່ງທີ່ນັກຮຽນຍິງຊັ້ນປະຖົມຄົນໜຶ່ງໃນຍີ່ປຸ່ນໄດ້ອະທິບາຍວ່າ ສິ່ງເຫຼົ່ານີ້ແມ່ນ 'ກິດຈະກຳທີ່ເຮັດໃຫ້ທຸກຄົນຍິ້ມ'. ເຖິງວ່າປະສົບການແລະກິດຈະກຳເຫຼົ່ານີ້ ຖືກຍົກມາອ້າງຢູ່ເລື້ອຍໆວ່າກ່ຽວຂ້ອງກັບຄວາມມີປະຕິສຳພັນກັນລະຫວ່າງນັກຮຽນກໍຕາມ ຜູ້ຄົນຍັງເວົ້າເຖິງຄວາມມີປະຕິສຳພັນກັນລະຫວ່າງນັກຮຽນແລະນາຍຄູ ລວມທັງສະມາຊິກຄົນອື່ນໆຢູ່ໃນຊຸມຊົນທີ່ມີໂຮງຮຽນອີກນຳ. ຄວາມຈິງແລ້ວ ຄູມີບົດບາດຕົ້ນຕໍໃນການເຮັດໃຫ້ໂຮງຮຽນມີສ່ວນຮ່ວມຫຼາຍຂຶ້ນ. ດັ່ງທີ່ຄູຜູ້ຊາຍຄົນໜຶ່ງຈາກໂຮງຮຽນເອກະຊົນໃນຟີລິບປິນໄດ້ໃຫ້ທັດສະນະວ່າ 'ຄູແລະໂຮງຮຽນຄວນເນັ້ນໃສ່ຄວາມສຳຄັນຂອງການຍອມຮັບຄວາມຄິດທີ່ແຕກຕ່າງແລະຄວາມຮັກແພງກັນ'. ອັນນີ້ສະແດງໃຫ້ເຫັນຄວາມສຳຄັນຂອງ**ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ** ຊຶ່ງແມ່ນປັດໄຈສຳຄັນອີກອັນໜຶ່ງທີ່ເຮັດໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນຳ. ຜູ້ຕອບຄຳຖາມຍັງເນັ້ນໃຫ້ເຫັນເຖິງຄວາມຈຳເປັນທີ່**ຜູ້ຮຽນຕ້ອງມີອິດສະຫຼະ, ຄວາມສ້າງສັນແລະຄວາມມີສ່ວນຮ່ວມ**ນຳອີກ ເພື່ອໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າ ເຂົາເຈົ້າສາມາດສະແດງຄວາມຄິດເຫັນຂອງຕົນໄດ້ຢ່າງອິດສະຫຼະຢູ່ໃນຫ້ອງໂດຍບໍ່ຢ້ານວ່າຈະຖືກລົງໂທດ ແຕ່ຍັງມີອິດສະຫຼະໃນການຮຽນຮູ້, ການນຶກຄິດແລະເຫັນຄຸນຄ່າຄວາມແຕກຕ່າງດ້ວຍພຶດຕິກຳດ້ານບວກນຳອີກ.

***ແຜນວາດ 12.*** *ປັດໄຈອັນດັບຕົ້ນຫ້າຢ່າງທີ່ເຮັດໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນຳ.*

| 1 | 2 | 3 | 4 | 5 |
|---|---|---|---|---|
| ຄຸນຄ່າແລະການປະຕິບັດທາງບວກແລະມີລັກສະນະຮ່ວມມືກັນ | ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງກັນ | ການແລກປ່ຽນປະສົບການແລະການເຮັດກິດຈະກຳນອກຫຼັກສູດຮ່ວມກັນ | ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ | ຄວາມມີອິດສະຫຼະຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ |

ການວິເຄາະຄວາມແຕກຕ່າງຂອງຄຳຕອບສຳລັບການສຳຫຼວດເປັນພາສາຕ່າງໆພົບວ່າ ຜູ້ຕອບຄຳຖາມເປັນພາສາຈີນມີທ່າອ່ຽງໃນການເຂົ້າໃຈແຈ້ງວ່າ ການເຮັດໃຫ້ນັກຮຽນໝົດທຸກຄົນຮູ້ສຶກວ່າຕົນເອງມີສ່ວນຮ່ວມນຳນັ້ນ ປະກອບດ້ວຍການປະຕິບັດຕໍ່ນັກຮຽນໝົດທຸກຄົນຢ່າງເທົ່າທຽມກັນ ໂດຍບໍ່ຈຳກັດວ່າເຂົາເຈົ້າຈະມີຄວາມສຳເລັດໃນການຮຽນວິຊາຕາມຫຼັກສູດແນວໃດ ໃນຂະນະດຽວກັນກໍຕ້ອງຮັບປະກັນໃຫ້ນັກຮຽນທີ່ເປັນຊົນເຜົ່າສ່ວນນ້ອຍໄດ້ເຂົ້າຮ່ວມທັງຢູ່ໃນຫຼັກສູດແລະພິທີສຳຄັນທາງດ້ານວັດທະນະທຳຂອງໂຮງຮຽນນຳອີກ. ຄຳຕອບສຳລັບການສຳຫຼວດເປັນພາສາຍີ່ປຸ່ນເປັນໄປໃນທິດທາງດຽວກັນ ເໝືອນດັ່ງຄຳຕອບຂອງກຸ່ມທີ່ໃຊ້ພາສານີ້ ທີ່ຕອບຄຳຖາມອື່ນໆ ຄື: ຊີ້ໃຫ້ເຫັນຄວາມສຳຄັນກ່ຽວກັບຄວາມສຳພັນຂອງຄົນເຮົາດ້ວຍການປະຕິບັດຄຸນຄ່າແລະການຮ່ວມມືກັບຄົນອື່ນ ລວມທັງການສ້າງຄວາມເປັນມິດຕໍ່ກັນ. ຜູ້ທີ່ຕອບຄຳຖາມສຳລັບການສຳຫຼວດເປັນພາສາຣັດເຊຍມີແນວໂນ້ມໃນການເຂົ້າໃຈແຈ້ງກ່ຽວກັບການມີສ່ວນຮ່ວມ ໂດຍໂຮງຮຽນຈຳເປັນຕ້ອງຮັບເອົານັກຮຽນທີ່ມີຄວາມບົກຜ່ອງທາງດ້ານຮ່າງກາຍມາເຂົ້າຮຽນນຳ ລວມທັງຮັບປະກັນໃຫ້ໂຮງຮຽນຕ້ອງມີນັກຈິດຕະວິທະຍາແລະນັກທຳສະມາທິນຳອີກ ເພື່ອໃສ່ໃຈຕໍ່ຄວາມຢູ່ດີມີສຸກທາງດ້ານຈິດໃຈແລະອາລົມຄວາມຮູ້ສຶກຂອງນັກຮຽນ ຊຶ່ງເປັນວິທີທີ່ມີອົງປະກອບຄົບຖ້ວນຫຼາຍຂຶ້ນສຳລັບການພັດທະນາການຂອງຜູ້ຮຽນ.

ໂດຍລວມແລ້ວ ຄວາມສຳຄັນຂອງ**ຄຸນຄ່າແລະການປະຕິບັດດ້ານບວກແລະຮ່ວມມືກັນ**ບໍ່ໄດ້ຈຳກັດເພດ, ກຸ່ມຜູ້ທີ່ມີສ່ວນຮ່ວມຫຼືປະເພດໂຮງຮຽນ. ແນວໃດກໍຕາມບັນດານັກຮຽນ ລວມທັງຄູຕ່າງກໍຍົກໃຫ້ປະເດັນນີ້ຢູ່ໃນອັນດັບສູງສຸດ. ຜູ້ທີ່ມີສ່ວນຮ່ວມໝົດທຸກກຸ່ມແລະປະເພດໂຮງຮຽນທັງໝົດ ຍັງໃຫ້ຄວາມສຳຄັນຢ່າງຍິ່ງຕໍ່**ການແລກປ່ຽນປະສົບການກັນ**

**ແລະການເຮັດກິດຈະກຳນອກຫຼັກສູດຮ່ວມກັນ.** ຜູ້ຕອບຄຳຖາມໝົດທຸກປະເພດຈັດໃຫ້**ການເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງກັນ**ຢູ່ໃນອັນດັບສູງ ໂດຍສະເພາະພໍ່ແມ່ນັກຮຽນ, ພະນັກງານຊ່ວຍວຽກໃນໂຮງຮຽນແລະຜູ້ຕອບຄຳຖາມຈາກໂຮງຮຽນເອກະຊົນ. ເຖິງວ່າປະເດັນນີ້ບໍ່ປະກົດຢູ່ໃນຫ້າປັດໄຈລວມອັນດັບຕົ້ນ ແຕ່ກໍຈຳເປັນຕ້ອງມີ**ການບໍລິຫານໂຮງຮຽນແບບປະຊາທິປະໄຕ** ໂດຍທີ່ນັກຮຽນ, ຄູ, ພໍ່ແມ່ນັກຮຽນ ແລະໝົດທຸກຄົນໃນຊຸມຊົນສະແດງຄວາມຄິດເຫັນກ່ຽວກັບການບໍລິຫານໂຮງຮຽນ. ໃນຈຳນວນປັດໄຈທັງໝົດທີ່ຜູ້ຕອບຄຳຖາມຈາກໂຮງຮຽນບາງຊາດສະເໜີມານັ້ນ ເຂົາເຈົ້າໃຫ້ຄວາມສຳຄັນສູງສຸດຕໍ່ບັນຫານີ້ ຊຶ່ງບໍ່ເປັນໄປຕາມສິ່ງທີ່ໂຮງຮຽນປະເພດອື່ນໆຖືວ່າມີຄວາມສຳຄັນຢ່າງຍິ່ງ.

# ຂ. ຜູ້ຄົນ

ດັ່ງທີ່ໄດ້ອະທິບາຍຢູ່ໃນການສະເໜີມາດຖານສຳລັບໂຮງຮຽນໃຫ້ຄວາມສຸກ ຜູ້ຕອບຄຳຖາມຈັດໃຫ້ຄວາມສຳພັນລະຫວ່າງມະນຸດແລະຄວາມມີປະຕິສຳພັນກັນເປັນສິ່ງທີ່ມີຄວາມສຳຄັນຢ່າງຍິ່ງ. ເຖິງວ່າສິ່ງນີ້ສະທ້ອນຢູ່ທົ່ວໄປໃນການຈັດແບ່ງເປັນສາມປະເພດ ຄື: ຜູ້ຄົນ, ຂະບວນການແລະພື້ນທີ່ກໍຕາມ ຜູ້ຄົນກໍຍັງຖືວ່າການຈັດປະເພດກ່ຽວກັບຜູ້ຄົນມີຄວາມສຳຄັນເປັນພິເສດ.

ໝວດນີ້ຈະສຶກສາແຕ່ລະມາດຖານທີ່ໄດ້ສະເໜີຢູ່ຕາຕະລາງ 3 ໃຫ້ລະອຽດຫຼາຍຂຶ້ນ ເພື່ອຄົ້ນຄວ້າມາດຖານເຫຼົ່ານີ້ວ່າໄດ້ຮັບການພິຈາລະນາແນວໃດ ອີງໃສ່ສິ່ງທີ່ຄົ້ນພົບຈາກການວິໄຈ ແລະໃຫ້ຕົວຢ່າງຍຸດທະສາດທີ່ສາມາດນຳໄປໃຊ້ເພື່ອບັນລຸສິ່ງເຫຼົ່ານີ້. ຕົວຢ່າງຕ່າງໆສ່ວນໃຫຍ່ເອົາມາຈາກຄຳຕອບສຳລັບການສຳຫຼວດ, ກອງປະຊຸມວິຊາການຢູ່ທີ່ໂຮງຮຽນແລະການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ທັງເອົາຈາກແຫຼ່ງທີ່ເໝາະສົມນຳອີກ.

## ຄວາມເປັນເພື່ອນມິດກັນແລະຄວາມສຳພັນກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ

ດັ່ງທີ່ໄດ້ລະບຸໄວ້ກ່ອນໜ້ານີ້ ຜູ້ຕອບຄຳຖາມເນັ້ນເປັນພິເສດໃນເລື່ອງຄວາມເປັນເພື່ອນມິດກັນແລະຄວາມສຳພັນກັນ ວ່າເປັນສິ່ງສຳຄັນຢ່າງຍິ່ງໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ, ເຮັດໃຫ້ການຮຽນຮູ້ມ່ວນຊື່ນແລະຮັບປະກັນການມີສ່ວນຮ່ວມ. ຕາມທີ່ສະມາ

ຊີກຜູ້ຊາຍຄົນໜຶ່ງຈາກມະຫາຊົນທົ່ວໄປຢູ່ອິນໂດນີເຊຍບອກວ່າ ໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ 'ເຮັດໃຫ້ມີເວລາທາງສັງຄົມ ຫຼືເວລາຮຽນຮູ້ດ້ານສັງຄົມ ຊຶ່ງຊຸກຍູ້ນັກຮຽນໃຫ້ສ້າງຄວາມເປັນເພື່ອນມິດກັນຢ່າງແໜ້ນແຟ້ນແລະຄວາມສຳພັນກັນທາງດ້ານສະຕິປັນຍາ'. ຜູ້ຕອບຄຳຖາມທີ່ເປັນນັກຮຽນເບິ່ງບັນຫານີ້ທາງດ້ານຄວາມເປັນເພື່ອນມິດກັບໝູ່ເພື່ອນຢູ່ຫ້ອງດຽວກັນ ຫຼືນັກຮຽນຊັ້ນຕ່າງໆແລະຄວາມສຳພັນກັນລະຫວ່າງພວກເຂົາເຈົ້າກັບຄູ. ເຖິງວ່າຄູຈະລາຍງານກ່ຽວກັບເລື່ອງນີ້ວ່າແມ່ນຄວາມສຳພັນກັບນັກຮຽນກໍຕາມ ມາດຖານນີ້ຍັງສະທ້ອນໃຫ້ເຫັນຄວາມຈຳເປັນຕ້ອງສ້າງຄວາມສຳພັນອັນດີ ແລະແໜ້ນແຟ້ນກັບຄະນະບໍລິຫານໂຮງຮຽນນຳອີກ ສິ່ງສຳຄັນທີ່ສຸດຄືໃຫ້ພໍ່ແມ່ນັກຮຽນແລະຊຸມຊົນເຂົ້າມາມີສ່ວນຮ່ວມນຳ. ຕໍ່ໄປມີການໃຫ້ຕົວຢ່າງຍຸດທະສາດບາງຢ່າງທີ່ເປັນໄປໄດ້ເພື່ອເອື້ອອຳນວຍໃຫ້ແກ່ການສ້າງຄວາມສຳພັນເຫຼົ່ານີ້.

**ຊຸກຍູ້ການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນດ້ວຍການເຮັດໃຫ້ໂຮງຮຽນ 'ເປີດຮັບ' ຊຸມຊົນ**

ຢູ່ເຂດສະບານ ອາກິຕະ (ຍີ່ປຸ່ນ) ໂຮງຮຽນຕ່າງໆໃຫ້ຄວາມສຳຄັນເປັນພິເສດກ່ຽວກັບການໃຫ້ຊຸມຊົນທ້ອງຖິ່ນມີສ່ວນຮ່ວມໃນການບໍລິຫານໂຮງຮຽນແລະຮັບປະກັນໃຫ້ເຂົາເຈົ້າເຂົ້າມາມີບົດບາດຢ່າງຫ້າວຫັນ. ຕົວຢ່າງຢູ່ບ້ານ ຮີກາຊິ ນາຣຸເຊະ ອັດຕາການເຂົ້າຮ່ວມຂອງສະມາຄົມພໍ່ແມ່ນັກຮຽນແລະຄູ ມີເຖິງ 120 ເປີເຊັນ ໂດຍມີຜູ້ເຖົ້າຜູ້ແກ່ແລະພີ່ນ້ອງຄົນອື່ນໆເຂົ້າຮ່ວມນຳ ລວມທັງຊາວບ້ານທີ່ຈົດທະບຽນເປັນອາສາສະໝັກໂຮງຮຽນ 18 ເປີເຊັນ (Yamaguchi et. al., 2016). ຢູ່ໂຮງຮຽນປະຖົມ ຢູຊູວະ ຮີກາຊິ (Yuzuwa Higashi) ຈັດໃຫ້ມີກິດຈະກຳການຮຽນຮູ້ຕ່າງໆລະຫວ່າງພໍ່ແມ່ແລະເດັກ ສ່ວນຢູ່ໂຮງຮຽນປະຖົມ ຮີກາຊິ ນາຣຸເຊະ (Higashi Naruse) ອາສາສະໝັກທ້ອງຖິ່ນຈັດໃຫ້ມີບົດຮຽນດ້ານກິລາ. ນອກຈາກນີ້ ຍັງມີນະໂຍບາຍຮັບປະກັນໃຫ້ໂຮງຮຽນເປີດເຈັດວັນຕໍ່ອາທິດ ເພື່ອໃຫ້ພໍ່ແມ່ນັກຮຽນ, ພີ່ນ້ອງຫຼືສະມາຊິກຊຸມຊົນຜູ້ໃດກໍໄດ້ທີ່ຕ້ອງການມາຢ້ຽມຢາມ, ເຂົ້າຮ່ວມກິດຈະກຳແລະໃຫ້ການຊ່ວຍເຫຼືອແກ່ໂຮງຮຽນ (Ibid). ຢູ່ໂຮງຮຽນປະຖົມ ຢູຊູວະ ຮີກາຊິ ກໍມີການປະຕິບັດແບບດຽວກັນນີ້ ດັ່ງທີ່ ຊິນຈິ ຊູຊູກິ (Shinji Suzuki) ຜູ້ອຳນວຍການໂຮງຮຽນໄດ້ໃຫ້ທັດສະນະວ່າ 'ຂ້າພະເຈົ້າເຊື່ອວ່າໂຮງຮຽນຄວນເປັນສະຖານທີ່ເປີດກວ້າງສຳລັບທຸກຄົນ. ດັ່ງນັ້ນ ໂຮງຮຽນຂອງພວກເຮົາຈຶ່ງເປີດຮັບສະມາຊິກຊຸມຊົນຢູ່ຕະຫຼອດເວລາ'.

### ຈັດຕັ້ງສະໂມສອນຫຼືເຮືອນປະກອບດ້ວຍຫຼາຍຊັ້ນຮຽນ

ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ເຮັດວຽກກ່ຽວກັບການສ້າງຄວາມເປັນເພື່ອນມິດກັນຂອງທຸກຊັ້ນຮຽນທີ່ແຕກຕ່າງກັນ ໂດຍເຮັດ 'ເຮືອນ' ນັກຮຽນ ໃສ່ຊື່ດ້ວຍສີຕ່າງກັນ. ນັກຮຽນທີ່ເປັນເຈົ້າຂອງ 'ເຮືອນ' ຫຼັງໜຶ່ງຈະນັ່ງລວມກັນເປັນກຸ່ມຢູ່ໃນເຮືອນນັ້ນ ແລະໃສ່ໝວກທີ່ເປັນສີເຮືອນຂອງຕົນລະຫວ່າງພັກຜ່ອນກິນເຂົ້າທ່ຽງ. ການເຮັດແບບນີ້ເຮັດໃຫ້ເຂົາເຈົ້າມີໂອກາດທີ່ຈະຮຽນຮູ້ນຳນັກຮຽນຄົນອື່ນໆທີ່ມີອາຍຸແຕກຕ່າງກັນ. ອີງຕາມຜູ້ຊ່ຽວຊານ ການຈັດກຸ່ມນັກຮຽນຈາກຫຼາຍຊັ້ນຮຽນສາມາດກະຕຸ້ນຄວາມສຳພັນລະຫວ່າງນັກຮຽນຄ້າຍກັບວ່າເປັນຍາດຕິພີ່ນ້ອງກັນ ສະນັ້ນ ອັນນີ້ຈະເປັນການສ້າງສະພາບແວດລ້ອມລັກສະນະແບບຄອບຄົວຢູ່ໃນໂຮງຮຽນ (Hough, 2015).

### ປະຕິບັດກິດຈະກຳກັບໂຮງຮຽນອື່ນໆຢູ່ໃນຊຸມຊົນໃຫ້ກວ້າງອອກ

ຢູ່ເທດສະບານ ອາກິຕະ (ຍີ່ປຸ່ນ) ບ້ານແລະໂຮງຮຽນປະຕິບັດກິດຈະກຳຕ່າງໆທີ່ອອກແບບມາເພື່ອສົ່ງເສີມຄວາມເປັນເພື່ອນມິດກັນແລະຄວາມສຳພັນອັນດີຕໍ່ກັນ ລະຫວ່າງນັກຮຽນຈາກໂຮງຮຽນຕ່າງໆຢູ່ໃນຊຸມຊົນໃຫ້ກວ້າງອອກ. ຕົວຢ່າງຢູ່ບ້ານ ຮິກະຊິ ນາຣຸເຊະ ມີໂຄງການເພື່ອສົ່ງເສີມການສຶກສາຂອງເມືອງທີ່ເປັນບ້ານເກີດ ໂດຍໃຫ້ນັກຮຽນແລະຄູມີສ່ວນຮ່ວມໃນການຮຽນຮູ້ກັບສະມາຊິກຊຸມຊົນທ້ອງຖິ່ນ ດ້ວຍການປູກດອກໄມ້ຮ່ວມກັນ, ເຂົ້າຮ່ວມຫຼິ້ນກິລາແລະຫຼິ້ນເກມຕ່າງໆນຳກັນ. ດັ່ງທີ່ ທາກາຊິ ຊູຣູໄກ (Takashi Tsurukai) ຫົວໜ້າຄະນະບໍລິຫານການສຶກສາຢູ່ບ້ານ ຮິກະຊິ ນາຣຸເຊະ ອະທິບາຍວ່າ ກິດຈະກຳເຫຼົ່ານີ້ມີຈຸດມຸ່ງໝາຍ 'ເພື່ອໃຫ້ໂອກາດແກ່ນັກຮຽນໄດ້ສ້າງສາຍສຳພັນກັບນັກຮຽນຈາກຊັ້ນຮຽນທີ່ແຕກຕ່າງໆກັນ'.

## ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ

ໃນຈຳນວນມາດຖານທຸກຢ່າງທີ່ກ່ຽວຂ້ອງກັບຄູນັ້ນ ຄວາມຈຳເປັນທີ່ຄູຕ້ອງມີທັດສະນະຄະຕິ ແລະຄຸນສົມບັດດ້ານບວກມີຄວາມສຳຄັນຢ່າງຍິ່ງສຳລັບໂຮງຮຽນໃຫ້ຄວາມສຸກ. ນັກຮຽນເນັ້ນຢ້ຳເປັນພິເສດກ່ຽວກັບເລື່ອງນີ້ ແລະຍັງມີພໍ່ແມ່ນັກຮຽນແລະຄູນຳອີກ. ດັ່ງທີ່ນັກຮຽນຊາຍຄົນໜຶ່ງຈາກໂຮງຮຽນຂອງລັດຢູ່ຟີລິບປິນບອກວ່າ 'ອາຈານບໍ່ຄວນເຂັ້ມງວດຫຼືກົດດັນພວກນັກຮຽນ ເວລາມີການສອບເສັງ, ເວລາເຮັດໂຄງການຫຼືເຮັດກິດຈະກຳ. ຂ້ອຍຮູ້ວ່າອາຈານບາງຄົນສາມາດປ່ອຍນັກຮຽນຂອງຕົນຮຽນໂດຍບໍ່ຕ້ອງກົດດັນເຂົາເຈົ້າ ທັດສະນະ

ຄະຕິຂອງຄູມີຄວາມສຳຄັນຢ່າງຍິ່ງຕໍ່ນັກຮຽນ’. ພໍ່ຂອງນັກຮຽນຄົນໜຶ່ງຈາກ ເກຍຣ໌ກິສຖານ (Kyrgyzstan) ອະທິບາຍກ່ຽວກັບທັດສະນະຄະຕິແລະຄຸນສົມບັດປະເພດຕ່າງໆທີ່ຄູຈຳເປັນຕ້ອງມີ ໂດຍບອກວ່າມີຄວາມສຳຄັນທີ່ ‘ຄູຕ້ອງເປັນຄົນຈູບຈ້າວຫ້າວຫັນ, ຄິດບວກ, ໃຫ້ກຳລັງໃຈແກ່ນັກຮຽນ, ມີປະຕິສຳພັນດີ ທັງເປັນຜູ້ຄິດຫາສິ່ງໃໝ່ໆແລະມ່ວນຊື່ນເບີກບານ’. ແມ່ນັກຮຽນຄົນໜຶ່ງຈາກ ອອສ໌ເຕຣເລຍ ຍັງລະບຸປະເດັນກ່ຽວກັບການຮັບເອົາແລະເລືອກເອົາຄູເຂົ້າມາເຮັດວຽກນຳອີກ ໂດຍບອກວ່າ ‘ຄວາມບໍ່ສອດຄ່ອງກັນລະຫວ່າງບຸກຄະລິກກັບບົດບາດການສອນ’ ມີຢູ່ຕະຫຼອດເວລາ. ຄູຜູ້ຊາຍຄົນໜຶ່ງຈາກໂຮງຮຽນສອນສາດສະໜາຢູ່ຟີລິບປິນເວົ້າແບບດຽວກັນວ່າ ປັດໄຈໜຶ່ງທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກ ແມ່ນຄວາມສຳພັນລະຫວ່າງຄູກັບນັກຮຽນເປັນລັກສະນະ ‘ຂ້ອຍສອນ ເຈົ້າຟັງ’. ຕໍ່ໄປແມ່ນການໃຫ້ຕົວຢ່າງຍຸດທະສາດເພື່ອຈະນຳໄປສົ່ງເສີມທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູຫຼາຍຂຶ້ນ.

**ສ້າງຄວາມຮູ້ສຶກແບບຄອບຄົວຢູ່ໃນສະພາບແວດລ້ອມຂອງໂຮງຮຽນ**

ບາງໂຮງຮຽນພົບວ່າ ການເຮັດໃຫ້ສະພາບແວດລ້ອມຂອງໂຮງຮຽນຄ້າຍຄືກັບບັນຍາກາດໃນຄອບຄົວພາໃຫ້ເກີດຜົນທີ່ຕາມມາຢ່າງໃຫຍ່ຫຼວງຕໍ່ການສ້າງຄວາມສຳພັນອັນດີລະຫວ່າງຄູກັບນັກຮຽນ. ຕົວຢ່າງໂຮງຮຽນມັດທະຍົມສາທິດ (ປະເທດໄທ) ມີຈຸດມຸ່ງໝາຍໃນການເຮັດສິ່ງນີ້. ເຄິ່ງໜຶ່ງຂອງຈຳນວນນັກຮຽນຢູ່ໃນໂຮງຮຽນແມ່ນຍາດຕິພີ່ນ້ອງຂອງພະນັກງານທີ່ເຮັດວຽກຢູ່ມະຫາວິທະຍາໄລຈຸລາລົງກອນ ດັ່ງນັ້ນ ການເຮັດແບບນີ້ເຮັດໃຫ້ຄູປະຕິບັດຕໍ່ນັກຮຽນໝົດທຸກຄົນຄ້າຍກັບວ່າເປັນລູກ ຫຼືຍາດຕິພີ່ນ້ອງຂອງຕົນເອງ ແລະໃຫ້ຄວາມສຳຄັນຕໍ່ພວກເຂົາເຈົ້າເທົ່າທຽມກັນ. ເຖິງຈະບໍ່ສາມາດປະຕິບັດແບບດຽວກັນນີ້ຢູ່ໂຮງຮຽນລະດັບປານກາງກໍຕາມ ແຕ່ກໍເປັນໄປໄດ້ທີ່ຈະສົ່ງເສີມບັນຍາກາດແບບຄອບຄົວຫຼາຍຂຶ້ນຢູ່ໃນໂຮງຮຽນ ຊຶ່ງເຮັດໃຫ້ຄູມີທັດສະນະຄະຕິດ້ານບວກ ລວມທັງຊຸມຊົນໃນວົງກວ້າງນຳອີກ.

**ໃຫ້ຄວາມສຳຄັນດ້ານລັກສະນະສ່ວນຕົວ, ທັດສະນະຄະຕິແລະຈັນຍາບັນໃນການຮັບເອົາຄູເຂົ້າເຮັດວຽກແລະການປະເມີນຜົນຄູ**

ເຖິງວ່າເລື່ອງນີ້ອາດນຳໃຊ້ໃນລະດັບນະໂຍບາຍຫຼາຍກວ່າທາງດ້ານການສຶກສາແລະການຢັ້ງຢືນຄຸນວຸທິຂອງຄູກໍຕາມ ບັນຫານີ້ສາມາດນຳໄປປະຍຸກໃຊ້ໃນລະດັບບໍລິຫານໂຮງຮຽນ. ການສຶກສາຄົ້ນຄວ້າຂອງອົງການຢູເນສໂກກ່ຽວກັບການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນ

ພົບວ່າໃນບາງປະເທດ ການຝຶກອົບຮົມຄູມີວິຊາກ່ຽວກັບດ້ານບຸກຄະລິກຂອງຄູ, ລັກສະນະສ່ວນຕົວແລະມີການປະເມີນຜູ້ຝຶກຫັດທີ່ຈະເປັນຄູທາງດ້ານນີ້ ເພື່ອໃຫ້ໄດ້ຮັບໃບປະກາດສະນີຍະບັດດ້ານການສອນຂອງເຂົາເຈົ້າ (UNESCO, 2014). ແບບດຽວກັນນີ້ ການປະເມີນຜົນຄູບໍ່ວ່າຈະເນັ້ນໃສ່ດ້ານໃດກໍແລ້ວແຕ່ ຈະຕ້ອງປະກອບດ້ວຍ**ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ**ແລະນັກຮຽນວ່າ ເຂົາເຈົ້າມີຄວາມປະພຶດດີແນວໃດ ແທນທີ່ຈະເນັ້ນໃສ່ວ່າຜົນການສອບເສັງຂອງນັກຮຽນເຂົາເຈົ້າດີແນວໃດ.

**ສ້າງລະບົບເພື່ອໃຫ້ໂອກາດແກ່ນັກຮຽນໄດ້ສະແດງຄວາມຄິດເຫັນໃຫ້ແກ່ຄູ**

ສະຖາບັນກ່ຽວກັບໂຮງຮຽນທົດລອງວິທະຍາສາດການສຶກສາ (ຫວຽດນາມ) ໄດ້ກະກຽມແລະສົ່ງມອບການສຳຫຼວດອັນໜຶ່ງໃຫ້ ໂດຍມີຈຸດປະສົງກະກຽມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ເພື່ອບອກວ່ານັກຮຽນໄດ້ສະແດງຄວາມຄິດເຫັນວ່າ ແມ່ນຫຍັງຄືອົງປະກອບສຳຄັນທີ່ສຸດຂອງໂຮງຮຽນໃຫ້ຄວາມສຸກ. ການສຳຫຼວດໄດ້ລະບຸປັດໄຈສຳຄັນທີ່ສຸດສອງຢ່າງ ຄື: 'ຄູຕ້ອງເປັນຄົນຈູບຈ້າວຫ້າວຫັນແລະຮັບຟັງນັກຮຽນ' ແລະມີ 'ຄວາມສຳພັນອັນດີໂດຍບໍ່ໃຊ້ຄວາມຮຸນແຮງ'. ດັ່ງນັ້ນ ຢູ່ໃນການສະເໜີຂອງຜູ້ຕາງໜ້າຈາກສະຖາບັນກ່ຽວກັບໂຮງຮຽນທົດລອງວິທະຍາສາດການສຶກສາຂອງຫວຽດນາມ ບອກວ່າຄູຈຳເປັນຕ້ອງ 'ສອນນັກຮຽນດ້ວຍຄວາມຈູບຈ້າວຫ້າວຫັນຢ່າງແທ້ຈິງ, ເຮັດໃຫ້ເຂົາເຈົ້າເກີດແຮງບັນດານໃຈແລະໃຫ້ກຳລັງໃຈແກ່ເຂົາເຈົ້າຢູ່ຕະຫຼອດເວລາ'. ໂຮງຮຽນຊຸກຍູ້ໃຫ້ເກີດຄວາມເຄົາລົບກັນແລະກັນ, ການສື່ສານກັນລະຫວ່າງຄູແລະນັກຮຽນ ລວມທັງຄວາມເປັນເພື່ອນມິດກັນລະຫວ່າງຄູແລະພໍ່ແມ່ນັກຮຽນ. ກ່ຽວກັບຕົວຢ່າງອັນນີ້ ຈຶ່ງໄດ້ມີການກະກຽມການສຳຫຼວດຄັ້ງນີ້ເພື່ອຈຸດປະສົງຂອງການສຳມະນາ ສ່ວນການສຳຫຼວດຕ່າງໆ ໄດ້ສະເໜີຄວາມຄິດເຫັນແລະຄວາມຈຳເປັນເພື່ອເປັນແນວທາງທີ່ເປັນປະໂຫຍດແກ່ນັກຮຽນ ໃນການສະແດງຄວາມຄິດເຫັນໃຫ້ແກ່ຄູຂອງພວກຕົນ ໃນຂະນະດຽວກັນກໍເປີດໂອກາດໃຫ້ນັກຮຽນເຂົ້າຮ່ວມການຮຽນຮູ້ແບບຊອກຫາຄວາມຈິງ. ວິທີນີ້ຍັງສາມາດນຳໄປໃຊ້ໄດ້ຢ່າງກວ້າງຂວາງຫຼາຍຂຶ້ນ ເພື່ອລະບຸມິຕິຕ່າງໆຂອງຜູ້ທີ່ມີສ່ວນຮ່ວມອື່ນໆພາຍໃນຊຸມຊົນທີ່ມີໂຮງຮຽນ. ຍຸດທະສາດນີ້ຍັງຊ່ວຍເສີມມາດຖານຕ່າງໆ ເຊັ່ນ: ໃຫ້ນັກຮຽນມີ**ຄວາມມ່ວນຊື່ນແລະວິທີການຮຽນຮູ້ແບບມີສ່ວນຮ່ວມຫຼາຍຢ່າງທີ່ແຕກຕ່າງກັນ** ເຮັດໃຫ້ມີ**ການບໍລິຫານໂຮງຮຽນແບບປະຊາທິປະໄຕ.**

## ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງກັນ

**ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງກັນ**ແມ່ນປັດໄຈອີກອັນໜຶ່ງທີ່ຜູ້ຕອບຄຳຖາມໃຫ້ແກ່ການສຳຫຼວດມັກກ່າວເຖິງຢູ່ເລື້ອຍໆວ່າ ມີຄວາມສຳຄັນຫຼາຍສຳລັບໂຮງຮຽນໃຫ້ຄວາມສຸກ. ຜູ້ທີ່ມີສ່ວນຮ່ວມໝົດທຸກຄົນເຫັນວ່າ ໂຮງຮຽນຕ້ອງປະກອບດ້ວຍສິ່ງຈຳເປັນ, ຄວາມສາມາດແລະປະຫວັດຄວາມເປັນມາທີ່ແຕກຕ່າງກັນ ບໍ່ວ່າຈະເປັນດ້ານວັດທະນະທຳ, ຊົນເຜົ່າຕ່າງໆ, ສາດສະໜາ, ພາວະທາງເພດ, ເອກະລັກພາວະທາງເພດ, ຄວາມບົກຜ່ອງ ແລະຄວາມຫຍຸ້ງຍາກທາງຮ່າງກາຍແລະການຮຽນຮູ້. ຜູ້ທີ່ມີສ່ວນຮ່ວມຍັງຊີ້ໃຫ້ເຫັນຄວາມຈຳເປັນຕ້ອງຍົກເລີກການແຂ່ງຂັນແລະສິ່ງທີ່ນັກຮຽນເທົ່າກັນ ຊຶ່ງສາມາດແກ້ໄຂໄດ້ດ້ວຍການຊຸກຍູ້ການເຮັດວຽກເປັນໝູ່ຄະນະແລະດ້ວຍການຮ່ວມມືກັນຫຼາຍຂຶ້ນ. ດັ່ງທີ່ສະມາຊິກຍິງຄົນໜຶ່ງຈາກມະຫາຊົນທົ່ວໄປຂອງອິນເດຍໄດ້ໃຫ້ຂໍ້ຄິດຕໍ່ເລື່ອງນີ້ວ່າ ໂຮງຮຽນຈຳເປັນຕ້ອງ 'ຊຸກຍູ້ການມີສ່ວນຮ່ວມຂອງນັກຮຽນໝົດທຸກຄົນ, ຈັດໃຫ້ມີການສົນທະນາກັນກ່ຽວກັບວັດທະນະທຳແລະປະຫວັດຄວາມເປັນມາຕ່າງໆຢູ່ໃນຫ້ອງ ເພື່ອສ້າງຈິດສຳນຶກກ່ຽວກັບຄວາມແຕກຕ່າງແລະສິ່ງທີ່ມີຮ່ວມກັນ ທັງສົ່ງເສີມການເຮັດວຽກເປັນໝູ່ຄະນະ ແລະມີການຮ່ວມມືກັນໃນການເຮັດໂຄງການຕ່າງໆ'. ການຮັບປະກັນໃຫ້ເຄົາລົບຄວາມຫຼາກຫຼາຍ ແລະຄວາມແຕກຕ່າງກັນນັ້ນເຊື່ອມໂຍງກັບມາດຖານຕ່າງໆ ເຊັ່ນ: **ເນື້ອໃນການຮຽນຮູ້ທີ່ເປັນປະໂຫຍດ, ສອດຄ່ອງກັບຊີວິດຈິງແລະມີສ່ວນຮ່ວມ, ວິທີການຮຽນການສອນທີ່ມ່ວນຊື່ນແລະມີສ່ວນຮ່ວມ, ທັດສະນະຄະຕິແລະຄຸນສົມບັດດ້ານບວກຂອງຄູ.** ຍຸດທະສາດຕໍ່ໄປນີ້ໃຫ້ບາງຕົວຢ່າງກ່ຽວກັບວ່າ ມາດຖານນີ້ສາມາດໄດ້ຮັບການສົ່ງເສີມໄດ້ແນວໃດ.

**ສົ່ງເສີມຄວາມຮູ້ກ່ຽວກັບວັດທະນະທຳອື່ນໆທັງໃນ ແລະນອກສະພາບເງື່ອນໄຂຂອງໂຮງຮຽນ**

ຢູ່ສະຖາບັນກ່ຽວກັບໂຮງຮຽນທົດລອງວິທະຍາສາດການສຶກສາ (ຫວຽດນາມ) ພິທີສຳຄັນຕ່າງໆ ເຊັ່ນ: ການສະແດງຟ້ອນແລະຫຼິ້ນດົນຕີດັ້ງເດີມຖືກຈັດຂຶ້ນເປັນປະຈຳ ເພື່ອສະຫຼອງບຸນຂອງຊົນເຜົ່າສ່ວນນ້ອຍຢູ່ໃນຫວຽດນາມ ທັງເພີ່ມທະວີຈິດສຳນຶກກ່ຽວກັບຄວາມຫຼາກຫຼາຍທາງວັດທະນະທຳພາຍໃນປະເທດ. ໂຮງຮຽນອື່ນໆຢູ່ພາກພື້ນອາຊີ-ປາຊີຟິກສ້າງຈິດສຳນຶກກ່ຽວກັບຄວາມຫຼາກຫຼາຍແລະຄວາມແຕກຕ່າງກັນ ດ້ວຍການແລກປ່ຽນວັດທະນະທຳລະຫວ່າງປະເທດ, ຜູກສຳພັນລະຫວ່າງສອງໂຮງຮຽນແລະທັດສະນະສຶກສາຢູ່ພາກສະໜາມ ເຖິງວ່າກິດຈະກຳດັ່ງກ່າວນີ້ຕ້ອງໃຊ້ງົບປະມານຂອງໂຮງຮຽນຫຼາຍຂຶ້ນຢ່າງຫຼີກລ່ຽງບໍ່

ໄດ້ກໍຕາມ. ຕົວຢ່າງຢູ່ໂຮງຮຽນປະຖົມ ແດກູ ກາຈັງ (Daegu Gachang) (ສາທາລະນະລັດເກົາຫຼີ) ຈັດໃຫ້ມີໂຄງການສ້າງຄວາມເຂົ້າໃຈກັນ ດ້ວຍການແລກປ່ຽນວັດທະນະທຳ, ການຕັ້ງແຄັມລະດັບໂລກແລະໂຄງການແລກປ່ຽນລະຫວ່າງປະເທດ ຊຶ່ງເຮັດໃຫ້ນັກຮຽນໄດ້ສ້າງຄວາມເຂົ້າໃຈປະເທດອື່ນແລະວັດທະນະທຳອື່ນ. ໂດຍສະເພາະໂຄງການແລກປ່ຽນຂອງໂຮງຮຽນບ່ອນໜຶ່ງກັບປະເທດຈີນ ເຮັດໃຫ້ນັກຮຽນໄດ້ແລກປ່ຽນປະສົບການຕ່າງໆ ແລະສ້າງຄວາມສຳພັນກັນດ້ວຍການຮຽນຮູ້ແລະຫຼິ້ນນຳກັນ, ຟ້ອນແລະຫຼິ້ນດົນຕີຮ່ວມກັນ.

**ຊຸກຍູ້ການສະແດງບົດບາດສົມມຸດ, ສົນທະນາກັນເພື່ອສ້າງຄວາມເຫັນອົກເຫັນໃຈແລະເຂົ້າໃຈກັນ**

ເພື່ອໃຫ້ເຊື່ອມໂຍງກັບຄວາມຈຳເປັນຕ້ອງມີການຮຽນການສອນທີ່ມ່ວນຊື່ນແລະມີສ່ວນຮ່ວມຫຼາຍຂຶ້ນນັ້ນ ການສະແດງບົດບາດສົມມຸດ ແລະການສົນທະນາກັນສາມາດຊ່ວຍສົ່ງເສີມໃຫ້ນັກຮຽນເກີດຄວາມຮູ້ສຶກເຫັນອົກເຫັນໃຈແລະເຂົ້າໃຈກັນ ລວມທັງຄູກໍເຊັ່ນດຽວກັນ. ຕົວຢ່າງ: ຄູ່ມືຂອງຄູຢູ່ ວານູອາຕູ ມີບົດຮຽນໜຶ່ງແນະນຳໃຫ້ສະແດງບົດບາດສົມມຸດ ຊຶ່ງນັກຮຽນຕ້ອງວິເຄາະເລື່ອງຈາກສອງມິຕິທີ່ຕ່າງກັນ. ຫຼັງຈາກສະແດງບົດບາດສົມມຸດແລ້ວມີການສົນທະນາກັນ ໂດຍໃຫ້ນັກຮຽນອະທິບາຍເຫດຜົນກ່ຽວກັບມິຕິແຕ່ລະຢ່າງ. ອີງຕາມຄູ່ມື 'ການເຮັດແບບນີ້ຍັງເປີດໂອກາດໃຫ້ນັກຮຽນໄດ້ປຽບທຽບ, ເຫັນຄວາມແຕກຕ່າງກ່ຽວກັບສາດສະໜາຕ່າງໆ ແລະການຍອມຮັບຄວາມແຕກຕ່າງທາງດ້ານປະເພນີດັ້ງເດີມຂອງຊີວິດ' (Vanuatu National Cultural Council, 2005, p. 61). ບົດຮຽນແບບນີ້ສາມາດປັບປ່ຽນໄດ້ຫຼາຍວິທີ ເຊັ່ນ: ເຮັດໃຫ້ນັກຮຽນຜູ້ທີ່ມີຄວາມຕ້ອງການສະເພາະ ເຂົ້າໃຈບັນຫາລະອຽດອ່ອນດີຂຶ້ນ ຫຼືເພື່ອໃຫ້ເຂົ້າໃຈນັກຮຽນທີ່ມີພູມຫຼັງທີ່ແຕກຕ່າງກັນດີຂຶ້ນ ອັນສຳຄັນທີ່ສຸດຄືເຂົ້າໃຈຄວາມຄິດເຫັນທີ່ແຕກຕ່າງກັນ. ທີ່ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ເຂົາເຈົ້າຈັດສະແດງບົດບາດສົມມຸດແລະການສວມບົດບາດຕົວລະຄອນ ຊຶ່ງແມ່ນສ່ວນໜຶ່ງຂອງການສອນເລື່ອງຄວາມເປັນມະນຸດ ຕົວຢ່າງ: ການສວມບົດບາດເປັນຜູ້ທີ່ກຳລັງຫຼົບໜີໄພອັນຕະລາຍຄົນໜຶ່ງ ໂດຍໃຫ້ນັກຮຽນສາມາດປ່ຽນເກີບກັນແລະກັນ.

**ສົ່ງເສີມຄວາມເຂົ້າໃຈຄົນອື່ນດ້ວຍການສອນວັດທະນະທຳແລະພາສາຕ່າງໆ**

ໃນຈຳນວນສິ່ງທີ່ຄົ້ນພົບຈາກການສຳຫຼວດຜູ້ຕອບຄຳຖາມແນະນຳວ່າ ການຮຽນຮູ້ກ່ຽວກັບສາດສະໜາແລະພາສາຕ່າງໆ ແທນທີ່ຈະຮຽນແຕ່ຂອງຕົນເອງນັ້ນ ແມ່ນວິທີທີ່ມີປະ

ສິດທິເພີ່ມໃນການສ້າງຄວາມເຂົ້າໃຈຕໍ່ບັນຫາລະອຽດອ່ອນແລະເຂົ້າໃຈກຸ່ມຄົນທີ່ແຕກຕ່າງກັນ. ປະເດັນນີ້ສະທ້ອນໃຫ້ເຫັນຄຳແນະນຳອັນໜຶ່ງໃນຈຳນວນຫຼາຍຂໍ້ທີ່ການສຶກສາຄົ້ນຄວ້າກ່ຽວກັບການຮຽນຮູ້ເພື່ອໃຊ້ຊີວິດຢູ່ຮ່ວມກັນລະດັບພາກພື້ນອາຊີ-ປາຊີຟິກ ທີ່ອົງການຢູເນສໂກໄດ້ສະເໜີໄປ ຊຶ່ງແມ່ນການກວດຄືນເນື້ອໃນວິຊາ 'ເພື່ອໃຫ້ໝັ້ນໃຈວ່າປະເທດຕ່າງໆມີຕົວແທນຂອງຫຼາຍກຸ່ມທີ່ແຕກຕ່າງກັນເຂົ້າຮຽນວິຊາຕ່າງໆ ເຊັ່ນ: ປະຫວັດສາດ' ແລະໃຫ້ຄວາມສຳຄັນແກ່ການສຶກສາກ່ຽວກັບສາດສະໜາແລະພາສາຂອງຊາດຕ່າງໆໃຫ້ແກ່ນັກຮຽນທີ່ມີຄວາມເຊື່ອແລະພູມຫຼັງທີ່ແຕກຕ່າງກັນ ເພື່ອເຮັດ 'ໃຫ້ກຸ່ມຕ່າງໆມີຄວາມເຂົ້າໃຈກັນດີຂຶ້ນ' (UNESCO, 2014 p. 81). ອັນນີ້ເຊື່ອມໂຍງກັບວຽກຂອງອົງການຢູເນສໂກເພື່ອສົ່ງເສີມການປຶກສາຫາລືກັນກ່ຽວກັບຄວາມສຳພັນກັນຂອງວັດທະນະທຳຕ່າງໆ ຊຶ່ງແມ່ນເຄື່ອງມືສຳຄັນຢ່າງຍິ່ງສຳລັບການພັດທະນາມະນຸດແລະການສ້າງຄວາມສັນຕິສຸກ.

### ໃຫ້ນັກຮຽນທີ່ມີຄວາມຕ້ອງການພິເສດມີສ່ວນຮ່ວມໃນການຮຽນຮູ້ຮ່ວມກັນ

ໂຮງຮຽນມັດທະຍົມສາທິດຈຸລາລົງກອນ (ປະເທດໄທ) ສົ່ງເສີມການຮຽນຮູ້ລັກສະນະຮ່ວມມືກັນລະຫວ່າງນັກຮຽນ ຊຶ່ງປະກອບດ້ວຍນັກຮຽນຜູ້ທີ່ມີຄວາມຕ້ອງການພິເສດ ເຊັ່ນ: ຜູ້ທີ່ມີຄວາມຜິດປົກກະຕິໃນການສື່ສານກັບຄົນອື່ນ ຫຼືຜູ້ທີ່ມີບັນຫາທາງສາຍຕາ. ເຂົາເຈົ້າເຊື່ອວ່າ ການເປີດໂອກາດໃຫ້ນັກຮຽນທີ່ມີຄວາມສາມາດດ້ານຕ່າງໆໄດ້ຮຽນຮ່ວມກັບນັກຮຽນຜູ້ທີ່ມີຄວາມຕ້ອງການທີ່ແຕກຕ່າງກັນ ເພື່ອເຮັດໃຫ້ເກີດຄວາມຮູ້ສຶກມີສ່ວນຮ່ວມໂດຍຫຼຸດຜ່ອນປົມດ້ອຍນັ້ນ ອາດເປັນການພັດທະນາຄວາມສາມາດທີ່ມີຄຸນຄ່າໃຫ້ແກ່ນັກຮຽນຄົນອື່ນໆໄດ້ ເຊັ່ນ: ຄວາມສາມາດໃນການສະແດງອອກເຖິງຄວາມເຂົ້າໃຈບັນຫາລະອຽດອ່ອນ, ຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນແລະຊຸກຍູ້ໃຫ້ເກີດຄວາມເຂົ້າໃຈກັນ. ດັ່ງນັ້ນເຂົາເຈົ້າຈຶ່ງເຫັນວ່າ ຄວນພິຈາລະນາຍຸດທະສາດໃນການເອົາຜູ້ຮຽນທີ່ມີຄວາມບົກຜ່ອງທາງດ້ານຮ່າງກາຍເຂົ້າຮ່ວມໃນການຮຽນວິຊາຕ່າງໆທີ່ສອນກັນທົ່ວໄປ.

## ຄ່ານິຍົມແລະການປະຕິບັດດ້ານບວກດ້ວຍການຮ່ວມມືກັນ

ຜູ້ຕອບຄຳຖາມສຳລັບການສຳຫຼວດມັກເວົ້າເຖິງຄ່ານິຍົມດ້ານບວກແລະການຮ່ວມມືກັນວ່າ ແມ່ນໜຶ່ງໃນປັດໄຈສຳຄັນທີ່ສຸດສຳລັບໂຮງຮຽນໃຫ້ຄວາມສຸກ. ອັນນີ້ເວົ້າເຖິງຄວາມຄິດກ່ຽວກັບຄວາມມີຈິດໃຈດີ, ຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ, ການຍອມຮັບຄວາມຄິດເຫັນທີ່ແຕກຕ່າງ, ຄວາມໃສ່ໃຈກັນແລະການປະຕິບັດຢ່າງເທົ່າທຽມກັນຢູ່ທົ່ວຊຸມຊົນທີ່ມີ

ໂຮງຮຽນ. ຕົວຢ່າງຕໍ່ໄປຂອງຍຸດທະສາດສະເພາະໄດ້ຖືກກຳນົດຂຶ້ນເພື່ອຊຸກຍູ້ຄ່ານິຍົມເຫຼົ່ານີ້.

**ສ້າງແຮງບັນດານໃຈດ້ວຍຄຸນຄ່າ, ທັດສະນະຄະຕິແລະການປະຕິບັດດ້ານບວກ**

ທີ່ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ມີການຊຸກຍູ້ທັດສະນະຄະຕິແລະລັກສະນະດ້ານບວກຂອງຊີວະປະຫວັດນັກຮຽນໂດຍມີການວາງສະແດງສິ່ງເຫຼົ່ານີ້ ເພື່ອເປັນສິ່ງເຕືອນໃຈແກ່ທຸກຄົນຢູ່ທົ່ວໂຮງຮຽນ, ຢູ່ໃນຫ້ອງຮຽນແລະບ່ອນຕ່າງໆ ເຊັ່ນ: ເດີ່ນບານສິ່ງໃນຮົ່ມ ຊຶ່ງມີຮູບພາບ, ຄຳນິຍາມ ແລະຂໍ້ຄວາມຕ່າງໆ. ທັດສະນະຄະຕິຊຶ່ງເປັນທີ່ຕ້ອງການ ໄດ້ແກ່ການຍຶດຖືຄຸນນະທຳ, ຄວາມໝາຍໝັ້ນຕັ້ງໃຈ, ການເຄົາລົບຄົນອື່ນ, ຄວາມສຳນຶກບຸນຄຸນ, ການຮ່ວມມືກັບຄົນອື່ນ, ການຍອມຮັບຄວາມຄິດທີ່ແຕກຕ່າງ, ຄວາມກະຕືລືລົ້ນ, ຄວາມເປັນອິດສະຫຼະ, ຄວາມສ້າງສັນ, ຄວາມຈູບຈ້າວຫ້າວຫັນ, ເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນແລະຄວາມໝັ້ນໃຈ. ສິ່ງປະຈັກຕາທີ່ມີສີສັນກ່ຽວກັບທັດສະນະຄະຕິເຫຼົ່ານີ້ຖືວ່າເປັນສິ່ງເຕືອນໃຈທີ່ສຳຄັນ ບໍ່ພຽງແຕ່ສຳລັບນັກຮຽນ ແຕ່ສຳລັບຊຸມຊົນທີ່ມີໂຮງຮຽນທັງໝົດນຳອີກ. ຊີວະປະຫວັດຂອງຜູ້ຮຽນມີເປົ້າໝາຍແນໃສ່ນັກຮຽນຫຼາຍກວ່າ ປະກອບດ້ວຍຂໍ້ຄວາມທີ່ເວົ້າເຖິງຄຸນຄ່າສະເພາະ, ທັດສະນະຄະຕິແລະການປະພຶດ ເຊັ່ນ: ຂໍ້ຄວາມກ່ຽວກັບ 'ຫຼັກການ' ມີຄຳອະທິບາຍວ່າ 'ຂ້ອຍເຂົ້າໃຈວ່າພວກເຮົາມີກົດເກນເພື່ອໃຫ້ພວກເຮົາເຄົາລົບຊຶ່ງກັນແລະກັນ, ຫຼິ້ນນຳກັນຢ່າງປອດໄພ ລວມທັງສ້າງຄວາມມ່ວນຊື່ນນຳກັນ' ແລະ 'ການໃສ່ໃຈກັນ' ຊຶ່ງມີຄຳເວົ້າວ່າ 'ຂ້ອຍຈະປຸ່ງນຜຽນເປັນຫົວໜ້າແລະເປັນລູກທີມ ຂ້ອຍຈະຄິດເຖິງຄວາມຮູ້ສຶກຂອງຄົນອື່ນ ເວລາເຮັດວຽກເປັນໝູ່ຄະນະ'.

**ແນະນຳການຮຽນຮູ້ແບບສອງຈຸດປະສົງດ້ວຍການປະສົມປະສານຫຼາຍວິຊາ**

ການຮຽນຮູ້ແບບສອງຈຸດປະສົງໝາຍເຖິງການເອົາຈຸດແຂງດ້ານບຸກຄະລິກ (ອີງຕາມຈິດຕະສາດທາງບວກ) ສອດແຊກເຂົ້າແຕ່ລະບົດຮຽນດ້ວຍການລະບຸ, ຄິດໄຕ່ຕອງແລະສົນທະນາກັນກ່ຽວກັບຈຸດດີເຫຼົ່ານັ້ນຢູ່ໃນຄວາມໝາຍຂອງຫົວເລື່ອງ (Tough, 2011). ຕົວຢ່າງການສອນກ່ຽວກັບເຫດການໃດໜຶ່ງໃນວິຊາປະຫວັດສາດ ຄູອາດໃຫ້ນັກຮຽນຄິດໄຕ່ຕອງກ່ຽວກັບບຸກຄົນສຳຄັນ ເພື່ອລະບຸຈຸດດີຫຼືຄວາມສາມາດທີ່ຄົນເຫຼົ່ານີ້ມີ ເຊັ່ນ: ຄວາມກ້າຫານ, ການເບິ່ງໂລກໃນແງ່ດີ, ຄວາມພາກພຽນພະຍາຍາມເພື່ອບັນລຸເປົ້າໝາຍບາງຢ່າງ. ການເຮັດແບບນີ້ບໍ່ພຽງແຕ່ເຮັດໃຫ້ນັກຮຽນເຂົ້າໃຈເຫດການ ແລະບຸກຄົນຕ່າງໆຢູ່ໃນປະຫວັດສາດດີຂຶ້ນເທົ່ານັ້ນ ແຕ່ຍັງເຮັດໃຫ້ເຂົາເຈົ້າສາມາດລະບຸຄຸນຄ່າ, ຈຸດດີແລະຄວາມສາ

ມາດຂອງຜູ້ຄົນຕ່າງໆນຳອີກ ຊຶ່ງເປັນການກະຕຸ້ນໃຫ້ເຂົາເຈົ້າຕັດສິນໃຈກ່ຽວກັບເຫດການໃນປະຫວັດສາດ. ອັນນີ້ສະແດງໃຫ້ເຫັນຕົວຢ່າງອັນໜຶ່ງກ່ຽວກັບການເອົາສິ່ງເຫຼົ່ານີ້ສອດແຊກເຂົ້າໃນວິຊາຮຽນຕ່າງໆ ແທນທີ່ຈະສອນແຍກກັນຕ່າງຫາກ ດັ່ງຕົວຢ່າງວິຊາຮຽນຕ່າງໆທີ່ສອນກັນຢູ່ ຊຶ່ງຄົນທົ່ວໄປຖືວ່າແມ່ນຄຸນຄ່າທາງດ້ານການສຶກສາ.

## ສະພາບຄວາມເປັນຢູ່ແລະຄວາມຢູ່ດີມີສຸກຂອງຄູ

ການທົບທວນຄືນໃໝ່ກ່ຽວກັບສະຖານະພາບແລະສິດທິຂອງຄູໃນແປດປະເທດຢູ່ພາກພື້ນອາຊີ-ປາຊີຟິກເມື່ອບໍ່ດົນມານີ້ພົບວ່າ ເຖິງວ່າເງິນເດືອນຈະເພີ່ມຂຶ້ນໃນຊຸມປີຜ່ານມາ ແຕ່ກໍຖືວ່າຍັງຕໍ່າຢູ່ ເມື່ອສົມທຽບກັບເງິນເດືອນສຳລັບອາຊີບອື່ນ (UNESCO, 2015). ນອກຈາກນີ້ ຄະນະກຳມະການຮ່ວມຂອງຜູ້ຊ່ຽວຊານອົງການແຮງງານລະຫວ່າງປະເທດ ແລະອົງການຢູເນສໂກກ່ຽວກັບການຮັບສະໝັກແລະຄຳສະເໜີແນະກ່ຽວກັບບຸກຄະລາກອນຄູ (CLEART) ໄດ້ສະເໜີບັນຫາສຳຄັນຢູ່ໃນກອງປະຊຸມກ່ຽວກັບການປະຕິບັດວຽກທຸກໆສາມປີຂອງຕົນ ໂດຍບອກວ່າຄູຢູ່ຫຼາຍປະເທດເຮັດວຽກຢູ່ໃນສະພາບເງື່ອນໄຂທີ່ສັງຄົມບໍ່ຄ່ອຍຍອມຮັບ, ການຝຶກອົບຮົມອາຊີບຄູທີ່ບໍ່ດີແລະບໍ່ມີການພັດທະນາອາຊີບຄູຢ່າງຕໍ່ເນື່ອງ (ILO and UNESCO, 2012).

ຄູຫຼາຍຄົນຊຶ່ງເປັນຜູ້ຕອບຄຳຖາມສຳລັບການສຳຫຼວດໂຮງຮຽນໃຫ້ຄວາມສຸກບອກວ່າ **ສະພາບຄວາມເປັນຢູ່ແລະຄວາມຢູ່ດີມີສຸກຂອງຄູ**ແມ່ນສິ່ງຈຳເປັນທີ່ສຸດໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ແລະການເອົາໃຈໃສ່ປັບປຸງສະພາບການເປັນຢູ່ແລະຄວາມຢູ່ດີມີສຸກຂອງຄູ ສາມາດຊ່ວຍຮັບປະກັນໃຫ້ຄູມີ**ທັດສະນະຄະຕິແລະຄຸນສົມບັດດ້ານບວກ**ໄດ້. ບັນດາຄູທີ່ເຂົ້າຮ່ວມໃນການສຳຫຼວດຍັງລາຍງານອີກວ່າ ພວກຕົນຄິດວ່າຈຳເປັນຕ້ອງມີການບໍລິຫານໂຮງຮຽນທີ່ດີ ຊຶ່ງສາມາດຮັບປະກັນໃຫ້ມີການຍອມຮັບບົດບາດຂອງຄູແລະໃຫ້ຄ່າຕອບແທນດີຂຶ້ນ ລວມທັງຄວາມຮູ້ສຶກກ່ຽວກັບຄວາມສຳເລັດໃນການປະຕິບັດໜ້າທີ່ຂອງຄູນຳອີກ. ດັ່ງທີ່ຄູຍິງຄົນໜຶ່ງຢູ່ປະເທດມຽນມາອະທິບາຍວ່າ:

*ຖ້າຄູມີເງິນເດືອນເໝາະສົມ ມີຄົນໃຫ້ຄວາມເຄົາລົບແລະມີຄົນຍອມຮັບ ທັງໄດ້ຮັບໂອກາດໃນການພັດທະນາອາຊີບຂອງຕົນແລ້ວ ກໍຈະເປັນປະໂຫຍດຕໍ່ການສອນຂອງເຂົາເຈົ້າ. ຄູທີ່ໄດ້ຮັບການຊຸກຍູ້ ຈະພະຍາຍາມໃຫ້ກຳລັງໃຈນັກຮຽນຂອງຕົນໃນການຮຽນ. ຂະບວນ*

*ການຮຽນການສອນ ສ່ວນໃຫຍ່ແລ້ວຂຶ້ນຢູ່ກັບວ່າເນື້ອໃນວິຊາຮຽນມີຄຸນປະໂຫຍດແນວໃດ ແລະຈະສອນວິຊານັ້ນແນວໃດ.*

ສິ່ງທີ່ຄົ້ນພົບຈາກການສຳຫຼວດແນະນຳວ່າ ມາດຖານຫຼາຍຢ່າງທີ່ກ່ຽວຂ້ອງກັບຄູນັ້ນລ້ວນແຕ່ມີຄວາມສຳພັນກັນ. ຖ້າຊີວິດການເປັນຢູ່ຂອງຄູດີຂຶ້ນກໍມີທາງເປັນໄປໄດ້ທີ່ຈະປັບປຸງທັດສະນະຄະຕິຂອງຄູ ຊຶ່ງໃນທີ່ສຸດກໍຈະພາໃຫ້ຄູເຂົ້າຮ່ວມຢ່າງຫ້າວຫັນໃນການຝຶກອົບຮົມ ເພື່ອປັບປຸງທັກສະແລະຄວາມສາມາດຂອງເຂົາເຈົ້າ ຂະນະດຽວກັນກໍຈະນຳໄປສູ່ວິທີການຮຽນການສອນແບບມີສ່ວນຮ່ວມຫຼາຍຂຶ້ນ. ຕໍ່ໄປມີການແນະນຳຍຸດທະສາດອັນໜຶ່ງເພື່ອປັບປຸງສະພາບຄວາມເປັນຢູ່ຂອງຄູໃຫ້ດີຂຶ້ນ.

**ໃຫ້ຄວາມສຳຄັນ, ຈັດງານບຸນໃຫ້ຄູ ແລະສະດຸດີການປະກອບສ່ວນຂອງເຂົາເຈົ້າໃຫ້ແກ່ໂຮງຮຽນແລະສັງຄົມ**

ການໃຫ້ຄວາມສຳຄັນກ່ຽວກັບວັນຄູໂລກແລະວັນອື່ນໆໃນລະດັບໂຮງຮຽນ ຊຶ່ງຮັບຮູ້ການປະກອບສ່ວນຢ່າງມີຄຸນຄ່າຂອງຄູ ເຮັດໃຫ້ນັກຮຽນແລະຜູ້ທີ່ມີສ່ວນຮ່ວມຢູ່ໃນຊຸມຊົນໄດ້ຮຽນຮູ້ບົດບາດສຳຄັນຂອງຄູ ແລະເຮັດໃຫ້ເຂົາເຈົ້າມີຄວາມເຄົາລົບອາຊີບຄູຫຼາຍຂຶ້ນ. ພ້ອມດຽວກັນນີ້ ການໃຫ້ລາງວັນແກ່ຄູທີ່ສຳເລັດໃນການປະຕິບັດໜ້າທີ່ດ້ວຍດີເປັນການໃຫ້ກຳລັງໃຈແກ່ຄູ ຊຶ່ງຈະເຮັດໃຫ້ການສອນຂອງເຂົາເຈົ້າດີຂຶ້ນແລະເຫັນຄຸນຄ່າໃນອາຊີບຂອງຕົນຫຼາຍຂຶ້ນ. ລາງວັນສອງຢ່າງຊຶ່ງເປັນທີ່ຮູ້ຈັກກັນໃນລະດັບໂລກໄດ້ແກ່ລາງວັນ ແຮມດັນຂອງອົງການຢູເນສໂກ (UNESCO-Hamdan Prize) ສຳລັບການປະຕິບັດແລະການສອນທີ່ດີຢ້ຽມ ເພື່ອສົ່ງເສີມຄວາມມີປະສິດທິຜົນຂອງຄູ ແລະລາງວັນສຳລັບຄູລະດັບໂລກຂອງມູນນິທິ ວາຣ໌ຄີ (Varkey Foundation's Global Teacher Prize). ຂະນະດຽວກັນກໍມີການມອບລາງວັນແລະໃບຍັ້ງຢືນໃນລະດັບໂຮງຮຽນນຳອີກ. ນອກຈາກນີ້ ຫຼືອາດເປັນທາງເລືອກກໍໄດ້ ຄືມອບລາງວັນເຫຼົ່ານີ້ໃຫ້ໂດຍອີງໃສ່ການປະເມີນຄູ ຕາມທີ່ເຄີຍປະຕິບັດກັນມາ. ມາດຕະການອື່ນໆ ເພື່ອຊ່ວຍສົ່ງເສີມຄວາມຢູ່ດີມີສຸກແລະສະພາບການເຮັດວຽກຂອງຄູ ຄືໃຫ້ຄູແລະຜູ້ຕາງໜ້າຂອງເຂົາເຈົ້າເຂົ້າຮ່ວມສະຫະພັນຫຼືສະມາຄົມຕ່າງໆ ແລະໃຫ້ລາງວັນຍ້ອມນ້ຳໃຈເປັນເງິນ, ເງິນອຸດໜູນແລະເງິນເພີ່ມເປັນລາງວັນພິເສດ ເວລາເຂົາເຈົ້າມີຈຸດປະສົງແຮງກ້າຢາກໄປສອນຢູ່ເຂດຫ່າງໄກສອກຫຼີກແລະເຂດຊົນນະບົດ ເຊັ່ນຢູ່ເຂດທີ່ມີສະພາບເງື່ອນໄຂທີ່ຫຍຸ້ງຍາກ.

## ທັກສະ ແລະ ຄວາມສາມາດຂອງຄູ

ເມື່ອຜູ້ຕອບຄຳຖາມສຳລັບການສຳຫຼວດຫຼາຍຄົນຊີ້ໃຫ້ເຫັນຄວາມສຳຄັນຂອງຄູທີ່ມີທັກສະ ແລະຄວາມສາມາດສູງຢູ່ໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ບັນດາຄູຊ້ຳພັດຢ້ຳວ່າ ໂອກາດສຳລັບການພັດທະນາອາຊີບມີຄວາມສຳຄັນເປັນພິເສດໃນການປັບປຸງຄວາມສຸກໃຫ້ດີຂຶ້ນຢູ່ໃນໂຮງຮຽນ. ເຂົາເຈົ້າຄິດວ່າ ໂອກາດໃນການຝຶກອົບຮົມທາງດ້ານວິທີການສອນທີ່ແປກໃໝ່ ແລະມີລັກສະສ້າງສັນຈະເຮັດໃຫ້ຄູຮຽນຮູ້ວ່າ ຈະເຮັດແນວໃດການສອນຈຶ່ງຈະມ່ວນຊື່ນແລະມີສ່ວນຮ່ວມຫຼາຍຂຶ້ນ. ແນວໃດກໍຕາມ ການພັດທະນາອາຊີບຄູມີການໃຊ້ຈ່າຍສູງ ໂອກາດແບບນີ້ມັກບໍ່ເກີດຂຶ້ນໄດ້ໂດຍຊ່ອງທາງທີ່ເປັນທາງການ. ເມື່ອເປັນສິ່ງທີ່ຊັດເຈນໃນລະດັບໜຶ່ງວ່າ ໂອກາດໃນການພັດທະນາອາຊີບຄູມີຄວາມສຳຄັນຫຼາຍໃນລະດັບຊາດ ຈຶ່ງມີການພົບອີກວ່າ ການລິເລີ່ມໂດຍຄະນະບໍລິຫານໃນລະດັບໂຮງຮຽນກໍອາດເປັນຜົນປະໂຫຍດຫຼາຍ ໂດຍສະເພາະກໍລະນີງົບປະມານຈັດສັນໃຫ້ແກ່ການພັດທະນາອາຊີບຄູມີຈຳກັດໃນລະດັບຊາດ (UNESCO 2015c, p. 4). ແນວໃດກໍຕາມ ສິ່ງເຫຼົ່ານີ້ສາມາດສະໜອງໃຫ້ໄດ້ຢ່າງບໍ່ເປັນທາງການໃນລະດັບໂຮງຮຽນຫຼືລະດັບທ້ອງຖິ່ນ ຊຶ່ງຈະສະແດງໃຫ້ເຫັນຢູ່ໃນຍຸດທະສາດຕໍ່ໄປ.

### ສົ່ງເສີມທັກສະແລະຄວາມສາມາດຂອງຄູດ້ວຍເຄືອຂ່າຍ ແລະການຊ່ວຍເຫຼືອຈາກເພື່ອນຄູດ້ວຍກັນ

ການຈັດສັນເງິນໃຫ້ແກ່ການພັດທະນາອາຊີບຄູຢູ່ໃນສະພາບເງື່ອນໄຂທີ່ມີຊັບພະຍາກອນບໍ່ຫຼາຍ ໃນລະດັບທ້ອງຖິ່ນແລະໂຮງຮຽນນັ້ນອາດເປັນເລື່ອງຍາກ ແຕ່ອຸປະສັກໃນການຝຶກອົບຮົມສາມາດແກ້ໄຂໄດ້ເປັນບາງສ່ວນ ດ້ວຍການສ້າງເຄືອຂ່າຍຂອງໂຮງຮຽນແລະການຊ່ວຍເຫຼືອຈາກເພື່ອນຄູດ້ວຍກັນຢູ່ໃນໂຮງຮຽນ. ສິ່ງເຫຼົ່ານີ້ເປີດໂອກາດໃຫ້ຄູໄດ້ແລກປ່ຽນປະສົບການແລະຂໍ້ມູນ ຊຶ່ງບໍ່ພຽງແຕ່ສົ່ງເສີມຄວາມຮູ້ແລະທັກສະເທົ່ານັ້ນ ແຕ່ຍັງຊ່ວຍສ້າງແຮງຈູງໃຈຂອງເຂົາເຈົ້າຫຼາຍຂຶ້ນ. ຕົວຢ່າງຢູ່ເຫດສະບານ ອາກິຕະ (ຍີ່ປຸ່ນ) ໂຮງຮຽນຕ່າງໆມີຄູທີ່ມີແຮງຈູງໃຈ, ຄວາມໝາຍໝັ້ນຕັ້ງໃຈ ແລະຈູບຈ້າວຫ້າວຫັນຫຼາຍຍ້ອນມີປັດໄຈສຳຄັນສອງຢ່າງ ຄື: 1) ມີການສື່ສານກັນເປັນປະຈຳຢ່າງໃກ້ຊິດ ລະຫວ່າງຄູຜູ້ທີ່ຊ່ວຍເຫຼືອເພື່ອນຄູດ້ວຍກັນ ແລະ 2) ມີຄວາມຮູ້ສຶກຮັບຜິດຊອບສູງແລະມີຄວາມພາກພູມໃຈໃນການເປັນຄູ ຊຶ່ງເປັນຜົນເນື່ອງມາຈາກການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ (Yamaguchi et. al., 2016). ທີ່ປຶກສາທ້ອງຖິ່ນຄົນໜຶ່ງຂອງຄະນະບໍລິຫານການສຶກສາຢູ່ເຫດສະບານນີ້ ໄດ້

ຕັ້ງເຄືອຂ່າຍຂອງຄູຂຶ້ນມາ ໂດຍຈັດໃຫ້ມີການໄປຢ້ຽມຢາມໂຮງຮຽນຕ່າງໆຫຼາຍກວ່າ 100 ເທື່ອຕໍ່ປີ (Ibid). ໂຮງຮຽນມັດທະຍົມທົດລອງຂອງສະຖາບັນວິທະຍາສາດການສຶກສາ ເພີ່ມທະວີຄວາມຈູບຈ້າວຫ້າວຫັນຂອງຄູດ້ວຍການຈັດສຳມະນາຄູທຸກໆອາທິດ ຊຶ່ງຄູສາມາດປຶກສາຫາລືກັນກ່ຽວກັບກິດຈະກຳປະຈຳອາທິດ, ແລກປ່ຽນຄວາມຄິດເຫັນ ແລະປະສົບການນຳກັນດ້ວຍວິທີການສອນທີ່ມີລັກສະນະສ້າງສັນ.

### ສະຫຼຸບຫຍໍ້

ອີງໃສ່ມາດຖານຕ່າງໆທີ່ໄດ້ຄົ້ນຄວ້າຢູ່ໃນໝວດນີ້ ກ່ອງຂໍ້ຄວາມ 3 ສັງລວມຍຸດທະສາດທີ່ໄດ້ແນະນຳໄປຢູ່ໃນລາຍການຈັດປະເພດຂອງຜູ້ຄົນ.

***ກ່ອງຂໍ້ຄວາມ 3.*** *ກ່ອງຍຸດທະສາດ: ຜູ້ຄົນ*

- ຊຸກຍູ້ການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນ ໂດຍເຮັດໃຫ້ໂຮງຮຽນ 'ເປີດກວ້າງ' ໃຫ້ແກ່ຊຸມຊົນ
- ຈັດຕັ້ງສະໂມສອນຫຼືເຮືອນຊຶ່ງປະກອບດ້ວຍຫຼາຍຊັ້ນຮຽນ
- ປະຕິບັດກິດຈະກຳກັບໂຮງຮຽນອື່ນໆຢູ່ໃນຊຸມຊົນໃຫ້ກວ້າງອອກ
- ສ້າງຄວາມຮູ້ສຶກແບບຄອບຄົວຢູ່ໃນສະພາບແວດລ້ອມຂອງໂຮງຮຽນ
- ໃຫ້ຄວາມສຳຄັນດ້ານລັກສະນະສ່ວນຕົວ, ທັດສະນະຄະຕິແລະຈັນຍາບັນໃນການຮັບເອົາຄູເຂົ້າເຮັດວຽກແລະການປະເມີນຜົນຄູ
- ສ້າງລະບົບເພື່ອໃຫ້ໂອກາດແກ່ນັກຮຽນໄດ້ສະແດງຄວາມຄິດເຫັນໃຫ້ແກ່ຄູ
- ສົ່ງເສີມຄວາມຮູ້ກ່ຽວກັບວັດທະນະທຳອື່ນໆ ທັງຢູ່ໃນແລະນອກສະພາບເງື່ອນໄຂຂອງໂຮງຮຽນ
- ຊຸກຍູ້ການສະແດງບົດບາດສົມມຸດແລະສົນທະນາກັນເພື່ອສ້າງຄວາມເຫັນອົກເຫັນໃຈແລະເຂົ້າໃຈກັນ
- ສົ່ງເສີມຄວາມເຂົ້າໃຈຄົນອື່ນດ້ວຍການສອນສາດສະໜາແລະພາສາຕ່າງໆ
- ໃຫ້ນັກຮຽນທີ່ມີຄວາມຕ້ອງການມີສ່ວນຮ່ວມພິເສດໃນການຮຽນຮູ້ຮ່ວມກັນ
- ສ້າງແຮງບັນດານໃຈດ້ວຍຄຸນຄ່າ, ທັດສະນະຄະຕິແລະການປະຕິບັດດ້ານບວກ
- ແນະນຳການຮຽນຮູ້ແບບສອງຈຸດປະສົງດ້ວຍການປະສົມປະສານຫຼາຍວິຊາ
- ໃຫ້ຄວາມສຳຄັນ, ຈັດງານບຸນໃຫ້ຄູແລະສະດຸດີການປະກອບສ່ວນຂອງເຂົາເຈົ້າໃຫ້ແກ່ໂຮງຮຽນແລະສັງຄົມ
- ສົ່ງເສີມທັກສະແລະຄວາມສາມາດຂອງຄູດ້ວຍເຄືອຂ່າຍແລະການຊ່ວຍເຫຼືອຈາກເພື່ອນຄູດ້ວຍກັນ

# ຄ. ຂະບວນການ

ຂະບວນການຮຽນການສອນ ແມ່ນບັນຫາພື້ນຖານອັນໜຶ່ງໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ດັ່ງທີ່ການສຳຫຼວດໄດ້ພົບວ່າ ວິທີການຮຽນການສອນທີ່ຄູນຳມາໃຊ້ເປັນຕົວກຳນົດວ່າການຮຽນຮູ້ຈະສະໜຸກສະໜານຫຼືບໍ່ ບາງວິທີສາມາດເຮັດໃຫ້ຜູ້ຮຽນມີ

ທັກສະແລະຄວາມສາມາດທີ່ບໍ່ແມ່ນວິຊາການ. ນອກຈາກນັ້ນ ວິທີການຮຽນການສອນທີ່ຄູໃຊ້ຍັງເປັນຕົວກຳນົດວ່າຜູ້ຮຽນຮູ້ສຶກມີອິດສະຫຼະໃນການສະແດງຄວາມຄິດເຫັນ, ມີຄວາມສ້າງສັນແລະມີສ່ວນຮ່ວມໃນການຮຽນໄດ້ຫຼືບໍ່. ຍ້ອນມີຄວາມກົດດັນທາງດ້ານຈິດໃຈກ່ຽວກັບຜົນສຳເລັດດ້ານວິຊາການ ຈຶ່ງຮຽກຮ້ອງໃຫ້ມີການປະເມີນທີ່ແຕກຕ່າງກັນ ຊຶ່ງປະກອບດ້ວຍທັກສະແລະຄວາມສາມາດທີ່ບໍ່ແມ່ນວິຊາການ ເຊັ່ນ: ປະເມີນດ້ານການພັດທະນາການຂອງຜູ້ຮຽນໃນລະດັບໂຮງຮຽນແລະຫ້ອງຮຽນ.

## ພາລະການຮຽນທີ່ສົມເຫດສົມຜົນແລະເປັນທຳ

ໃນຈຳນວນປັດໄຈທີ່ມີການກ່າວເຖິງຫຼາຍທີ່ສຸດຢູ່ໃນການສຳຫຼວດກ່ຽວກັບວ່າ ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກນັ້ນ ແມ່ນຄວາມເຂົ້າໃຈແຈ້ງກ່ຽວກັບພາລະການຮຽນທີ່ບໍ່ສົມເຫດສົມຜົນແລະບໍ່ເປັນທຳສຳລັບນັກຮຽນ ຊຶ່ງໄດ້ແກ່ວຽກບ້ານແລະການສອບເສັງ. ຄວາມຈິງແລ້ວ ສິ່ງຢືນຢັນຢູ່ບົດທີສາມສະແດງໃຫ້ເຫັນແລ້ວວ່າ ຄວາມທຸກໃຈຢ່າງຍິ່ງທີ່ເກີດຂຶ້ນກັບນັກຮຽນ ເປັນຍ້ອນມີຄວາມກົດດັນທາງດ້ານຈິດໃຈເພື່ອຢາກໄດ້ຄະແນນດີໃນການສອບເສັງນັ້ນ ມີລະດັບສູງຂຶ້ນແນວໃດ. ຄວາມກົດດັນທາງດ້ານຈິດໃຈນີ້ເກີດຈາກທັງລະບົບການສຶກສາແລະຈາກພໍ່ແມ່ ບົນພື້ນຖານຄວາມເຂົ້າໃຈທີ່ວ່າ ຜົນການສອບເສັງແມ່ນວິທີວັດຜົນການຮຽນແລະຄວາມສຳເລັດຂອງນັກຮຽນຢູ່ໃນໂຮງຮຽນ. ດັ່ງສະມາຊິກແມ່ຍິງຄົນໜຶ່ງຢູ່ໂຮງຮຽນຂອງລັດໃນປະເທດຈີນອະທິບາຍວ່າ 'ຢູ່ຈີນນັກຮຽນຖືກຈັດໃຫ້ຮຽນຕາມຫ້ອງ ອີງໃສ່ລະດັບຄວາມເກັ່ງດ້ານການຮຽນວິຊາໃນຫຼັກສູດ ຊຶ່ງເຮັດໃຫ້ນັກຮຽນມີອະຄະຕິຕໍ່ກັນ ທັງຄູແລະພໍ່ແມ່ລົງໂທດນັກຮຽນທາງດ້ານຮ່າງກາຍ. ຂ້ອຍຄິດວ່າປະເທດຈີນຄວນຍົກເລີກຄວາມຄິດທີ່ເນັ້ນໃສ່ການສອບເສັງເທື່ອລະກ້າວ ເພາະແຕ່ລະຄົນມີຄວາມສາມາດແຕກຕ່າງກັນໃນດ້ານຕ່າງໆ. ດັ່ງນັ້ນ ຄວນມີວິທີທີ່ມີອົງປະກອບຄົບຖ້ວນໃນການປະເມີນການຮຽນຮູ້ຂອງນັກຮຽນ'. ຜູ້ເຂົ້າຮ່ວມການສຶກສາຄົ້ນຄວ້າລະບຸການປະເມີນທີ່ຕ່າງຈາກສິ່ງທີ່ເຄີຍເຮັດ ວ່າເປັນຜົນດີຕໍ່ຄວາມຢູ່ດີມີສຸກຂອງຜູ້ຮຽນ ໂດຍເຂົາເຈົ້າຫັນປ່ຽນຈາກການເນັ້ນໃສ່ການປະເມີນທັກສະທາງດ້ານສະຕິປັນຍາລ້ວນໆ ມາເປັນການປະເມີນຄຸນຄ່າດ້ານທັກສະແລະຄວາມສາມາດທີ່ບໍ່ແມ່ນວິຊາການຢູ່ໃນຕົວຂອງນັກຮຽນ. ຜູ້ຕອບຄຳຖາມຍັງບອກອີກວ່າ ໂຮງຮຽນແລະມະຫາວິທະຍາໄລຈຳເປັນຕ້ອງໃຊ້ມາດຖານທີ່ບໍ່ເປັນວິຊາການ ເວລາຮັບເອົານັກສຶກສາເຂົ້າມະຫາວິທະໄລຂອງພວກຕົນ ໂດຍເອົາປັດໄຈຕ່າງໆລວມເຂົ້ານຳ ເຊັ່ນ: ລັກສະນະສ່ວນຕົວ, ຄຸນຄ່າ, ຈຸດດີແລະຄວາມສາມາດຊຶ່ງຖືໄດ້ວ່າມີ

ຄວາມສຳຄັນພິເສດຢູ່ໃນລະດັບມະຫາວິທະຍາໄລ ເພື່ອເປັນການຫັນປ່ຽນຈາກການເນັ້ນໃສ່ເພື່ອໃຫ້ໄດ້ຄະແນນດີຢູ່ໃນການສອບເສັງລະດັບສູງ ມາເປັນການປະເມີນທີ່ອີງໃສ່ 'ຄວາມເປັນທັງໝົດຂອງຄົນ'. ຕໍ່ໄປແມ່ນການສະເໜີຕົວຢ່າງຍຸດທະສາດເພື່ອຮັບປະກັນໃຫ້ນັກຮຽນມີພາລະການຮຽນຢ່າງສົມເຫດຜົນແລະເປັນທຳ.

**ຫຼຸດຜ່ອນການທົດສອບແລະສອບເສັງຕາມມາດຕະຖານ**

ຍຸດທະສາດທີ່ຂຶ້ນຊື່ລືຊາຫຼາຍຂຶ້ນເພື່ອປັບປຸງຄວາມຢູ່ດີມີສຸກຂອງນັກຮຽນ ແມ່ນຫຼຸດຜ່ອນການປະເມີນແບບສັງລວມ ເຊັ່ນ: ດ້ວຍການສອບເສັງທີ່ເນັ້ນໃສ່ວັດແທກຄວາມຮູ້ ແລ້ວຮັບເອົາຮູບແບບການປະເມີນທີ່ເນັ້ນໃສ່ປະເມີນຜົນຄວາມກ້າວໜ້າແລະພັດທະນາຄວາມສາມາດທີ່ບໍ່ແມ່ນດ້ານວິຊາການຂອງນັກຮຽນ. ສາທາລະນະລັດເກົາຫຼີມີນະໂຍບາຍດ້ານນີ້ ຄື: ມີໄຕມາດທີ່ບໍ່ມີການສອບເສັງຫຍັງເລີຍ. ນະໂຍບາຍນີ້ມີຈຸດມຸ່ງໝາຍເພື່ອຫຼຸດຜ່ອນຄວາມທຸກໃຈຂອງນັກຮຽນ ແລະກຳລັງຂະຫຍາຍອອກນອກເຂດທົດລອງຢູ່ທົ່ວປະເທດ. ເຖິງວ່ານະໂຍບາຍນີ້ຖືກນຳໄປປະຕິບັດກັບໂຮງຮຽນມັດທະຍົມຕົ້ນກໍຕາມ ໂຮງຮຽນອື່ນໆກໍເອົານະໂຍບາຍແບບດຽວກັນນີ້ໄປປະຕິບັດ. ຕົວຢ່າງໂຮງຮຽນປະຖົມ ແດກູ ກາຊັງ ຊຶ່ງຫ້ອງການສຶກສາເທດສະບານ ແດກູ ໄດ້ອອກແບບ 'ໂຮງຮຽນໃຫ້ຄວາມສຸກ' ໃນປີ 2012 ບໍ່ໃຫ້ມີການທົດສອບແລະການສອບເສັງແບບປາລະໄນ ປ່ຽນມາໃຊ້ການປະເມີນຜົນນັກຮຽນດ້ວຍວິທີຕ່າງໆ ເຊັ່ນ: ການປະເມີນດ້ານພຶດຕິກຳ. ນອກຈາກນັ້ນ ຍ້ອນນັກຮຽນຍອມຮັບວ່າເຂົາເຈົ້າມີຄວາມກົດດັນທາງດ້ານຈິດໃຈຈາກພໍ່ແມ່ເພື່ອໃຫ້ໄດ້ຄະແນນດີ ໂຮງຮຽນນີ້ຈຶ່ງໄດ້ພະຍາຍາມສຶກສາອົບຮົມພໍ່ແມ່ກ່ຽວກັບຜົນດີຂອງລະບົບການປະເມີນຜົນທີ່ຕ່າງຈາກສິ່ງທີ່ເຄີຍເຮັດໂດຍຜ່ານທາງ 'ສະມາຄົມພໍ່ແມ່ນັກຮຽນຂອງໂຮງຮຽນ'. ສະຖາບັນ ວິທະຍາສິລປ໌ (Vidyashilp Academy) (ອິນເດຍ) ກໍເຮັດແບບດຽວກັນ ຄືໃຫ້ຄວາມສຳຄັນກ່ຽວກັບຜົນກະທົບດ້ານລົບຈາກຄວາມກົດດັນ ແລະຄວາມທຸກໃຈຂອງນັກຮຽນທີ່ມີຫຼາຍເກີນໄປ ຍ້ອນການສອບເສັງແລະການທົດສອບຕ່າງໆ ໂດຍປະຕິບັດນະໂຍບາຍຂອງໂຮງຮຽນດ້ວຍການຍົກເລີກການສອບເສັງເພື່ອເຂົ້າໂຮງຮຽນທັກປີທຳອິດ ແລ້ວຈັດໃຫ້ມີການປະເມີນເປັນແຕ່ລະວັນແທນ ດ້ວຍການທົບທວນເບິ່ງການຄິດທາງດ້ານຄຸນນະພາບຂອງຜູ້ຮຽນ ວ່າເຂົາເຈົ້າໄດ້ຮຽນຮູ້ຜ່ານກິດຈະກຳແນວໃດ (ດ້ວຍການບັນທຶກໃສ່ເຈ້ຍ). ວິທີນີ້ປະເມີນຄວາມກ້າວໜ້າທົ່ວໄປຂອງນັກຮຽນ ແລະຫາທາງເຮັດໃຫ້ນັກຮຽນມີເສັ້ນທາງຊີວິດຂອງການຮຽນຮູ້ຢ່າງສະໜຸກສະໜານ. ສະນັ້ນ ຈຶ່ງເປັນປະໂຫຍດທີ່ຈະຄົ້ນຫາວ່າ ຮູບການອື່ນໆສາມາດມາຊ່ວຍ

ເສີມການສອບເສັງ ເພື່ອປະເມີນຜົນນັກຮຽນໃນລະດັບໜຶ່ງໄດ້ບໍ່ ຫຼືຈະເຍື້ອນໄປໃສ່ສົກຮຽນໃນປີຕໍ່ໆໄປ. ຕໍ່ໄປມີການບອກຕົວຢ່າງຍຸດທະສາດສຳລັບຮູບແບບທີ່ຕ່າງຈາກສິ່ງທີ່ເຄີຍເຮັດໃນການປະເມີນຜົນນັກຮຽນ.

**ເອົາກິດຈະກຳທີ່ຕ່າງຈາກສິ່ງທີ່ເຄີຍເຮັດມາແທນວຽກບ້ານເພື່ອ 'ເສີມຂະຫຍາຍ' ການຮຽນຮູ້**

ຢູ່ສະຖາບັນວິທະຍາສິລປ໌ທີ່ອິນເດຍ ສຳລັບໝົດທຸກຫ້ອງຈົນຮອດ ປ. 6 ເຂົາເຈົ້າໃຫ້ນັກຮຽນເລືອກເອົາ 'ກິດຈະກຳເພື່ອເສີມຂະຫຍາຍການຮຽນຮູ້' ມາແທນວຽກບ້ານ. ກິດຈະກຳທີ່ມີຄວາມໝາຍແລະສະໜຸກສະໜານເຫຼົ່ານີ້ແນໃສ່ເພື່ອ 'ເສີມຂະຫຍາຍ' ການຮຽນຮູ້. ກິດຈະກຳເຫຼົ່ານີ້ ອີງຕາມແຜນການສອນກ່ຽວກັບແຕ່ລະຫົວຂໍ້ສະເພາະ ປົກກະຕິຈະບໍ່ເອົາການຂຽນລວມເຂົ້ານຳ ແຕ່ຈະເອົາກິດຈະກຳຊອກຄົ້ນຫາຄວາມຈິງບັນຈຸເຂົ້າແທນ ໂດຍໃຫ້ນັກຮຽນເຮັດກິດຈະກຳການຮຽນຮູ້ ຫຼັງຈາກນັ້ນກໍແບ່ງປັນສິ່ງທີ່ໄດ້ຮຽນກັບຄົນອື່ນໆໃນຫ້ອງ. ການທີ່ນັກຮຽນໄດ້ສະເໜີສິ່ງເຫຼົ່ານີ້ສາມາດເຊື່ອມໂຍງກັບການອະທິບາຍຄວາມຄິດໃໝ່ທີ່ໄດ້ຮຽນຈາກປຶ້ມ ຫຼືນຳສະເໜີສິ່ງຂອງແລະຜະລິດຕະພັນທີ່ເປັນປະໂຫຍດຊຶ່ງເຂົາເຈົ້າເຮັດຂຶ້ນ. ຕົວຢ່າງ: ຫຼັງຈາກຮຽນກ່ຽວກັບຕົ້ນພ້າວແລ້ວ ນັກຮຽນຈະຜະລິດບາງຢ່າງຈາກໝາກພ້າວຢູ່ທີ່ເຮືອນ ຫຼືວ່າພາຍຫຼັງຮຽນກ່ຽວກັບວົງຈອນຊີວິດຂອງໂຕມ້ອນ ນັກຮຽນຄົນໜຶ່ງໄປຢ້ຽມຢາມບ່ອນຜະລິດໄໝ ຕໍ່ຈາກນັ້ນ ກໍມານຳສະເໜີຢູ່ໃນຫ້ອງ ໂດຍເລົ່າກ່ຽວກັບການໄປຢ້ຽມຢາມຂອງຕົນແລະການວາງສະແດງຟັກຫຼອກຢູ່ໃນຫ້ອງຮຽນ ເຮັດໃຫ້ເພື່ອນນັກຮຽນຫ້ອງດຽວກັນໄດ້ຮຽນຮູ້ກ່ຽວກັບຂະບວນການຜະລິດໄໝ. ກິດຈະກຳເພື່ອການຮຽນຮູ້ນີ້ຍັງເປີດໂອກາດໃຫ້ນັກຮຽນມີປະຕິສຳພັນກັບພໍ່ແມ່, ພີ່ນ້ອງແລະສະມາຊິກຄົນອື່ນໆຂອງຊຸມຊົນທີ່ມີໂຮງຮຽນນຳອີກ. ຕົວຢ່າງ: ຫຼັງຈາກຮຽນກ່ຽວກັບຢາປິ່ນປົວແບບ ອາຢູຣະເວດ (Aryuveda medicine)[14] ນັກຮຽນກັບໄປເຮືອນແລ້ວຮຽນກ່ຽວກັບການປິ່ນປົວຢູ່ໃນຄອບຄົວຈາກພໍ່ເຖົ້າແມ່ເຖົ້າ. ເນື່ອງຈາກກິດຈະກຳເພື່ອເສີມຂະຫຍາຍການຮຽນຮູ້ເຫຼົ່ານີ້ບໍ່ມີການບັງຄັບ ຈຶ່ງເຮັດໃຫ້ນັກຮຽນມີອິດສະຫຼະໃນການເຂົ້າຮ່ວມອີງຕາມຫົວເລື່ອງທີ່ຕົນເອງສົນໃຈ. ອີງຕາມຮອງຜູ້ອຳນວຍການສະຖາບັນນີ້ 'ການເຮັດແບບນີ້ສ້າງແຮງຈູງໃຈໃນການຮຽນຮູ້ຢ່າງແທ້ຈິງ' ແລະເຮັດໃຫ້ຜູ້ຮຽນມີຄວາມກ້າວໜ້າ.

14 ການປິ່ນປົວແບບ ອະຍູຣາເວດ ແມ່ນຮູບແບບການປິ່ນປົວດ້ວຍຢາທີ່ມີຕົ້ນກຳເນີດມາຈາກຊົມພູທະວີບອິນເດຍ

**ເຮັດໃຫ້ເຫັນຄຸນຄ່າຂອງຂະແໜງການຮຽນຮູ້ທີ່ບໍ່ແມ່ນວິຊາການດ້ວຍການປະເມີນທີ່ຕ່າງຈາກສິ່ງທີ່ເຄີຍເຮັດ**

ໂຮງຮຽນ ພິມາກາເຊລ (ພູຖານ) ປະຕິບັດແຜນງານໃຫຍ່ ໃນການປະເມີນສອງປະເພດທີ່ຕ່າງຈາກສິ່ງທີ່ເຄີຍເຮັດ ໂດຍເນັ້ນໃສ່ນະໂຍບາຍໃຫ້ການສຶກສາກ່ຽວກັບຄວາມສຸກມວນລວມຂອງຊາດ: 'ໃບຢັ້ງຢືນດ້ານອຸປະນິໄສ' ແລະແຜນງານໃຫຍ່ກ່ຽວກັບ 'ວຽກທີ່ໃຫ້ໝາກຜົນແລະເປັນປະໂຫຍດແກ່ສັງຄົມ'. ສິ່ງເຫຼົ່ານີ້ມີຈຸດມຸ່ງໝາຍເພື່ອປະເມີນທັກສະຢ່າງມີປະສິດທິຜົນ (ຄວາມຮູ້ສຶກ, ຄຸນຄ່າ, ຄວາມສໍານຶກບຸນຄຸນ, ການສ້າງແຮງຈູງໃຈແລະທັກສະທາງດ້ານຈິດບັນຊາ (ການເຄື່ອນໄຫວແລະການປະສານງານກັນທາງດ້ານຮ່າງກາຍ). ນັກຮຽນໄດ້ຮັບໃບຢັ້ງຢືນດ້ານບຸກຄະລິກອີງຕາມການປະເມີນຄວາມສາມາດສິບຢ່າງກ່ຽວກັບບຸກຄະລິກ ປະກອບດ້ວຍການເປັນຜູ້ນໍາ, ຄວາມຊື່ສັດ, ການຍຶດຖືຄຸນນະທໍາ, ການເຄົາລົບຄົນອື່ນແລະຄວາມສ້າງສັນ. ວຽກທີ່ໃຫ້ໝາກຜົນແລະເປັນປະໂຫຍດແກ່ສັງຄົມຖືກນໍາມາໃຊ້ກັບນັກຮຽນຢູ່ຫ້ອງສູງ (ຫ້ອງ 9 ແລະ 10) ເພື່ອປະເມີນຄຸນຄ່າທາງດ້ານຄວາມສຸກມວນລວມຂອງຊາດ ຊຶ່ງປະກອບດ້ວຍຄວາມເຂົ້າໃຈຄວາມຮູ້ສຶກຄົນອື່ນ, ມີຄວາມຮັກແລະໃສ່ໃຈທໍາມະຊາດ, ເຄົາລົບຕົນເອງແລະຄົນອື່ນ, ການຍຶດຖືຄຸນນະທໍາ, ມີນໍ້າໃຈເຮັດໃຫ້ໂຮງຮຽນເປັນສີຂຽວ, ເຮັດວຽກເປັນໝູ່ຄະນະ, ການຮ່ວມມືກັນແລະຄວາມສ້າງສັນ.

ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ຊຶ່ງແມ່ນໜຶ່ງໃນສີ່ໂຮງຮຽນໃນທົ່ວໂລກ ທີ່ມອບໃບປະກາດສະນິຍະບັດກ່ຽວກັບການເປັນພົນລະເມືອງໂລກ ໃຫ້ເປັນຄຸນວຸທິທາງເລືອກໃຫ້ແກ່ນັກຮຽນມັດທະຍົມ ກໍປະຕິບັດແຜນງານໃຫຍ່ແບບດຽວກັນນີ້. ຈຸດມຸ່ງໝາຍລວມຂອງແຜນງານໃຫຍ່ນີ້ແມ່ນ ເພື່ອປະເມີນນັກຮຽນທາງດ້ານທັດສະນະຄະຕິ, ບຸກຄະລິກແລະປະສົບການຕ່າງໆ ຊຶ່ງເຮັດໃຫ້ເຂົາເຈົ້າເປັນ 'ພົນລະເມືອງດີຂອງໂລກ' ແລະໃຫ້ມີ 'ການວັດລັກສະນະຮອບດ້ານກ່ຽວກັບສິ່ງດີທີ່ສຸດຂອງນັກຮຽນໃນນາມສ່ວນບຸກຄົນ' (Global Citizen Diploma, 2015) ໂດຍເບິ່ງຂ້າມການໃຫ້ຄະແນນແບບທີ່ເຄີຍປະຕິບັດກັນມາເພື່ອປະເມີນທັກສະເປັນຊຸດໃນວົງກວ້າງ. ນັກຮຽນທີ່ເຂົ້າຮ່ວມວຽກໃນແຜນງານໃຫຍ່ນີ້ໄດ້ດໍາເນີນໂຄງການຕ່າງໆ ອີງຕາມມາດຖານສາມຢ່າງ ຄື: ການສື່ສານກັນ, ມິຕິກ່ຽວກັບໂລກແລະການມີສ່ວນຮ່ວມຂອງຊຸມຊົນ. ການເຂົ້າຮ່ວມໂຄງການເຫຼົ່ານີ້ເຮັດໃຫ້ຜູ້ຮຽນໄດ້ພັດທະນາການຄິດແບບວິພາກທາງເລິກ ແລະທັກສະການສື່ສານກັນ ໂດຍປະຍຸກໃຊ້ການຮຽນຮູ້ຂອງເຂົາເຈົ້າດ້ວຍການຄິດທົບທວນກ່ຽວກັບປະສົບການສ່ວນຕົວຂອງຕົນ. ເມື່ອງ

ຈາກແຜນງານໃຫຍ່ແມ່ນທາງເລືອກ ສິ່ງນີ້ຈຶ່ງໄດ້ເປີດໂອກາດໃຫ້ນັກຮຽນມີຄວາມເປັນເຈົ້າການຫຼາຍຂຶ້ນ ລວມທັງການພັດທະນາໃຫ້ເກີດແຮງຈູງໃຈຂອງຕົນເອງ.

### ເອົາປັດໄຈທີ່ບໍ່ແມ່ນວິຊາການບັນຈຸເຂົ້າໃນການຮັບເອົານັກຮຽນເຂົ້າໂຮງຮຽນ

ຢູ່ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ມາດຖານການຮັບເອົານັກຮຽນປະກອບດ້ວຍປັດໄຈທີ່ບໍ່ແມ່ນວິຊາການ ເຊັ່ນ: ກິດຈະກຳນອກຫຼັກສູດແລະການມີສ່ວນຮ່ວມຂອງຊຸມຊົນ. ດັ່ງທີ່ມີການປະຕິບັດສືບຕໍ່ກັນມາເປັນເວລາດົນນານຢູ່ບາງປະເທດ ຕົວຢ່າງ: ຢູ່ທີ່ສະຫະລັດອາເມຣິກາ ມະຫາວິທະຍາໄລຕ່າງໆໃຊ້ວິທີການປະເມີນຜົນ ເພື່ອປະເມີນຄວາມສາມາດຂອງນັກຮຽນ ເຊັ່ນ: ການເປັນຜູ້ນຳ, ຄວາມສາມາດໃນການປັບຕົວແລະຄວາມສ້າງສັນ ຊຶ່ງບາງຄົນອ້າງວ່າປະສົບຄວາມສຳເລັດເປັນພິເສດໃນການບົ່ງບອກນັກຮຽນຜູ້ທີ່ມີແນວໂນ້ມຈະປະສົບຄວາມສຳເລັດ ອາດຈະເປັນຜູ້ທີ່ບໍ່ໄດ້ຄະແນນສູງໃນການທົດສອບແລະການສອບເສັງ (Tomsho, 2009). ດັ່ງທີ່ໄດ້ກ່າວເຖິງແບບດຽວກັນຢູ່ກ່ອນໜ້ານີ້ແລ້ວ ສາທາລະນະລັດເກົາຫຼີເຫັນວ່າ ການເຮັດໃຫ້ການແບກຮັບພາລະໃນການສອບເສັງເຂົ້າມະຫາວິທະຍາໄລງ່າຍຂຶ້ນແລະຫຼຸດຜ່ອນລົງ ແມ່ນສ່ວນໜຶ່ງຂອງນະໂຍບາຍການສຶກສາແຫ່ງຊາດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ນອກຈາກກໍລະນີນີ້ແລ້ວ ບັນຫານີ້ໄດ້ສະທ້ອນໃຫ້ເຫັນຫຼາຍປານໃດຢູ່ໃນການຮັບເອົານັກສຶກສາເຂົ້າມະຫາວິທະຍາໄລທົ່ວພາກພື້ນອາຊີ-ປາຊີຟິກນັ້ນ ຍັງເປັນສິ່ງທີ່ບໍ່ຊັດເຈນເທື່ອ ສະນັ້ນ ຈຶ່ງສະເໜີເປັນເລື່ອງໜຶ່ງເພື່ອຄົ້ນຄວ້າຕໍ່ໄປອີກ.

## ການເຮັດວຽກເປັນໝູ່ຄະນະແລະຄວາມມີນ້ຳໃຈໃນການຮ່ວມມືກັນ

ຄຳຕອບສຳລັບການສຳຫຼວດຊີ້ໃຫ້ເຫັນຄວາມສຳຄັນຂອງການເຮັດວຽກເປັນໝູ່ຄະນະແລະຄວາມມີນ້ຳໃຈໃນການຮ່ວມມືກັນ ເພື່ອເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ອົງປະກອບຕ່າງໆມີການສ້າງຄວາມຮູ້ສຶກຜູກພັນແລະຊຸກຍູ້ນັກຮຽນໃຫ້ຮຽນຮູ້ຮ່ວມກັນ ເນື່ອງຈາກ 'ການຮ່ວມມືກັນເຮັດໃຫ້ນັກຮຽນສາມາດເຮັດວຽກຮ່ວມກັນ ລວມທັງແບ່ງປັນຄວາມຮັບຜິດຊອບ, ອຸປະກອນ, ບົດບາດແລະໂອກາດຮຽນຮູ້ຮ່ວມກັນ' (UNESCO, 2004, p. 22). ຍຸດທະສາດສອງຢ່າງຕໍ່ໄປນີ້ ເອົາມາຈາກສິ່ງທີ່ຄົ້ນພົບຈາກການວິໄຈ.

### ແນະນຳວຽກໃຫ້ເຮັດເປັນກຸ່ມເພື່ອແກ້ໄຂບັນຫາຮ່ວມກັນ

ຜູ້ຕອບຄຳຖາມຫຼາຍຄົນສຳລັບການສຳຫຼວດທີ່ເຮັດເປັນພາສາຍີ່ປຸ່ນໄດ້ບອກໄວ້ຢູ່ໃນ

ລາຍການວ່າ ການແກ້ໄຂບັນຫາຮ່ວມກັນແມ່ນສ່ວນໜຶ່ງຂອງການຮຽນຮູ້ທີ່ສະໜຸກສະໜານທີ່ສຸດ ໂດຍນັກຮຽນບອກວ່າກິດຈະກຳແບບນີ້ກ່ຽວຂ້ອງກັບ 'ການແກ້ໄຂບັນຫາກັບເພື່ອນນັກຮຽນຫ້ອງດຽວກັນລະຫວ່າງຊົ່ວໂມງຮຽນວິຊາຕ່າງໆ' ຊຶ່ງເຮັດໃຫ້ 'ນັກຮຽນມີໂອກາດຫຼາຍໃນການສື່ສານກັບໝູ່ເພື່ອນຢູ່ໃນຫ້ອງ' ແລະເພື່ອຕອບຄຳຖາມຍາກຮ່ວມກັນ ແທນທີ່ຈະເຮັດຄົນດຽວ ທັງເຮັດໃຫ້ນັກຮຽນສາມາດ 'ເຮັດບາງຢ່າງສຳເລັດດ້ວຍການຮ່ວມມືກັນ'.

### ແນະນຳກິດຈະກຳການຮຽນຮູ້ແບບໝູ່ຄະນະຫຼາຍຢ່າງທີ່ແຕກຕ່າງກັນ

ນາຍຄູຢູ່ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ນຳໃຊ້ວິທີການຮຽນການສອນຫຼາຍຢ່າງທີ່ແຕກຕ່າງກັນ ໂດຍເນັ້ນເປັນພິເສດໃສ່ການຮຽນຮູ້ຮ່ວມກັນ. ນັກຮຽນເຮັດວຽກເປັນໝູ່ຄະນະແລະຮຽນຫຼາຍວິທີທີ່ແຕກຕ່າງກັນ ດ້ວຍການສຳຫຼວດ, ໂຕ້ວາທີແລະຫຼິ້ນເກມ ຊຶ່ງຄູແລະນັກຮຽນຊ່ວຍເຫຼືອກັນແລະກັນໃນຂະບວນການຮຽນຮູ້ທັງໝົດ.

## ວິທີການຮຽນການສອນທີ່ມ່ວນຊື່ນແລະມີສ່ວນຮ່ວມ

ຜູ້ຕອບຄຳຖາມສຳລັບການສຳຫຼວດຊີ້ໃຫ້ເຫັນຄວາມຈຳເປັນຕ້ອງມີວິທີການຮຽນຮູ້ທີ່ມ່ວນຊື່ນແລະມີສ່ວນຮ່ວມຫຼາຍຂຶ້ນ ເພື່ອເຮັດໃຫ້ຂະບວນການຮຽນການສອນສະໜຸກສະໜານຫຼາຍຂຶ້ນ ສຳລັບນັກຮຽນແລະຄູກໍເຊັ່ນດຽວກັນ. ວິທີການແບບນີ້ບໍ່ຈຳເປັນຕ້ອງເຮັດໃຫ້ການຮຽນຮູ້ງ່າຍຂຶ້ນ ແລະອາດເຮັດໃຫ້ຜູ້ຮຽນໃຊ້ຄວາມພະຍາຍາມໜ້ອຍລົງ ແຕ່ວິທີການແບບນີ້ຊ່ວຍກະຕຸ້ນໃຫ້ເກີດຄວາມຮັກໃນການຮຽນຮູ້ຢ່າງແທ້ຈິງ ຊຶ່ງເຮັດໃຫ້ຜູ້ຮຽນປະສົບຄວາມສຳເລັດຢູ່ໃນໂຮງຮຽນ. ອີງຕາມຄູຍິງຄົນໜຶ່ງຈາກໂຮງຮຽນຂອງລັດຢູ່ຟີລິບປິນ ໂຮງຮຽນໃຫ້ຄວາມສຸກຈະຕ້ອງມີ 'ຊົ່ວໂມງຮຽນທີ່ມ່ວນຊື່ນແລະສະໜຸກສະໜານໂດຍນຳໃຊ້ອຸປະກອນການສອນແບບສ້າງສັນແລະມີສີສັນລວມທັງກິດຈະກຳມ່ວນຊື່ນ'. ຕໍ່ໄປມີການສະເໜີຕົວຢ່າງຫຼາຍອັນເພື່ອເອົາວິທີການຮຽນຮູ້ດັ່ງກ່າວສອດແຊກເຂົ້າໃນການຮຽນການສອນ.

### ຍາດໂອກາດນຳໃຊ້ວິທີການຮຽນຮູ້ທີ່ແຕກຕ່າງຈາກສິ່ງທີ່ເຄີຍເຮັດ

ແຜນງານໃຫຍ່ເບິ່ງຂ້າມດ້ານວິຊາການຂອງສະຖາບັນວິທະຍາສິລປ໌ (ອິນເດຍ) ດ້ວຍການນຳໃຊ້ວິທີການຮຽນຮູ້ທາງພາກປະຕິບັດແລະຄິດຄົ້ນຂຶ້ນໃໝ່ຫຼາຍຢ່າງທີ່ແຕກຕ່າງກັນ ຊຶ່ງແນໃສ່ສົ່ງເສີມການຮຽນດ້ານວິຊາການ ດ້ວຍການເຮັດໃຫ້ການຮຽນຮູ້ມ່ວນຊື່ນແລະມີສ່ວນຮ່ວມສຳລັບນັກຮຽນແລະຄູກໍເຊັ່ນດຽວກັນ. ສ່ວນປະກອບສຳຄັນຫ້າຢ່າງຂອງແຜນ

ງານໃຫຍ່ນີ້ມີຄວາມເຊື່ອມໂຍງກັບມາດຖານຕ່າງໆຢູ່ໃນທັງສາມປະເພດ ຄື: ຜູ້ຄົນ, ຂະບວນການແລະສະຖານທີ່. ຕົວຢ່າງ: ສ່ວນປະກອບສຳຄັນກ່ຽວກັບສິລະປະການຂຽນຂ່າວຫຼືສິລະປະຍົດນ້ຳ ກະຕຸ້ນໃຫ້ຜູ້ຮຽນມີອິດສະຫຼະແລະຄວາມສ້າງສັນ ສ່ວນວ່າສ່ວນປະກອບສຳຄັນກ່ຽວກັບສິລະປະການຊອກຮູ້ບັນຫາແລະສິລະປະດາວກະຈາຍນັ້ນ ສົ່ງເສີມຄວາມສຳພັນກັນພາຍໃນຊຸມຊົນ, ເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງກັນ. ສ່ວນປະກອບສຳຄັນຂອງແຜນງານໃຫຍ່ນີ້ໄດ້ສະເໜີຢູ່ໃນກ່ອງຂໍ້ຄວາມ 4.

***ກ່ອງຂໍ້ຄວາມ 4.*** *ວິທີການຮຽນຮູ້ທີ່ແຕກຕ່າງຈາກສິ່ງທີ່ເຄີຍເຮັດຊຶ່ງນຳມາໃຊ້ຢູ່ໃນແຜນງານໃຫຍ່ໂດຍເບິ່ງຂ້າມດ້ານວິຊາການຂອງສະຖາບັນວິທະຍາສິລປ໌ (ອິນເດຍ)*

**ສິລະປະຍົດນ້ຳ** - ກິດຈະກຳນີ້ໃຫ້ນັກຮຽນມີສ່ວນຮ່ວມນຳໂດຍໃຫ້ໂອກາດເຂົາເຈົ້າສ້າງແລະຜະລິດໜັງສືພິມຂອງໂຮງຮຽນ. ຜູ້ຮຽນເສີມຂະຫຍາຍຄວາມຮູ້ຂອງເຂົາເຈົ້າກ່ຽວກັບບັນຫາຕ່າງໆຢູ່ໃນຫ້ອງໜຶ່ງ ທີ່ຖືກຈັດໃຫ້ມີສະພາບແວດລ້ອມແບບເປັນກັນເອງຄ້າຍຄືຫ້ອງເຮັດຂ່າວຢ່າງແທ້ຈິງ. ອີງຕາມໂຮງຮຽນ ກິດຈະກຳແບບລົງມືເຮັດທີ່ມີສ່ວນຮ່ວມນີ້ບໍ່ພຽງແຕ່ເພີ່ມທະວີຄວາມເຊື່ອມໂຍງກັບເນື້ອໃນການຮຽນຮູ້ເທົ່ານັ້ນ ແຕ່ຍັງເຮັດໃຫ້ທັກສະດ້ານການຂຽນໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງຫຼວງຫຼາຍນຳອີກ.

**ສິລະປະການຊອກຮູ້ບັນຫາ** - ຢູ່ໃນກິດຈະກຳນີ້ ນັກຮຽນພັດທະນາທັກສະການສື່ສານດ້ວຍການກະກຽມຂໍ້ມູນ, ກ່າວຄຳປາໄສແລະການນຳສະເໜີເລື່ອງຕ່າງໆໃຫ້ແກ່ຜູ້ຟັງລວມທັງພໍ່ແມ່. ກິດຈະກຳນີ້ແມ່ນວິທີທີ່ນັກຮຽນມີຄວາມມ່ວນຊື່ນໃນການພັດທະນາທັກສະດ້ານການວິໄຈ (ລະຫວ່າງທີ່ກະກຽມການນຳສະເໜີເລື່ອງຕ່າງໆ), ທັກສະການຄິດລັກສະນະວິພາກທາງເລິກ (ດ້ວຍການຕອບຄຳຖາມຂອງຜູ້ຟັງ) ແລະຍົກສູງການປະເມີນຄ່າຕົນເອງແລະຄວາມໝັ້ນໃຈຂອງພວກເຂົາເຈົ້າ (ດ້ວຍການນຳສະເໜີເລື່ອງຕ່າງໆຕໍ່ໝູ່ເພື່ອນນັກຮຽນແລະຜູ້ໃຫຍ່ໂດຍສົມມຸດວ່າແມ່ນຜູ້ຟັງ).

**ສິລະປະດາວກະຈາຍ** - ອັນນີ້ແມ່ນວິທີການຮຽນຮູ້ຈາກປະສົບການຊຶ່ງປະກອບດ້ວຍການໄປຢ້ຽມຢາມບ້ານຕ່າງໆໃນທ້ອງຖິ່ນທຸກໆອາທິດ ຊຶ່ງເປັນບ່ອນທີ່ຜູ້ຮຽນເຂົ້າຮ່ວມກິດຈະກຳຕ່າງໆ ເຖິງຈະບໍ່ 'ໃຫ້ການຊ່ວຍເຫຼືອ' ໄດ້ຢ່າງງ່າຍດາຍກໍຕາມ. ອັນນີ້ເຮັດໃຫ້ເຂົ້າໃຈສະພາບຄວາມເປັນຈິງຢູ່ໃນຊຸມຊົນທີ່ດ້ອຍໂອກາດກວ່າຊຸມຊົນຂອງຕົນເອງ. ພາຍຫຼັງການໄປຢ້ຽມຢາມ ຈະມີການສົນທະນາກັນຢູ່ໃນຫ້ອງແລະຄິດທົບທວນສິ່ງທີ່ໄດ້ເຫັນດ້ວຍການຂຽນອອກມາເປັນເລື່ອງ.

**ສິລະປະການປະກອບການ** - ກິດຈະກຳນີ້ແນໃສ່ເຮັດໃຫ້ນັກຮຽນພັດທະນາທັກສະດ້ານການປະກອບການດ້ວຍການຮຽນຮູ້ທາງພາກປະຕິບັດແລະປະສົບການໃນໂລກແຫ່ງຄວາມເປັນຈິງ ຊຶ່ງກ່ຽວຂ້ອງກັບດ້ານວຽກງານ. ນັກຮຽນນຳພາເຮັດກິດຈະກຳດ້ວຍຕົນເອງ ດ້ວຍການລົງຝຶກງານຢູ່ໃນວິສາຫະກິດຕ່າງໆ ຊຶ່ງນັກຮຽນໄດ້ຮຽນຮູ້ສິ່ງຕ່າງໆ ເຊັ່ນ: ຂະບວນການຜະລິດ, ເຕັກນິກການຕະຫຼາດແລະການບັນຊີ ທັງໃຫ້ເຂົາເຈົ້ານຳເອົາສິ່ງທີ່ໄດ້ຮຽນຮູ້ໄປນຳໃຊ້ດ້ວຍການເຮັດຜະລິດຕະພັນຂອງຕົນເອງເພື່ອສະເໜີຕໍ່ຊຸມຊົນທີ່ມີໂຮງຮຽນ.

**ສິລະປະພະລັງງານສີຂຽວ** - ວິທີນີ້ຄືໃຫ້ນັກຮຽນທີ່ເຂົ້າຮ່ວມກິດຈະກຳນຳເອົາສິ່ງທີ່ໄດ້ຮຽນຜ່ານປະສົບການຕົວຈິງໄປປັບໃຊ້ ໂດຍມີຈຸດມຸ່ງໝາຍໃນການສົ່ງເສີມຈິດສຳນຶກກ່ຽວກັບສິ່ງແວດລ້ອມເພື່ອເປັນການສ້າງ 'ຫໍພັກພະລັງງານສີຂຽວ'.

*Source:* Adapted from Vidyashilp Academy, 2013

## ຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງນັກຮຽນ

ຜູ້ຕອບຄຳຖາມບາງຄົນຄິດວ່າ ໃນບາງກໍລະນີ ໂຮງຮຽນບາງແຫ່ງມີສະພາບແວດລ້ອມທີ່ອຶດອັດໃຈສຳລັບການຮຽນຮູ້ ຊຶ່ງແມ່ນບັນຫາໜຶ່ງທີ່ກີດໜ່ວງຄວາມມີອິດສະຫຼະ, ຄວາມສ້າງສັນແລະການມີສ່ວນຮ່ວມຂອງຜູ້ຮຽນ. ອີງຕາມພໍ່ຄົນໜຶ່ງຈາກບັງກລາເທດ ສະພາບແບບນີ້ເຮັດໃຫ້ເດັກນ້ອຍ 'ຢ້ານກົວ ບໍ່ກ້າເວົ້າຫຼືຮູ້ສຶກວ່າບໍ່ປອດໄພເມື່ອເວົ້າອອກໄປ'. ຜູ້ທີ່ມີສ່ວນຮ່ວມທຸກປະເພດບອກວ່າ ອັນນີ້ແມ່ນບັນຫາໜຶ່ງທີ່ເຮັດໃຫ້ນັກຮຽນມີຄວາມຢ້ານກົວໃນການເຮັດຜິດ. ຜູ້ຕາງໜ້າໂຮງຮຽນຕ່າງໆ ທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນໃນການເຫັນຄຸນຄ່າຂອງຄວາມຜິດພາດວ່າແມ່ນສ່ວນໜຶ່ງຂອງຂະບວນການຮຽນຮູ້ ແທນທີ່ຈະຖືວ່າເປັນສິ່ງທີ່ພາໃຫ້ອັບອາຍຂາຍໜ້າ. ນັກການສຶກສາຫຼາຍຄົນເຂົ້າໃຈດີວ່າ ຄວາມຜິດພາດແມ່ນສ່ວນສຳຄັນທີ່ສຸດຂອງ 'ການປະຕິບັດຢ່າງຮອບຄອບ'. ວິທີນີ້ຈະປັບປຸງຈຸດບົກຜ່ອງແລະເຮັດໃຫ້ດີຂຶ້ນຈົນເກີດຄວາມຊຳນິຊຳນານໃນທີ່ສຸດ. ອີງຕາມ ມັດສ໌ ແລະ ໂອບຼຽນ (Mats and O'Brien) (ປີ 2014). 'ຄວາມຜິດພາດແມ່ນສິ່ງສຳຄັນທີ່ສຸດຊຶ່ງເກີດຂຶ້ນຢູ່ທຸກຫ້ອງຮຽນ ເພາະວ່າເຂົາເຈົ້າບອກພວກເຈົ້າໃຫ້ໃສ່ໃຈການປະຕິບັດຢ່າງຮອບຄອບ'. ດັ່ງທີ່ຜູ້ອຳນວຍການຍິງຄົນໜຶ່ງຢູ່ໂຮງຮຽນນາໆຊາດທີ່ອິນເດຍໃຫ້ທັດສະນະວ່າ ໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ຮັບປະກັນໃຫ້ມີ 'ອິດສະຫຼະໃນການສະແດງຄວາມຄິດເຫັນແລະຮັບຜິດຊອບຮ່ວມກັນແບບບໍ່ມີການຂົ່ມຂູ່ ແລະບໍ່ຖືວ່າຄວາມຜິດພາດແມ່ນບັນຫາໃຫຍ່'. ຄູຍິງຄົນໜຶ່ງຈາກໂຮງຮຽນຂອງລັດຢູ່ປະເທດໄທກໍເວົ້າຄືກັນ ນາງອະທິບາຍເຖິງຜົນດີຂອງການຊຸກຍູ້ຄວາມມີອິດສະຫຼະຂອງຜູ້ຮຽນຢູ່ໃນໂຮງຮຽນໂດຍເວົ້າວ່າ:

*ຍິ່ງຂ້ອຍສອນຫຼາຍເທົ່າໃດ ຂ້ອຍກໍຍິ່ງພະຍາຍາມໃຫ້ນັກຮຽນຂອງຂ້ອຍມີໂອກາດສະແດງຄວາມຄິດເຫັນຂອງຕົນຫຼາຍຂຶ້ນແລະປ່ອຍໃຫ້ເຂົາເຈົ້າເຮັດຄວາມຜິດໂລດ. ມັນເຮັດໃຫ້ເກີດພື້ນທີ່ສຳລັບການປຶກສາຫາລືກັນຢ່າງແທ້ຈິງກ່ຽວກັບເລື່ອງຕ່າງໆໃນແຕ່ລະມື້ ຊຶ່ງແມ່ນວິທີທີ່ຍິ່ງໃຫຍ່ໃນການເລີ່ມຕົ້ນ. ສິລະປະກໍແມ່ນວິທີໜຶ່ງເພື່ອໃຫ້ພື້ນທີ່ແລະບົດບາດແກ່ນັກຮຽນແຕ່ລະຄົນ. ຜ່ານທາງສິລະປະ ເຂົາເຈົ້າແຕ່ລະຄົນສາມາດສະແດງຄວາມຮູ້ສຶກແລະປະສົບການໃນລັກສະນະສ່ວນຕົວອອກມາ.*

ຕໍ່ໄປແມ່ນຕົວຢ່າງຍຸດທະສາດ ເພື່ອສ້າງບັນຍາກາດແບບເປີດກວ້າງຫຼາຍຂຶ້ນຢູ່ໃນ

ຫ້ອງຮຽນຕ່າງໆ.

**ເຫັນຄຸນຄ່າຂອງຄວາມຜິດພາດວ່າເປັນສ່ວນໜຶ່ງຂອງຂະບວນການຮຽນຮູ້**

ບາງໂຮງຮຽນໄດ້ຊຸກຍູ້ໃຫ້ຄູເອົາຜົນງານຂອງນັກຮຽນມາຕິດໃສ່ກະດານຫຼືຝາຫ້ອງຮຽນ ເຖິງແມ່ນວ່າຜົນງານດັ່ງກ່າວ ຈະມັກມີຂໍ້ຜິດພາດທີ່ມັກເກີດຂຶ້ນເປັນປະຈຳກໍ່ຕາມ ແຕ່ຂະບວນການເຫຼົ່ານັ້ນເຮັດໃຫ້ນັກຮຽນຮູ້ສຶກວ່າມັນເປັນສິ່ງທີ່ສົ່ງເສີມຄວາມເປັນອິດສະຫຼະ ແລະ ຫຼຸດຜ່ອນຄວາມຢ້ານກົວຕໍ່ການກະທຳຄວາມຜິດ ພ້ອມທັງເຮັດໃຫ້ເຂົາເຈົ້າເກີດແຮງຈູງໃຈ ແລະ ມຸ້ງມານະຫຼາຍຂຶ້ນ. ຄວາມຜິດພາດໄດ້ຮັບການແກ້ໄຂຢ່າງສະຫຼາດສ່ອງໃສລະຫວ່າງຊົ່ວໂມງຮຽນ ໂດຍມີສິ່ງສະແດງໃຫ້ເຫັນເຖິງການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ ພາຍໃນຊ່ວງເວລາໜຶ່ງ. ຢູ່ສະຖາບັນວິທະຍາສິລປ໌ ຄວາມຮູ້ສຶກດ້ານລົບທີ່ອາດເກີດຂຶ້ນກັບນັກຮຽນເມື່ອເຮັດຄວາມຜິດນັ້ນຄວນສະແດງອອກມາໃຫ້ເຫັນໜ້ອຍທີ່ສຸດ ດ້ວຍການໃຫ້ກຳລັງໃຈນັກຮຽນໃຫ້ຊ່ວຍເຫຼືອກັນແລະກັນເພື່ອແກ້ໄຂສິ່ງຜິດພາດຂອງເຂົາເຈົ້າ ໃນຂະນະດຽວກັນກໍຊົມເຊີຍຄວາມສຳເລັດຂອງເຂົາເຈົ້າ ແລະຜົນງານດ້ານຕ່າງໆຂອງເຂົາເຈົ້າທີ່ນຳມາສະແດງ. ທີ່ໂຮງຮຽນມັດທະຍົມທົດລອງຂອງສະຖາບັນວິທະຍາສາດການສຶກສາ (ຫວຽດນາມ) ຄູໄດ້ໃຊ້ຄວາມພະຍາຍາມຢ່າງຍິ່ງໃນການໃຫ້ຂໍ້ຄິດເຫັນດ້ານບວກແລະເປັນລັກສະນະໃຫ້ກຳລັງໃຈໃສ່ປຶ້ມບົດຝຶກຫັດຂອງນັກຮຽນ ເພື່ອຫຼຸດຜ່ອນຄວາມຢ້ານກົວຂອງນັກຮຽນໃນການເຮັດຄວາມຜິດ. ອັນນີ້ກ່ຽວຂ້ອງກັບການບໍ່ຂຽນຄະແນນຫຼືເຄື່ອງໝາຍໃສ່ປຶ້ມນີ້ແລະບໍ່ລະບຸສິ່ງທີ່ຜິດດ້ວຍເຄື່ອງໝາຍຕົນກາສີແດງ ແຕ່ຈະເນັ້ນໃສ່ສິ່ງທີ່ນັກຮຽນເຮັດຖືກໂດຍໃຫ້ຂໍ້ຄິດເຫັນ, ຄຳແນະນຳແລະການໃຫ້ກຳລັງໃຈໃນລັກສະນະຊ່ວຍເຫຼືອແລະສາມາດນຳໄປປະຕິບັດໄດ້ຈິງ.

**ສອນນັກຮຽນໃຫ້ຕັ້ງຄຳຖາມ**

ຜູ້ຕອບຄຳຖາມສຳລັບການສຳຫຼວດຫຼາຍຄົນຄິດວ່າ ຄວນກະຕຸ້ນໃຫ້ນັກຮຽນຕັ້ງຄຳຖາມຢູ່ໃນຫ້ອງຮຽນ. ອີງຕາມ ໂຣສຕ່າຍນ໌ ແລະ ແຊນຕານາ (Rothstein and Santana) (2011, p. 1) ຜູ້ທີ່ຍູ້ດັນໃຫ້ມີການໃຊ້ວິທີການຄິດຫາຄຳຖາມ 'ເວລາທີ່ນັກຮຽນຮູ້ວ່າຈະຕັ້ງຄຳຖາມຂອງຕົນເອງແນວໃດ ເຂົາເຈົ້າຈະເປັນເຈົ້າການຫຼາຍຂຶ້ນກ່ຽວກັບການຮຽນຮູ້ຂອງຕົນ, ມີຄວາມເຂົ້າໃຈເລິກເຊິ່ງຫຼາຍຂຶ້ນ, ມີຄວາມຜູກພັນແລະຄົ້ນພົບສິ່ງໃໝ່ດ້ວຍຕົວເຂົາເຈົ້າເອງ'. ເຖິງວ່າຈະເປັນວິທີທີ່ງ່າຍ ແຕ່ໃຫ້ຜົນດີຫຼາຍຢ່າງ ຊຶ່ງບໍ່ຄ່ອຍມີການສອນກັນຢ່າງ

ຈິງຈັງ (Hough, 2015). ວິທີນີ້ສາມາດນຳມາປະຍຸກໃຊ້ກັບໂຮງຮຽນທີ່ມີສະພາບເງື່ອນໄຂຕ່າງໆ ເພື່ອກະຕຸ້ນໃຫ້ນັກຮຽນຕັ້ງຄຳຖາມ.

## ມີຈິດສຳນຶກກ່ຽວກັບສິ່ງທີ່ບັນລຸແລະການທຳໃຫ້ສຳເລັດ

ນັກຮຽນຫຼາຍຄົນທີ່ຕອບຄຳຖາມສຳລັບການສຳຫຼວດຄິດວ່າ ໂຮງຮຽນໃຫ້ຄວາມສຸກເປັນບ່ອນທີ່ນັກຮຽນມີຈິດສຳນຶກກ່ຽວກັບສິ່ງທີ່ບັນລຸແລະການເຮັດໃຫ້ສຳເລັດ. ອັນນີ້ບໍ່ແມ່ນການໃຫ້ເງິນວັດ ຫຼືໃຫ້ຄະແນນສູງໃນການສອບເສັງແລະມອບໝາຍວຽກໃຫ້ເຮັດ ແຕ່ແມ່ນການຍອມຮັບແລະຊຸກຍູ້ຈາກຄູ, ພໍ່ແມ່ນັກຮຽນແລະຊຸມຊົນໃນວົງກວ້າງ. ຄວາມຈິງແລ້ວການສະແດງຄວາມຄິດເຫັນທີ່ດີແລະການຍອມຮັບຈາກຄົນທົ່ວໄປແມ່ນຄຸນຄ່າອັນສູງສົ່ງທີ່ສຸດໃນສາຍຕາຂອງນັກຮຽນ ແລະສາມາດກະຕຸ້ນເຂົາເຈົ້າໃຫ້ປັບປຸງດ້ານວິຊາການໃຫ້ດີຂຶ້ນ. ເນື່ອງຈາກການສຶກສາທາງບວກພະຍາຍາມໃຫ້ມີການປະສົມປະສານກັນ ລະຫວ່າງຄວາມເປັນເລີດທາງດ້ານວິຊາການ, ອຸປະນິໄສແລະຄວາມຢູ່ດີມີສຸກ (IPEN, 2016a) ຈຶ່ງຄວນມີການສະຫຼອງຄວາມພະຍາຍາມຂອງຜູ້ຮຽນເພື່ອບັນລຸເປົ້າໝາຍ ເຖິງວ່າເປັນສິ່ງເລັກນ້ອຍກໍຕາມ. ຕໍ່ໄປມີການໃຫ້ບາງຕົວຢ່າງວິທີການສະຫຼອງຄວາມພະຍາຍາມຂອງນັກຮຽນ.

### ສະແດງຄວາມຄິດເຫັນດ້ານບວກແລະການຍອມຮັບຈາກຄົນທົ່ວໄປ

ຢູ່ໂຮງຮຽນຕ່າງໆໃນເທດສະບານ ອາກິຕະ (ຍີ່ປຸ່ນ) ຄູຮັບປະກັນວ່າ ພວກຕົນຕ້ອງສະແດງຄວາມຄິດເຫັນດ້ານບວກແລະຮອບຄອບໃຫ້ແກ່ນັກຮຽນ ເວລາກວດວຽກບ້ານ, ແຕ່ງເລື່ອງ, ການແຕ້ມຮູບ ແລະນຳສະເໜີເລື່ອງຕ່າງໆ. ຜົນງານແບບນີ້ຈະມີການວາງສະແດງໃຫ້ເຫັນຢູ່ໃນຫ້ອງຮຽນ ໂດຍມີຄວາມຄິດເຫັນຂອງຄູຢ່າງລະອຽດນຳພ້ອມ. ການເຮັດແບບນີ້ກໍເພື່ອຮັບປະກັນວ່າ ນັກຮຽນສາມາດເຫັນສິ່ງທີ່ຕົນເອງເຮັດໄດ້ສຳເລັດ ແລະຄົນທົ່ວໄປກໍຍອມຮັບຜົນສຳເລັດເຫຼົ່ານີ້. ອີງຕາມຄູຢູ່ໂຮງຮຽນເຫຼົ່ານີ້ ສິ່ງນີ້ໃຫ້ໂອກາດແກ່ນັກຮຽນໝົດທຸກຄົນທີ່ຈະໄດ້ຮັບຄຳຊົມເຊີຍແລະການຍອມຮັບ. ຄູຢູ່ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ກໍເຮັດແບບດຽວກັນ ຄືຈັດສະແດງຜົນງານຂອງນັກຮຽນໂດຍຕິດໄວ້ຕາມຝາຫ້ອງຮຽນ. ດັ່ງທີ່ ຈູ ອູນ ຄິມ (Joo Eun Kim) ໄວ 11 ປີ ຊຶ່ງເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກບອກວ່າ 'ພວກເຮົາວາງສະແດງຜົນງານຫຼາຍຢ່າງເພື່ອແລກປ່ຽນກັນກ່ຽວກັບສິ່ງທີ່ພວກເຮົາໄດ້ຮຽນ. ສິ່ງນີ້ເຮັດໃຫ້ພວກເຮົາມີຄວາມສຸກ ແລະມີຄວາມພູມໃຈ ເວລາສາມາດແລກປ່ຽນສິ່ງຕ່າງໆກັບຄົນອື່ນໆ'.

**ສ້າງ 'ຊຸດເອກະສານກ່ຽວກັບຄວາມໄຝ່ຝັນຕ່າງໆ'**

'ໂຄງການແຫ່ງຄວາມຝັນ' ກາຊັງ ດາລິນເຈ *(Gachang Dalinje)* ຂອງໂຮງຮຽນປະຖົມ ແດກູ ກາຊັງ ເຮັດໃຫ້ນັກຮຽນມີຄວາມໄຝ່ຝັນແລະຄິດເຖິງອະນາຄົດຂອງຕົນເອງ. ສ່ວນໜຶ່ງຂອງໂຄງການ ຄືໃຫ້ນັກຮຽນແຕ່ລະຄົນມີ 'ປຶ້ມເພື່ອໄຕ່ເຕົ້າໄປສູ່ສິ່ງທີ່ໄຝ່ຝັນໄວ້' ຊຶ່ງນັກຮຽນສາມາດລະບຸຄວາມກ້າວໜ້າຂອງຕົນເອງຕະຫຼອດໄລຍະທີ່ຮຽນຢູ່ໃນໂຮງຮຽນ. ການເຂົ້າຮ່ວມໂຄງການນີ້ອີງໃສ່ການເຂົ້າຮ່ວມຂອງນັກຮຽນໃນໂຄງການກ່ຽວກັບຄົນເກັ່ງຂອງກາຊັງ ຊຶ່ງໃຫ້ນັກຮຽນມີພື້ນທີ່ເພື່ອພັດທະນາພອນສະຫວັນ, ບໍ່ວ່າຈະແມ່ນດ້ານພາສາຕ່າງໆ, ເຕັກໂນໂລຊີດ້ານຂໍ້ມູນຂ່າວສານ, ດົນຕີຫຼືກິລາ. ຕໍ່ຈາກນັ້ນ ກໍມີການມອບໃບຢັ້ງຢືນໃຫ້ເພື່ອເປັນການຮັບຮູ້. ສາມາດເວົ້າໄດ້ວ່າ ອັນນີ້ເປີດໂອກາດໃຫ້ນັກຮຽນໄດ້ຄິດໄຕ່ຕອງກ່ຽວກັບປະສົບການຈາກການຮຽນຮູ້, ຄວາມກ້າວໜ້າຂອງຕົນລວມທັງຄວາມປາຖະໜາອັນແຮງກ້າໃນອະນາຄົດ, ຈຸດປະສົງ, ຄວາມໝາຍແລະຄວາມສຳຄັນໃນໄລຍະຍາວ ທັງໝົດນີ້ມີຄວາມສຳຄັນຢູ່ໃນບໍລິບົດຂອງການສຶກສາທາງບວກ. ນອກຈາກນັ້ນ ໂຄງການນີ້ບໍ່ພຽງແຕ່ໃຫ້ມີການພັດທະນາຈຸດແຂງທາງດ້ານອຸປະນິໄສຂອງນັກຮຽນ ເຊັ່ນ: ຄວາມພາກພຽນພະຍາຍາມຫຼືຄວາມຮັກໃນການຮຽນເທົ່ານັ້ນ ແຕ່ຍັງເຮັດໃຫ້ເຂົາເຈົ້າມີຈິດສຳນຶກກ່ຽວກັບສິ່ງທີ່ບັນລຸແລະການທຳໃຫ້ສຳເລັດນຳອີກ ເພື່ອພັດທະນາທັກສະຕ່າງໆ ຊຶ່ງບໍ່ຈຳເປັນຕ້ອງເປັນລັກສະນະວິຊາການ ແຕ່ກໍມີຄວາມສຳຄັນເທົ່າທຽມກັນ.

**ມອບລາງວັນແລະໃຫ້ສິ່ງຕອບແທນໂດຍຈັດໃຫ້ມີການແຂ່ງຂັນກັນຢູ່ໃນໂຮງຮຽນ**

ຜູ້ຕອບຄຳຖາມຫຼາຍຄົນສຳລັບການສຳຫຼວດເວົ້າເຖິງການແຂ່ງຂັນກັນຢູ່ໃນໂຮງຮຽນວ່າແມ່ນວິທີເພື່ອສະຫຼອງຄວາມພະຍາຍາມຂອງນັກຮຽນ. ການແຂ່ງຂັນສາມາດໃຫ້ໂອກາດຫຼາຍຢ່າງໃຫ້ແກ່ນັກຮຽນໄດ້ເຂົ້າຮ່ວມໂຄງການສະເພາະຕ່າງໆ ເຊັ່ນ: ການສະແດງ, ການແຕ່ງເລື່ອງ ຫຼືການແຕ້ມຮູບ ຊຶ່ງເຮັດໃຫ້ຜູ້ຄົນຍອມຮັບໃນສິ່ງທີ່ເຂົາເຈົ້າເຮັດໄດ້ ເປັນການກະຕຸ້ນໃຫ້ເຂົາເຈົ້າມີກຳລັງໃຈ. ການຍອມຮັບໃນສິ່ງທີ່ເຮັດສຳເລັດ ໂດຍສະເພາະບາດກ້າວນ້ອຍໆນີ້ເປັນໄປຕາມແນວຄິດທີ່ລະບຸໄວ້ໃນການສຶກສາທາງບວກ.

## ກິດຈະກຳນອກຫຼັກສູດແລະພິທີສຳຄັນຢູ່ໃນໂຮງຮຽນ

ໝົດທຸກໂຮງຮຽນທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກເຫັນພ້ອມກັນວ່າ ກິດຈະກຳນອກຫຼັກສູດແລະພິທີສຳຄັນຕ່າງໆອາດແມ່ນໜຶ່ງໃນຍຸດທະສາດສຳຄັນ

ທີ່ສຸດໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ບໍ່ພຽງແຕ່ກິດຈະກຳນອກຫຼັກສູດເທົ່ານັ້ນທີ່ຖືວ່າເປັນການຊ່ວຍສົ່ງເສີມການຮຽນດ້ານວິຊາການ ແຕ່ຍັງມີການຍອມຮັບກັນຢ່າງກວ້າງຂວາງວ່າເປັນຄຸນປະໂຫຍດ ໃນການອົບຮົມສັ່ງສອນຈຸດແຂງດ້ານບຸກຄະລິກທີ່ສຳຄັນນຳອີກ ຊຶ່ງແມ່ນຫົວໃຈສຳຄັນຂອງການສຶກສາທາງບວກ ເຊັ່ນ: ຄວາມມີຈິດໃຈດີ, ຄວາມພາກພຽນພະຍາຍາມແລະການເຮັດວຽກເປັນໝູ່ຄະນະ. ໂດຍລວມແລ້ວ ຜູ້ເຂົ້າຮ່ວມການສຳມະນາຄິດວ່ານັກຮຽນຄວນເປັນຜູ້ນຳພາເຮັດກິດຈະກຳນອກຫຼັກສູດ ຫຼືຈັດຂຶ້ນຮ່ວມກັນລະຫວ່າງນັກຮຽນແລະຄູ. ຕາມມິຕິຂອງນັກຮຽນ ກິດຈະກຳເຫຼົ່ານີ້ແມ່ນສິ່ງທີ່ເຮັດໃຫ້ເຂົາເຈົ້າມີຄວາມສຸກທີ່ສຸດຢູ່ໃນໂຮງຮຽນ. ແນວໃດກໍ່ຕາມ ນັກຮຽນຫຼາຍຄົນຄິດວ່າພວກຕົນມີຄວາມກົດດັນທາງດ້ານຈິດໃຈຍ້ອນກະກຽມໃສ່ການສອບເສັງ ເຮັດໃຫ້ເຂົາເຈົ້າມີເວລາຈຳກັດໃນການເຮັດກິດຈະກຳດັ່ງກ່າວ. ຕໍ່ໄປແມ່ນການສະເໜີຍຸດທະສາດຕ່າງໆເພື່ອເອົາກິດຈະກຳດັ່ງກ່າວສອດແຊກເຂົ້າໃນປະສົບການຂອງການຮຽນຮູ້.

**ຈັດໃຫ້ມີກິດຈະກຳພາຍຫຼັງເລີກໂຮງຮຽນໃຫ້ເປັນທາງເລືອກແທນການຮຽນພາກພິເສດເປັນການສ່ວນຕົວ**

ເພື່ອແກ້ໄຂປະກົດການຮຽນພາກພິເສດເປັນການສ່ວນຕົວທີ່ກຳລັງແຜ່ຂະຫຍາຍຢູ່ໃນສາທາລະນະລັດເກົາຫຼີ ຊຶ່ງມັກເຮັດໃຫ້ນັກຮຽນມີຊົ່ວໂມງຮຽນຫຼາຍເກີນໄປແລະມີເວລາຫຼິ້ນໜ້ອຍດຽວ. ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ໄດ້ລິເລີ່ມຫຼັກສູດທີ່ຄົບຖ້ວນສົມບູນພາຍຫຼັງເລີກໂຮງຮຽນ ໂດຍຈັດໃຫ້ມີກິດຈະກຳນອກຫຼັກສູດຫຼາຍຢ່າງ. ໂຮງຮຽນຖືວ່າການຈັດໃຫ້ມີກິດຈະກຳຫຼາຍຢ່າງໃນວົງກວ້າງ ແມ່ນວິທີເພື່ອຫຼຸດຜ່ອນການຮຽນພາກພິເສດເປັນການສ່ວນຕົວ ຊຶ່ງເຮັດໃຫ້ມີນັກຮຽນພຽງບໍ່ເທົ່າໃດຄົນທີ່ເຂົ້າຮຽນພາກພິເສດເປັນການສ່ວນຕົວ ໄດ້ຮັບໂອກາດໃນການພັດທະນາທັກສະໃໝ່. ດ້ວຍການເຮັດກິດຈະກຳເຫຼົ່ານີ້ຫຼາຍຢ່າງ ຫຼັກສູດຕ່າງໆພາຍຫຼັງເລີກໂຮງຮຽນ ເປີດໂອກາດໃຫ້ນັກຮຽນໄດ້ພັດທະນາທັກສະໃໝ່ດ້ວຍວິທີສະໜຸກສະໜານ ນັບຕັ້ງແຕ່ການຮຽນພາສາໃໝ່, ວິຊາປ້ອງກັນຕົວ, ສິລະປະທີ່ສ້າງສັນຫຼືການຟ້ອນ.

**ຈັດໃຫ້ມີພິທີສຳຄັນຕ່າງໆຢູ່ໂຮງຮຽນ ເພື່ອສົ່ງເສີມຈິດສຳນຶກກ່ຽວກັບຈຸດປະສົງຮ່ວມກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ**

ໂຮງຮຽນ ພິມາກັຕເຊລ (ພູຖານ) ຈັດໃຫ້ມີພິທີສຳຄັນແລະສະເຫຼີມສະຫຼອງວັນຊາດ

ຊຶ່ງຖືວ່າເປັນວິທີເອົາຜູ້ຄົນໃນຊຸມຊົນທີ່ມີໂຮງຮຽນມາເຕົ້າໂຮມກັນ. ເຊັ່ນຕົວຢ່າງ ໂຮງຮຽນຈັດໃຫ້ມີການໄປກິນເຂົ້າຢູ່ປ່າຮ່ວມກັນ ເພື່ອເຕົ້າໂຮມສະມາຊິກທຸກຄົນໃນຊຸມຊົນ. ໂຮງຮຽນຈັດພິທີປະຈຳປີແບບດຽວກັນນີ້ ຄືມີການມອບຜ້າພາດບ່າສີຂາວ ກະທາຣ໌ *(khadhar)* ໃຫ້ແກ່ນັກຮຽນໃໝ່ເພື່ອເປັນເຄື່ອງໝາຍແຫ່ງການເລີ່ມຕົ້ນຊີວິດນັກຮຽນຂອງເຂົາເຈົ້າ ໂດຍມີຈຸດມຸ່ງໝາຍເພື່ອສ້າງຄວາມຮູ້ສຶກຜູກພັນໃຫ້ເກີດຂຶ້ນໃນຕົວນັກຮຽນ. ໂຮງຮຽນຍັງສະເຫຼີມສະຫຼອງວັນຊາດນຳອີກ ແລະຈັດສະຫຼອງວັນຄູ ເພື່ອສະແດງຄວາມສຳນຶກບຸນຄຸນຂອງຄູ ແລະສ້າງຄວາມສຳພັນອັນດີລະຫວ່າງນັກຮຽນແລະຄູ. ລັກສະນະດຽວກັນນີ້ ໂຮງຮຽນສະຫຼອງຊົ່ວໂມງປະຈຳປີກ່ຽວກັບໂລກ ເພື່ອຍົກສູງຈິດສຳນຶກກ່ຽວກັບສິ່ງແວດລ້ອມ, ຈັດໃຫ້ມີ 'ວັນລ້າງມື' ເພື່ອປັບປຸງສຸຂະອະນາໄມຂອງນັກຮຽນເປັນການສ່ວນຕົວ ແລະຊຸກຍູ້ໃຫ້ເຂົາເຈົ້າມີສ່ວນຮ່ວມໃນການໃຫ້ບໍລິການຊຸມຊົນ.

#### ໃຫ້ນັກຮຽນເຂົ້າຮ່ວມສະໂມສອນໃນການຜະລິດສື່ຕ່າງໆ

ສື່ແລະໜັງສືພິມຕ່າງໆຂອງໂຮງຮຽນແມ່ນກິດຈະກຳນອກຫຼັກສູດ ຊຶ່ງໃຫ້ຄວາມມ່ວນຊື່ນແກ່ນັກຮຽນ ທັງແມ່ນວິທີເຮັດໃຫ້ເຂົາເຈົ້າໄດ້ຮຽນທັກສະຕ່າງໆ. ໂຮງຮຽນຊັ້ນກາງພິມາກັຕເຊລ (ພູຖານ) ເປີດໂອກາດໃຫ້ມີການຮຽນຮູ້ໂດຍໃຊ້ຮູບແບບສື່ຕ່າງໆ ເພື່ອໃຫ້ຊຸມຊົນທັງໝົດຂອງໂຮງຮຽນໄດ້ມີສ່ວນຮ່ວມນຳ. ສື່ທີ່ໂຮງຮຽນນຳມາໃຊ້ປະກອບດ້ວຍຈົດໝາຍຂ່າວ ກັຕເຊລ ເຊລວີ ມີລອງ *(Gatshel Selwi Melong)*, ແຜ່ນພັບ, ປຶ້ມຄູ່ມື, ລາຍການຂ່າວເຊົ້າວັນເສົາແລະການສະແດງທາງວິທະຍຸ. ສະຖາບັນວິທະຍາສິລປ໌ກໍເຊັ່ນດຽວກັນ ດັ່ງທີ່ໄດ້ບອກຢູ່ໃນກ່ອງຂໍ້ຄວາມ 4 ຄືນຳໃຊ້ສື່ ເປັນສ່ວນໜຶ່ງຂອງແຜນງານໃຫຍ່ທີ່ກ້າວຂ້າມດ້ານວິຊາການຂອງຕົນ ຊຶ່ງມີການລາຍງານວ່າມີການປັບປຸງທັກສະດ້ານການສື່ສານກັນດ້ວຍການຂີດຂຽນ, ການສະກົດຄຳແລະໄວຍາກອນໃຫ້ດີຂຶ້ນ.

### ການຮຽນຮູ້ເປັນໝູ່ຄະນະລະຫວ່າງນັກຮຽນແລະຄູ

ຜູ້ຕອບຄຳຖາມສຳລັບການສຳຫຼວດມັກເວົ້າເຖິງຄວາມຈຳເປັນທີ່ນັກຮຽນແລະຄູຕ້ອງຮຽນຮູ້ຮ່ວມກັນເປັນໝູ່ຄະນະ ບໍ່ວ່າຈະເປັນການເດີນທາງຮ່ວມກັນຫຼືມຸ່ງສູ່ເປົ້າໝາຍດຽວກັນ ເພື່ອໃຫ້ເຂົາເຈົ້າມີຈິດສຳນຶກຮ່ວມກັນ ໃນການເປັນເຈົ້າການຂອງຂະບວນການຮຽນການສອນ. ອີງຕາມນັກຮຽນຊາຍຄົນໜຶ່ງຈາກໂຮງຮຽນຂອງລັດຢູ່ປະເທດຈີນ ຄວາມສຳພັນທີ່ມີຄວາມເປັນມິດຕໍ່ກັນລະຫວ່າງຄູແລະນັກຮຽນເຮັດໃຫ້ທັງສອງຝ່າຍມີໂອກາດເທົ່າທຽມກັນທີ່

ຈະຮຽນຮູ້ຈາກກັນແລະກັນ. ຕໍ່ໄປແມ່ນການສະເໜີຍຸດທະສາດໜຶ່ງທີ່ເວົ້າເຖິງປະເດັນນີ້ໂດຍສະເພາະ.

### ເອົາແຜນການສອນບົດຮຽນທີ່ເຮັດຮ່ວມກັນມາແທນປຶ້ມຫຼັກສູດ

ຢູ່ສະຖາບັນວິທະຍາສິລປ໌ (ອິນເດຍ) ມີການເອົາແຜນການສອນບົດຮຽນມາແທນປຶ້ມຫຼັກສູດ ເພື່ອໃຫ້ຄູມີຈິດສຳນຶກໃນການເປັນເຈົ້າການກ່ຽວກັບເນື້ອໃນບົດຮຽນ ຊຶ່ງເຂົາເຈົ້າເປັນຜູ້ເຮັດຂຶ້ນຈາກການຄົ້ນຄວ້າດ້ວຍຕົນເອງ. ຄູຮ່າງແຜນການສອນບົດຮຽນຕ່າງໆຂຶ້ນມາຊຶ່ງແຕ່ລະແຜນປະກອບດ້ວຍເປົ້າໝາຍ, ຈຸດປະສົງ, ກິດຈະກຳແລະຜົນທີ່ຈະໄດ້ຮັບ. ການເຮັດແຜນການສອນບົດຮຽນແມ່ນຂະບວນການຮ່ວມມືກັນເປັນຢ່າງດີ ໂດຍເອົາຮ່າງແຜນການສອນບົດຮຽນນີ້ລົງທາງອອນລາຍນ໌ ເພື່ອໃຫ້ເພື່ອນຄູດ້ວຍກັນຫຼາຍຄົນລວມທັງນັກຮຽນໄດ້ກວດເບິ່ງນຳ. ນັກຮຽນປະກອບຄວາມຄິດເຫັນຢູ່ໃນຂັ້ນຕອນການວາງແຜນ, ຕັ້ງຄຳຖາມເພື່ອການປະເມີນອີງຕາມບົດຮຽນຕ່າງໆ, ປະເມີນຄຸນຄ່າບົດຮຽນພາຍຫຼັງທີ່ສອນໄປແລ້ວແລະຄິດທົບທວນກ່ຽວກັບວຽກຂອງຕົນເອງນຳອີກ. ນັກຮຽນສາມາດແນະນຳເນື້ອໃນໃໝ່ອີງຕາມສິ່ງທີ່ເຂົາເຈົ້າໄດ້ຮຽນຢູ່ນອກໂຮງຮຽນ ຫຼືອີງຕາມຄຳຖາມທີ່ຍົກຂຶ້ນມາຖາມກັນຢູ່ໃນຫ້ອງ. ວຽກຂອງນັກຮຽນຈະຖືກນຳໃຊ້ເປັນສ່ວນໜຶ່ງຂອງແຜນການສອນບົດຮຽນຕະຫຼອດເວລາ. ເຊື່ອກັນວ່າການເປີດໂອກາດໃຫ້ມີມິຕິທີ່ຫຼາກຫຼາຍໃນການສ້າງແຜນການສອນບົດຮຽນຈະເຮັດໃຫ້ມີຄວາມກ່ຽວຂ້ອງກັບເນື້ອໃນການຮຽນຮູ້ຂອງນັກຮຽນຫຼາຍຂຶ້ນ. ອີງຕາມເຊລວີ (Selvi) ຮອງອຳນວຍການສະຖາບັນວິທະຍາສິລປ໌ ການແລກປ່ຽນປະສົບການລະຫວ່າງຄູແລະນັກຮຽນໃນການອອກແບບແຜນການສອນບົດຮຽນນີ້ 'ເຮັດໃຫ້ເກີດຄວາມຮູ້ສຶກເຊື່ອຖືໃນຂະບວນການຄິດຂອງເດັກນ້ອຍ ແລະຊ່ວຍເຂົາເຈົ້າໃຫ້ເຂົ້າໃຈວ່າພວກເຮົາເຫັນຄຸນຄ່າຂອງຄວາມຄິດເຫັນ ແລະຂໍ້ສະເໜີກ່ຽວກັບການອອກແບບຫຼັກສູດດ້ວຍການເຮັດວຽກເປັນໝູ່ຄະນະ'.

## ເນື້ອໃນການຮຽນທີ່ເປັນປະໂຫຍດ, ກ່ຽວຂ້ອງກັບຊີວິດແລະມີສ່ວນຮ່ວມ

ຜູ້ເຂົ້າຮ່ວມຫຼາຍຄົນຢູ່ໃນການສຳຫຼວດແລະການສຳມະນາຄິດວ່າ ເນື້ອໃນການຮຽນຢູ່ໃນໂຮງຮຽນບໍ່ເປັນປະໂຫຍດ ຫຼືບໍ່ກ່ຽວຂ້ອງກັບຊີວິດປະຈຳວັນຂອງຜູ້ຮຽນ. ດັ່ງທີ່ ຫງຽນ ກອກ ວັນ ທາວ ອາຍຸ 14 ປີ ຈາກໂຮງຮຽນມັດທະຍົມທົດລອງຂອງສະຖາບັນວິທະຍາສາດການສຶກສາ (ຫວຽດນາມ) ບອກວ່າ ມີຊ່ອງວ່າງລະຫວ່າງເນື້ອໃນທີ່ມີການປະເມີນກັນກັບ

ເລື່ອງທີ່ເປັນປະໂຫຍດຕໍ່ຊີວິດປະຈຳວັນ:

*ທ່ານຄິດແນວໃດກັບນັກຮຽນທີ່ໄດ້ຄະແນນສິບສ່ວນສິບໃນການສອບເສັງວິຊາພົນລະເມືອງສຶກສາ ຊຶ່ງເວົ້າເຖິງຄວາມຊື່ສັດ ແຕ່ຄວາມຈິງແລ້ວພວກເຂົາລັກກ່າຍເອົາໃນເວລາເສັງເພື່ອໃຫ້ໄດ້ຄະແນນສູງແບບນັ້ນ? ຫຼືພວກເຮົາຮຽນຊີວະວິທະຍາເພື່ອປົກປັກຮັກສາສິ່ງແວດລ້ອມຂອງພວກເຮົາ - ນັກຮຽນບາງຄົນໄດ້ຄະແນນດີແທ້ໃນການສອບເສັງວິຊາຊີວະວິທະຍາ ແຕ່ພວກເຂົາພັດຖິ້ມຂີ້ເຫຍື້ອລົງຖະໜົນ! ພວກເຮົາຕ້ອງເນັ້ນຢໍ້າວ່າ ຈຸດປະສົງຫຼັກຂອງການສຶກສາແມ່ນເພື່ອປັບປຸງຊີວິດຈິງ ແລະຊ່ວຍພັດທະນາປະເທດຂອງພວກເຮົາ. ພວກເຮົາບໍ່ຮຽນເພື່ອກາຍເປັນອັດສະລິຍະ ຫຼືເຮັດໃຫ້ສະໝອງຂອງພວກເຮົາໃຫ່ຍຂຶ້ນ! ພວກເຮົາມັກເວົ້າວ່າ 'ຄວາມຮູ້ຄືພະລັງ' ແຕ່ ດາເລ ຄາເນກີ (Dale Carnegie) ນັກປະພັນອາເມຣິກາ ບອກວ່າ 'ຄວາມຮູ້ບໍ່ແມ່ນພະລັງ ຈົນກວ່າມັນຈະຖືກນຳໄປໃຊ້'.*

ໃນລະດັບຊາດ ບັນຫານີ້ຈຳເປັນຕ້ອງມີການອອກແບບຫຼັກສູດເພື່ອສະທ້ອນປະເດັນທີ່ເປັນຢູ່ໃນປັດຈຸບັນ ແລະກ່ຽວຂ້ອງກັບຊີວິດດ້ວຍການແນະນຳຄູກ່ຽວກັບວິທີເຮັດໃຫ້ປະເດັນຕ່າງໆເຫຼົ່ານີ້ ກ່ຽວຂ້ອງກັບຊີວິດຂອງຜູ້ຮຽນ ທັງໃນລະດັບໂຮງຮຽນຈຳເປັນຕ້ອງມີການສອດແຊກການຮຽນຮູ້ຈາກປະສົບການເຂົ້າໃນວິຊາຕ່າງໆ. ຕາມຄຳເວົ້າຂອງຄູຍິງຄົນໜຶ່ງຈາກໂຮງຮຽນຂອງລັດຢູ່ປະເທດໄທ ເນື້ອໃນການຮຽນຕ້ອງຮັບປະກັນໃຫ້ 'ສຳພັນກັບສິ່ງທີ່ເປັນຈິງຈາກຊີວິດປະຈຳວັນ ໄດ້ແກ່ທຳມະຊາດ, ອາຫານ, ອາລົມຄວາມຮູ້ສຶກແລະປຣັດຊະຍາ'. ໃນຂະນະດຽວກັນ ຍັງຈຳເປັນຕ້ອງມີການປະເມີນຢ່າງເໝາະສົມນຳອີກ. ຄູຕ້ອງປະເມີນຜົນຄຸນຄ່າ, ທັກສະແລະຄວາມສາມາດຕ່າງໆອີງຕາມຫົວຂໍ້ແລະເນື້ອໃນການຮຽນໃນລະດັບໂຮງຮຽນ ບໍ່ວ່າຈະແມ່ນດ້ວຍການປຶກສາຫາລືກັນລະຫວ່າງນັກຮຽນ, ຄູແລະພໍ່ແມ່ນັກຮຽນຫຼືໂດຍການສັງເກດການຂອງນັກຮຽນ, ຄູຫຼືພໍ່ແມ່ນັກຮຽນກໍຕາມ. ຕໍ່ໄປແມ່ນການສະເໜີຍຸດທະສາດສອງຢ່າງ ເພື່ອຮັບປະກັນໃຫ້ເນື້ອໃນການຮຽນເປັນປະໂຫຍດ, ມີສ່ວນຮ່ວມແລະກ່ຽວຂ້ອງກັບຊີວິດ.

**ຮັບປະກັນໃຫ້ເນື້ອໃນການຮຽນສາມາດນຳໄປໃຊ້ໄດ້**

ຍຸດທະສາດກ່ຽວກັບກິດຈະກຳທີ່ແຜ່ຂະຫຍາຍ ຊຶ່ງສະຖາບັນວິທະຍາສິລປ໌ (ອິນເດຍ) ນຳໃຊ້ນັ້ນ ໄດ້ນຳສະເໜີຢູ່ໃນມາດຖານ**ພາລະການຮຽນທີ່ເປັນທຳແລະສົມເຫດສົມຜົນ** ຊຶ່ງ

ແມ່ນຕົວຢ່າງທີ່ດີອັນໜຶ່ງກ່ຽວກັບວ່າການຮຽນຮູ້ທີ່ສາມາດ 'ເສີມຂະຫຍາຍ' ໄດ້ແນວໃດ ຫຼັງຈາກຮຽນຢູ່ໃນຫ້ອງຮຽນ ເພື່ອໃຫ້ຜູ້ຮຽນນຳໄປໃຊ້ໃນຊີວິດປະຈຳວັນ. ຕົວຢ່າງອື່ນໆປະກອບດ້ວຍເຫດການຫຼືສະພາບແວດລ້ອມໃນຊີວິດທີ່ເກີດຂຶ້ນຊ້ຳກັນຫຼາຍເທື່ອ ເຮັດໃຫ້ມີພື້ນທີ່ສ້າງສັນໃຫ້ແກ່ການຮຽນຮູ້ແລະຊຸກຍູ້ຜູ້ຮຽນໃຫ້ນຳໃຊ້ສື່ສັງຄົມອອນລາຍນ໌ ເພື່ອແລກປ່ຽນສິ່ງທີ່ເຂົາເຈົ້າຮຽນຮູ້ກັບຄົນອື່ນໆ (Roscorla, 20014).

**ເຮັດໃຫ້ການຮຽນຮູ້ແບບມີຫຼາຍວິຊາເຊື່ອມໂຍງກັນຫຼາຍຂຶ້ນ**

ຜູ້ຕອບຄຳຖາມສຳລັບການສຳຫຼວດຍັງເວົ້າເຖິງວິທີການຮຽນຮູ້ແບບເອົາຫຼາຍວິຊາມາເຊື່ອມໂຍງກັນຊຶ່ງມີການປະຍຸກໃຊ້ຂະແໜງວິຊາຕ່າງໆ. ຕົວຢ່າງອັນໜຶ່ງທີ່ພົບເຫັນຢູ່ໃນກຳລະນີສຶກສາຂອງປະເທດຟິນແລນດ໌ ບ່ອນທີ່ມີການປະຕິຮູບການສຶກສາໃນ ປີ 2015 ໄດ້ແນະນຳຄວາມຄິດກ່ຽວກັບ 'ການສອນຕາມຫົວເລື່ອງ' ຊຶ່ງກົງກັນຂ້າມກັບ 'ສອນຕາມວິຊາ' ໂດຍນຳໃຊ້ບົດຮຽນທີ່ມີຫຼາຍວິຊາມາເຊື່ອມໂຍງກັນ ເພື່ອເຮັດໃຫ້ການຮຽນຮູ້ສາມາດນຳໄປໃຊ້ໄດ້ໃນຊີວິດປະຈຳວັນ ໂດຍສະເພາະເພື່ອກະກຽມນັກຮຽນສຳລັບດ້ານວຽກງານ. ອີງຕາມພະນັກງານການສຶກສາຢູ່ປະເທດຟິນແລນດ໌ ຜົນປະໂຫຍດທີ່ໄດ້ຈາກວິທີການແບບນີ້ແມ່ນການເຮັດໃຫ້ການຮຽນຮູ້ທີ່ບໍ່ຈູບຈ້າວຫ້າວຫັນ ມີໜ້ອຍລົງແລະໃຫ້ມີການຮ່ວມມືກັນຫຼາຍຂຶ້ນ ທັງປັບປຸງຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ, 'ການຮຽນສະໜຸກສະໜານຫຼາຍຂຶ້ນ' ແລະມີການພັດທະນາຄວາມສາມາດຕ່າງໆ ເຊັ່ນ: ຄວາມສ້າງສັນ, ການຄິດແບບວິພາກທາງເລິກແລະການສື່ສານກັນ (Garner, 2013). ດັ່ງນັ້ນ ຈຶ່ງສາມາດພິຈາລະນາວິທີການເອົາຫຼາຍວິຊາມາເຊື່ອມໂຍງກັນແລະສອດແຊກເຂົ້າໃນຫຼັກສູດ ລວມທັງເອົາເຂົ້າໃນວິທີການຮຽນການສອນໃຫ້ຫຼາຍຂຶ້ນ.

## ຄວາມຢູ່ດີມີສຸກທາງຈິດໃຈແລະການຄວບຄຸມຄວາມທຸກໃຈ

ດັ່ງທີ່ໄດ້ຄົ້ນຄວ້າກັນຢູ່ໃນບົດທີສາມ ການສຶກສາມີຄວາມຈຳເປັນຕ້ອງມີຫຼາຍມິຕິແລະບໍ່ຄວນຖືວ່າແມ່ນວິທີດຽວເພື່ອພັດທະນາທັກສະດ້ານວິຊາການຫຼືສະຕິປັນຍາເທົ່ານັ້ນ ແຕ່ຍັງແມ່ນເພື່ອພັດທະນາຂີດຄວາມສາມາດທາງດ້ານຮ່າງກາຍແລະຈິດຕະສາດນຳອີກ. ຕໍ່ໄປແມ່ນການເວົ້າເຖິງຍຸດທະສາດທີ່ນຳໄປໃຊ້ ເພື່ອສົ່ງເສີມຄວາມຢູ່ດີມີສຸກທາງດ້ານຈິດໃຈແລະການຄວບຄຸມຄວາມທຸກໃຈຂອງນັກຮຽນ.

## ໃຫ້ມີນັກຈິດຕະສາດຫຼືຜູ້ໃຫ້ຄຳປຶກສາປະຈຳຢູ່ໂຮງຮຽນ

ຜູ້ຕອບຄຳຖາມຫຼາຍຄົນສຳລັບການສຳຫຼວດເນັ້ນເຖິງຄວາມຈຳເປັນທີ່ໂຮງຮຽນຕ້ອງມີນັກຈິດຕະສາດຫຼືຜູ້ໃຫ້ຄຳປຶກສາປະຈຳຢູ່ໂຮງຮຽນ ໃຫ້ນັກຮຽນໄດ້ໃຊ້ບໍລິການເຫຼົ່ານີ້ໄດ້ງ່າຍ ທັງເປີດໂອກາດໃຫ້ເຂົາເຈົ້າໄດ້ເວົ້າກ່ຽວກັບຄວາມກັງວົນໃຈຂອງຕົນຢູ່ສະຖານທີ່ປອດໄພແລະບໍ່ເປີດເຜີຍ. ອັນນີ້ສະທ້ອນສິ່ງທີ່ຄົ້ນພົບຂອງຜູ້ຊ່ຽວຊານຫຼາຍຄົນທີ່ເຊື່ອວ່າ ການປະຕິບັດແຜນງານໃຫຍ່ກ່ຽວກັບຄວາມຢູ່ດີມີສຸກຢູ່ໃນໂຮງຮຽນມີຜົນປະໂຫຍດຫຼາຍຢ່າງ (Seligman et. al., 2009). ຫຼັກສູດແລະການບໍລິການດັ່ງກ່າວເຮັດໃຫ້ມີການຕິດຕາມຄວາມທຸກໃຈແລະຄວາມກົດດັນທາງດ້ານຈິດໃຈຂອງນັກຮຽນແຕ່ເນີ້ນໆ ທັງເປັນປະໂຫຍດຢ່າງໃຫຍ່ຫຼວງບໍ່ສຳລັບແຕ່ນັກຮຽນເທົ່ານັ້ນ ແຕ່ສຳລັບຄູແລະສະມາຊິກຄົນອື່ນໆຢູ່ໃນຊຸມຊົນທີ່ມີໂຮງຮຽນນຳອີກ. ເນື່ອງຈາກໂຮງຮຽນໝົດທຸກບ່ອນອາດຈະບໍ່ມີງົບປະມານ ເພື່ອຈ່າຍເງິນເດືອນໃຫ້ແກ່ນັກຈິດຕະວິທະຍາທີ່ມີໃບຢັ້ງຢືນມາເຮັດວຽກປະຈຳໄດ້ ຈຶ່ງເປັນໄປໄດ້ທີ່ຈະຈ້າງຜູ້ໃຫ້ຄຳປຶກສາມາປະຈຳຢູ່ໂຮງຮຽນແທນ. ໂຮງຮຽນ ພິມາກັຕເຊລ (ພູຖານ) ຈ້າງຜູ້ໃຫ້ຄຳປຶກສາມາເຮັດວຽກໃຫ້ເຕັມເວລາ ຊຶ່ງເປັນຜູ້ມີບົດບາດສຳຄັນໃນການໃຫ້ພື້ນທີ່ແກ່ນັກຮຽນໄດ້ເວົ້າແບບປິດລັບ ແລະບຸກຄົນຜູ້ນີ້ຍັງໃຫ້ຄຳປຶກສາດ້ານອາຊີບການງານແລະໃຫ້ນັກຮຽນຊ່ວຍເຫຼືອເພື່ອນນັກຮຽນດ້ວຍກັນ. ອີກທາງເລືອກໜຶ່ງສຳລັບໂຮງຮຽນທີ່ມີງົບປະມານບໍ່ຫຼາຍກໍໃຫ້ແຕ່ງຕັ້ງ ແລະຝຶກອົບຮົມຄູຫຼືສະມາຊິກຄົນໜຶ່ງຂອງຊຸມຊົນຢູ່ໃນທ້ອງຖິ່ນເພື່ອມາທຳໜ້າທີ່ເປັນຜູ້ໃຫ້ຄຳປຶກສາຢູ່ໃນໂຮງຮຽນ ໂດຍຈະຈ່າຍຄ່າຕອບແທນໃຫ້ຫຼືເຮັດວຽກແບບອາສາສະໝັກກໍແລ້ວແຕ່.

## ປະຕິບັດຫຼັກສູດກ່ຽວກັບຄວາມຢູ່ດີມີສຸກຢູ່ໃນໂຮງຮຽນ

ໂຮງຮຽນ ນອຣທ໌ວູດ ເພຣັປ (Northwood Prep) ຢູ່ສະຫະລາຊະອານາຈັກ ສົ່ງເສີມແນວຄິດຂອງບົດຮຽນກ່ຽວກັບຄວາມຢູ່ດີມີສຸກຂອງນັກຮຽນ ຫຼື 'ບົດຮຽນກ່ຽວກັບຄວາມສຸກ' ແລະເຫັນວ່າມີປະໂຫຍດຫຼາຍຢ່າງ. ອີງຕາມ ທຣີວໍຣ໌ ລີ (Trevor Lee) ຜູ້ອຳນວຍການໂຮງຮຽນ ຫຼັກສູດນີ້ບໍ່ພຽງແຕ່ເຮັດໃຫ້ນັກຮຽນເບິ່ງໄປຂ້າງໜ້າໂດຍເອົາໃຈໃສ່ບົດຮຽນເທົ່ານັ້ນ ແຕ່ຍັງເຮັດໃຫ້ເຂົາເຈົ້າສາມາດຮຽນຮູ້ວິທີພາກປະຕິບັດນຳອີກ ເຊັ່ນ: ການໃຊ້ສະມາທິຫຼືການນອນຫຼາຍຂຶ້ນ ເພື່ອຈັດການກັບຊ່ວງເວລາທີ່ຫຍຸ້ງຍາກຢູ່ໃນຊີວິດຂອງເຂົາເຈົ້າໄດ້ຢ່າງສ້າງສັນ (Lee, 2000). ກິດຈະກຳອື່ນໆທີ່ໃຊ້ 'ຄວາມຄິດໄຕ່ຕອງ' ຍັງປະກອບດ້ວຍການແຕ້ມຮູບ, ການຟັງດົນຕີ, ການຂຽນບົດກະວີຫຼືການເຮັດວາລະສານແລະໜັງສືພິມ.

**ແນະນຳການທຳສະມາທິໃຫ້ຈິດໃຈຜ່ອງໃສ**

ການທີ່ໂຮງຮຽນຈັດໃຫ້ມີການປະຕິບັດແນວໃໝ່ ຄືການໃຊ້ຈິດເພັ່ງພິນິດແລະການທຳສະມາທິໃຫ້ໃຈຈົດຈໍ່ໃສ່ສິ່ງໃດສິ່ງໜຶ່ງ ກຳລັງເປັນທີ່ສົນໃຈຂອງຜູ້ຄົນຫຼາຍຂຶ້ນ. ຖອດຖອນບົດຮຽນຈາກວັດທະນະທຳທ້ອງຖິ່ນແລະມໍລະດົກທາງສາດສະໜາພຸດ ໂຮງຮຽນ ພິມາກັຕເຊລ (ພູຖານ) ໄດ້ແນະນຳການທຳສະມາທິໃຫ້ຈິດໃຈຜ່ອງໃສ ແລະພົບວ່າເກີດຜົນດີບໍ່ພຽງແຕ່ເຮັດໃຫ້ນັກຮຽນສຸມຈິດສຸມໃຈແລະມີໃຈຈົດຈໍ່ໃສ່ບັນຫາສຳຄັນເທົ່ານັ້ນ ແຕ່ຍັງເປັນຜົນດີຕໍ່ຄວາມຢູ່ດີມີສຸກຂອງນັກຮຽນນຳອີກ. ການທຳສະມາທິໃຫ້ຈິດໃຈຜ່ອງໃສຊຶ່ງເອົາມາເຊື່ອມໂຍງເຂົ້າກັບຊີວິດປະຈຳວັນຢູ່ໃນໂຮງຮຽນ ປະກອບດ້ວຍພາການທຳສະມາທິສອງນາທີກ່ອນຈະກ້າວສູ່ໄລຍະທີໜຶ່ງ, ທີຫ້າແລະທີເຈັດ ໂດຍທຸກວັນຈັນຈະມີພາກແນະນຳການທຳສະມາທິເວລາເຕົ້າໂຮມກັນແລະພາກປະຕິບັດ ໂດຍໃຊ້ຈິດເພັ່ງພິນິດລະຫວ່າງເຮັດກິດຈະກຳນອກຫຼັກສູດ. ໂຮງຮຽນອື່ນໆສາມາດປະຕິບັດຫຼັກສູດແບບດຽວກັນນີ້ໂດຍກຳນົດເວລາທີ່ເໝາະສົມຢູ່ໃນຕາຕະລາງເວລາ ເພື່ອຈັດໃຫ້ມີການປະຕິບັດສະມາທິ ຫຼືການຄິດໄຕ່ຕອງຢ່າງສະຫງົບງຽບ ບໍ່ວ່າຈະຢູ່ໃນຫ້ອງສະເພາະ ໃຫ້ເປັນສ່ວນໜຶ່ງຂອງການເຕົ້າໂຮມກັນຫຼືເປັນກິດຈະກຳໜຶ່ງແຍກຕ່າງຫາກກໍໄດ້.

**ນຳໃຊ້ການວາງສະແດງສິ່ງປະຈັກຕາ ຊຶ່ງມີຄຳແນະນຳກ່ຽວກັບການຄວບຄຸມຄວາມທຸກໃຈ**

ວິທີງ່າຍອີກອັນໜຶ່ງເພື່ອສອນວິທີການຄວບຄຸມຄວາມທຸກໃຈຢູ່ໂຮງຮຽນແມ່ນການໃຫ້ຄຳແນະນຳຕ່າງໆແກ່ຜູ້ຮຽນດ້ວຍການເອົາໂປສເຕີຕິດໄວ້ຢູ່ທົ່ວໂຮງຮຽນ. ຕົວຢ່າງໂຮງຮຽນນາງຊາດໃໝ່ (ປະເທດໄທ) ໄດ້ຕິດໂປສເຕີ ຊື່ວ່າ 'ມີຄວາມທຸກໃຈໜ້ອຍລົງ' ຢູ່ທີ່ລະບຽງທາງຍ່າງຂອງໂຮງຮຽນ ພ້ອມທັງມີຄຳແນະນຳຫຼາຍຢ່າງກ່ຽວກັບການຄວບຄຸມຄວາມທຸກໃຈໃຫ້ແກ່ນັກຮຽນ ເຊັ່ນ: ການຟ້ອນລຳ, ໄປຍ່າງຫຼິ້ນ, ລົມກັນກ່ຽວກັບບັນຫາຕ່າງໆ, ເຂົ້ານອນແຕ່ຫົວຄ່ຳ, ການທຳສະມາທິ, ການກິນເພື່ອສຸຂະພາບ, ຟັງດົນຕີແລະຍິ້ມອອກມາ. ການວາງສະແດງສິ່ງປະຈັກຕາເຫຼົ່ານີ້ບໍ່ພຽງແຕ່ເປັນການຊຸກຍູ້ທາງບວກໃຫ້ແກ່ຜູ້ຮຽນທີ່ມີຄວາມທຸກທໍລະມານຍ້ອນຄວາມອຸກອັ່ງໃຈເທົ່ານັ້ນ ແຕ່ຍັງໃຫ້ຮູບແບບສຳຄັນໃນການສື່ສານກັບຜູ້ທີ່ຮູ້ສຶກວ່າຕົນເອງບໍ່ສາມາດເວົ້າເຖິງບັນຫາຂອງຕົນໄດ້ ແລະສະແດງອອກມາເປັນຮູບພາບວ່າບໍ່ມີແຕ່ເຂົາເຈົ້າເທົ່ານັ້ນທີ່ມີຄວາມຮູ້ສຶກທຸກໃຈ.

**ສັງລວມ**

ອີງຕາມມາດຖານຕ່າງໆທີ່ໄດ້ຄົ້ນຄວ້າກັນຢູ່ໃນພາກນີ້ ກ່ອງຂໍ້ຄວາມ 5 ໄດ້ສັງລວມຍຸດທະສາດທີ່ໄດ້ແນະນຳໄປແລ້ວ ໂດຍເຮັດເປັນລາຍການຈັດຢູ່ໃນປະເພດຂະບວນການ.

***ກ່ອງຂໍ້ຄວາມ 5.*** *ກ່ອງຍຸດທະສາດ: ຂະບວນການ*

- ຫຼຸດຜ່ອນການທົດສອບແລະສອບເສັງຕາມມາດຕະຖານ
- ເອົາກິດຈະກຳທາງເລືອກມາແທນວຽກບ້ານເພື່ອ 'ເສີມຂະຫຍາຍ' ການຮຽນຮູ້
- ເຮັດໃຫ້ເຫັນຄຸນຄ່າຂະແໜງການຮຽນຮູ້ທີ່ບໍ່ແມ່ນວິຊາການດ້ວຍການປະເມີນທີ່ຕ່າງຈາກສິ່ງທີ່ເຄີຍເຮັດ
- ເອົາປັດໄຈທີ່ບໍ່ແມ່ນວິຊາການບັນຈຸໃສ່ໃນການຮັບເອົານັກຮຽນເຂົ້າໂຮງຮຽນ
- ແນະນຳວຽກໃຫ້ເຮັດເປັນກຸ່ມເພື່ອແກ້ໄຂບັນຫາຮ່ວມກັນ
- ແນະນຳກິດຈະກຳຮຽນຮູ້ແບບໝູ່ຄະນະຫຼາຍຢ່າງທີ່ແຕກຕ່າງກັນ
- ຍາດໂອກາດນຳໃຊ້ວິທີການຮຽນຮູ້ທີ່ຕ່າງຈາກສິ່ງທີ່ເຄີຍເຮັດ
- ເຫັນຄຸນຄ່າຂອງຄວາມຜິດພາດວ່າແມ່ນສ່ວນໜຶ່ງຂອງຂະບວນການຮຽນຮູ້
- ສອນນັກຮຽນໃຫ້ຕັ້ງຄຳຖາມ
- ສະແດງຄວາມຄິດເຫັນດ້ານບວກແລະການຍອມຮັບຈາກຄົນທົ່ວໄປ
- ສ້າງ 'ຊຸດເອກະສານກ່ຽວກັບຄວາມໄຝ່ຝັນຕ່າງໆ'
- ມອບລາງວັນແລະໃຫ້ສິ່ງຕອບແທນໂດຍຈັດໃຫ້ມີການແຂ່ງຂັນກັນຢູ່ໃນໂຮງຮຽນ
- ຈັດໃຫ້ມີກິດຈະກຳພາຍຫຼັງເລີກໂຮງຮຽນໃຫ້ເປັນທາງເລືອກແທນການຮຽນພາກພິເສດເປັນການສ່ວນຕົວ
- ຈັດໃຫ້ມີພິທີສຳຄັນຕ່າງໆຢູ່ໂຮງຮຽນເພື່ອສົ່ງເສີມຈິດສຳນຶກກ່ຽວກັບຈຸດປະສົງຮ່ວມກັນຢູ່ໃນຊຸມຊົນທີ່ມີໂຮງຮຽນ
- ໃຫ້ນັກຮຽນເຂົ້າຮ່ວມສະໂມສອນໃນການຜະລິດສື່ຕ່າງໆ
- ເອົາແຜນການສອນບົດຮຽນທີ່ເຮັດຮ່ວມກັນມາແທນປຶ້ມຫຼັກສູດ
- ຮັບປະກັນໃຫ້ເນື້ອໃນການຮຽນສາມາດນຳໄປໃຊ້ໄດ້
- ເຮັດໃຫ້ການຮຽນຮູ້ແບບມີຫຼາຍວິຊາເຊື່ອມໂຍງກັນຫຼາຍຂຶ້ນ
- ໃຫ້ມີນັກຈິດຕະສາດຫຼືຜູ້ໃຫ້ຄຳປຶກສາປະຈຳຢູ່ໂຮງຮຽນ
- ປະຕິບັດຫຼັກສູດກ່ຽວກັບຄວາມຢູ່ດີມີສຸກຢູ່ໃນໂຮງຮຽນ
- ແນະນຳການທຳສະມາທິໃຫ້ຈິດໃຈຜ່ອງໃສ
- ນຳໃຊ້ການວາງສະແດງສິ່ງປະຈັກຕາຊຶ່ງມີຄຳແນະນຳກ່ຽວກັບການຄວບຄຸມຄວາມທຸກໃຈ

# ໆ. ສະຖານທີ່

ໂຮງຮຽນຕ່າງໆມີລັກສະນະພາບຢ່າງໜ້າປະທັບໃຈໃນການເປັນສະຖາບັນທີ່ດີຫຼືໃຫ້ 'ຄວາມສຸກ'. ເຖິງວ່າພາກນີ້ເນັ້ນໃສ່ໂຮງຮຽນເປັນບ່ອນໃຫ້ມີການຮຽນຮູ້ຢ່າງກວ້າງຂວາງ ແລະມີສະພາບເງື່ອນໄຂຂອງການເປັນໂຮງຮຽນກໍຕາມ ແຕ່ກໍມີຄວາມສຳຄັນທີ່ຈະຕ້ອງຈົດຈຳໄວ້ວ່າ ມາດຖານເຫຼົ່ານີ້ຫຼາຍຢ່າງກໍມີຄວາມສຳພັນກັບການຈັດປະເພດຜູ້ຄົນນຳອີກ.

## ຮັບປະກັນໃຫ້ມີສະພາບແວດລ້ອມທີ່ປອດຈາກການທະເລາະວິວາດກັນ

ຜູ້ຕອບຄຳຖາມສຳລັບການສຳຫຼວດລະບຸສະພາບແວດລ້ອມທີ່ບໍ່ປອດໄພເນື່ອງຈາກມີການທະເລາະວິວາດກັນ ຊຶ່ງມັກພາໃຫ້ໂຮງຮຽນກາຍເປັນບ່ອນທີ່ບໍ່ໃຫ້ຄວາມສຸກຫຼາຍທີ່ສຸດ. ຜູ້ຕອບຄຳຖາມເວົ້າເຖິງຄວາມຮຸນແຮງແລະການທະເລາະວິວາດກັນ ຊຶ່ງກຳລັງເພີ່ມຂຶ້ນຢູ່ໃນໂຮງຮຽນ ວ່າເປັນຍ້ອນພູມຫຼັງດ້ານສັງຄົມ-ເສດຖະກິດທີ່ແຕກຕ່າງກັນຂອງພວກນັກຮຽນ ແລະການຈັດອັນດັບນັກຮຽນ ອີງຕາມຜົນສຳເລັດທາງດ້ານວິຊາການ. ນອກຈາກນັ້ນ ຜູ້ຕອບຄຳຖາມຄິດວ່າ ສະພາບແວດລ້ອມທີ່ບໍ່ປອດໄພເຮັດໃຫ້ນັກຮຽນມີຄວາມຮູ້ສຶກຖືກແບ່ງແຍກ, ຢ້ານກົວ, ກະວົນກະວາຍແລະໂດດດ່ຽວປ່ຽວພອຍ. ຕໍ່ໄປແມ່ນການນຳໃຊ້ຍຸດທະສາດສອງຢ່າງເພື່ອປັບປຸງສະພາບແວດລ້ອມຢູ່ໃນໂຮງຮຽນໃຫ້ດີຂຶ້ນ.

### ສົ່ງເສີມການມີປະຕິສຳພັນຕໍ່ກັນແລະການຮ່ວມມືກັນຂອງນັກຮຽນດ້ວຍການເຮັດກິດຈະກຳການຮຽນຮູ້ແລະຫຼິ້ນຮ່ວມກັນ

ທີ່ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ເຂົາເຈົ້າເຊື່ອວ່າກິດຈະກຳທົ່ວໄປຫຼາຍຢ່າງທີ່ພວກຕົນຈັດໃຫ້ນັກຮຽນ ຊຶ່ງປະກອບດ້ວຍກິລາ, ສິລະປະແລະຮຽນພາສາຕ່າງໆເຮັດໃຫ້ຄວາມທຸກໃຈຂອງນັກຮຽນຍ້ອນການແຂ່ງຂັນກັນນັ້ນມີໜ້ອຍລົງ. ກິດຈະກຳປະເພດອື່ນໆໄດ້ແກ່ກິດຈະກຳນອກຫຼັກສູດ, ການຮຽນຮູ້ແບບໝູ່ຄະນະ, ການສ້າງຄວາມລຶ້ງເຄີຍກັນຢູ່ໃນຫ້ອງຮຽນ, ເຮັດກິດຈະກຳແລະຫຼິ້ນເກມ ເພື່ອເປັນການສົ່ງເສີມການຮ່ວມມືກັນເວລາພັກຜ່ອນຢ່ອນໃຈ. ກິດຈະກຳເຫຼົ່ານີ້ພາໃຫ້ນັກຮຽນມີທ່າອ່ຽງໃນການມີປະຕິສຳພັນຕໍ່ກັນແລະຊ່ວຍເຫຼືອກັນແລະກັນຫຼາຍຂຶ້ນ. ຍ້ອນຄວາມພະຍາຍາມຂອງໂຮງຮຽນ ຫ້ອງການສຶກສາເທດສະບານ ແດກູ ຈຶ່ງໄດ້ປະເມີນວ່າໂຮງຮຽນເປັນບ່ອນທີ່ປອດໄພແລະປອດຈາກການທະເລາະວິວາດກັນ.

**ຈັດໃຫ້ມີຕັ່ງນັ່ງເພື່ອໃຫ້ນັກຮຽນນັ່ງຈັບຄູ່ກັນ**

ໂຮງຮຽນທົ່ວໂລກຫຼາຍບ່ອນຍອມຮັບຜົນດີຂອງການຈັດໃຫ້ມີ 'ຕັ່ງນັ່ງເພື່ອໃຫ້ນັກຮຽນນັ່ງຈັບຄູ່ກັນ' ຢູ່ເດີ່ນໂຮງຮຽນ ເພື່ອຫຼຸດຜ່ອນການທະເລາະວິວາດກັນ, ສົ່ງເສີມຄວາມເປັນເພື່ອນມິດກັນຂອງນັກຮຽນແລະຫຼຸດຜ່ອນຄວາມໂດດດ່ຽວປ່ຽວພອຍ (Hough, 2015). ບາງຄົນຖືວ່າອັນນີ້ຍັງສາມາດຊ່ວຍພັດທະນາຄວາມສາມາດທີ່ສຳຄັນຂອງຜູ້ຮຽນນຳອີກ ເຊັ່ນ: ຄວາມສາມັກຄີກັນແລະຄວາມມີນ້ຳໃຈຕໍ່ຄົນອື່ນ. ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ໄດ້ຈັດໃຫ້ມີຕັ່ງນັ່ງເພື່ອໃຫ້ນັກຮຽນນັ່ງຈັບຄູ່ກັນຢູ່ເດີ່ນໂຮງຮຽນແລະອະທິບາຍໃຫ້ນັກຮຽນວ່າ ຖ້ານັກຮຽນຜູ້ໃດມານັ່ງຕັ່ງນີ້ ລາວຈະຕ້ອງຊອກນັກຮຽນຄົນອື່ນມາເປັນເພື່ອນ ແລ້ວໃຫ້ເຂົາເຈົ້າມານັ່ງຕັ່ງນັ້ນນຳ. ຍຸດທະສາດນີ້ຍັງກ່ຽວພັນຢ່າງຍິ່ງກັບການສົ່ງເສີມ**ຄວາມເປັນເພື່ອນມິດກັນແລະຄວາມສຳພັນອັນດີຕໍ່ກັນ**ນຳອີກ.

## ສະພາບແວດລ້ອມຂອງການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ

ຜູ້ຕອບຄຳຖາມສຳລັບການສຳຫຼວດຄິດວ່າ**ສະພາບແວດລ້ອມຂອງການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ**ແມ່ນປັດໄຈສຳຄັນທີ່ສຸດອັນດັບສອງໃນການສົ່ງເສີມຄວາມສຸກຢູ່ໃນໂຮງຮຽນ ແລະບອກວ່າຈຳເປັນຕ້ອງມີການປະຕິສຳພັນກັນຫຼາຍຂຶ້ນລະຫວ່າງຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນ, ສະພາບແວດລ້ອມທີ່ເປັນມິດກັນຂອງຜູ້ຮຽນຢູ່ໃນຫ້ອງ, ການນຳໃຊ້ດົນຕີແລະສິ່ງປະຈັກຕາໃນການຮຽນຮູ້. ຕໍ່ໄປແມ່ນຍຸດທະສາດຕ່າງໆເພື່ອສົ່ງເສີມສະພາບແວດລ້ອມໃນການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນຫຼາຍຂຶ້ນຢູ່ໃນໂຮງຮຽນຕ່າງໆ.

**ໃຫ້ຄວາມສຳຄັນເລື່ອງການທັກທາຍກັນແລະຍິ້ມໃຫ້ກັນ**

ດັ່ງທີ່ໄດ້ຄົ້ນຄວ້າກັນກ່ອນແລ້ວຢູ່ໃນບົດນີ້ ຜົນຂອງການສຳຫຼວດທີ່ເຮັດເປັນພາສາຍີ່ປຸ່ນໄດ້ເນັ້ນເປັນພິເສດກ່ຽວກັບຄວາມສຳຄັນຂອງການທັກທາຍກັນແລະຍິ້ມໃຫ້ກັນ ເພື່ອເຮັດໃຫ້ເກີດສະພາບແວດລ້ອມຂອງການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ. ເມື່ອຖາມວ່າປັດໄຈຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ນັກຮຽນຍິງຄົນໜຶ່ງຈາກໂຮງຮຽນຂອງລັດບອກວ່າ 'ຍິ້ມໃຫ້ກັນຫຼາຍໆ'. ຜູ້ອຳນວຍການຄົນໜຶ່ງຈາກໂຮງຮຽນປະຖົມຂອງລັດກໍເວົ້າຄືກັນ 'ຍິ້ມໃຫ້ກັນແລະທັກທາຍກັນຢ່າງເບີກບານ'. ອີງຕາມ ຮາວຣ໌ (Hough, 2015) ການກະຕຸ້ນໃຫ້ມີການຍິ້ມໃຫ້ກັນຢູ່ໃນໂຮງຮຽນ ອາດແມ່ນໜຶ່ງໃນຍຸດທະສາດງ່າຍທີ່ສຸດເພື່ອເຮັດໃຫ້ເກີດສະພາບແວດລ້ອມຂອງການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ. ຄູຜູ້ທີ່ບອກວ່າການ

ເຮັດສິ່ງນີ້ໃຫ້ເປັນເປົ້າໝາຍທຸກມື້ ພົບວ່າມັນໄດ້ສົ່ງເສີມໃຫ້ຄວາມຢູ່ດີມີສຸກເກີດຂຶ້ນຢູ່ໃນຊຸມຊົນທີ່ມີໂຮງຮຽນ (Hough, 2015).

**ເອົາຝາອ້ອມຫ້ອງຮຽນອອກ**

ໂຮງຮຽນປະຖົມ ຢູຊາວະ ໄຮກາຊຸ ຢູ່ເທດສະບານ ອາກິຕະ (ຍີ່ປຸ່ນ) ໄດ້ເຮັດຫ້ອງຮຽນຂອງຕົນເປີດໂລ່ງຢ່າງສິ້ນເຊີງ ດ້ວຍການເອົາປະຕູແລະຝາດ້ານໃນບາງບ່ອນອອກ. ເຂົາເຈົ້າພົບວ່າການເຮັດໃຫ້ຫ້ອງຮຽນເປີດໂລ່ງນັ້ນເຮັດໃຫ້ເກີດຄວາມຮູ້ສຶກໂປ່ງໃສ ໂດຍໃຫ້ຊຸມຊົນທີ່ມີໂຮງຮຽນໄດ້ເຫັນຂະບວນການຮຽນການສອນຢ່າງເປີດເຜີຍໃຫ້ແກ່ຄູ, ພໍ່ແມ່ນັກຮຽນ ແລະພະນັກງານໂຮງຮຽນ. ລະບຽງທາງຍ່າງຕ້ອງໃຫ້ກວ້າງຂວາງແລະມີເນື້ອທີ່ ເພື່ອສາມາດເປັນບ່ອນໃຫ້ນັກຮຽນໄດ້ຫຼິ້ນໃນເດືອນລະດູໜາວ. ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ກໍເຮັດແບບດຽວກັນ ຄືເຮັດໃຫ້ຫ້ອງຮຽນເປີດໂລ່ງສຳລັບຊັ້ນຮຽນເລີ່ມຕົ້ນ ເພື່ອໃຫ້ນັກຮຽນຢູ່ໃນຫ້ອງຮຽນເຫຼົ່ານີ້ສາມາດມີປະຕິສຳພັນກັນຫຼາຍຂຶ້ນ. ໃນທາງປະຕິບັດຍຸດທະສາດນີ້ຈະຕ້ອງອີງໃສ່ພື້ນຖານໂຄງລ່າງຂອງໂຮງຮຽນ ດັ່ງນັ້ນ ໃຫ້ຈື່ຈຳໄວ້ວ່າ ໂຮງຮຽນແບບນີ້ເຮັດໃຫ້ສະພາບແວດລ້ອມຂອງການຮຽນຮູ້ມີຄວາມສຸກຫຼາຍຂຶ້ນ ໂດຍສະເພາະລະດັບປະຖົມ.

**ເອົາດົນຕີມາແທນກະແຫຼ່ງຂອງໂຮງຮຽນ**

ໃນປີ 2011 ຜູ້ອຳນວຍການໂຮງຮຽນ ພິມາກັຕເຊລ (ພູຖານ) ຂະນະນັ້ນ ໄດ້ເອົາດົນຕີມາແທນກະແຫຼ່ງຂອງໂຮງຮຽນ ຫຼັງຈາກທີ່ລາວໄປຢ້ຽມຢາມໂຮງຮຽນ ສັດຖະຍາໄສ (Sathya Sai) ຢູ່ປະເທດໄທ. ຈຸດປະສົງຫຼັກຂອງການລິເລີ່ມອັນນີ້ແມ່ນເພື່ອເລີ່ມຕົ້ນມື້ໃໝ່ໃຫ້ດີ, ອະນຸລັກ, ສົ່ງເສີມວັດທະນະທຳແລະປະເພນີ, ເຮັດໃຫ້ຈິດໃຈຂອງນັກຮຽນຜ່ອງໃສຫຼັງຈາກຮຽນວິຊາໃນຫ້ອງ, ຊ່ວຍການຮຽນຮູ້ດ້ວຍດົນຕີ ແລະທຳໜ້າທີ່ໃນມື້ນັ້ນໃຫ້ລຸລ່ວງດ້ວຍດີ. ດົນຕີທີ່ເອົາມາເປີດມີຫຼາຍຢ່າງແຕກຕ່າງກັນ ໂດຍໂຮງຮຽນເປີດເພງພູຖານດັ້ງເດີມ, ທຳນອງດົນຕີສຳລັບສະຖານທີ່ລ້ຽງເດັກຂອງອັງກິດແລະເປີດດົນຕີກ່ຽວກັບສາດສະໜາໃນວັນມົງຄຸນ.

ດັ່ງທີ່ ຈິກເມ (Jigme) ນາຍຄູຈາກໂຮງຮຽນ ພິມາກັຕເຊລ ໄດ້ອະທິບາຍວ່າ 'ພວກເຮົາລະມັດລະວັງກ່ຽວກັບປະເພດເພງທີ່ພວກເຮົາເອົາມາເປີດ ເພາະວ່າໝົດທຸກຄົນໃນໂຮງຮຽນຈະເປັນຜູ້ຟັງ, ໄດ້ພັກຜ່ອນຍ່ອນໃຈແລະນິຍົມຊົມຊອບຕະຫຼອດເວລາ'. ອີງຕາມຄູຄົນ

ນີ້ ການໃຊ້ດົນຕີແທນການໃຊ້ກະແຫຼ່ງ ເຮັດໃຫ້ເກີດການປ່ຽນແປງຫຼາຍຢ່າງໃນທາງທີ່ດີ. ທັງຄູແລະນັກຮຽນໄດ້ຮຽນເພງດັ້ງເດີມ, ນັກຮຽນພາກັນເລີ່ມສົນໃຈວັນສາດສະໜາ/ວັດທະນະທຳ, ມີຄວາມຮູ້ສຶກຜູກພັນຫຼາຍຂຶ້ນ ແລະນັກຮຽນມີຄວາມຕື່ນຕົວກ່ຽວກັບເວລາຫຼາຍຂຶ້ນ. ນອກຈາກນັ້ນການຮຽນຮູ້ກໍມີຊີວິດຊີວາຫຼາຍຂຶ້ນ ແລະການລິເລີ່ມນີ້ໄດ້ຜ່ອນຄາຍຄວາມທຸກໃຈຂອງນັກຮຽນ ການເຮັດແບບນີ້ພາໃຫ້ເກີດສະພາບແວດລ້ອມຂອງການຮຽນຮູ້ຢ່າງມີຄວາມສຸກ. ລາວບອກວ່າ 'ຮູ້ສຶກຕື່ນເຕັ້ນຫຼາຍທີ່ເຫັນນັກຮຽນ ແມ່ນກະທັ້ງຄູບາງຄົນກໍມີຄວາມສະໜຸກສະໜານລື່ນເລີງກັບທຳນອງດົນຕີ'.

**ຈັດວາງສະແດງສິ່ງປະຈັກຕາທີ່ສ້າງສັນ, ມີສີສັນແລະມີຄວາມໝາຍ**

ໂຮງຮຽນຕ່າງໆຢູ່ເທດສະບານ ອາກິຕະ (ຍີ່ປຸ່ນ) ຈັດວາງສະແດງປຶ້ມທຸກໆເດືອນຢູ່ໃນລະບຽງທາງຍ່າງຢູ່ໃນໂຮງຮຽນຂອງຕົນ ຊຶ່ງແຕ່ລະເດືອນຈະມີຫົວເລື່ອງໃໝ່ອອກມາ, ເຂົາເຈົ້າວາງສະແດງໂປສເຕີ ທີ່ນັກຮຽນຜະລິດແລະເອົາຂັ້ນໄດໂຮງຮຽນເປັນບ່ອນວາງສະແດງຄຳສັບແລະຄຳທີ່ມີຄວາມໝາຍຄືກັນ. ການວາງສະແດງສິ່ງປະຈັກຕາເຫຼົ່ານີ້ຖືກນຳໃຊ້ເພື່ອສື່ສານກັບນັກຮຽນແລະສ້າງຄວາມເຂົ້າໃຈກ່ຽວກັບປະເດັນຕ່າງໆ. ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ກໍເຮັດແບບດຽວກັນ ຄືສ້າງຈິດສຳນຶກກ່ຽວກັບຄວາມສຳຄັນຂອງບົດຝຶກຫັດດ້ວຍການບັນທຶກຈຳນວນແຄໂລຣີ ທີ່ເສຍໄປຈາກການຍ່າງແຕ່ລະກ້າວຢູ່ໃນໂຮງຮຽນ. ອັນນີ້ຊ່ວຍສະໜັບສະໜູນມາດຖານອື່ນໆອີກນຳ ເຊັ່ນ: ສຸຂະອະນາໄມແລະໂພຊະນາການຊຶ່ງຈະໄດ້ສຶກສາກັນຕໍ່ໄປຢູ່ໃນບົດນີ້.

## ພື້ນທີ່ການຮຽນຮູ້ແລະເປັນບ່ອນຫຼິ້ນທີ່ເປີດໂລ່ງແລະເປັນສີຂຽວ

ຜູ້ຕອບຄຳຖາມສຳລັບການສຳຫຼວດຄິດວ່າ ໂຮງຮຽນໃຫ້ຄວາມສຸກມີພື້ນທີ່ແລະອຸປະກອນທີ່ເອື້ອອຳນວຍເຮັດໃຫ້ເກີດສະພາບແວດລ້ອມຂອງການຮຽນຮູ້ທີ່ດີ ປະກອບດ້ວຍພື້ນຖານໂຄງລ່າງທີ່ດີ, ມີສິ່ງອຳນວຍຄວາມສະດວກທີ່ມີອະນາໄມ, ອຸປະກອນທາງດ້ານເຕັກໂນໂລຊີແລະຂໍ້ມູນຂ່າວສານ. ໂດຍສະເພາະຜູ້ຕອບຄຳຖາມໄດ້ເນັ້ນຢ້ຳເຖິງຄວາມສຳຄັນຂອງພື້ນທີ່ສີຂຽວຢູ່ນອກຫ້ອງຮຽນສຳລັບການຮຽນຮູ້ແລະການຫຼິ້ນ ເພື່ອໃຫ້ຜູ້ຮຽນສາມາດໃຊ້ເວລາຢູ່ນອກຫ້ອງຮຽນແລະໄດ້ສຳຜັດກັບທຳມະຊາດ. ອີງຕາມຄູຄົນໜຶ່ງຈາກໂຮງຮຽນເອກະຊົນຢູ່ຟີລິບປິນ ໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ມີ 'ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຮຽນຮູ້ແລະການພົບປະສັງສັນ ຊຶ່ງເຕັມໄປດ້ວຍແສງສະຫວ່າງ, ມີປ່າສີຂຽວທຳ

ມະຊາດແລະມີພື້ນຖານໂຄງລ່າງທີ່ມີການບຳລຸງຮັກສາເປັນຢ່າງດີ'. ຄູຍິງຄົນໜຶ່ງຢູ່ໂຮງຮຽນຂອງລັດຈາກປະເທດໄທກໍເຊັ່ນດຽວກັນ ຍອມຮັບຄວາມສຳຄັນຂອງພື້ນທີ່ສີຂຽວ ແຕ່ໃນຄວາມໝາຍກວ້າງກວ່າ ຄືບອກວ່າການສຳຜັດໂລກພາຍນອກ ຊຶ່ງໄດ້ແກ່ທຳມະຊາດແລະຜູ້ຄົນທີ່ມີວັດທະນະທຳອື່ນແລະເກນອາຍຸຕ່າງກັນມີຄວາມສຳຄັນຫຼາຍ. ຕໍ່ໄປແມ່ນລາຍການຍຸດທະສາດຕ່າງໆກ່ຽວກັບເລື່ອງນີ້.

### ສ້າງສະຖານທີ່ພັກຜ່ອນຢ່ອນໃຈແລະສ້າງສັນ

ໂຮງຮຽນ ພິມາກັຕເຊລ (ພູຖານ) ໄດ້ເປີດຮ້ານກິນກາເຟເພື່ອອ່ານໜັງສືຢູ່ໃນໂຮງຮຽນເພື່ອໃຫ້ມີສະຖານທີ່ສະດວກສະບາຍສຳລັບຜູ້ຮຽນ ໃນການໃຊ້ເວລາວ່າງຂອງຕົນສະໜຸກສະໜານກັບການອ່ານໜັງສື. ສະພາບແວດລ້ອມຢູ່ຮ້ານກາເຟຜ່ອນຄາຍກວ່າຫ້ອງສະໝຸດທຳມະດາທົ່ວໄປ ແລະມີພື້ນທີ່ສຳລັບນັກຮຽນໄດ້ພົບປະສັງສັນແລະພັກຜ່ອນຢ່ອນໃຈ ລວມທັງອ່ານໜັງສືນຳພ້ອມ.

### ເຮັດສວນຢູ່ໂຮງຮຽນ

ຍ້ອນເຫັນຄວາມສຳຄັນທີ່ນັກຮຽນຕ້ອງມີສະພາບແວດລ້ອມສີຂຽວຢູ່ໃນໂຮງຮຽນ ໂຮງຮຽນຫຼາຍບ່ອນຈຶ່ງມີໂຄງການເຮັດສວນຢູ່ໂຮງຮຽນ ຊຶ່ງເຂົາເຈົ້າຖືວ່າເປັນການເຮັດໃຫ້ສະພາບແວດລ້ອມຂອງໂຮງຮຽນເປັນສີຂຽວຫຼາຍຂຶ້ນ ແລະເປີດໂອກາດໃຫ້ມີກິດຈະກຳການຮຽນຮູ້ແບບລົງມືເຮັດ ຂະນະດຽວກັນຍັງເປັນການປັບປຸງໂພຊະນາການໃຫ້ດີຂຶ້ນອີກດ້ວຍທັງໃຫ້ພໍ່ແມ່ນັກຮຽນແລະສະມາຊິກຂອງຊຸມຊົນມີສ່ວນຮ່ວມນຳໂຮງຮຽນຫຼາຍຂຶ້ນ. ຕົວຢ່າງ: ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ໄດ້ເຮັດສວນຜັກທີ່ຍິນດີຕ້ອນຮັບນັກຮຽນແລະຄອບຄົວເຂົາເຈົ້າ ໃຊ້ເວລາວ່າງຂອງຕົນມາເຮັດວຽກຮ່ວມກັນ.

### ນຳໃຊ້ພື້ນທີ່ນອກຫ້ອງຮຽນສຳລັບການຮຽນຮູ້ແລະການຫຼິ້ນ

ໂຮງຮຽນມັດທະຍົມທົດລອງຂອງສະຖາບັນວິທະຍາສາດການສຶກສາ (ຫວຽດນາມ) ປ່ອຍໃຫ້ນັກຮຽນໄດ້ຮຽນວິຊາຕ່າງໆ ເຊັ່ນ: ສິລະປະ, ກາຍະສຶກສາແລະຊີວະວິທະຍາຢູ່ນອກຫ້ອງຮຽນ. ນັກຮຽນມັກປະສົບການນີ້ແລະຮູ້ສຶກວ່າພວກຕົນຮຽນໄດ້ດີຢູ່ນອກຫ້ອງຮຽນ. ດັ່ງທີ່ ຫງວຽນ ກ໋ອກ ວັນ ທາວ (Nguyen Ngoc Van Thao) ເວົ້າເຖິງເລື່ອງນີ້ວ່າ 'ພວກເຮົາໄດ້ຮັບອະນຸຍາດໃຫ້ເພີດເພີນກັບທິວທັດທີ່ສວຍສົດງົດງາມ ເພື່ອປັບປຸງສຸຂະພາບຂອງ

ພວກເຮົາໃຫ້ດີຂຶ້ນແລະເກີດແຮງບັນດານໃຈຫຼາຍຂຶ້ນ ເຮັດໃຫ້ການຮຽນວິຊາຕ່າງໆມີປະສິດທິຜົນຫຼາຍຂຶ້ນ'. ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ກໍເຮັດແບບດຽວກັນ ຄືນຳໃຊ້ສະພາບແວດລ້ອມທາງທຳມະຊາດຢູ່ໃນຊຸມຊົນທ້ອງຖິ່ນ ເປັນບ່ອນເຮັດກິດຈະກຳກິລາ, ຊຸກຍູ້ໃຫ້ນັກຮຽນໄດ້ບໍລິຫານຮ່າງກາຍໃຫ້ມີສຸຂະພາບດີ. ໂຮງຮຽນນຳໃຊ້ພື້ນທີ່ສີຂຽວຢູ່ທີ່ຫໍພັກໂຮງຮຽນ ເພື່ອເຮັດກິດຈະກຳຮຽນຮູ້ແບບຄົ້ນຫາຄວາມຈິງແລະເປັນພື້ນທີ່ສຳລັບການຮຽນຮູ້ ໂດຍຈັດໃຫ້ມີໂຕະແລະຕັ່ງນັ່ງເປັນຫ້ອງຮຽນຢູ່ທາງນອກ. ເນື່ອງຈາກນັກຮຽນໃຊ້ເວລາດົນນານຢູ່ທີ່ໂຮງຮຽນ ການເຮັດແບບນີ້ຈຶ່ງເຮັດໃຫ້ເຂົາເຈົ້າມີເວລາຢູ່ນອກຫ້ອງຮຽນຫຼາຍຂຶ້ນ.

## ວິໄສທັດແລະການນຳພາຂອງໂຮງຮຽນ

ເມື່ອຄຳນຶງເຖິງການບໍລິຫານໂຮງຮຽນໃນວົງກວ້າງ ຜູ້ຕອບຄຳຖາມຄິດວ່າວິໄສທັດຂອງໂຮງຮຽນມີຄວາມສຳຄັນໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ໃນຈຳນວນໂຮງຮຽນທີ່ເຂົ້າຮ່ວມການສຳມະນາ ຫຼາຍບ່ອນມີວິໄສທັດ, ຄະຕິສອນໃຈຫຼືຄຳຂວັນທີ່ເວົ້າເຖິງຄວາມສຸກໂດຍກົງ ຫຼືກ່ຽວຂ້ອງກັບແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ຕໍ່ໄປແມ່ນການອະທິບາຍຕົວຢ່າງວິໄສທັດຂອງໂຮງຮຽນເຫຼົ່ານີ້.

### ສົ່ງເສີມວິໄສທັດຂອງໂຮງຮຽນທີ່ໃຫ້ຄວາມສຳຄັນກ່ຽວກັບຄວາມສຸກ

ວິໄສທັດຂອງໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ຄື 'ໂຮງຮຽນເປັນບ່ອນບົ່ມສອນໃຫ້ມີຄວາມໄຝ່ຝັນແລະສົ່ງເສີມພອນສະຫວັນ'. ວິໄສທັດຂອງໂຮງຮຽນປະຖົມ ຢູຊາວະ ຮີກະຊິ ກໍເຊັ່ນດຽວກັນ ຄືເວົ້າເຖິງຄວາມໄຝ່ຝັນຕ່າງໆ 'ຈົ່ງເປັນເດັກທີ່ມີຄວາມໄຝ່ຝັນແລະກະຕຸ້ນຕົນເອງ. ພວກເຮົາມາຊ່ວຍກັນເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກກັນເທາະ!'. ອີງໃສ່ວິໄສທັດຂອງໂຮງຮຽນນີ້ ຊິນຈິ ຊຸຊຸກິ (Shinji Suzuki) ຜູ້ອຳນວຍການໂຮງຮຽນ ຢູຊາວະ ຮີກະຊິ ມີວິໄສທັດວ່າ ຄວາມສຸກມີອົງປະກອບສີ່ຢ່າງດ້ວຍກັນ ຄື: 1) ໄດ້ຮັບຄວາມຮັກຈາກຄົນອື່ນ, 2) ໄດ້ຮັບຄຳສັນລະເສີນ, 3) ມີບົດບາດ ແລະ 4) ຄົນອື່ນເຫັນຄຸນຄ່າໃນຕົວເຮົາ. ອົງປະກອບເຫຼົ່ານີ້ສະທ້ອນໃຫ້ເຫັນຫຼາຍດ້ານທີ່ສຳຄັນຂອງມາດຖານອີກອັນໜຶ່ງ ຊຶ່ງໄດ້ສະເໜີໃຫ້ເປັນສ່ວນໜຶ່ງຂອງໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ ໂດຍສະເພາະກ່ຽວກັບຄວາມເປັນເພື່ອນມິດຕໍ່ກັນ, ຄວາມສຳພັນກັນແລະຄວາມສຳຄັນຂອງຄວາມຮູ້ສຶກກ່ຽວກັບຄວາມສຳເລັດ. ວິໄສທັດຂອງໂຮງຮຽນສີ່ບ່ອນ

ຢູ່ເທດສະບານ ອາກິຕະ (ຍີ່ປຸ່ນ) ເຮັດເປັນລາຍການອອກມາຢູ່ໃນກ່ອງຂໍ້ຄວາມ 6.

***ກ່ອງຂໍ້ຄວາມ 6.*** *ວິໄສທັດຂອງໂຮງຮຽນທົ່ວແຫ່ງທີ່ໄດ້ຮັບການຄັດເລືອກໃນເທດສະບານ ອະກິຕະ (ຍີ່ປຸ່ນ)*

**ໂຮງຮຽນປະຖົມ ຢູຊາວະ ຮີກະຊິ**
ເປັນເດັກທີ່ມີຄວາມໄຝ່ຝັນແລະກະຕຸ້ນຕົນເອງ. ພວກເຮົາມາຊ່ວຍກັນເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກກັນເທາະ!

**ໂຮງຮຽນມັດທະຍົມຕົ້ນ ຮີກະຊິ ນະຣຸເຊະ**
ສ້າງນັກຮຽນຜູ້ທີ່ຮຽນຮູ້ຢ່າງມີສະຕິສຳປະຊະຍະ, ມີຄວາມເອື້ອອາທອນແລະໃຊ້ຊີວິດຢ່າງຄົບຖ້ວນສົມບູນ.

**ໂຮງຮຽນມັດທະຍົມຕົ້ນ ຢູຊາວະ ກິຕະ**
ສ້າງນັກຮຽນຜູ້ທີ່ມີຄວາມເອື້ອອາທອນ, ມີຈິດໃຈບໍ່ຍອມຈຳນົນແລະມີຄວາມສ້າງສັນ.

**ໂຮງຮຽນປະຖົມ ຮີກະຊິ ນະຣຸເຊະ**
ຕື່ມເຕັມຄວາມຝັນ, ສະຫຼາດສ່ອງໃສ, ມີຄວາມເອື້ອອາທອນແລະມີຈິດໃຈບໍ່ຍອມຈຳນົນ

*Source:* Yamaguchi et. al., 2015.

## ການໃຊ້ລະບຽບວິໄນທາງບວກ

ຜູ້ເຂົ້າຮ່ວມການສຶກສາຄົ້ນຄວ້າຫຼາຍຄົນໄດ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ໂຮງຮຽນຕ້ອງໃຊ້ວິທີປະຕິບັດລະບຽບວິໄນດ້ານບວກ ແທນທີ່ຈະໃຊ້ການລົງໂທດທາງຮ່າງກາຍຫຼືອາລົມຄວາມຮູ້ສຶກ. ຄວາມຈິງແລ້ວ ການລົງໂທດທາງຮ່າງກາຍແລະອາລົມຄວາມຮູ້ສຶກທີ່ຜູ້ຕອບຄຳຖາມສຳລັບການສຳຫຼວດເວົ້າເຖິງນັ້ນ ແມ່ນປັດໄຈທີ່ມີແນວໂນ້ມຫຼາຍທີ່ສຸດໃນການເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໃຫ້ຄວາມສຸກ. ການລົງໂທດດ້ານອາລົມຄວາມຮູ້ສຶກແບບໜຶ່ງຊຶ່ງນັກຮຽນເວົ້າເຖິງ ຄືເວລາຄູປຽບທຽບນັກຮຽນໃສ່ກັບເພື່ອນນັກຮຽນຄົນອື່ນ ບໍ່ວ່າຈະເປັນດ້ານຄວາມສຳເລັດ, ການປະພຶດຫຼືຮູບຮ່າງລັກສະນະຂອງພວກເຂົາເຈົ້າ. ແທນທີ່ຈະເປັນການກະຕຸ້ນນັກຮຽນດັ່ງທີ່ຕັ້ງໃຈ ການປຽບທຽບແບບນີ້ຍິ່ງເຮັດໃຫ້ນັກຮຽນສູນເສຍ

ຄວາມໝັ້ນໃຈໃນຕົວເອງ. ລັກສະນະດຽວກັນນີ້ ການລົງໂທດຍ້ອນເຮັດຄວາມຜິດນັ້ນ ມີທ່າອ່ຽງທີ່ຈະທຳລາຍຄວາມເຊື່ອຖືຕົນເອງ ແລະຂີດຄວາມສາມາດໃນການຮຽນຮູ້ຂອງຜູ້ຮຽນ. ດັ່ງທີ່ຄູຜູ້ຊາຍຄົນໜຶ່ງຈາກໂຮງຮຽນເອກະຊົນໃນຟີລິບປິນບອກວ່າ 'ເດັກຖືກລົງໂທດ' ຍ້ອນເຮັດຜິດ ແຕ່ການເຮັດຜິດຄືການຮຽນຮູ້'. ເພື່ອແກ້ບັນຫາຕ່າງໆທີ່ເກີດຂຶ້ນ ເຊັ່ນ: ຄວາມຮຸນແຮງຢູ່ໃນໂຮງຮຽນແລະການທຳຜິດກົດໝາຍ ໂຮງຮຽນຕ້ອງມີແບບຟອມບາງຢ່າງທີ່ຊັດເຈນກ່ຽວກັບການໃຊ້ລະບຽບວິໄນ. ບາງຄົນເຊື່ອວ່າ ການເຮັດແບບນີ້ຈະຊ່ວຍໃຫ້ນັກຮຽນໄດ້ພັດທະນາຈຸດແຂງດ້ານບຸກຄະລິກໃນການຄວບຄຸມຕົນເອງ ຊຶ່ງເປັນການຊ່ວຍແກ້ບັນຫາໄດ້. ເຂົາເຈົ້າແນະນຳວ່າ ການໃຫ້ຄູເຂົ້າມາຊ່ວຍແກ້ບັນຫາຈະມີປະສິດທິຜົນຫຼາຍກວ່າການໃຊ້ຮູບແບບການລົງໂທດທີ່ປະຕິບັດກັນທົ່ວໄປ ທັງບອກວ່າການໃຊ້ລະບຽບວິໄນຄວນຖືວ່າ ເປັນຂະບວນການຮຽນຮູ້ໃນໄລຍະຍາວ (Short et. al., 1993). ຍຸດທະສາດຕໍ່ໄປຈະໃຫ້ຕົວຢ່າງຂອງການໃຊ້ລະບຽບວິໄນດ້ານບວກ ທີ່ສາມາດນຳໄປໃຊ້ໄດ້ຢູ່ໂຮງຮຽນຕ່າງໆ.

**ເອົາກິດຈະກຳສ້າງສັນທີ່ສົ່ງເສີມການຄວບຄຸມອາລົມຄວາມຮູ້ສຶກແທນການລົງໂທດ**

ອີງຕາມ ຮາວຣ໌ (Hough) (2015) ການຟັງນັກຮຽນແລະໃຊ້ທາງເລືອກອື່ນແທນການລົງໂທດຕາມທີ່ເຄີຍປະຕິບັດກັນ ເຊັ່ນ: ການແຍກໃຫ້ຢູ່ຄົນດຽວ ຫຼື 'ໃຫ້ພັກຮຽນຊົ່ວຄາວ' ສາມາດເຮັດໃຫ້ມີພື້ນທີ່ປອດໄພເພື່ອເຮັດກິດຈະກຳສ້າງສັນ ເປັນການເຮັດໃຫ້ຜູ້ຮຽນສາມາດຄວບຄຸມອາລົມຄວາມຮູ້ສຶກ. ລັກສະນະດຽວກັນ ນັກຮຽນສາມາດພັດທະນາທັກສະໃນການເຮັດໃຫ້ຕົນເອງມີລະບຽບວິໄນດ້ວຍການຫຼິ້ນເກມຕ່າງໆ. ລາວເວົ້າເຖິງ ຄຣິສ໌ຕິນາ ຮິນຕັນ (Christina Hinton) ຜູ້ຊ່ຽວຊານໃນດ້ານນີ້ ເຫັນວ່າການເຂົ້າຮ່ວມກິດຈະກຳແລະຫຼິ້ນເກມຕ່າງໆທີ່ກ່ຽວຂ້ອງກັບອາລົມຄວາມຮູ້ສຶກນັ້ນ ເຮັດໃຫ້ນັກຮຽນມີປະສົບການແລະສາມາດຄວບຄຸມອາລົມໄດ້ດີກວ່າການເຮັດໃຫ້ເຂົາເຈົ້າມີຄວາມກົດດັນທາງດ້ານຄວາມຮູ້ສຶກ.

**ແນະນຳການສະແດງຄວາມປິ້ມປີຕິຍິນດີຢູ່ໃນຫ້ອງຢ່າງອົດທົນລໍຄອຍ**

ຫຼາຍກວ່າ 40 ປີມາແລ້ວ ນັກຈິດຕະສາດອາເມຣິກາຄະນະໜຶ່ງນຳໂດຍ ວອຣ໌ເທີຣ໌ ມິສ໌ເຊລ (Walter Mishel) ໄດ້ທຳການສຶກສາຄົ້ນຄວ້າຫຼາຍຢ່າງ ຊຶ່ງເປັນທີ່ຮູ້ຈັກກັນໃນປັດຈຸບັນວ່າແມ່ນ 'ການທົດລອງຂະໜົມອົມ ສະແຕນຟອຣ໌ດ (Stanford)'. ການທົດລອງນີ້ຄືໃຫ້ເດັກນ້ອຍຄົນໜຶ່ງເລືອກເອົາ ລະຫວ່າງສິ່ງທີ່ໜ້າກິນອັນໜຶ່ງ ເຊັ່ນຂະໜົມອົມກ້ອນໜຶ່ງໂດຍທັນທີໂລດ ຫຼືວ່າລໍຖ້າ 15 ນາທີແລ້ວ ຈຶ່ງຮັບເອົາສິ່ງທີ່ຈະມອບໃຫ້ຊຶ່ງມີຫຼາຍກວ່າ

ຄືຂະໜົມອົມສອງກ້ອນ. ຜົນການທົດລອງພົບວ່າ ເມື່ອເດັກນ້ອຍຫັນປ່ຽນຈາກສະພາບການລໍຄອຍໂດຍບໍ່ກະວົນກະວາຍ ໄປສູ່ກິດຈະກຳທີ່ເອື້ອປະໂຫຍດ ພວກເຂົາສາມາດລໍຖ້າເອົາສິ່ງທີ່ມອບໃຫ້ໄດ້ດົນນານຂຶ້ນ (Mischel and Bill, 1974, p. 1086). ດັ່ງນັ້ນ ຈຶ່ງມີຄວາມຈຳເປັນທີ່ນັກຮຽນຕ້ອງພັດທະນາຈຸດດີທາງດ້ານອຸປະນິໄສ ເຊັ່ນ: ການຄວບຄຸມຕົນເອງແລະຄວາມສາມາດຢັບຢັ້ງຊັ່ງໃຈຕົນເອງບໍ່ໃຫ້ຫຼົງໄຫຼໄປກັບສິ່ງເຍົ້າຍວນໃຈ. ໃນທຳນອງດຽວກັນນີ້ ການສຶກສາຄົ້ນຄວ້າອື່ນໆໄດ້ຄົ້ນພົບວ່າ ຄວາມສາມາດຄວບຄຸມຕົນເອງມີການເຊື່ອມໂຍງໂດຍກົງກັບການບັນລຸຜົນທາງດ້ານສັກກະຍະພາບທາງສະຕິປັນຍາຂອງນັກຮຽນ (Duckworth and Seligman, 2005). ກ່ຽວກັບເລື່ອງນີ້ ຜູ້ໃດທີ່ສາມາດຄວບຄຸມອາລົມຄວາມຮູ້ສຶກຂອງຕົນ ແລະມີຄວາມຢັບຢັ້ງຊັ່ງໃຈໄດ້ນັ້ນ ມີແນວໂນ້ມທີ່ຈະປະສົບຄວາມສຳເລັດຢູ່ໃນໂຮງຮຽນຫຼາຍຂຶ້ນ. ສະນັ້ນ ຄວາມພະຍາຍາມແນະນຳວິທີຕ່າງໆທີ່ເຮັດໃຫ້ນັກຮຽນໄດ້ພັດທະນາຄວາມມີລະບຽບວິໄນຂອງຕົນເອງ ແລະການຢັບຢັ້ງຊັ່ງໃຈໃນການສະແດງຄວາມປິຕິຍິນດີໄດ້ນັ້ນ ມີຄວາມເປັນໄປໄດ້ທີ່ຈະຫຼຸດຜ່ອນຄວາມຂັດແຍ່ງແລະຄວາມຮຸນແຮງຢູ່ໃນໂຮງຮຽນລົງໄດ້ ດ້ວຍວິທີນີ້ ຈຶ່ງສາມາດຫຼີກລ້ຽງຄວາມຈຳເປັນຕ້ອງໃຊ້ການລົງໂທດ.

## ສຸຂະພາບ, ອະນາໄມແລະໂພຊະນາການດີ

ຜູ້ຕອບຄຳຖາມຫຼາຍຄົນເວົ້າເຖິງຄວາມສຳຄັນຂອງສະພາບແວດລ້ອມທີ່ສະອາດແລະດີຕໍ່ສຸຂະພາບຢູ່ໃນໂຮງຮຽນ ລວມທັງການປັບປຸງໂພຊະນາການໃຫ້ດີຂຶ້ນ ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກຫຼາຍຂຶ້ນ. ຢູ່ໃນການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ມີການສະແດງໃຫ້ເຫັນວ່າ ໂພຊະນາການມີຄວາມສຳຄັນເປັນພິເສດ ຄຽງຄູ່ໄປກັບການລິເລີ່ມໃນການປະສົມປະສານຈິດສຳນຶກກ່ຽວກັບສິ່ງແວດລ້ອມເຂົ້າກັບສຸຂະພາບແລະອະນາໄມ.

### ຮັບປະກັນໃຫ້ມີອາຫານດີຕໍ່ສຸຂະພາບຢູ່ໃນຮ້ານຂາຍອາຫານໃນໂຮງຮຽນ

ຮ້ານອາຫານຢູ່ທີ່ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ຂາຍອາຫານຫຼຸດລາຄາໃຫ້ແກ່ນັກຮຽນ ຊຶ່ງເປັນອາຫານທີ່ຄັດເລືອກມາຈາກບ່ອນຂາຍຍຳສະຫຼັດ. ການເຮັດແບບນີ້ເປັນການຊຸກຍູ້ດ້ານການເງິນໃຫ້ນັກຮຽນໄດ້ເລືອກອາຫານທີ່ດີຕໍ່ສຸຂະພາບ. ນອກຈາກນັ້ນ ໂຮງຮຽນນີ້ຍັງໄດ້ຈັດໃຫ້ມີບ່ອນຂາຍອາຫານຫວ່າງເພື່ອບໍລິການນ້ຳໝາກໄມ້, ໝາກໄມ້ແຫ້ງແລະອາຫານທີ່ມີໂພຊະນາການ ໂດຍຈຳກັດການເລືອກກິນອາຫານທີ່ບໍ່ເປັນປະໂຫຍດຕໍ່ສຸຂະພາບ. ໂຮງຮຽນນີ້ຍັງຕິດປ້າຍໂປສເຕີ ທີ່ໃຫ້ຂໍ້ມູນກ່ຽວກັບໂພຊະນາການໃສ່ຕາມຝານຳອີກ

ເພື່ອສ້າງຈິດສຳນຶກໃຫ້ແກ່ນັກຮຽນກ່ຽວກັບອາຫານທີ່ມີໂພຊະນາການ ແລະຊຸກຍູ້ໃຫ້ເຂົາເຈົ້າເລືອກກິນອາຫານທີ່ດີຕໍ່ສຸຂະພາບຫຼາຍຂຶ້ນ. ໃນສະພາບເງື່ອນໄຂທີ່ໂຮງຮຽນມີລາຍໄດ້ຕໍ່າ ວິທີອີກແບບໜຶ່ງໃນການປັບປຸງໂພຊະນາການຢູ່ໃນໂຮງຮຽນ ຄືແນະນຳໂຮງຮຽນເຮັດສວນຜັກຫຼືສະຫະກອນປູກຜັກໂດຍຊຸມຊົນທ້ອງຖິ່ນເປັນຜູ້ນຳພາເຮັດ.

**ມີນັກໂພຊະນາການປະຈຳໂຮງຮຽນ**

ດັ່ງທີ່ໄດ້ລະບຸຢູ່ໃນຕົວຢ່າງກ່ອນໜ້ານີ້ ໂຮງຮຽນປະຖົມ ແດກູ ກາຊັງ (ສາທາລະນະລັດເກົາຫຼີ) ໄດ້ເຮັດສວນຜັກບ່ອນໜຶ່ງ ຊຶ່ງເປັນວິທີຊຸກຍູ້ຊຸມຊົນໃຫ້ເຂົ້າມາມີສ່ວນຮ່ວມໃນໂຮງຮຽນ, ສະໜອງຜັກໃຫ້ແກ່ໂຄງການອາຫານທ່ຽງຢູ່ໂຮງຮຽນ ຊຶ່ງນັກໂພຊະນາການອາຊີບເປັນຜູ້ປຸງແຕ່ງອາຫານທີ່ມີໂພຊະນາການແລະດີຕໍ່ສຸຂະພາບ. ເນື່ອງຈາກການຈ້າງນັກໂພຊະນາການອາຊີບອາດມີບັນຫາສຳລັບໂຮງຮຽນທີ່ມີລາຍໄດ້ຕໍ່າ ໂຮງຮຽນສາມາດເລືອກເອົາອາສາສະໝັກ ເຊັ່ນ: ສະມາຊິກຊຸມຊົນໃນທ້ອງຖິ່ນ ເພື່ອມາປຸງແຕ່ງອາຫານຢູ່ໃນໂຮງຮຽນແລະສາມາດລະດົມທຶນເພື່ອເອົາມາເປັນຄ່າໃຊ້ຈ່າຍສຳລັບການຝຶກອົບຮົມດ້ານໂພຊະນາການໃຫ້ແກ່ອາສາສະໝັກເຫຼົ່ານີ້.

**ທຳຄວາມສະອາດໂຮງຮຽນຢູ່ໃນຊຸມຊົນ**

ໂຮງຮຽນ ພິມາກັຕເຊລ (ພູຖານ) ໄດ້ທຳຄວາມສະອາດໂຮງຮຽນພາຍໃນຊຸມຊົນເປັນປະຈຳ ເພື່ອເຮັດໃຫ້ໂຮງຮຽນແລະຊຸມຊົນທ້ອງຖິ່ນປາສະຈາກຂີ້ເຫຍື້ອ. ກິດຈະກຳທີ່ປະຕິບັດຮ່ວມກັນນີ້ ບໍ່ພຽງແຕ່ຊ່ວຍປັບປຸງອະນາໄມແລະສຸຂະພາບໃຫ້ດີຂຶ້ນເທົ່ານັ້ນ ແຕ່ຍັງເຮັດໃຫ້ນັກຮຽນແລະຄູເກີດຄວາມຮູ້ສຶກມີສ່ວນຮ່ວມນຳກັນ ຂະນະດຽວກັນກໍເປັນການສ້າງຈິດສຳນຶກຮັບຜິດຊອບກ່ຽວກັບສຸຂະພາບຢູ່ໃນຊຸມຊົນທ້ອງຖິ່ນຂອງເຂົາເຈົ້າ ລວມທັງຂຶມຊັບຄວາມງົດງາມຂອງສະພາບແວດລ້ອມຢູ່ໃນທ້ອງຖິ່ນນຳອີກ.

## ການບໍລິຫານໂຮງຮຽນແບບປະຊາທິປະໄຕ

ອີງຕາມທັດສະນະຂອງກຸ່ມຕ່າງໆຂອງຜູ້ທີ່ມີສ່ວນຮ່ວມທັງໝົດ ເຂົາເຈົ້າລ້ວນແຕ່ຄິດວ່າການບໍລິຫານໂຮງຮຽນແບບປະຊາທິປະໄຕມີຄວາມສຳຄັນ ເພື່ອເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ຜູ້ຕອບຄຳຖາມຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ນັກຮຽນຕ້ອງຮູ້ຈັກຕັ້ງຄຳຖາມກ່ຽວກັບສິ່ງທີ່ເຂົາເຈົ້າຮູ້ສຶກວ່າ ກົດເກນແລະລະບຽບຫຼັກການຕ່າງໆຂອງໂຮງຮຽນ 'ເຂັ້ມ

ງວດແລະບໍ່ສົມເຫດສົມຜົນ' ເພື່ອໃຫ້ຄູແລະນັກຮຽນໄດ້ມີໂອກາດໃຫ້ຄຳແນະນຳກ່ຽວກັບການບໍລິຫານທົ່ວໄປຂອງໂຮງຮຽນ. ດັ່ງທີ່ນັກຮຽນຍິງຈາກມະຫາວິທະຍາໄລຂອງຫວຽດນາມອະທິບາຍວ່າ 'ນັກຮຽນຄວນເຂົ້າຮ່ວມເກືອບທຸກກິດຈະກຳຢູ່ໃນໂຮງຮຽນ ຊຶ່ງປະກອບດ້ວຍການສະແດງຄວາມຄິດເຫັນຂອງຕົນກ່ຽວກັບກົດເກນ, ເຄື່ອງນຸ່ງນັກຮຽນແລະບົດຮຽນຕ່າງໆເພື່ອເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກຫຼາຍຂຶ້ນ'. ຕໍ່ໄປແມ່ນຕົວຢ່າງຍຸດທະສາດອັນໜຶ່ງທີ່ສາມາດເອົາໄປນຳໃຊ້ ເພື່ອໃຫ້ນັກຮຽນປະກອບສ່ວນເຂົ້າໃນການບໍລິຫານໂຮງຮຽນຫຼາຍຂຶ້ນ.

### ປ່ອຍໃຫ້ນັກຮຽນທຳໜ້າທີ່ເປັນຜູ້ອຳນວຍການມື້ໜຶ່ງ

ໃນການປ່ອຍໃຫ້ນັກຮຽນໄດ້ມີໂອກາດສະແດງຄວາມຄິດເຫັນຫຼາຍຂຶ້ນກ່ຽວກັບການບໍລິຫານໂຮງຮຽນນັ້ນ ຜົນຈາກການສຳຫຼວດສະແດງໃຫ້ເຫັນຄຳຕອບເລື້ອຍໆທີ່ແນະນຳໃຫ້ນັກຮຽນສວມບົດບາດເປັນຜູ້ອຳນວຍການໂຮງຮຽນມື້ໜຶ່ງ. ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ໄດ້ປະຕິບັດແບບນີ້ ຊຶ່ງປ່ອຍໃຫ້ນັກຮຽນໃຊ້ເວລາມື້ໜຶ່ງທຳໜ້າທີ່ເປັນຜູ້ອຳນວຍການໂຮງຮຽນ. ໃນມື້ນັ້ນຄູຄົນໜຶ່ງຈະພານັກຮຽນຄົນນັ້ນກວດເບິ່ງການບໍລິຫານໂຮງຮຽນແລະມີອິດສະຫຼະໃນການໃຫ້ຄຳແນະນຳເພື່ອປັບປຸງສິ່ງຕ່າງໆທົ່ວໂຮງຮຽນ.

### ສະຫຼຸບ

ອີງໃສ່ມາດຖານຕ່າງໆທີ່ໄດ້ຄົ້ນຄວ້າຢູ່ໃນໝວດນີ້ ກ່ອງຂໍ້ຄວາມ 7 ມີການສະຫຼຸບກ່ຽວກັບຍຸດທະສາດທີ່ແນະນຳເປັນລາຍການຢູ່ໃນການຈັດປະເພດສະຖານທີ່.

***ກ່ອງຂໍ້ຄວາມ 7.*** *ກ່ອງຍຸດທະສາດ: ສະຖານທີ່*

- ສົ່ງເສີມການມີປະຕິສຳພັນຕໍ່ກັນແລະການຮ່ວມມືກັນຂອງນັກຮຽນດ້ວຍການເຮັດກິດຈະກຳການຮຽນຮູ້ແລະຫຼິ້ນຮ່ວມກັນ
- ຈັດໃຫ້ມີຕັ່ງນັ່ງເພື່ອໃຫ້ນັກຮຽນນັ່ງຈັບຄູ່ກັນ
- ໃຫ້ຄວາມສຳຄັນເລື່ອງການທັກທາຍກັນແລະຍິ້ມໃຫ້ກັນ
- ເອົາຝາອ້ອມຫ້ອງຮຽນອອກ
- ເອົາດິນຕີມາແທນກະແຫຼ່ງຂອງໂຮງຮຽນ
- ຈັດວາງສະແດງສິ່ງປະຈັກຕາທີ່ສ້າງສັນ, ມີສີສັນແລະມີຄວາມໝາຍ
- ສ້າງພື້ນທີ່ພັກຜ່ອນຢ່ອນໃຈແລະສ້າງສັນ
- ເຮັດສວນຢູ່ໂຮງຮຽນ
- ນຳໃຊ້ພື້ນທີ່ນອກຫ້ອງຮຽນສຳລັບການຮຽນຮູ້ແລະການຫຼິ້ນ
- ສົ່ງເສີມວິໄສທັດຂອງໂຮງຮຽນທີ່ໃຫ້ຄວາມສຳຄັນກ່ຽວກັບຄວາມສຸກ
- ເອົາກິດຈະກຳສ້າງສັນທີ່ສົ່ງເສີມການຄວບຄຸມອາລົມຄວາມຮູ້ສຶກແທນການລົງໂທດ
- ແນະນຳການສະແດງຄວາມປິ້ມປິຕິຍິນດີຢູ່ໃນຫ້ອງຢ່າງອິດທົນລໍຄອຍ
- ຮັບປະກັນໃຫ້ມີອາຫານທີ່ດີຕໍ່ສຸຂະພາບຢູ່ໃນຮ້ານຂາຍອາຫານໃນໂຮງຮຽນ
- ມີນັກໂພຊະນາການປະຈຳໂຮງຮຽນ
- ທຳຄວາມສະອາດໂຮງຮຽນຢູ່ໃນຊຸມຊົນ
- ປ່ອຍໃຫ້ນັກຮຽນທຳໜ້າທີ່ເປັນຜູ້ອຳນວຍການມື້ໜຶ່ງ

## ພາກສະຫຼຸບຂອງບົດນີ້

ໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກໄດ້ຮັບການພັດທະນາຂຶ້ນ ອີງໃສ່ຄວາມຄິດເຫັນແລະມິຕິຮ່ວມກັນຂອງຜູ້ທີ່ມີສ່ວນຮ່ວມໃນລະດັບໂຮງຮຽນ ຄື: ນັກຮຽນ, ຄູ, ຜູ້ອຳນວຍການໂຮງຮຽນ, ພະນັກງານຊ່ວຍວຽກຢູ່ໂຮງຮຽນ ແລະສະມາຊິກມະຫາຊົນທົ່ວໄປ. ດັ່ງນັ້ນ ໂຄງປະກອບອັນນີ້ຈຶ່ງຖືກເຮັດຂຶ້ນດ້ວຍວິທີແບບມີສ່ວນຮ່ວມ ໂດຍຄະນະວິໄຈໄດ້ວິເຄາະຄຳຕອບຕ່າງໆຂອງຜູ້ທີ່ມີສ່ວນຮ່ວມ ເພື່ອກຳນົດມາດຖານ 22 ຢ່າງຂຶ້ນມາ ຊຶ່ງຈັດແບ່ງເປັນສາມປະເພດໄດ້ແກ່: ຜູ້ຄົນ, ຂະບວນການແລະສະຖານທີ່.

ເຖິງວ່າຍຸດທະສາດທີ່ນຳສະເໜີຢູ່ໃນບົດນີ້ບໍ່ລະອຽດຄົບຖ້ວນ ແຕ່ກໍໃຫ້ຂໍ້ຄິດແລະຕົວຢ່າງກ່ຽວກັບວິທີ ຊຶ່ງມາດຖານແຕ່ລະອັນສາມາດເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກໄດ້.

ຍຸດທະສາດຢູ່ໃນການຈັດປະເພດຜູ້ຄົນ ຊີ້ໃຫ້ເຫັນຄວາມສຳຄັນຂອງການຊຸກຍູ້ການສ້າງຄວາມເປັນເພື່ອນມິດ ແລະຄວາມສຳພັນກັນລະຫວ່າງສະມາຊິກຢູ່ໃນຊຸມຊົນທີ່ມີໂຮງຮຽນ ໂດຍສະເພາະລະຫວ່າງຄູກັບນັກຮຽນ. ຍຸດທະສາດເຫຼົ່ານີ້ຍັງອາດພາບໃຫ້ເຫັນວ່າໂຮງຮຽນສາມາດຮັບປະກັນໃຫ້ຜູ້ຄົນທີ່ມີພູມຫຼັງ ແລະຄວາມຕ້ອງການແນວໃດກໍຕາມ ມີຄວາມຮູ້ສຶກວ່າຕົນເອງມີສ່ວນຮ່ວມນຳ ທັງຮັບປະກັນໃຫ້ມີຄວາມເຄົາລົບຄວາມຫຼາກຫຼາຍແລະຄວາມແຕກຕ່າງ. ຍຸດທະສາດທີ່ອະທິບາຍຢູ່ໃນການຈັດປະເພດຂະບວນການ ຊີ້ໃຫ້ເຫັນວ່າໂຮງຮຽນສາມາດນຳໃຊ້ວິທີການມ່ວນຊື່ນແລະມີສ່ວນຮ່ວມ ເພື່ອເຮັດໃຫ້ການຮຽນຮູ້ສະໜຸກສະໜານສຳລັບນັກຮຽນ ແລະຄູກໍເຊັ່ນດຽວກັນ ທັງບອກວ່າໂຮງຮຽນສາມາດສົ່ງເສີມຄວາມມີອິດສະຫຼະຂອງຜູ້ຮຽນແນວໃດ ແລະສົ່ງເສີມນັກຮຽນໃຫ້ສະແດງຄວາມຄິດເຫັນຂອງຕົນແລະເຮັດຄວາມຜິດໂດຍບໍ່ຕ້ອງຢ້ານກົວ. ຍຸດທະສາດເຫຼົ່ານີ້ຍັງຊີ້ໃຫ້ເຫັນວ່າ ໂຮງຮຽນສາມາດເຮັດໃຫ້ພາລະການຮຽນຂອງນັກຮຽນມີຄວາມສົມເຫດສົມຜົນຫຼາຍຂຶ້ນ ເປັນການປ້ອງກັນບໍ່ໃຫ້ນັກຮຽນມີຄວາມທຸກໃຈຫຼາຍເກີນໄປ. ນອກຈາກນີ້ ຍັງໃຫ້ຂໍ້ຄິດສຳລັບການເຮັດກິດຈະກຳນອກຫຼັກສູດ ຊຶ່ງຢູ່ໃນຈຳນວນປັດໄຈທີ່ຖືວ່າສຳຄັນທີ່ສຸດເພື່ອເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກຫຼາຍຂຶ້ນ.

ຍຸດທະສາດທີ່ອະທິບາຍຢູ່ໃນການຈັດປະເພດສະຖານທີ່ ສະແດງໃຫ້ເຫັນວ່າຈະສົ່ງເສີມຄວາມສຸກໄດ້ແນວໃດ ດ້ວຍການປັບປຸງພື້ນຖານໂຄງລ່າງ, ສະພາບເງື່ອນໄຂທາງດ້ານອາຄານສະຖານທີ່ ທັງເຮັດໃຫ້ສະພາບແວດລ້ອມເຫຼົ່ານີ້ອົບອຸ່ນ, ເປັນມິດແລະເອື້ອອຳນວຍແກ່ການຮຽນຮູ້.

ໂດຍລວມແລ້ວ ຍຸດທະສາດເຫຼົ່ານີ້ສະແດງໃຫ້ເຫັນວ່າ ຄວາມຄິດງ່າຍໆແລະການປ່ຽນແປງເລັກໆນ້ອຍໆສາມາດສ້າງຄວາມແຕກຕ່າງໃນທາງທີ່ດີຢ່າງໃຫຍ່ຫຼວງກ່ຽວກັບຄວາມຢູ່ດີມີສຸກແລະຜົນການຮຽນຂອງນັກຮຽນ. ມາດຖານ 22 ຢ່າງ ທີ່ຢູ່ໃນການຈັດແບ່ງສາມປະເພດແລະຍຸດທະສາດຕ່າງໆ ທີ່ນຳໃຊ້ເພື່ອບັນລຸມາດຖານເຫຼົ່ານັ້ນ ມີຄວາມເຊື່ອມໂຍງກັນແລະຊ່ວຍຍູ້ໜູນກັນແລະກັນ. ຕົວຢ່າງ: ຍຸດທະສາດເພື່ອປັບປຸງຄວາມສຳພັນກັນແລະການ

ເປັນເພື່ອນມິດຕໍ່ກັນ (ຜູ້ຄົນ) ສາມາດຊ່ວຍໃຫ້ເກີດສະພາບແວດລ້ອມໃນການຮຽນຮູ້ທີ່ອົບອຸ່ນແລະເປັນມິດຕໍ່ກັນ (ສະຖານທີ່) ສ່ວນຍຸດທະສາດທີ່ຊຸກຍູ້ທັດສະນະຄະຕິແລະຄຸນສົມບັດທາງບວກຂອງຄູ, ປັບປຸງທັກສະແລະຄວາມສາມາດຂອງຄູ (ຜູ້ຄົນ) ສາມາດເຮັດໃຫ້ມີວິທີການຮຽນການສອນ (ຂະບວນການ) ທີ່ມ່ວນຊື່ນແລະມີສ່ວນຮ່ວມໄດ້. ສະນັ້ນ ການຈັດແບ່ງສາມປະເພດນີ້ຈຶ່ງມີຄວາມສຳຄັນເທົ່າກັນໝົດ ໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ.




# 5

# ຄິດທົບທວນ, ບາດກ້າວຕໍ່ໄປແລະຂໍ້ສະຫຼຸບ

## ຄິດທົບທວນ

ດັ່ງທີ່ໄດ້ປຶກສາຫາລືກັນຢູ່ໃນບົດລາຍງານນີ້ **ຄວາມສຸກມັກໄດ້ຮັບການນິຍາມວ່າແມ່ນເປົ້າໝາຍຂອງຊີວິດຄົນເຮົາ**ຢູ່ໃນປຣັດຊະຍາຕ່າງໆ ຕັ້ງແຕ່ສະໄໝດຶກດຳບັນຈົນມາຮອດທຸກມື້ນີ້. ປັດຈຸບັນຄວາມສຸກສະທ້ອນໃຫ້ເຫັນຢູ່ໃນເປົ້າໝາຍການພັດທະນາທີ່ຍືນຍົງແລະການສຶກສາ ປີ 2030 (SDG4) ໂດຍໃຫ້ເປົ້າໝາຍການສຶກສາສະແດງໃຫ້ເຫັນຄວາມສຳຄັນດ້ານການພັດທະນາທັກສະແລະຄວາມສາມາດເສີມສ້າງຄວາມສຸກ. ເປັນສິ່ງຊັດເຈນແລ້ວວ່າ ກຳລັງມີຫຼາຍປະເທດເພີ່ມຂຶ້ນ ທີ່ຈັດລຳດັບຄວາມສຳຄັນຂອງຄວາມສຸກແລະຄວາມຢູ່ດີມີສຸກໃຫ້ເປັນສ່ວນໜຶ່ງຂອງກອບນະໂຍບາຍຂອງປະເທດຕົນ. ໂດຍສະເພາະ ມີການຍອມຮັບວ່າການສຶກສາແມ່ນບາງຢ່າງທີ່ສາມາດສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກ ຊຶ່ງມີສ່ວນເຮັດໃຫ້ມີການພັດທະນາທີ່ມີອົງປະກອບຄົບຖ້ວນຂອງຜູ້ຮຽນ ມີການບົ່ມເພາະຄວາມສາມາດທາງດ້ານສະຕິປັນຍາ, ຮ່າງກາຍ, ຈິດຕະສາດ, ຈາລິຍະທຳແລະໃຫ້ເຂົາເຈົ້າມີຄວາມຮູ້ສຶກຜູກພັນແລະມີຄວາມໝາຍ.

ຍ້ອນໃຫ້ຄວາມສຳຄັນໃນເລື່ອງຄວາມສຸກແລະຄວາມຢູ່ດີມີສຸກໃນປັດຈຸບັນ ບົດລາຍງານນີ້ຈຶ່ງຊີ້ໃຫ້ເຫັນຄວາມໝາຍເຊື່ອມໂຍງທີ່ສຳຄັນທາງດ້ານນະໂຍບາຍຫຼາຍຢ່າງ ຊຶ່ງນຳໄປສູ່ຄຳຖາມຕໍ່ນະໂຍບາຍແລະການປະຕິບັດດ້ານການສຶກສາທີ່ມີຢູ່. ໄດ້ມີການກວດເບິ່ງຄືນຫຼັກສູດທີ່ໜັກເກີນໄປ ຍ້ອນມີວິຊາຮຽນຫຼາຍໂພດ ໂດຍຮັບປະກັນໃຫ້ມີຄູແລະການສິດສອນແບບໃໝ່ ທີ່ສົ່ງເສີມທັດສະນະຄະຕິແລະຄຸນສົມບັດ ລວມທັງເນັ້ນໃສ່ອົງການຈັດຕັ້ງແລະສະໂມສອນຂອງໂຮງຮຽນອີກໃໝ່ ແຕ່ຈະຍົກເອົາສອງສາມຕົວຢ່າງ. ບົດລາຍງານຍັງຕັ້ງຄຳຖາມຕໍ່ການສ້າງແຮງຈູງໃຈຈາກການກຳນົດນະໂຍບາຍດ້ານການສຶກສາ ໂດຍສະເພາະກ່ຽວກັບລະບົບການປະເມີນ ແລະການເນັ້ນໃສ່ຕາຕະລາງຂອງສະຫະພັນລະຫວ່າງປະເທດທີ່ບໍ່ສົມສ່ວນ ດ້ວຍການໃຊ້ເກນວັດຄວາມສາມາດແລະຜົນການສອບເສັງ. ເຖິງວ່າຕາຕະລາງຂອງສະຫະພັນລະຫວ່າງປະເທດອາດຈະບໍ່ແມ່ນບັນຫາໃນຕົວມັນເອງ ແຕ່ກໍ່ມີອິດທິພົນຕໍ່ປະເທດຕ່າງໆ/ຜູ້ກຳນົດນະໂຍບາຍ ໂດຍບັງຄັບໃຫ້ເຂົາເຈົ້າເອົາມາດຕະຖານຕ່າງໆໄປໃຊ້ກັບລະບົບໂຮງຮຽນ ເພື່ອປຽບທຽບແລະເອົາເປັນເກນວັດຜົນຄວາມສາມາດຂອງຕົນກັບຄົນອື່ນໆ (Robinson and Lou, 2015).

ຢູ່ໃນບໍລິບົດເຊັ່ນນີ້ ບົດລາຍງານນີ້ຈຶ່ງຮຽກຮ້ອງໃຫ້ມີ**ການຫັນປ່ຽນຢ່າງເຖິງຮາກເຫງົ້າ**

**ຢູ່ໃນການສຶກສາເພື່ອໃຫ້ໂອກາດແກ່ຜູ້ຮຽນໄດ້ໃຊ້ພອນສະຫວັນແລະຈຸດແຂງຂອງຕົນໄດ້ຢ່າງເຕັມປ່ຽມ.** ບັນຍາກາດທີ່ເອື້ອອຳນວຍຢູ່ໃນໂຮງຮຽນໄດ້ໃຫ້ໂອກາດຫຼາຍຂຶ້ນເພື່ອຄິດທົບທວນ ຊຶ່ງກົງກັນຂ້າມກັບການຕັດສິນໃຈດ້ວຍເຫດຜົນທີ່ຟ້າວຟັ່ງແລະບໍ່ມີປະສິດທິພາບ ສາມາດມີຄວາມເປັນໄປໄດ້ທີ່ຈະໄດ້ຮັບຜົນເທົ່າທຽມກັນ ເຖິງຈະບໍ່ປະສົບຜົນໃນລະດັບສູງກໍຕາມ ແຕ່ກໍເກືອບວ່າຈະເຮັດໃຫ້ນັກຮຽນແລະຄູມີຄວາມສຸກຫຼາຍຂຶ້ນຢ່າງແນ່ນອນ.

ອີງໃສ່ຫຼາຍມິຕິທີ່ມີການຄົ້ນຄວ້າກັນຢູ່ໃນບົດລາຍງານນີ້ ພວກເຮົາສາມາດສະຫຼຸບໄດ້ວ່າ ຜູ້ຕອບຄຳຖາມລ້ວນແຕ່ຍອມຮັບວ່າ **ຄວາມສຸກແມ່ນບາງຢ່າງທີ່ມີຮ່ວມກັນແລະເຊື່ອມໂຍງຢ່າງໜຽວແໜ້ນກັບການສຶກສາ.** ຄວາມຈິງແລ້ວ ການສຶກສາອາດບໍ່ເປັນພຽງແຕ່ເປັນຊ່ອງທາງສະແຫວງຫາຄວາມສຸກເທົ່ານັ້ນ ແຕ່ກໍຍັງສາມາດນຳເອົາຄວາມສຸກເຂົ້າມາແລະເຮັດໃຫ້ເກີດຄວາມສຸກດ້ວຍຕົວມັນເອງ ໂດຍຊຸກຍູ້ໃຫ້ເກີດຄວາມຮັກໃນການຮຽນຮູ້ຢ່າງແທ້ຈິງ. ເມື່ອສະທ້ອນໃຫ້ເຫັນຈຸດແຂງ ແລະຄວາມສາມາດທີ່ຜູ້ຮຽນຈຳເປັນຕ້ອງມີ ເພື່ອປະສົບຄວາມສຳເລັດຢູ່ໃນຊີວິດແລະການງານໃນອະນາຄົດ ຍັງມີຫຼາຍຢ່າງທີ່ຖືວ່າແມ່ນເພື່ອສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກ ຕົວຢ່າງສິ່ງທີ່ຜູກພັນກັບການເປັນເພື່ອນມິດກັນແລະຄວາມສຳພັນກັບຄົນອື່ນ ເຊັ່ນ: ການສື່ສານກັນ, ການເຮັດວຽກເປັນໝູ່ຄະນະແລະຄວາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ.

ດັ່ງນັ້ນ **ມະນຸດໝົດທຸກຄົນສາມາດຮຽນຮູ້ທີ່ຈະມີຄວາມສຸກໄດ້ ແລະຍັງສາມາດມີຄວາມສຸກທີ່ຈະຮຽນຮູ້ນຳອີກ.** ອັນນີ້ໄດ້ມີການຍອມຮັບກັນຢູ່ໃນທິດສະດີແລະແນວຄິດຕ່າງໆທີ່ໄດ້ຄົ້ນຄວ້າກັນຢູ່ບົດລາຍງານນີ້ ແລະສະທ້ອນອອກມາດ້ວຍຜົນຮັບຈາກວິທີການວິໄຈເບື້ອງຕົ້ນທີ່ການສຶກສາຄົ້ນຄວ້າໄດ້ດຳເນີນມາ. ດັ່ງທີ່ ຫງຽນ ຫງອກ ວັນ ທາວ ນັກຮຽນໄວ 14 ປີ ຈາກໂຮງຮຽນມັດທະຍົມທົດລອງຂອງສະຖາບັນວິທະຍາສາດການສຶກສາ (ຫວຽດນາມ) ການຮຽນຮູ້ຄວນແມ່ນສິ່ງຈຳເປັນບາງຢ່າງທີ່ສະໜຸກສະໜານ ຊຶ່ງໃຫ້ຜູ້ຮຽນມີແຮງຈູງໃຈຕົນເອງເພື່ອບຶກບືນສູ່ຄວາມເປັນເລີດ ແທນທີ່ຈະແມ່ນບາງຢ່າງທີ່ໃຊ້ການບັງຄັບ: ຂ້ອຍຄິດວ່າພວກເຮົາບໍ່ຄວນເຮັດໃຫ້ນັກຮຽນມີຄວາມຮູ້ສຶກວ່າ ການຮ່ຳຮຽນແມ່ນພາລະແບກຮັບ. 'ໜ້າທີ່ຂອງຄູບໍ່ພຽງແຕ່ໃຫ້ວຽກບ້ານເພື່ອບັງຄັບນັກຮຽນເຮັດວຽກໜັກ ເຂົາເຈົ້າຄວນເຮັດໃຫ້ນັກຮຽນຮັກໃນການຮຽນຮູ້ ເພື່ອໃຫ້ເຂົາເຈົ້າສາມາດເຮັດວຽກໄດ້ຫຼາຍໂດຍທຳມະຊາດ!' ອັນນີ້ສະແດງໃຫ້ເຫັນວ່າ ຄວາມສຸກຂອງຜູ້ຮຽນບໍ່ໄດ້ໝາຍຄວາມວ່າຄວາມພະຍາຍາມ ຫຼື

ວຽກໜັກມີລະດັບຕ່ຳລົງ ແຕ່ຫາກມີຄວາມຜູກພັນກັບຄວາມພະຍາຍາມແລະການບັນລຸເປົ້າໝາຍດ້ວຍຈຸດແຂງດ້ານບຸກຄະລິກ ເຊັ່ນ: ຄວາມອຸດສາຫະ, ຄວາມປິຕິຍິນດີແລະຄວາມຮັກໃນການຮຽນຮູ້.

ຄວາມຈຳເປັນເພື່ອການກະຕຸ້ນ ເຊັ່ນ: ຄວາມຮັກໃນການຮຽນຮູ້ໄດ້ຮັບການສະໜັບສະໜູນຈາກສິ່ງຢືນຢັນວ່າ **ການໃຫ້ຄວາມສຳຄັນກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກ ສາມາດເຮັດໃຫ້ຄວາມສຳເລັດທາງດ້ານວິຊາການສູງຂຶ້ນ.** ຄວາມຈິງແລ້ວ ການສຶກສາທາງບວກຍອມຮັບທັງຄວາມເປັນເລີດປະສົມປະສານກັບບຸກຄະລິກແລະຄວາມຢູ່ດີມີສຸກ ມີຄວາມສຳຄັນເທົ່າທຽມກັນສຳລັບຜູ້ຮຽນ. ດັ່ງທີ່ຄົ້ນພົບຢູ່ໃນກໍລະນີສຶກສາຂອງສິງກະໂປ ການປະຕິຮູບຫຼາຍຢ່າງທີ່ພວມດຳເນີນຢູ່ສະແດງໃຫ້ເຫັນການຫັນປ່ຽນທິດທາງນີ້ ແນໃສ່ຫຼຸດຜ່ອນການເນັ້ນໃສ່ຂໍ້ສອບຕາມມາດຕະຖານ ແລ້ວສະແຫວງຫາຄວາມເປັນເລີດດ້ວຍ 'ການສຶກສາທີ່ມີອົງປະກອບຄົບຖ້ວນ' ຊຶ່ງປູກຝັງ 'ຄວາມຮັກໃນການຮຽນຮູ້' ຢູ່ໃນຕົວນັກຮຽນ (MoE [Singapore] 2016b). ຢູ່ໃນລະດັບຊາດຮອງລົງມາ ຕົວຢ່າງການສຶກສາຂອງ ອາກິຕະ ແລະ ຟູກຸອິ (Akita and Fukui) ສອງເຫດສະບານຂອງຍີ່ປຸ່ນ ທີ່ມີຜົນການສຶກສາສູງທີ່ສຸດໃນການປະເມີນລະດັບຊາດ ໄດ້ສະແດງໃຫ້ເຫັນເຖິງການເຮັດໃຫ້ເກີດຄວາມສຸກແລະຄວາມຢູ່ດີມີສຸກດ້ວຍການເນັ້ນໃສ່ນະໂຍບາຍແລະແຜນການຕ່າງໆ ແທນທີ່ຈະເນັ້ນໃສ່ຜົນສຳເລັດທາງດ້ານວິຊາການທີ່ເກີດຈາກຜົນການຮຽນຮູ້ທີ່ເປັນເລີດ. ວິທີນີ້ປະກົດວ່າໄດ້ຮັບຜົນດີຫຼາຍຢ່າງ ໂດຍສິ່ງຢືນຢັນດ້ານວິຊາການອື່ນໆພິສູດໃຫ້ເຫັນວ່າ ຄວາມຢູ່ດີມີສຸກສາມາດເປັນຕົວກະຕຸ້ນຄວາມສຳເລັດຫຼາຍຂຶ້ນແລະການບັນລຸຜົນຂອງຜູ້ຮຽນ ກໍມີຫຼາຍກວ່າຂໍ້ສອບແລະການສອບເສັງ (Duckworth and Seligman, 2005).

ເມື່ອຄິດທົບທວນກ່ຽວກັບແນວໂນ້ມແລະການປ່ຽນແປງລະດັບໂລກຢູ່ໃນໂລກເຮົາຊຶ່ງການແຂ່ງຂັນກຳລັງເພີ່ມທະວີ ໂດຍ**ການເນັ້ນໃສ່ 'ຕົວເລກ' ພຽງຢ່າງດຽວ ຊຶ່ງຄົນທົ່ວໄປນິຍົມກັນວ່າເປັນຕົວຊີ້ວັດທີ່ສຳຄັນ ມັນກຳລັງທຳລາຍຄວາມສຸກແລະຄວາມຢູ່ດີມີສຸກ** ບໍ່ວ່າຈະແມ່ນດ້ານການເອົາຄະແນນສອບເສັງພຽງຢ່າງດຽວເປັນຕົວຊີ້ວັດການຮຽນຮູ້ຂອງນັກຮຽນ ຫຼືດ້ານການນຳໃຊ້ຕົວບົ່ງຊີ້ດ້ານເສດຖະກິດພຽງຢ່າງດຽວ ເພື່ອວັດການພັດທະນາການຂອງຄົນ. ສາມາດເວົ້າໄດ້ວ່າ ການເນັ້ນໃສ່ 'ຕົວເລກ' ພຽງຢ່າງດຽວແບບນີ້ ຄວາມຈິງແລ້ວສາມາດທຳລາຍຄວາມຢູ່ດີມີສຸກຂອງຜູ້ຮຽນ. ກໍລະນີສຶກສາເປັນແຕ່ລະປະເທດທີ່ມີການສຶກສາ

ກັນຢູ່ໃນບົດທີສາມສະແດງໃຫ້ເຫັນວ່າ ບັນຫາຕ່າງໆເຊັ່ນ: ຄວາມທຸກໃຈ, ຄວາມສະເທືອນໃຈແລະຄວາມຮູ້ສຶກວ່າຕົນເອງບໍ່ແມ່ນສ່ວນໜຶ່ງຂອງສັງຄົມ ແລະຂອງໂລກໃນວົງກວ້າງຂອງນັກຮຽນ ໂດຍກໍລະນີຮ້າຍແຮງທີ່ສຸດຄືນຳໄປສູ່ການຂ້າຕົວຕາຍຂອງນັກຮຽນ ຊຶ່ງກຳລັງຂະຫຍາຍຕົວ ແລະປະກົດວ່າມີຄວາມກ່ຽວຂ້ອງກັບຄວາມກົດດັນທາງດ້ານຈິດໃຈ ທີ່ຢາກໃຫ້ຜົນການຮຽນທາງດ້ານວິຊາການອອກມາດີແລະໄດ້ຄະແນນສູງ. ນອກຈາກນັ້ນ ຖ້າຫາກພວກເຮົາເນັ້ນໃສ່ເສດຖະກິດລ້ວນໆ ຕາມແນວທາງ 'ການເອົາລັດເອົາປຽບດ້ານການແຂ່ງຂັນ' ຂອງຄົນເຮົາໃນອະນາຄົດແລ້ວ ຍິ່ງຕ້ອງເພິ່ງພາຄຸນນະທຳ, ຄຸນຄ່າ, ຈຸດແຂງແລະຄວາມສາມາດ ຊຶ່ງຖືວ່າແມ່ນທິດສະດີຂອງຄວາມສຸກທີ່ເຄື່ອງຍົນກົນໄກແລະເຕັກໂນໂລຊີບໍ່ສາມາດຈະມາແທນທີ່ໄດ້ ດັ່ງທີ່ ເຊີ ເຄັນ ໂຣບິນເຊີນ (Sir Ken Robinson) ຊີ້ໃຫ້ເຫັນແລະຮຽກຮ້ອງໃຫ້ມີຄວາມສ້າງສັນ (Robinson, 2005) ດັ່ງນັ້ນ ລະບົບການສຶກສາຈຳເປັນຕ້ອງໃຫ້ຄວາມສຳຄັນກ່ຽວກັບເລື່ອງນີ້.

ດັ່ງທີ່ບົດລາຍງານນີ້ຊີ້ໃຫ້ເຫັນວ່າ **ເພື່ອເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ ຈຳເປັນຕ້ອງມີການຊ່ວຍເຫຼືອໃນແຕ່ລະລະດັບມີ:** ລະດັບນະໂຍບາຍແລະລະດັບໂຮງຮຽນ. ການເຂົ້າຊ່ວຍເຫຼືອຕ່າງໆໃນແຕ່ລະລະດັບມີຄວາມກ່ຽວພັນກັນຫຼາຍດ້ານ. ຕົວຢ່າງ: ໂຮງຮຽນບ່ອນໜຶ່ງອາດຊອກຫາທາງ ເພື່ອປະຕິບັດຍຸດທະສາດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ແຕ່ມີຂໍ້ຈຳກັດທີ່ຈະເຮັດແນວນັ້ນໄດ້ ຍ້ອນນະໂຍບາຍການສຶກສາລະດັບຊາດ, ລະບຽບຫຼັກການ, ຫຼັກສູດແລະການປະຕິບັດດ້ານການປະເມີນ. ໃນຂະນະດຽວກັນ ອາດມີນະໂຍບາຍລະດັບຊາດ ແລະຫຼັກສູດທີ່ສະທ້ອນປຣັດຊະຍາທີ່ມີແນວຄິດກ່ຽວກັບໂຮງຮຽນໃຫ້ຄວາມສຸກຢ່າງໜັກແໜ້ນ ແຕ່ເຂົາເຈົ້າອາດຈະບໍ່ໄດ້ປະຕິບັດຢູ່ໃນລະດັບໂຮງຮຽນກໍເປັນໄດ້. ເມື່ອເປັນເຊັ່ນນັ້ນ ການປະຕິຮູບໃນລະດັບຊາດຈຳເປັນຕ້ອງສອດຄ່ອງກັບການປະຕິຮູບໃນລະດັບໂຮງຮຽນ ຊຶ່ງທັງສອງລະດັບມີຄວາມສຳຄັນເທົ່າທຽມກັນ.

ຢູ່ໃນລະດັບນະໂຍບາຍ ບັນຫານີ້ໄດ້ເຮັດໃຫ້ລັດຖະບານຕ່າງໆຍົກເອົາຫຼາຍຢ່າງຂຶ້ນມາພິຈາລະນາ ຕົ້ນຕໍກໍແມ່ນການໃຫ້ຄວາມສຳຄັນກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນຢູ່ໃນນະໂຍບາຍການສຶກສາລະດັບຊາດ ເພື່ອກວດຄືນການວັດຜົນແລະລະບົບການປະເມີນວ່າ ຈະໃຊ້ເວລາຫຼາຍປານໃດໃນການເຮັດກິດຈະກຳຢູ່ໂຮງຮຽນ ຊຶ່ງບໍ່ຖືວ່າແມ່ນຄວາມສຳເລັດດ້ານວິຊາການຂອງຜູ້ຮຽນ ປະກອບດ້ວຍບຸກຄະລິກ, ຄວາມເປັນລັກສະ

ນະສ່ວນຕົວ, ທັກສະແລະຄວາມສາມາດທີ່ກ່ຽວຂ້ອງກັບຊີວິດໃນຂັ້ນຕອນຮັບເອົານັກຮຽນ. ປະເທດຕ່າງໆມີກໍລະນີສຶກສາທີ່ໂດດເດັ່ນໃນການໃຫ້ຄວາມສຳຄັນກັບຄວາມສຸກແລະຄວາມຢູ່ດີມີສຸກ ໂດຍຖືວ່າເປັນສ່ວນໜຶ່ງຂອງນະໂຍບາຍດ້ານການພັດທະນາແລະການສຶກສາຂອງຕົນ. ດັ່ງທີ່ໄດ້ຄົ້ນຄວ້າກັນຢູ່ບົດທີສາມ ມີຕົວຢ່າງຈາກຫ້າປະເທດ ຄື: ພູຖານ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ສິງກະໂປແລະອານູອາຕູ ຊຶ່ງແຕ່ລະປະເທດມີວິທີວັດວັດທະນະທຳ, ລະດັບການພັດທະນາທີ່ແຕກຕ່າງກັນ ແມ່ນແຕ່ຄວາມຄິດກ່ຽວກັບຄວາມສຸກກໍຕ່າງກັນ ສະແດງໃຫ້ເຫັນວ່າ ສິ່ງນີ້ມີຄວາມເປັນໄປໄດ້. ເຖິງວ່າບາງປະເທດ ເຊັ່ນ: ພູຖານແລະອານູອາຕູໄດ້ສະທ້ອນຄວາມຄິດກ່ຽວກັບຄວາມສຸກ, ຄວາມຢູ່ດີມີສຸກອີງຕາມປະເພນີ ແລະວັດທະນະທຳຂອງຕົນກໍຕາມ ປະເທດອື່ນ ເຊັ່ນ: ຍີ່ປຸ່ນແລະສາທາລະນະລັດເກົາຫຼີກໍໄດ້ໃຊ້ມາດຕະການດຽວກັນນີ້ ເພື່ອຮັບມືໂດຍກົງກັບລະດັບຄວາມເຂົ້າໃຈກ່ຽວກັບການບໍ່ມີຄວາມສຸກ. ດັ່ງທີ່ສະແດງໃຫ້ເຫັນຢູ່ໃນກໍລະນີສຶກສາເຫຼົ່ານີ້ເປັນແຕ່ລະປະເທດ ຄວາມສຸກໄດ້ສະທ້ອນໃຫ້ເຫັນຢູ່ໃນນະໂຍບາຍລະດັບຊາດດ້ວຍຫຼາຍວິທີ ບໍ່ວ່າຈະເປັນທາງວິໄສທັດລະດັບຊາດ, ປຣັດຊະຍາ, ຫຼັກສູດ, ນະໂຍບາຍ, ການຝຶກຫັດຫຼືທິດຊີ້ນຳກ່ຽວກັບຄູ ລວມທັງການປະຕິບັດທີ່ມີການແນະນຳສຳລັບໂຮງຮຽນນຳອີກ.

ກ່ຽວກັບການສິດສອນ ບົດລາຍງານຊີ້ໃຫ້ເຫັນ**ຄວາມຈຳເປັນຕ້ອງມີ 'ຄູດີ' ຊຶ່ງເປັນຄົນຮຸ່ນໃໝ່** ເປັນຜູ້ທີ່ມີທັງຄວາມຮູ້ຄວາມສາມາດແລະໄດ້ຮັບການສະໜັບສະໜູນໃຫ້ນຳໃຊ້ຍຸດທະສາດການຮຽນການສອນທີ່ຄິດຄົ້ນຂຶ້ນໃໝ່. ການຮຽນຮູ້ແບບສອງຈຸດປະສົງໄດ້ມີການສະເໜີຕົວຢ່າງວ່າ ຄຸນຄ່າແລະຄວາມສາມາດທີ່ສຳຄັນສາມາດນຳມາສອນຢູ່ໃນແຕ່ລະວິຊາແລະຫຼາຍວິຊາປະສົມປະສານກັນ ໃນຂະນະດຽວກັນກໍເຮັດໃຫ້ເນື້ອໃນການຮຽນຮູ້ກ່ຽວຂ້ອງກັບຊີວິດປະຈຳວັນຂອງຜູ້ຮຽນມີຫຼາຍຂຶ້ນ. ບົດລາຍງານນີ້ຍັງຊີ້ໃຫ້ເຫັນເຖິງຄວາມສຳຄັນດ້ານທັດສະນະຄະຕິແລະຄຸນສົມບັດຂອງຄູ ຊຶ່ງຄວນຖືວ່າມີຄວາມເທົ່າທຽມກັບປັດໄຈອື່ນໆ ເຖິງຈະບໍ່ໃຫ້ຄວາມສຳຄັນຫຼາຍກວ່າກໍຕາມ ໂດຍສະເພາະກ່ຽວຂ້ອງກັບມາດຖານໃນການຮັບເອົາຄູເຂົ້າມາເຮັດວຽກ ແລະການປະເມີນຜົນຄູ. ດັ່ງທີ່ມີການສຶກສາຄົ້ນຄວ້າຢູ່ໃນວິທີການຂອງ ແປສຕາໂລຊີ (Pestalozzi) ກ່ຽວກັບການສຶກສາ (ກ່ອງຂໍ້ຄວາມ 1) ຄວາມສຳພັນອັນດີລະຫວ່າງນັກຮຽນ, ຄູແລະຂອບເຂດອຳນາດຂອງຄູອີງໃສ່ຄວາມຮັກແພງ ກົງກັນຂ້າມກັບຄວາມຢ້ານກົວນັ້ນແມ່ນແງ່ມຸມທີ່ກ່ຽວຂ້ອງ ຊຶ່ງສະທ້ອນຢູ່ໃນຜົນທີ່ໄດ້ຮັບຈາກການສຳຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກ. ໂດຍສະເພາະ ຜົນກະທົບຈາກທັດສະນະຄະຕິ

ແລະຄຸນສົມບັດຂອງຄູທີ່ມີຕໍ່ຄວາມສຸກຂອງຜູ້ຮຽນ ຊຶ່ງສະແດງໃຫ້ເຫັນຢູ່ໃນຜົນການສຳຫຼວດ ໂດຍຜູ້ຕອບຄຳຖາມເອີ່ຍເຖິງຄຸນສົມບັດດ້ານບວກ ເຊັ່ນ: ຄູທີ່ເອົາໃຈໃສ່, ເຂົ້າໃຈແລະເຫັນອົກເຫັນໃຈນັກຮຽນ ແລະຄຸນສົມບັດດ້ານລົບ ເຊັ່ນ: ຄູມີຄວາມເຂັ້ມງວດ, ຫົວບູຮານ ແລະບໍ່ເອົາໃຈໃສ່ນັກຮຽນ. ເຖິງວ່າຄູອາດຢ້ານສູນເສຍຂອບເຂດອຳນາດ ຫຼືນັກຮຽນຂອງຕົນຂາດລະບຽບວິໄນ ສິ່ງທີ່ຄົ້ນພົບຈາກການວິໄຈຊີ້ໃຫ້ເຫັນວ່າ ເມື່ອຄູໃຫ້ລາງວັນແກ່ນັກຮຽນດ້ວຍຄວາມຮູ້ສຶກໄວ້ເນື້ອເຊື່ອໃຈແລະຄວາມຮັບຜິດຊອບຕໍ່ການກະທຳຂອງຕົນ ດັ່ງທີ່ໄດ້ບອກໄວ້ຢູ່ໃນຕົວຢ່າງກ່ຽວກັບຄວາມຮູ້ຈັກຄວບຄຸມຕົນເອງແລ້ວ ສາມາດເຮັດໃຫ້ເກີດບັນຍາກາດທີ່ສົມດຸນແລະປະສົມກົມກືນໄດ້ຫຼາຍຂຶ້ນ.

ໃນສ່ວນທີ່ກ່ຽວກັບການປະເມີນ**ຄຸນຄ່າ, ຈຸດແຂງແລະຄວາມສາມາດທີ່ພັດທະນາໄດ້ແລະບົ່ມເພາະຄວາມສຸກຂອງນັກຮຽນຈຳເປັນຕ້ອງມີການຍອມຮັບກັນ, ມີການປະເມີນຜົນ** ແລະມີນ້ຳໜັກເທົ່າທຽມກັບທັກສະດ້ານວິຊາການຫຼາຍຂຶ້ນ ຊຶ່ງມີການປະເມີນກັນດ້ວຍການສອບເສັງທີ່ມີການແຂ່ງຂັນສູງ. ຍ້ອນມີການລາຍງານວ່າ ປັດໄຈທີ່ເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ໃຫ້ຄວາມສຸກຫຼາຍທີ່ສຸດເປັນອັນດັບສອງນັ້ນ ແມ່ນຄວາມທຸກໃຈທີ່ພົວພັນກັບພາລະການຮຽນຂອງນັກຮຽນເວລາກຽມສອບເສັງ ສະນັ້ນ ລະບົບການສຶກສາຈຳເປັນຕ້ອງໃຫ້ຄວາມສຳຄັນຕໍ່ການປະເມີນທັກສະແລະຄວາມສາມາດທີ່ບໍ່ແມ່ນດ້ານວິຊາການ ຊຶ່ງໃນທີ່ສຸດແລ້ວມີຄວາມສຳຄັນທີ່ສຸດ. ອັນນີ້ສະແດງໃຫ້ເຫັນຄວາມຈຳເປັນຕ້ອງ 'ວັດສິ່ງທີ່ພວກເຮົາເຫັນວ່າມີຄຸນຄ່າ' ໝາຍຄວາມວ່າ ຄວາມສຸກແລະຄວາມຢູ່ດີມີສຸກຂອງຜູ້ຮຽນຄວນສະທ້ອນອອກມາໃຫ້ເຫັນວ່າແມ່ນສ່ວນໜຶ່ງຂອງຜົນການຮຽນຮູ້ຢູ່ໃນລະບົບການສຶກສາ.

ບົດລາຍງານນີ້ໄດ້ໃຫ້ຕົວຢ່າງກ່ຽວກັບການປະເມີນທີ່ຕ່າງໄປຈາກແບບເດີມ ຊຶ່ງຍອມຮັບກັນຢ່າງເປັນທາງການ ແລະວັດຄວາມສາມາດຂອງນັກຮຽນແນວນັ້ນ ໂຮງຮຽນນາໆຊາດໃໝ່ (ປະເທດໄທ) ໄດ້ມອບໃບປະກາດສະນິຍະບັດກ່ຽວກັບພົນລະເມືອງໂລກໃຫ້ນັກຮຽນ ສ່ວນໂຮງຮຽນ ພິມາກັຕເຊລ (ພູຖານ) ໄດ້ອອກໃບຢັ້ງຢືນກ່ຽວກັບບຸກຄະລິກນັກຮຽນ. ຕົວຢ່າງນະໂຍບາຍໄຕມາດທີ່ 'ບໍ່ມີການສອບເສັງ' ຢູ່ສາທາລະນະລັດເກົາຫຼີ ສະແດງໃຫ້ເຫັນລະດັບຄວາມທຸກໃຈຂອງນັກຮຽນຍ້ອນຄວາມກົດດັນຈາກການສອບເສັງ ຊຶ່ງກາຍມາເປັນເລື່ອງວິຕົກກັງວົນກັນໃນລະດັບຊາດ. ເຖິງວ່າການເຮັດແບບນີ້ອາດຈະເປັນການຍົກເລີກການສອບເສັງພຽງຊົ່ວຄາວກໍຕາມ ແຕ່ກໍມີຈຸດມຸ່ງໝາຍເພື່ອໃຫ້ຜູ້ຮຽນໄດ້ມີເວລາຄິດໄຕ່ຕອງ

ກ່ຽວກັບພອນສະຫວັນແລະຈຸດແຂງຂອງຕົນ ເພື່ອກຳນົດຄວາມໄຝ່ຝັນໃນອະນາຄົດຂອງເຂົາເຈົ້າ (Ministry of Education [Republic of Korea], 2013b). ການຫຼຸດຜ່ອນການສອບເສັງອາດຈະບໍ່ຈຳເປັນຕ້ອງເຮັດຫຼືເປັນທີ່ຕ້ອງການຢູ່ໃນທຸກບໍລິບົດ ແນວໃດກໍດີ ປະເທດຕ່າງໆສາມາດພິຈາລະນາການປັບປຸງເນື້ອໃນແລະຮູບແບບການປະເມີນຜົນ ເພື່ອຊ່ວຍສະທ້ອນໃຫ້ເຫັນຄວາມສາມາດຂອງຜູ້ຮຽນໄດ້ດີຂຶ້ນ ຊຶ່ງເປັນການບົ່ມສອນຄວາມສຸກວ່າເປັນບາງຢ່າງທີ່ສາມາດວັດໄດ້ ຄຽງຄູ່ໄປກັບຄວາມສາມາດທາງດ້ານວິຊາການ.

## ບາດກ້າວຕໍ່ໄປ

ຄວາມໝາຍທາງດ້ານນະໂຍບາຍຂອງສິ່ງທີ່ຄົ້ນພົບຈາກການວິໄຈແນະນຳ**ຄວາມຈຳເປັນທີ່ສຳຄັນ ເພື່ອໃຫ້ມີການເຈລະຈາກັນ**ກ່ຽວກັບນະໂຍບາຍ ຊຶ່ງຈະເຮັດໃຫ້ສິ່ງທີ່ຄົ້ນພົບເສີມຂະຫຍາຍອອກອີກ ແລະສາມາດປ່ຽນໄປເປັນຂໍ້ສະຫຼຸບແລະຄຳສະເໜີແນະທີ່ກະທັດຮັດໄດ້ໃນລະດັບນະໂຍບາຍ. ຄວາມຈິງແລ້ວ ກໍລະນີສຶກສາຕ່າງໆເປັນແຕ່ລະປະເທດທີ່ມີການສຶກສາກັນຢູ່ໃນບົດທີສາມ ສະແດງໃຫ້ເຫັນວ່າບາງປະເທດໄດ້ມີການສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຢູ່ໃນນະໂຍບາຍດ້ານການພັດທະນາແລະການສຶກສາຂອງຕົນແລ້ວ. ໃນຂະນະດຽວກັນ ມາດຖານສຳລັບໂຮງຮຽນໃຫ້ຄວາມສຸກ ຊຶ່ງອີງຕາມມິຕິຂອງຜູ້ທີ່ມີສ່ວນຮ່ວມຕ່າງໆໃນລະດັບໂຮງຮຽນນັ້ນ ໄດ້ໃຫ້ແຫຼ່ງຂໍ້ມູນທີ່ສຳຄັນກ່ຽວກັບການສະແດງຄວາມຄິດເຫັນຕາມແນວທາງການເອົາວິທີການແບບມີສ່ວນຮ່ວມ ສອດແຊກເຂົ້າໃນການກຳນົດນະໂຍບາຍແລະຂໍ້ສະເໜີຕ່າງໆ. ສິ່ງເຫຼົ່ານີ້ສາມາດເສີມຂະຫຍາຍຕໍ່ໄດ້ອີກຕື່ມ ດ້ວຍການຈັດສຳມະນາກ່ຽວກັບນະໂຍບາຍເພື່ອສຶກສາເບິ່ງວ່າ ປະເທດຕ່າງໆສາມາດນຳເອົາໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກໄປນຳໃຊ້ເຂົ້າໃນບໍລິບົດນະໂຍບາຍຂອງເຂົາເຈົ້າແນວໃດ ລວມທັງການຄິດຫານະໂຍບາຍໂດຍສັງເຂບ ເພື່ອກຳນົດຂໍ້ສະເໜີເຫຼົ່ານີ້ເປັນລຳດັບກັນລົງມາ.

ຍຸດທະສາດຕ່າງໆທີ່ສະເໜີຢູ່ໃນບົດລາຍງານນີ້ຍັງບໍ່ລະອຽດຖີ່ຖ້ວນເທື່ອ ພຽງແຕ່ໃຫ້ບາງຕົວຢ່າງກ່ຽວກັບການລົງມືປະຕິບັດ ທີ່ໄດ້ຈາກການຄົ້ນພົບຂອງການວິໄຈ ແລະສາມາດນຳໄປປະຕິບັດໄດ້ໃນລະດັບໂຮງຮຽນ. ເພື່ອເປັນຈຸດເລີ່ມຕົ້ນ **ສາມາດສ້າງສາງຍຸດທະສາດຫຼື 'ຄັງຍຸດທະສາດ' ຂຶ້ນມາ** ຊຶ່ງບຸກຄົນ, ໂຮງຮຽນ, ຜູ້ຊ່ຽວຊານຫຼືສະມາຊິກມະຫາຊົນທົ່ວໄປໄດ້ຮັບເຊີນໃຫ້ສະເໜີ 'ຍຸດທະສາດ' ທາງພາກປະຕິບັດທີ່ເຊື່ອມໂຍງກັບມາດຖານອັນໜຶ່ງ

ຫຼືຫຼາຍກວ່ານັ້ນ ສຳລັບໂຮງຮຽນໃຫ້ຄວາມສຸກ ເພື່ອນຳໄປພິຈາລະນາ. 'ຄັງຍຸດທະສາດ' ແບບນີ້ອາດເຮັດໃນຮູບແບບຂອງຖານຂໍ້ມູນທາງອອນລາຍນ໌ ເພື່ອໃຫ້ໂຮງຮຽນຕ່າງໆສາມາດເຂົ້າໄປອ່ານເບິ່ງໄດ້.

ນອກຈາກນີ້ **ການເນັ້ນໃສ່ 'ຕົວເລກ' ຫຼາຍເກີນໄປ ສະແດງໃຫ້ເຫັນຄວາມຈຳເປັນຕ້ອງມີການເຄື່ອນໄຫວເພື່ອຍູ້ດັນບັນຫານີ້ ຊຶ່ງສາມາດປ່ຽນແປງທັດສະນະຄະຕິ**ກ່ຽວກັບຄວາມໝາຍຂອງການສຶກສາທີ່ມີ 'ຄຸນນະພາບດີ'. ອັນນີ້ຈະຊ່ວຍໃຫ້ມີການຮັບຮູ້ໃນລັກສະນະສົ່ງເສີມຄວາມສຳຄັນຕໍ່ຄວາມສຸກແລະຄວາມຢູ່ດີມີສຸກພາຍໃນໂຮງຮຽນ ຢູ່ໃນໂລກທີ່ຂັບເຄື່ອນດ້ວຍສະຖິຕິ, ຂໍ້ສອບເສັງແລະການແຂ່ງຂັນ ໂດຍສະເພາະການເຄື່ອນໄຫວທີ່ໃຊ້ຮູບແບບທີ່ຄິດຄົ້ນຂຶ້ນໃໝ່ກ່ຽວກັບການຍູ້ດັນໃຫ້ມີການປ່ຽນແປງ ບໍ່ວ່າທາງສື່ສັງຄົມອອນລາຍນ໌ແລະເຫດການສຳຄັນ ຊຶ່ງສາມາດຊ່ວຍຜູ້ຄົນໃນວົງກວ້າງໃຫ້ສາມາດເຂົ້າເຖິງໄດ້. ຕົວຢ່າງ: ການຄົ້ນພົບຈາກການວິໄຈໄດ້ຊີ້ໃຫ້ເຫັນບົດບາດສຳຄັນຂອງພໍ່ແມ່ນັກຮຽນ, ຍາດຕິພີ່ນ້ອງແລະສະມາຊິກຊຸມຊົນອື່ນໆ ໃນການປູກຝັງຄ່ານິຍົມແລະຄວາມສາມາດຂອງຜູ້ຮຽນ. ຄວາມຈິງແລ້ວ ຄວາມກົດດັນຂອງພໍ່ແມ່ຕໍ່ນັກຮຽນເພື່ອໃຫ້ຜົນການຮຽນດ້ານວິຊາການອອກມາດີນັ້ນບໍ່ສາມາດເບິ່ງຂ້າມໄດ້ເລີຍ ການເຄື່ອນໄຫວແບບນີ້ອາດມີເປົ້າໝາຍແນໃສ່ເພື່ອໃຫ້ຜູ້ຄົນເກີດຄວາມເຂົ້າໃຈບົດບາດການສຶກສາ ໃນການບົ່ມເພາະພອນສະຫວັນສະເພາະຂອງຜູ້ຮຽນ.

ສາມາດເວົ້າໄດ້ວ່າ **ໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກມີທ່າແຮງທີ່ຈະແຜ່ຂະຫຍາຍໄປສູ່ພາກພື້ນອື່ນໆ** ຖ້າຫາກມັນກ່ຽວຂ້ອງກັບຫຼາຍພາກສ່ວນອື່ນໆຢູ່ໃນໂລກ ນອກເໜືອຈາກພາກພື້ນອາຊີ-ປາຊີຟິກ. ດັ່ງທີ່ໄດ້ສຶກສາກັນຢູ່ໃນບົດທີສາມ ໂດຍສະເພາະການສຶກສາແຫຼ່ງຂໍ້ມູນຕ່າງໆຢູ່ທີ່ຫ້ອງການພົບວ່າ ມີຫຼາຍບັນຫາທີ່ຮຽກຮ້ອງໃຫ້ມີການນຳສະເໜີໂຄງປະກອບແບບນີ້ຢູ່ໃນພາກສ່ວນອື່ນໆຂອງໂລກ ຊຶ່ງສາມາດນຳເອົາໂຄງປະກອບອັນນີ້ໄປປະຍຸກໃຊ້ ແລະປັບແກ້ອີງຕາມບໍລິບົດທີ່ແຕກຕ່າງກັນເປັນແຕ່ລະພາກພື້ນ.

ອີງຕາມຄວາມພະຍາຍາມທີ່ກຳລັງເພີ່ມຂຶ້ນໃນການວັດຄວາມສຸກ **ໂຄງປະກອບຂອງໂຮງຮຽນໃຫ້ຄວາມສຸກສາມາດສະເໜີພື້ນຖານສຳລັບການວັດຄຸນນະພາບການສຶກສາທີ່ມີຄວາມສຳຄັນ.** ຄວາມຈິງແລ້ວ ນອກຈາກການລິເລີ່ມທີ່ມີຢູ່ ເຊັ່ນ: *ບົດລາຍງານກ່ຽວກັບ*

*ຄວາມສຸກຂອງໂລກ* ແລະການສຳຫຼວດຄ່ານິຍົມຂອງໂລກ ປະເທດຕ່າງໆຍັງເພີ່ມທະວີຊອກຫາຊ່ອງທາງເພື່ອວັດທັກສະ ແລະຄວາມສາມາດທີ່ບໍ່ແມ່ນວິຊາການ ໂດຍຖືເອົາເປັນຜົນຂອງການຮຽນຮູ້. ດັ່ງນັ້ນ ໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກຈຶ່ງສາມາດສະເໜີໂອກາດ ເພື່ອເຊື່ອມໂຍງການວັດຄວາມສຸກເຂົ້າກັບການວັດຄຸນນະພາບການສຶກສາ. ມາດຖານຕ່າງໆສາມາດໄດ້ຮັບການກວດຄືນແລະເຮັດໃຫ້ເປັນປະໂຫຍດໄດ້ ປະກອບກັບການວັດທາງດ້ານປະລິມານທີ່ສ້າງຂຶ້ນມາສຳລັບໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກ ຊຶ່ງໃນທີ່ສຸດຈະຖືກນຳໄປປະຍຸກໃຊ້ຢູ່ໃນປະເທດຕ່າງໆ ຊຶ່ງມີການຍອມຮັບໂຮງຮຽນທີ່ບັນລຸມາດຖານຕ່າງໆ.

## ຂໍ້ສະຫຼຸບ

ເພື່ອເປັນການສະຫຼຸບ ບົດລາຍງານນີ້ໄດ້ສະເໜີໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກອີງຕາມສອງແຫຼ່ງສຳຄັນຊຶ່ງເປັນສິ່ງຍັ້ງຢືນ ຄື: ທິດສະດີແລະນະໂຍບາຍກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກ ອີງໃສ່ການສຶກສາແຫຼ່ງຂໍ້ມູນຕ່າງໆຢູ່ທີ່ຫ້ອງການແລະມາດຖານສຳລັບໂຮງຮຽນໃຫ້ຄວາມສຸກ ອີງໃສ່ການຄົ້ນພົບໃນເບື້ອງຕົ້ນຈາກການວິໄຈ.

ອັນທຳອິດ ໃນສ່ວນຄຳນິຍາມຕ່າງໆກ່ຽວກັບຄວາມສຸກທີ່ໄດ້ຄົ້ນຄວ້າຢູ່ໃນບົດທີສາມນັ້ນ ສິ່ງເຫຼົ່ານີ້ໄດ້ລະບຸເປັນອັນດັບຢ່າງຊັດເຈນກ່ຽວກັບຄວາມເຊື່ອມໂຍງກັນລະຫວ່າງຄວາມສຸກແລະການສຶກສາ: ຄວາມສຸກບໍ່ພຽງແຕ່ແມ່ນບາງຢ່າງທີ່ສາມາດຮຽນຮູ້ໄດ້ ແຕ່ການຮຽນຮູ້ຍັງສາມາດເປັນບໍ່ເກີດອັນຍິ່ງໃຫຍ່ຂອງຄວາມສຸກໄດ້. ດັ່ງນັ້ນ ການສຶກສາຈຶ່ງເປັນທັງວິທີແລະເປົ້າໝາຍນຳໄປສູ່ຄວາມສຸກ.

ຍິ່ງໄປກວ່ານັ້ນ ເພື່ອຮັບມືກັບທ່າອ່ຽງຕ່າງໆ ເຊັ່ນ: ການປ່ຽນແປງດ້ານປະຊາກອນ, ການເຄື່ອນຍ້າຍຫຼາຍຂຶ້ນ, ການບໍ່ຍອມຮັບຄວາມຄິດເຫັນຂອງຄົນອື່ນທີ່ກຳລັງຂະຫຍາຍຕົວ, ລັດທິໃຊ້ຄວາມຮຸນແຮງສຸດຂົ້ວ, ການແຂ່ງຂັນທີ່ເພີ່ມທະວີຂຶ້ນ ແລະຄວາມກ້າວໜ້າຢ່າງໄວວາທາງດ້ານເຕັກໂນໂລຊີ ຫຼາຍປະເທດພາກັນຍອມຮັບວ່າ ການສຶກສາມີບົດບາດສຳຄັນໃນການສ້າງສັງຄົມທີ່ມີຄວາມສຸກ, ສົມບູນພູນສຸກແລະມີຄວາມສະຫງົບສຸກຫຼາຍຂຶ້ນ. ໂດຍສະເພາະສິ່ງນີ້ຈຳເປັນຕ້ອງສະທ້ອນໃຫ້ເຫັນວ່າ ຈະມີການກະກຽມຜູ້ຮຽນໃຫ້ດີທີ່ສຸດໄດ້ແນວໃດ ພິເສດແມ່ນ 'ຄວາມໄດ້ປຽບທາງດ້ານການແຂ່ງຂັນກັນ' ຂອງພວກເຂົາເຈົ້າ

ເອງ ດ້ວຍການພັດທະນາທັກສະແລະຄວາມສາມາດຕ່າງໆ ເຊັ່ນ: ຄວາມສ້າງສັນ, ການຄິດແບບວິພາກທາງເລິກ, ການສື່ສານແລະການເຮັດວຽກເປັນໝູ່ຄະນະ.

ວາລະໃໝ່ກ່ຽວກັບການພັດທະນາລະດັບໂລກແລະການສຶກສາ ປີ 2030 ລວມທັງການລິເລີ່ມອື່ນໆໃນລະດັບໂລກ ເຊັ່ນ: ເຄືອຂ່າຍການສຶກສາທາງບວກລະຫວ່າງປະເທດ (IPEN) ທັງໝົດລ້ວນແຕ່ເຮັດໃຫ້ຄວາມຄິດນີ້ແຂງແກ່ນຂຶ້ນແລະສະທ້ອນໃຫ້ເຫັນແນວຄິດກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກທັງນັ້ນ ເຖິງວ່າຕົວຢ່າງແຕ່ລະປະເທດ ຄືຈາກພູຖານ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ສິງກະໂປແລະວານູອາຕູ ຊຶ່ງແຕ່ລະປະເທດສະແດງຈຸດເນັ້ນ, ວິທີການແລະມິຕິກ່ຽວກັບສິ່ງທີ່ປະກອບຢູ່ໃນ 'ຄວາມສຸກ' ທີ່ແຕກຕ່າງກັນກໍຕາມ. ຕົວຢ່າງທັງໝົດເຫຼົ່ານີ້ເວົ້າເຖິງທິດສະດີ, ການລິເລີ່ມແລະນະໂຍບາຍຊຶ່ງນຳສະເໜີຢູ່ໃນບົດທີສາມນັ້ນ ໄດ້ລະບຸຊັດເຈນແລ້ວວ່າ ຄຸນນະພາບການສຶກສາແລະຄວາມສຸກຢູ່ໃນໂຮງຮຽນບໍ່ສາມາດແຍກອອກຈາກກັນໄດ້ ໂດຍມີການຍອມຮັບກັນຫຼາຍຂຶ້ນວ່າ ຄວາມເປັນເລີດແມ່ນຜົນພວງທີ່ຜູ້ຮຽນມີຄວາມສຸກຫຼາຍຂຶ້ນ ແລະລະບົບຂອງໂຮງຮຽນເຮັດໃຫ້ເກີດຄວາມສຸກຫຼາຍຂຶ້ນ ຊຶ່ງກົງກັນຂ້າມກັບການທົດສອບແລະການສອບເສັງທີ່ອີງໃສ່ມາດຕະຖານລ້ວນໆ. ອັນນີ້ຊີ້ໃຫ້ເຫັນວ່າ ຄວນມີການພິຈາລະນາຄວາມສຸກແລະຄວາມຢູ່ດີມີສຸກຢູ່ໃນຕົວຂອງຜູ້ຮຽນ ບໍ່ເປັນພຽງແຕ່ເປັນຈຸດປະສົງຂອງລະບົບການສຶກສາເທົ່ານັ້ນ ແຕ່ຍັງແມ່ນວິທີເຮັດໃຫ້ຜົນການສຶກສາສູງຂຶ້ນ ແລະມີທ່າແຮງທີ່ຈະປະສົບຄວາມສຳເລັດໃນຊີວິດແລະການງານໃນອະນາຄົດນຳອີກ.

ອັນທີສອງ ບົດລາຍງານນີ້ໄດ້ແນະນຳໂຄງປະກອບກ່ຽວກັບໂຮງຮຽນໃຫ້ຄວາມສຸກແລະມາດຖານ 22 ຢ່າງ ທີ່ຈະເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ. ສິ່ງເຫຼົ່ານີ້ຖືກສ້າງຂຶ້ນຈາກການຄົ້ນພົບເບື້ອງຕົ້ນຂອງການວິໄຈ ທີ່ໄດ້ໃຊ້ວິທີການແບບມີສ່ວນຮ່ວມ ເພື່ອເກັບກຳຄວາມຄິດເຫັນ ແລະມິຕິຕ່າງໆຮ່ວມກັນຂອງຜູ້ທີ່ມີສ່ວນກ່ຽວຂ້ອງໃນລະດັບໂຮງຮຽນ. ຕໍ່ຈາກນັ້ນ ບົດລາຍງານນີ້ໄດ້ສະເໜີຕົວຢ່າງຍຸດທະສາດທີ່ເປັນຮູບປະທຳແລະນຳໄປປະຕິບັດໄດ້ ຊຶ່ງສາມາດນຳໄປໃຊ້ຢູ່ພາກສ່ວນໃຫຍ່ໃນລະດັບໂຮງຮຽນ ເພື່ອໃຫ້ບັນລຸມາດຖານຕ່າງໆທີ່ຈຳເປັນໃນການເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກໄດ້. ມາດຖານຕ່າງໆທີ່ມີຄວາມເຊື່ອມສຳພັນກັນທົ່ວທັງສາມປະເພດທີ່ມີການຈັດແບ່ງ ຄື: ຜູ້ຄົນ, ຂະບວນການແລະສະຖານທີ່ນັ້ນ ມີລັກສະນະເກື້ອໜູນກັນແລະກັນ.

ດັ່ງທີ່ໄດ້ບອກໄວ້ໃນບົດທີສີ່ ສິ່ງທີ່ຄົ້ນພົບຈາກການວິໄຈສະແດງໃຫ້ເຫັນຕົວກຳນົດຫຼາຍຢ່າງກ່ຽວກັບໂຮງຮຽນໃຫ້ຄວາມສຸກຫຼືບໍ່ໃຫ້ຄວາມສຸກ ຈາກມາດຖານທີ່ຍົກມາເວົ້າ. ຜູ້ຕອບຄຳຖາມສຳລັບການສຳຫຼວດຄິດວ່າ ໂຮງຮຽນໃຫ້ຄວາມສຸກແມ່ນບ່ອນທີ່ມີຄວາມເປັນເພື່ອນມິດກັນແລະຄວາມສຳພັນອັນດີຕໍ່ກັນຢູ່ໃນສະພາບແວດລ້ອມທີ່ອົບອຸ່ນແລະເປັນມິດຕໍ່ກັນ. ເຂົາເຈົ້າຍັງຮູ້ສຶກອີກວ່າ ຜູ້ຮຽນຄວນມີອິດສະຫຼະທີ່ຈະສະແດງຄວາມຄິດເຫັນ, ມີລັກສະນະສ້າງສັນ, ມີສ່ວນຮ່ວມດ້ວຍນ້ຳໃຈຮ່ວມມືກັນໂດຍການຊ່ວຍເຫຼືອຂອງຄູທີ່ດີ. ໃນທາງກົງກັນຂ້າມ ເຂົາເຈົ້າຄິດວ່າສິ່ງໜຶ່ງທີ່ເຮັດໃຫ້ໂຮງຮຽນເປັນບ່ອນທີ່ບໍ່ມີຄວາມສຸກແມ່ນການທະເລາະວິວາດກັນ, ນັກຮຽນມີພາລະການຮຽນຫຼາຍເກີນໄປ ຍ້ອນການເນັ້ນໃສ່ການສອບເສັງແລະເອົາຄະແນນ ຊຶ່ງພາໃຫ້ມີລະດັບຄວາມທຸກໃຈສູງ ບວກໃສ່ກັບທັດສະນະຄະຕິແລະຄຸນສົມບັດດ້ານລົບຂອງຄູ ໂດຍທົ່ວໄປແລ້ວແມ່ນຄວາມສຳພັນບໍ່ດີຕໍ່ກັນ. ດັ່ງນັ້ນ ສາມໝວດຕໍ່ມາຂອງບົດທີສີ່ກ່ຽວກັບຜູ້ຄົນ, ຂະບວນການແລະສະຖານທີ່ຈຶ່ງແນໃສ່ໃຫ້ຄວາມນິຍາມທີ່ຊັດເຈນຫຼາຍຂຶ້ນວ່າຈະບັນລຸມາດຖານ 22 ຢ່າງສຳລັບໂຮງຮຽນໃຫ້ຄວາມສຸກໄດ້ແນວໃດ ໂດຍໃຊ້ຍຸດທະສາດທີ່ໄດ້ແນະນຳໄປແລ້ວ ໂດຍລວມແມ່ນໃນລະດັບໂຮງຮຽນ. ເຖິງວ່າສິ່ງເຫຼົ່ານີ້ຈະບໍ່ລະອຽດຖີ່ຖ້ວນ ແຕ່ກໍໃຫ້ຂໍ້ຄິດແລະຕົວຢ່າງອີງຕາມສິ່ງທີ່ຄົ້ນພົບຈາກການສຳຫຼວດ, ການລິເລີ່ມຫຼືການເຂົ້າຊ່ວຍເຫຼືອຫຼາຍຢ່າງ ທີ່ສາມາດສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຢູ່ໃນໂຮງຮຽນ.

ໂດຍລວມແລ້ວ ທັງດ້ານທິດສະດີແລະພາກປະຕິບັດຂອງບົດລາຍງານນີ້ ໄດ້ໃຫ້ວິໄສທັດພື້ນຖານຮ່ວມກັນກ່ຽວກັບສິ່ງທີ່ເປັນອົງປະກອບເຂົ້າໃນໂຮງຮຽນໃຫ້ຄວາມສຸກ. ອັນນີ້ຮຽກຮ້ອງໃຫ້ພວກເຮົາຕັ້ງຄຳຖາມກ່ຽວກັບນະໂຍບາຍ ແລະການປະຕິບັດຫຼາຍຢ່າງທີ່ມີຢູ່ຊຶ່ງກ່ຽວຂ້ອງກັບຫຼັກສູດ, ການສິດສອນແລະການປະເມີນ ເພື່ອທົບທວນຄືນວ່າ ສິ່ງເຫຼົ່ານັ້ນນຳໄປສູ່ການສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຢູ່ໃນລະບົບໂຮງຮຽນໄດ້ແນວໃດ.

ສິ່ງທີ່ຄົ້ນພົບຊຶ່ງໄດ້ນຳສະເໜີຢູ່ໃນບົດລາຍງານນີ້ບົ່ງບອກເຖິງຄວາມຈຳເປັນຢ່າງຊັດເຈນວ່າ ໃຫ້ມີເວລາແລະພື້ນທີ່ຫຼາຍຂຶ້ນສຳລັບຜູ້ຮຽນແລະນັກການສຶກສາ ເພື່ອສົ່ງເສີມຄວາມສຸກແລະຄວາມຢູ່ດີມີສຸກຢູ່ໃນໂຮງຮຽນ. ຄວາມຈຳເປັນຕ້ອງມີເວລາຫຼາຍຂຶ້ນນັ້ນ ປະກອບດ້ວຍເວລາສຳລັບເຮັດກິດຈະກຳນອກຫຼັກສູດ ສຳລັບຜູ້ຮຽນໄດ້ຄິດທົບທວນກ່ຽວກັບການຮຽນຮູ້ຂອງຕົນ ແລະກຳນົດສິ່ງທີ່ຕົນເອງມັກ ຫຼືມີເວລາສຳລັບວິທີການຮຽນການສອນແບບ

ມີສ່ວນຮ່ວມແລະສະໜຸກສະໜານຫຼາຍຂຶ້ນເພື່ອຄວາມພ້ອມ ຊຶ່ງອາດຖືກຈຳກັດຍ້ອນຄວາມຢ້ານກົວກ່ຽວກັບຄວາມສຳເລັດຕ່ຳທາງດ້ານວິຊາການຢູ່ໃນຕົວຂອງຜູ້ຮຽນ. ຄວາມຈຳເປັນຕ້ອງມີພື້ນທີ່ຫຼາຍຂຶ້ນນັ້ນ ປະກອບດ້ວຍພື້ນທີ່ສຳລັບຜູ້ຮຽນໃນການສະແດງລັກສະນະພິເສດສ່ວນຕົວຂອງຕົນຫຼືເຮັດຄວາມຜິດພາດ, ເພື່ອນຳໃຊ້ເນື້ອໃນການຮຽນຮູ້ດ້ວຍມິຕິທີ່ກວ້າງໄກໃນຊີວິດປະຈຳວັນ ຫຼືສຳລັບເນື້ອທີ່ສີຂຽວຢູ່ທາງນອກ ເພື່ອການຫຼິ້ນຫຼືຮຽນຮູ້ຢູ່ນອກຫ້ອງຮຽນ ຊຶ່ງອາດຖືກຈຳກັດເນື່ອງຈາກຄູຢ້ານວ່າຕົນເອງຈະສູນເສຍອຳນາດ ຫຼືວ່າໂຮງຮຽນບໍ່ມີລະບຽບວິໄນ.

ຄວາມຢ້ານກົວຊຶ່ງໂດຍປະເພນີແລ້ວໄດ້ຈຳກັດເວລາແລະພື້ນທີ່ຢູ່ໃນໂຮງຮຽນນັ້ນ ຈຳເປັນຕ້ອງກຳຈັດໃຫ້ໝົດໄປ ເພື່ອເຮັດໃຫ້ເກີດຄວາມຮັກໃນການຮຽນຮູ້ຢ່າງແທ້ຈິງ, ໃຫ້ລະດັບຄວາມສຳເລັດຂອງການຮຽນຮູ້ສູງຂຶ້ນ ສຸດທ້າຍກໍແມ່ນໃຫ້ຜູ້ຮຽນມີຄວາມສຸກແລະຄວາມຢູ່ດີມີສຸກນັ້ນເອງ. ບົດລາຍງານນີ້ຮຽກຮ້ອງໃຫ້ຜູ້ກຳນົດນະໂຍບາຍແລະໂຮງຮຽນກໍເຊັ່ນດຽວກັນ ໃຫ້ເຊົາ, ຢຸດຊົ່ວຄາວແລະຄິດທົບທວນ ເພື່ອເຮັດໃຫ້ມີເວລາແລະພື້ນທີ່ຫຼາຍຂຶ້ນຢູ່ໃນໂຮງຮຽນ ເພື່ອໃຫ້ຜູ້ຮຽນສາມາດສຸມຈິດໃຈໃສ່ການພັດທະນາພອນສະຫວັນ, ຈຸດແຂງແລະຄວາມສົນໃຈສະເພາະຂອງເຂົາເຈົ້າ. ມີແຕ່ດ້ວຍຄວາມພະຍາຍາມຮ່ວມກັນຂອງຜູ້ທີ່ຕັດສິນບັນຫາທັງໃນລະດັບນະໂຍບາຍແລະລະດັບໂຮງຮຽນເທົ່ານັ້ນ ຜູ້ຄົນຈຶ່ງສາມາດໃຫ້ຄວາມສຳຄັນກ່ຽວກັບຄວາມສຸກຢູ່ໃນລະບົບການສຶກສາແລະໂຮງຮຽນຕ່າງໆຊຶ່ງຈະກາຍເປັນແຮງບັນດານໃຈແກ່ຜູ້ຮຽນໃຫ້ມີຄວາມສຸກຫຼາຍຂຶ້ນ ຈົນສາມາດສ້າງສັງຄົມທີ່ມີຄວາມສຸກຫຼາຍຂຶ້ນແລະໃນທີ່ສຸດກໍເຮັດໃຫ້ໂລກເຮົາມີຄວາມຜາສຸກຫຼາຍຂຶ້ນ.



# ເອກະສານອ້າງອີງ


Action for Happiness. 2016. Action for Happiness website. http://www.actionforhappiness.org/about-us (Accessed 13 January 2016.)

Aldrich, R. 1994. John Locke. J. C. Tedesco and Z. Morsy. (eds.), Thinkers on Education, *Prospects: Quarterly Review of Education,* Vol. 24, No. 1 and 2, pp. 61-76. Paris, UNESCO. http://unesdoc.unesco.org/images/0010/001030/103086eo.pdf (Accessed 17 November 2015.)

Ang, K. 2012. Singapore Aims to Curb Stress on Students. *The New York Times,* 7 December. http://www.nytimes.com/2012/12/10/world/asia/singapore-aims-to-curb-academic-stress-on-students.html?_r=0 (Accessed 16 November 2015.)

Beebe, J. R. 2003. Socrates on Prozac and Happiness. Buffalo, State University of New York at Buffalo. http://www.acsu.buffalo.edu/~jbeebe2/Happiness.htm (Accessed 17 November 2015.)

Bethlehem, J. 2010. Selection bias in web surveys. *International Statistical Review,* Vol. 78, No. 2, pp. 161-88. http://dare.uva.nl/document/2/92124 (Accessed 18 January 2016.)

Bricknell, K. 2012. Schooling for Happiness: Bhutan's Big Dream. *Independent School,* Vol. 71, No. 3, pp. 57-63.

Brühlmeier, A. 2010. *Head, Heart and Hand: Education in the Spirit of Pestalozzi.* M. Mitchell (translator). Open Book Publishers.

Cabinet Office of Japan. 2013. Causes of death by different age groups in 2011. Suicide Policy White Paper, Chapter 1. (In Japanese.) http://www8.cao.go.jp/jisatsutaisaku/whitepaper/w-2013/html/index.html (Accessed 15 October 2015.)

Creswell, J. W. 2007. *Qualitative Inquiry and Research Design. Choosing Among Five Approaches,* 2nd edn. Thousand Oaks, Sage Publications.

Crisp, R. (trans, ed). 2000. *Aristotle: Nicomachean Ethics.* Cambridge, Cambridge University Press. http://catdir.loc.gov/catdir/samples/cam032/99036947.pdf (Accessed 16 November 2015.)

Crisp, R. 2013. Well-Being. *Stanford Encyclopedia of Philosophy.* E. N. Zalta (ed.) http://plato.stanford.edu/entries/well-being (Accessed 18 January 2016.)

Daegu Metropolitan Office of Education. 2013. Daegu Education Cultivating Dream, Hope and Happiness. Daegu, Daegu Metropolitan Office of Education. http://ebook.dge.go.kr/program/viewer_redirect.jsp?code=20140122184400 (Accessed 16 October 2015.)

Davie, S. 2015. Learning for life? Policies, parents need to change too. *The Straits Times,* 21 March. http://www.straitstimes.com/opinion/learning-for-life-policies-parents-need-to-change-too (Accessed 20 November 2015.)

Delors, J. (ed). 1996. *Learning: The Treasure Within.* Report to UNESCO of the International Commission on Education for the Twenty-first Century. Paris, UNESCO. http://unesdoc.unesco.org/images/0010/001095/109590eo.pdf (Accessed 12 November, 2015.)

Diener, E., Nickerson, C., Lucas, R. E. and Sandvik, E. 2002. Dispositional Affect and Job Outcomes. *Social Indicators Bulletin,* Vol. 59, No. 3, pp. 229-59.

Diener, E., Saptyta, J. J. and Suh, E. 1998. Subjective Well-Being is Essential to Well-Being. *Psychological Inquiry,* Vol. 9, No. 1, pp. 33-37. http://dx.doi.org/10.1207/s15327965pli0901_3 (Accessed 3 January 2016.)

Dietz, A. 2010. *Original Confucianism: An Introduction to the Superior Person.* Lulu.com.

Drakpa, D. and Dorji, R. 2013. Green School for Green Bhutan: Relationship with Gross National Happiness in Chukha Dzongkhag. *International Journal of Business Intelligence,* Vol. 2, pp. 314-24. http://www.ijbui.com/papers/october/C9102.pdf (Accessed 16 November 2015.)

Duckworth, A. L. and Seligman, M. E. P. 2005. Self-Discipline Outdoes IQ in Predicting Academic Performance in Adolescents. *Psychological Science,* Vol. 16, No. 12, pp. 939-44.

Education Bureau of Fukui Prefecture. 2011. Fukui Prefecture Basic Plans for Promoting Education (in Japanese.) http://www.pref.fukui.lg.jp/doc/kyoushin/keikakutop.html (Accessed 15 October 2015.)

Faure, E. (ed). 1972. *Learning to Be: The World of Education Today and Tomorrow.* International Commission on the Development of Education. Paris, UNESCO. http://www.unesco.org/education/pdf/15_60.pdf (Accessed 12 November 2015.)

Frey, C. B. and Osborne, M. A. 2015. The Future of Employment: How Susceptible are Jobs to Computerisation? Working paper prepared for the Oxford Martin School. http://www.oxfordmartin.ox.ac.uk/downloads/academic/The_Future_of_Employment.pdf (Accessed 12 November 2015.)

Fronsdal, G. 2005. *The Dhammapada: Teachings of the Buddha.* Boston, Shambhala Publications Inc.

Gardner, H. 1993. *Multiple Intelligences: The Theory in Practice, A Reader.* New York, Basic Books.

Garner, R. 2013. Finland schools: Subjects scrapped and replaced with 'topics' as country reforms its education system. *The Independent,* 23 March. http://www.independent.co.uk/news/world/europe/finland-schools-subjects-are-out-and-topics-are-in-as-country-reforms-its-education-system-10123911.html (Accessed 19 November 2015.)

Global Citizen Diploma. 2015. Overview. http://globalcitizendiploma.org (Accessed 19 November 2015.)

GNH Centre Bhutan. 2015. GNH: Four Pillars and Nine Domains. http://www.gnhcentrebhutan.org/what-is-gnh/four-pillars-and-nine-domains (Accessed 16 November 2015.)

Haidt, J. 2006. *The Happiness Hypothesis: Finding Modern Truth in Ancient Wisdom.* Cambridge, Basic Books.

Hankuk Bang Jeonghwan Foundation. 2013. Comparative Studies of Korean Children and Youth's Happiness Rate. (In Korean.) http://www.korsofa.org/bbs/board.php?bo_table=data&wr_id=65 (Accessed 16 October 2015.)

Helliwell, J. F., Layard, R. and Sachs, J. (eds). 2015. *World Happiness Report 2015.* New York, The Earth Institute, Columbia University. http://worldhappiness.report/wp-content/uploads/sites/2/2015/04/WHR15.pdf (23 September 2015.)

Hill, D. (ed). 2009. *The Rich World and the Impoverishment of Education: Diminishing Democracy, Equity and Workers' Rights.* New York, Routledge.

Hough, L. 2015. Does It Have To Be So Complicated? *Harvard ED Magazine,* Summer 2015. http://www.gse.harvard.edu/news/ed/15/05/does-it-have-be-so-complicated (Accessed 19 November 2015.)

International Labour Organization (ILO) and UNESCO. 2012. *Final Report: Joint ILO–UNESCO Committee of Experts on the Application of the Recommendations Concerning Teaching Personnel.* (8-12 October 2012.) Geneva, ILO. http://www.ilo.org/wcmsp5/groups/public/---ed_dialogue/---sector/documents/meetingdocument/wcms_204803.pdf (Accessed 2 December 2015.)

International Positive Education Network. 2016a. Why positive education? http://www.ipositive-education.net (Accessed 13 January 2016.)

________. (2016b). What is IPEN? http://www.ipositive-education.net (Accessed 13 January 2016.)

Jowett, B. (trans). 1994. Politics: By Aristotle. Massachusetts Institute of Technology. http://classics.mit.edu/Aristotle/politics.8.eight.html (Accessed 17 November 2016.)

Korea Institution for Health and Social Affairs. 2013. Adong Jonghap Siltae Josa [Situation Analysis of Children in the Republic of Korea]. (In Korean.)

Kumagai, K. 2000. Value-creating Pedagogy and Japanese Education in the Modern Era. *Journal of Oriental Studies,* Vol. 10, pp. 29-45. http://www.tmakiguchi.org/assets/images/kumagai.pdf (Accessed 13 January 2016.)

Layard, R. and Hagell, A. 2015. Healthy Young Mind: Transforming the Mental Health of Children. J. F. Helliwell, R. Layard and J. Sachs (eds.) *World Happiness Report 2015.* New York, The Earth Institute, Columbia University.

Lee, J. 2012. South Korea's school bullying has deadly consequences. CNN. http://edition.cnn.com/2012/01/18/world/asia/south-korea-bullying (Accessed 2 February 2016.)

Lee, S. 2015. Management and Improvement plans of Middle School Free-Semester Program in Korea. Suncheon National University. (In Korean.) http://dlps.nanet.go.kr/DlibViewer.do?cn=KDMT1201556748&sysid=nhn (Accessed 20 January 2016.)

Lee, T. 2011. Can happiness be taught? Yes, it can! *Teacher,* June/July, pp. 28-32.

Levitin, D. J. 2015. Why the modern world is bad for your brain. *The Guardian,* 18 January. http://www.theguardian.com/science/2015/jan/18/modern-world-bad-for-brain-daniel-j-levitin-organized-mind-information-overload (Accessed 20 November 2015.)

Live and Learn. 2011. Education for Sustainable Development in the Pacific: A Mapping Analysis of Vanuatu. Vanuatu, Melbourne, Live and Learn.

Maats, H. and O'Brien, K. 2014. Teaching Students to Embrace Mistakes. http://www.edutopia.org/blog/teaching-students-to-embrace-mistakes-hunter-maats-katie-obrien (Accessed 15 January 2016.)

Malvatumauri National Council of Chiefs (MNCC). 2012. Alternative Well-being Indicators for Melanesia. http://vanuatuculturalcentre.vu/wp-content/uploads/2013/02/Alternative-Indicators-Vanuatu.pdf (Accessed 30 September 2015.)

McMahon, D. M. 2006. *Happiness: A History.* New York, Grove Press.

Ministry of Education, Culture, Sports, Science and Technology of Japan (MEXT). 2011. Kyouiku Sanpou no Kaisei ni Tsuite [About the Amendment of the Basic Education Act]. (In Japanese.) http://www.mext.go.jp/a_menu/kaisei (Accessed 29 April 2014.)

__________. n.d. Shingakusyu Shidou Youryou Sousoku [The 2008 New Courses of Study, Zest for Living: General Provisions]. (In Japanese.) http://www.mext.go.jp/a_menu/shotou/new-cs/youryou/syo/sou.htm (Accessed 25 July 2014.)

Ministry of Education, Royal Government of Bhutan. 2012. *National Education Policy. Educating for GNH*. http://www.gnhc.gov.bt/wp-content/uploads/2011/05/NEP-2012-21st-March.pdf (Accessed 16 November 2015.)

__________. 2014. *Bhutan Education Blueprint (2014-2024). Rethinking Education*. Thimpu, Ministry of Education.

Ministry of Education of the Republic of Korea. 2013a. *National Education Policy for 2013*. http://www.moe.go.kr/web/40724/en/board/endownload.do?boardSeq=125302 (Accessed 14 November 2015.)

__________. 2013b. *Joonghakkyo Jayu Hakgije Sibeom Unyeong Gyehoek (An)* [Plan for Free-semester Pilot Project in Middle School (Blueprint)] . Seoul, Ministry of Education.

________. 2014. *Ministry of Education Plan for 2014*. Seoul, Ministry of Education. http://www.moe.go.kr/web/40724/en/board/endownload.do?boardSeq=125303 (Accessed 16 October 2015.)
Ministry of Education, Singapore. 2012. 2014 *Syllabus. Character and Citizenship Education. Primary*. Singapore, Ministry of Education. http://www.moe.gov.sg/education/syllabuses/character-citizenship-education/files/2014-character-citizenship-education-eng.pdf (Accessed 17 November 2015.)

Ministry of Education, Singapore. 2014. Information Sheet on 21st Century Competencies. http://www.moe.gov.sg/media/press/2014/04/information-sheet-on-21st-century.php (Accessed 20 January 2016.)

________. 2015. *Social and Emotional Learning*. Singapore, Ministry of Education. http://www.moe.gov.sg/education/programmes/social-emotional-learning (Accessed 17 November 2015.)

________. 2016a. Nurturing Students. Singapore, Ministry of Education. http://www.moe.edu.sg/education/nurturing-students (Accessed 16 January 2016.)

________. 2016b. MOE's Addendum to President's Address 2016. Singapore, Ministry of Education. http://www.moe.gov.sg/media/press/2016/01/moes-addendum-to-presidents-address-2016.php (Accessed 20 January 2016.)

Ministry of Education, Vanuatu. 2010. *Vanuatu National Curriculum Statement*. Port Vila, Ministry of Education. http://moet.gov.vu/docs/curriculum/General/Vanuatu%20National%20Curriculum%20Statement%20-%20English_2010.pdf (Accessed 13 November 2015.)

Ministry of Health, Labour and Welfare, Japan. 2010. Comprehensive Survey of Living Conditions. Tokyo, MHLW. http://www.mhlw.go.jp/toukei/saikin/hw/k-tyosa/k-tyosa10/3-3.html (Accessed 19 January 2016.)

________. 2013. Comprehensive Survey of Living Conditions. Tokyo, MHLW. http://www.mhlw.go.jp/toukei/saikin/hw/k-tyosa/k-tyosa13/dl/16.pdf (Accessed 19 January 2016.)

Ministry of Internal Affairs and Communications, Japan. 2014. Data on reported bullying in 2013. Statistics Bureau. http://www.e-stat.go.jp/SG1/estat/List.do?bid=000001055973&cycode=0 (Accessed 15 October 2015.)

Mischel, W. and Underwood, B. 1974. Instrumental Ideation in Delay of Gratification. *Child Development*, Vol. 45, No. 4, pp. 1083-1088.

National Institute for Educational Policy Research. 2015. Public Examination 2015: Results Materials. http://www.nier.go.jp/15chousakekkahoukoku/factsheet/prefecture (Accessed 16 November 2015.)

New Economics Foundation (NEF). 2006. The Happy Planet Index. An index of human well-being and environmental impact. London, NEF. http://b.3cdn.net/nefoundation/54928c89090c07a78f_ywm6y59da.pdf (Accessed 12 November 2015.)

Newman, W. L. (ed). 2010. *The Politics of Aristotle*. Cambridge, Cambridge Library Collections.

Organisation for Economic Co-operation and Development. 2011. Doing Better for Families. Paris, OECD. http://www.oecd.org/els/soc/47701118.pdf (Accessed 18 January 2016.)

________. 2013. *What it takes to learn*. PISA 2012 Report Volume 3. Paris, OECD. http://www.oecd.org/pisa/keyfindings/PISA2012-Vol3-Chap1.pdf (Accessed 14 November 2015.)

________. 2015a. Call for Tenders 100001311. Longitudinal Study of Social and Emotional Skills in Cities. Paris, OECD. http://www.oecd.org/callsfortenders/CfT%20100001311%20Longitudinal%20Study%20of%20Social%20and%20Emotional%20Skills%20in%20Cities.pdf (Accessed 12 January 2016.)

________. 2015b. *How's Life? 2015: Measuring Well-Being*. Paris: OECD. http://dx.doi.org/10.1787/how_life-2015-en (Accessed 12 January 2015.)

________. 2015c. Better Life Index: Japan. http://www.oecdbetterlifeindex.org/countries/japan (Accessed 15 October 2016.)

________. 2015d. Health status-Suicide rates-OECD Data Total 100,000 persons 2012. https://data.oecd.org/healthstat/suicide-rates.htm (Accessed 16 October 2015.)

________. 2015e. How's Life in Korea. Paris, OECD. http://www.oecd.org/statistics/Better%20Life%20Initiative%20country%20note%20Korea.pdf (Accessed 16 October 2015.)

Peterson, C. and Seligman, M. E. 2004. *Character Strengths and Virtues: A Handbook and Classification.* American Psychological Association and Oxford University Press.

Robinson, K. 2006. Do schools kill creativity? TED Talks. https://www.ted.com/talks/ken_robinson_says_schools_kill_creativity?language=en (Accessed 12 November 2015.)

Robinson, K. and Lou, A. 2015. *Creative Schools: The Grassroots Revolution That's Transforming Education*. New York, Viking.

Roscorla, T. 2014. 5 Ways Schools Can Make Learning Relevant for Students. http://www.centerdigitaled.com/news/5-Ways-Schools-Can-Make-Learning-Relevant-for-Students-.html (Accessed 2 February 2016.)

Rothstein, D. and Santana, L. 2011. Teaching Students to Ask Their Own Questions. *Harvard Education Letter,* Vol. 27, No. 5. http://hepg.org/hel-home/issues/27_5/helarticle/teaching-students-to-ask-their-own-questions_507 (Accessed 19 November 2015.)

Royal Government of Bhutan. 2008. *The Constitution of the Kingdom of Bhutan*. Thimpu, Royal Government of Bhutan. http://www.bhutanaudit.gov.bt/About%20Us/Mandates/Constitution%20of%20Bhutan%202008.pdf (Accessed 16 November 2015.)

________. 2012. *Defining a New Economic Paradigm: The Report of the High-Level Meeting on Wellbeing and Happiness*. New York: The Permanent Mission of the Kingdom of Bhutan to the United Nations. Thimpu: Office of the Prime Minister. (Accessed 17 November 2015.)

Seligman, M. E. P. 2002. *Authentic Happiness: Using the New Positive Psychology to Realize Your Potential for Lasting Fulfillment*. New York, The Free Press.

________. 2004. Can Happiness Be Taught? *Daedalus,* Spring 2004, Vol. 133. No. 2. pp. 80-87.

________. 2011. *Flourish: A Visionary New Understanding of Happiness and Well-being*. New York, The Free Press.

Seligman, M. E., Ernst, R. M., Gillham, J., Reivich, K. and Linkins, M. 2009. Positive education: positive psychology and classroom interventions. *Oxford Review of Education,* Vol. 35, No. 3, pp. 293-311.

Short, P. M., Short, R. J. and Blanton, C. 1993. Rethinking Student Discipline: Alternatives That Work. *Principals Taking Action* Series. Corwin Press.

Soëtard, M. 1994. Johann Heinrich Pestalozzi. J. C. Tedesco and Z. Morsy. (eds.), Thinkers on Education, *Prospects: Quarterly Review of Education,* pp. 297 - 310.

Thaiyalan, S. G. 2015. Values in action: A pedagogy of empowerment for students to take ownership in contributing to community and being socially responsible. Presented at the 5th Asia-Pacific Regional Conference on Service-Learning: Love Journey: Community Engagement through Service-Learning, Fu Jen Catholic University, Taiwan. http://commons.ln.edu.hk/osl_conference/5th/breakout_3f/1/ (Accessed 19 January 2016.)

The Pursuit of Happiness. 2015. History of Happiness: Introduction. http://www.pursuit-of-happiness.org/history-of-happiness (Accessed 9 November 2015.)

Tomsho, R. 2009. Adding Personality to the College Admissions Mix. *The Wall Street Journal,* 19 August. http://www.wsj.com/articles/SB10001424052970203612504574342732853413584 (Accessed 19 November 2015.)

Tough , P. 2011. What if the Secret to Success is Failure? *The New York Times,* 18 September. http://www.nytimes.com/2011/09/18/magazine/what-if-the-secret-to-success-is-failure.html?_r=0 (Accessed 19 November 2015.)

United Nations. 2015. Sustainable Development Topics. Sustainable Development Knowledge Platform. https://sustainabledevelopment.un.org/topics (Accessed 29 September 2015.)

UNESCO. 2004. *Embracing Diversity: Toolkit for Creating Inclusive, Learning-Friendly Environments.* Paris, UNESCO. http://unesdoc.unesco.org/images/0013/001375/137522e.pdf (Accessed 4 November 2015.)

________. 2014a. *Learning to Live Together. Education Policies and Realities in the Asia-Pacific.* Paris, UNESCO. http://unesdoc.unesco.org/images/0022/002272/227208E.pdf (Accessed 15 October 2015.)

________. 2014b. *Transversal Competencies in Education Policy and Practice.* ERI-Net Asia-Pacific Regional Policy Series. Paris, UNESCO. http://unesdoc.unesco.org/images/0023/002319/231907E.pdf (Accessed 13 November 2015.)

________. 2015a. *Global Citizenship Education: Topics and Learning Objectives.* Paris, UNESCO. http://unesdoc.unesco.org/images/0023/002329/232993e.pdf (Accessed 14 January 2016.)

________. 2015b. *Rethinking Education: Towards a Global Common Good?* Paris, UNESCO. http://unesdoc.unesco.org/images/0023/002325/232555e.pdf (Accessed 14 January 2016.)

________. 2015c. *Teachers in Asia-Pacific: Status and Rights.* Paris, UNESCO. http://unesdoc.unesco.org/images/0023/002347/234756E.pdf (Accessed 21 November 2015.)

________. 2016 (forthcoming). *School and Teaching Practices for Twenty-first Century Challenges: Lessons from the Asia-Pacific Region.*

UNICEF. 2001. *State of the World's Children.* New York, UNICEF.

________. 2009. *Child-Friendly Schools Manual.* New York, UNICEF. http://www.unicef.org/publications/files/Child_Friendly_Schools_Manual_EN_040809.pdf (Accessed 1 December 2015.)

United Nations General Assembly. 1989. *Convention on the Rights of the Child.* 20 November 1989. New York, United Nations.

________. 2011. *Happiness: towards a holistic approach to development.* Resolution 65/309. http://www.un.org/en/ga/search/view_doc.asp?symbol=A/RES/65/309 (Accessed 12 November 2015.)

________. 2013. *Happiness: toward a holistic approach to development.* Note by the Secretary General. 67/697.http://unstats.un.org/unsd/broaderprogress/pdf/Happiness%20towards%20a%20holistic%20approach%20to%20development%20(A-67-697).pdf (Accessed 28 September 2015.)

________. 2015a. *Transforming our world: the 2030 Agenda for Sustainable Development.* Resolution 70/1. New York, United Nations. http://www.un.org/ga/search/view_doc.asp?symbol=A/RES/70/1&Lang=E (Accessed 3 February 2016.)

________. 2015b. *Plan of Action to Prevent Violent Extremism: Report of the Secretary-General.* New York, United Nations.

Ura, K., Alkire, S., Zangmo, T. and Wangdi, K. 2012. A Short Guide to Gross National Happiness Index. Thimphu: The Centre for Bhutan Studies. http://www.grossnationalhappiness.com/wp-content/uploads/2012/04/Short-GNH-Index-edited.pdf (Accessed 16 November 2015.)

Vanuatu National Cultural Council. 2005. *Histri Blong Yumi Long Vanuatu: An Educational Resource.* Port Vila, Vanuatu National Cultural Council.

Values in Action (VIA). 2015. VIA Classification on Character Strengths. http://www.viacharacter.org/www/Character-Strengths/VIA-Classification (Accessed 12 November 2015.)

Vidyashilp Academy. 2013. Beyond Academics. http://vidyashilp.com/shilp%20beyond.html (Accessed 18 November 2015.)

World Health Organization (WHO). 2015. Suicide Rates. Data by Country. Global Health Observatory Data Repository. http://apps.who.int/gho/data/node.main.MHSUICIDE?lang=en (Accessed 15 October 2015.)

Wilkinson, R. G. and Pickett, K. E. 2009. *The Spirit Level: Why More Equal Societies Almost Always Do Better.* London, Allen Lane.

Yamaguchi, S. Y., Yamamoto, Y., Ueno, A., Kurokawa, M. and Enomoto, N. 2016. Integrating Transversal Competencies in Education Policy and Practice (Phase Two). Country Case Study: Japan. Paper presented at the 2014 ERI-Net Annual meeting, Hangzhou, China.

Yamaguchi, S., Yamamoto, Y. and Enomoto, N. 2015. "Happiness" in school: Snapshots from Akita. Presentation at the Happy Schools Seminar, Bangkok, Thailand, 4-6 June. http://www.unescobkk.org/fileadmin/user_upload/epr/Quality/Happy_Schools_Project/Japan_Akita_Prefecture_Schools_Happy_Schools_Seminar.pdf (Accessed 2 February 2016.)

Yao, X. (ed). 2003. *The Encyclopaedia of Confucianism.* New York, Routledge.

Yeo, S. E. 2011. Resilience, Character Strengths and Flourishing: A Positive Education Workshop for Singapore Teachers. Master's thesis. University of Pennsylvania, USA. http://repository.upenn.edu/cgi/viewcontent.cgi?article=1021&context=mapp_capstone (Accessed 17 November.)

Zangmo, S. 2014. A Gross National Happiness Infused Curriculum: The Promise of a More Meaningful Education in Bhutan. Master's thesis. Western Michigan University, USA.

Zhao, Y. 2015. *Counting What Counts: Reframing Education Outcomes.* Bloomington, IN, Solution Tree.

# ເອກະສານແນບ ທີ 1
## ສັງລວມບັນດາປະເທດຕ່າງໆ ທີ່ສະທ້ອນໃຫ້ເຫັນຢູ່ໃນຜົນຂອງການວິໄຈ (ທີ່ກ່າວເຖິງຢູ່ໃນການວິໄຈ)

ບົດລາຍງານນີ້ສະທ້ອນໃຫ້ເຫັນປະສົບການຕ່າງໆເປັນແຕ່ລະປະເທດ ໂດຍເອົາມາສັງລວມເຂົ້າກັນ ດ້ວຍການມີສ່ວນຮ່ວມຂອງຜູ້ຕອບຄຳຖາມແລະໂຮງຮຽນຕ່າງໆ.

ໃນກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນຢູ່ປະເທດອາຊຽນນັ້ນ ໂຮງຮຽນເຫຼົ່ານີ້ໄດ້ຮັບການຄັດເລືອກໃນນາມເປັນອານຸພາກພື້ນ ເນື່ອງຈາກເຂົາເຈົ້າມີຄວາມຜູກພັນເປັນຄູ່ສັນຍາກັບສູນຂ່າວກ່ຽວກັບເດັກນ້ອຍຢູ່ປະເທດອາຊຽນ (ASEAN Children's News Centre – ACN) ຂະນະດຽວກັນ ຜູ້ຕອບຄຳຖາມກ່ຽວກັບໂຮງຮຽນໃຫ້ຄວາມສຸກທີ່ເຂົ້າຮ່ວມການສຳຫຼວດເປັນພາສາຕ່າງໆ (ຈີນ, ອັງກິດ, ຍີ່ປຸ່ນ, ເກົາຫຼີ, ຣັດເຊຍແລະໄທ) ແຕ່ລະຄົນໄດ້ຮັບການຂໍຮ້ອງໃຫ້ລະບຸກ່ຽວກັບປະເທດທີ່ຕົນອາໄສຢູ່. ແນວໃດກໍດີ ການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ສະທ້ອນໃຫ້ເຫັນການຄັດເລືອກໂຮງຮຽນຕ່າງໆ ໂດຍອີງຕາມສິ່ງທີ່ເຂົາເຈົ້າປະຕິບັດໄດ້ດີແລະມີຫົວຄິດປະດິດສ້າງຂຶ້ນໃໝ່ ແທນທີ່ຈະເລືອກເອົາເປັນແຕ່ລະປະເທດ.

**ການສຶກສາຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການ**

ການສຶກສາຂໍ້ມູນຈາກແຫຼ່ງຕ່າງໆຢູ່ທີ່ຫ້ອງການກວມເອົາປະເທດຕ່າງໆທີ່ໃຫ້ຄວາມສົນໃຈພິເສດ ຕໍ່ແນວຄິດກ່ຽວກັບຄວາມສຸກແລະຄວາມຢູ່ດີມີສຸກຢູ່ໃນນະໂຍບາຍລະດັບຊາດແລະການສຶກສາ ຄື:

- ພູຖານ
- ຍີ່ປຸ່ນ
- ສາທາລະນະລັດເກົາຫຼີ

- ສິງກະໂປ
- ວານູອາຕູ

**ກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນປະເທດອາຊຽນ[15]**

ກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນປະເທດອາຊຽນໄດ້ຄັດເລືອກໂຮງຮຽນຕ່າງໆຈາກອານຸພາກພື້ນອາຊຽນ ອີງຕາມຄວາມຜູກພັນຂອງເຂົາເຈົ້າໃນການເປັນຄູ່ສັນຍາກັບສູນຂ່າວກ່ຽວກັບເດັກນ້ອຍຢູ່ປະເທດອາຊຽນ.

***ຕາຕະລາງ ເອ1.*** *ໂຮງຮຽນຕ່າງໆທີ່ເຂົ້າຮ່ວມກອງປະຊຸມທາງວິຊາການກ່ຽວກັບໂຮງຮຽນປະເທດອາຊຽນ ເປັນແຕ່ລະປະເທດແລະປະເພດໂຮງຮຽນ/ທີ່ຕັ້ງ.*

| ປະເທດ | ຊື່ໂຮງຮຽນ | ປະເພດໂຮງຮຽນ/ທີ່ຕັ້ງ |
|---|---|---|
| ພູຖານ | ໂຮງຮຽນນາໆຊາດ ເຈຣູດົງ (Jerudong International School) | ໂຮງຮຽນນາໆຊາດ / ຢູ່ໃນເມືອງ |
| ກຳປູເຈຍ | ໂຮງຮຽນມັດທະຍົມ ເພຼຍ ສີໂສຫວັດ (Preah Sisowath High School) | ຂອງລັດ/ຢູ່ໃນເມືອງ |
| ອິນໂດນີເຊຍ | ໂຮງຮຽນມັດທະຍົມວິຊາຊີບ ບູດີ ມູເລຍ ດູອາ (Budi Mulia Dua Vocational High School) | ວິຊາຊີບ/ຢູ່ໃນເມືອງ |
| ລາວ | ໂຮງຮຽນພອນສະຫວັນ ແລະການສຶກສາ ເພື່ອການກະກຽມ | ຂອງລັດ/ຢູ່ໃນເມືອງ |

15 ໝົດທຸກປະເທດທີ່ເປັນສະມາຊິກປະເທດອາຊຽນໄດ້ເຂົ້າຮ່ວມກອງປະຊຸມທາງວິຊາການນີ້ ຍົກເວັ້ນປະເທດສິງກະໂປ.

| | | |
|---|---|---|
| ມາເລເຊຍ | ໂຮງຮຽນ ແຊັງ ຈອຣຈ໌ (St George School) | ເອກະຊົນ/ຢູ່ໃນເມືອງ |
| | ໂຮງຮຽນມັດທະຍົມ ແຊັງ ໂຈເຊັບ (St. Joseph Secondary School) | ເອກະຊົນ/ຢູ່ໃນເມືອງ |
| ມຽນມາ | ໂຮງຮຽນນາໆຊາດ ເກຣັນ ຂອງມຽນມາ (Crane International School Myanmar) | ໂຮງຮຽນນາໆຊາດ/ ຢູ່ໃນເມືອງ |
| ຟີລິບປິນ | ມະຫາວິທະຍາໄລຊັ້ນສູງ ຊານໂຕ ໂທມັສ (University of Santo Tomas High School) | ເອກະຊົນ/ຢູ່ໃນເມືອງ |
| ໄທ | ວິທະຍາໄລອິສລາມ ຂອງໄທ | ຂອງລັດ/ຢູ່ໃນເມືອງ |
| | ວິທະຍາໄລ ວະຊິຣາວຸດ (Vajiravudh College) | ຂອງລັດ/ຢູ່ໃນເມືອງ |
| ຫວຽດນາມ | ໂຮງຮຽນມັດທະຍົມຕົ້ນ ຟາມ ຫງອກ ທັກ (Pham Ngoc Thach – Junior High School) | ຂອງລັດ/ຢູ່ໃນເມືອງ |

**ການສຳຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກ**

ການສຳຫຼວດເຮັດເປັນຫົກພາສາ (ຈີນ, ອັງກິດ, ຍີ່ປຸ່ນ, ເກົາຫຼີ, ຣັດເຊຍແລະໄທ) ແລະຜູ້ຕອບຄຳຖາມໄດ້ຮັບການຂໍຮ້ອງໃຫ້ລະບຸປະເທດທີ່ເຂົາເຈົ້າອາໄສຢູ່.

***ຕາຕະລາງ ເອ2 .*** *ຈຳນວນຜູ້ຕອບຄຳຖາມສຳລັບການສຳຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກ ເປັນແຕ່ລະປະເທດ/ ຂອບເຂດບ່ອນຢູ່ອາໄສ.*

| | | | |
|---|---|---|---|
| ອາຟການິສຖານ | 1 | ມາເລເຊຍ | 1 |
| ອົດສ໌ຕຣາລີ | 2 | ມົງໂກລີ | 2 |
| ບັງກລາເດັສ | 1 | ມຽນມາ | 1 |
| ບຣູໄນ ດາຣູຊາລຳ | 2 | ປາກີສຖານ | 1 |
| ກຳປູເຈຍ | 1 | ຟີລິບປິນ | 26 |
| ຈີນ | 71 | ຣັດເຊຍ | 32 |
| ອິນເດຍ | 37 | ສິງກະໂປ | 1 |
| ອິນໂດນີເຊຍ | 12 | ໄທ | 100 |
| ສາທາລະນະລັດອິສ໌ລາມິກ ອີຣານ | 1 | ໂຕເກລໍ | 1 |
| ຍີ່ປຸ່ນ | 155 | ເທີຄີ | 3 |
| ຈໍແດນ | 1 | ສະຫະລັດອາເມຣິກາ | 2 |
| ກາຊັກສ໌ຖານ | 65 | ອຸສ໌ເບັກກິສ໌ຖານ | 1 |
| ເກົາຫຼີ | 107 | ຫວຽດນາມ | 6 |
| ເກຍຣ໌ກິສ໌ຖານ | 19 | ຊິມບາເວ | 1 |
| ສປປ ລາວ | 1 | ລວມທັງໝົດ | 654 |

**ການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ**

ການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ປະກອບດ້ວຍໂຮງຮຽນຕ່າງໆທີ່ໄດຮັບການຄັດເລືອກ ຍ້ອນວ່າເຂົາເຈົ້າມີການປະຕິບັດໄດ້ດີແລະມີຫົວຄິດປະດິດສ້າງຂຶ້ນໃໝ່ ແທນທີ່ຈະຖືກຄັດເລືອກອີງຕາມປະເທດຂອງເຂົາເຈົ້າ.

*ຕາຕະລາງ ເອ3. ໂຮງຮຽນຕ່າງໆທີ່ເຂົ້າຮ່ວມການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ ເປັນແຕ່ລະປະເທດແລະປະເພດໂຮງຮຽນ/ທີ່ຕັ້ງ.*

| ປະເທດ | ຊື່ໂຮງຮຽນ | ປະເພດໂຮງຮຽນ/ທີ່ຕັ້ງ |
|---|---|---|
| ພູຖານ | ໂຮງຮຽນມັດທະຍົມຕົ້ນ ພີມາກັຕເຊລ (Pemagatshel Middle Secondary School) | ຂອງລັດ, ຢູ່ຊົນນະບົດ |
| ອິນເດຍ | ສະຖາບັນວິທະຍາສິລປ໌ (Vidyashilp Academy) | ເອກະຊົນ, ຢູ່ໃນເມືອງ |
| ຍີ່ປຸ່ນ | ໂຮງຮຽນທີ່ໄດ້ຮັບການຄັດເລືອກຈາກເທດສະບານ ອາກິຕະ (Akita prefecture)[16] | ຂອງລັດ, ຢູ່ຊົນນະບົດ/ຢູ່ເຄິ່ງຕົວເມືອງ |

16 ເຖິງວ່າຜູ້ຕາງໜ້າຈາກໂຮງຮຽນທີ່ໄດ້ຮັບການຄັດເລືອກຢູ່ໃນເທດສະບານ ອາກິຕະ ບໍ່ສາມາດມາເຂົ້າຮ່ວມການສຳມະນາກໍຕາມ ແຕ່ກໍມີການນຳສະເໜີມິຕິໂດຍລວມອີງຕາມການປະຕິບັດຂອງເກົ້າໂຮງຮຽນຈາກນະຄອນ ຢູຊາວະ ຄື: ໂຮງຮຽນປະຖົມ ຢູຊາວະ ນິຊິ, ມັດທະຍົມຕົ້ນ ຢາມາດະ, ໂຮງຮຽນປະຖົມ ຢູຊາວະ ຮິກະຊິ, ມັດທະຍົມຕົ້ນ ຢູຊາວະ ກິຕະ, ໂຮງຮຽນປະຖົມ ໂກມາກະຕະ, ມັດທະຍົມຕົ້ນ ອິນະກາວະ, ຈາກເມືອງ ອຸໂກະ ໄດ້ແກ່ມັດທະຍົມ ອຸໂກະ, ຈາກບ້ານ ຮິກາຊິ ນາຣຸເຊະ ມີໂຮງຮຽນປະຖົມ ຮິກາຊິ ນາຣຸເຊະ ແລະມັດທະຍົມຕົ້ນ ຮິກາຊິ ນາຣຸເຊະ.

| | | |
|---|---|---|
| ສາທາລະນະລັດເກົາຫຼີ | ໂຮງຮຽນປະຖົມ ແດກູ ກາຊັງ (Daegu Gachang Elementary School) | ຂອງລັດ, ຢູ່ຊົນນະບົດ/ ໃນລະດັບແຂວງ |
| ໄທ | ໂຮງຮຽນນາໆຊາດໃໝ່ | ໂຮງຮຽນນາໆຊາດ ເອກະຊົນ/ຢູ່ໃນເມືອງ |
| | ໂຮງຮຽນມັດທະຍົມ ສາທິດ ຈຸລາລົງກອນ | ໂຮງຮຽນສາທິດຂອງລັດ/ ຢູ່ໃນເມືອງ |
| ຫວຽດນາມ | ໂຮງຮຽນທົດລອງມັດທະຍົມຕົ້ນຂອງຫວຽດນາມ | ໂຮງຮຽນທົດລອງຂອງລັດ/ ຢູ່ໃນເມືອງ |

# ເອກະສານແນບ ທີ 2

## ການສໍາຫຼວດກ່ຽວກັບໂຮງຮຽນໃຫ້ຄວາມສຸກ

1. ທ່ານແມ່ນເພດໃດ?
- ❑ ຊາຍ
- ❑ ຍິງ
- ❑ ແປງເພດ
- ❑ ອື່ນໆ (ກະລຸນາລະບຸ) ..................................................................

2. ທ່ານເປັນ.........
- ❑ ນັກຮຽນ
- ❑ ຄູ
- ❑ ຜູ້ອໍານວຍການໂຮງຮຽນ
- ❑ ພະນັກງານຊ່ວຍວຽກຢູ່ໃນໂຮງຮຽນ
- ❑ ມະຫາຊົນທົ່ວໄປ
- ❑ ອື່ນໆ(ກະລຸນາລະບຸ) ..................................................................

3. ຢູ່ປະເທດໃດ/ຂອບເຂດສະຖານທີ່ບ່ອນທ່ານອາໄສຢູ່ໃນປັດຈຸບັນ?

ຢູ່ລຸ່ມໃຫ້ໃສ່ລາຍຊື່ສະມາຊິກປະເທດອາຊຽນ
- ❑ ອື່ນໆ (ກະລຸນາລະບຸ)..................................................................

4. ປັດຈຸບັນທ່ານກໍາລັງຮຽນແລະເຮັດວຽກຢູ່ກັບໂຮງຮຽນປະເພດໃດ?
- ❑ ໂຮງຮຽນທີ່ລັດຖະບານອຸດໜູນທຶນຮອນ
- ❑ ໂຮງຮຽນເອກະຊົນ
- ❑ ໂຮງຮຽນນາໆຊາດ
- ❑ ອື່ນໆ (ກະລຸນາລະບຸ) ..................................................................

5. ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນໃຫ້ຄວາມສຸກ? *(ກະລຸນາລະບຸສາມຢ່າງ)*

6. ແມ່ນຫຍັງທີ່ເຮັດໃຫ້ໂຮງຮຽນເປັນບ່ອນບໍ່ໃຫ້ຄວາມສຸກ? *(ກະລຸນາລະບຸສາມຢ່າງ)*

7. ແມ່ນຫຍັງທີ່ເຮັດໃຫ້ການຮຽນການສອນມ່ວນຊື່ນແລະສະໜຸກສະໜານ?
*(ຕົວຢ່າງ: ຄູຄວນສອນແນວໃດ? ບັນຍາກາດຢູ່ໃນຫ້ອງຮຽນແລະໃນໂຮງຮຽນ, ການມີສ່ວນຮ່ວມຂອງນັກຮຽນຢູ່ໃນຂະບວນການຮຽນຮູ້, ເນື້ອໃນການຮຽນຮູ້).*

8. ຕາມປະສົບການຂອງທ່ານ ສາມາດເຮັດຫຍັງໄດ້ແດ່ ເພື່ອເຮັດໃຫ້ນັກຮຽນໝົດທຸກຄົນຮູ້ສຶກມີສ່ວນຮ່ວມຢູ່ໃນໂຮງຮຽນ?

*(ຕົວຢ່າງ: ນັກຮຽນທີ່ມາຈາກວັດທະນະທຳ, ສາດສະໜາແລະຊົນເຜົ່າທີ່ແຕກຕ່າງກັນ, ນັກຮຽນທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍແລະສະໝອງ ຫຼືມີຄວາມຕ້ອງການພິເສດໃນການຮຽນຮູ້ ເພື່ອຫຼຸດຜ່ອນການທະເລາະວິວາດກັນ, ການຊິງດີຊິງເດັ່ນແລະການສອບເສັງດ້ານລົບທີ່ກ່ຽວຂ້ອງກັບຄວາມທຸກໃຈ).*

# ເອກະສານແນບ ທີ 3
# ກິດຈະກຳຢູ່ໃນການສຳມະນາກ່ຽວກັບໂຮງຮຽນໃຫ້ຄວາມສຸກ

## 1. ສ້າງຜູ້ຮຽນທີ່ມີຄວາມສຸກ

ຢູ່ໃນກິດຈະກຳນີ້ ມີການແບ່ງສຳມະນາກອນເປັນກຸ່ມອີງຕາມປະເພດຜູ້ທີ່ມີສ່ວນຮ່ວມ ຄື: ນັກຮຽນ, ຄູແລະຜູ້ອຳນວຍການ. ສຳມະນາກອນໄດ້ຮັບເຈ້ຍແຜ່ນໃຫຍ່ແລະບິກເຝີສໃຫຍ່ ແລະໄດ້ຮັບການແນະນຳໃຫ້ 'ສ້າງ' ຜູ້ຮຽນທີ່ມີຄວາມສຸກຂຶ້ນມາ. ອັນນີ້ມີການແຕ້ມຮູບຄົນເປັນສັນຍາລັກແທນ 'ຜູ້ຮຽນ' ໂດຍສຳມະນາກອນມີອິດສະຫຼະທີ່ຈະແຕ້ມແລະຂຽນໃສ່ໃນແລະນອກຮູບຄົນ ເພື່ອເຮັດເປັນໂປສເຕີ. ສຳມະນາກອນໄດ້ຮັບພຽງຄຳແນະນຳໃຫ້ຄິດໄຕ່ຕອງແລະປຶກສາຫາລືກັນກ່ຽວກັບວ່າ ແມ່ນຫຍັງທີ່ສຳຄັນທີ່ສຸດໃນການເຮັດໃຫ້ຜູ້ຮຽນມີຄວາມສຸກ ຕາມມິຕິຂອງກຸ່ມຜູ້ທີ່ມີສ່ວນຮ່ວມ. ກິດຈະກຳນີ້ໄດ້ຮັບການອອກແບບ ເພື່ອໃຫ້ແຕ່ລະກຸ່ມຂອງຜູ້ທີ່ມີສ່ວນຮ່ວມໄດ້ຄິດໄຕ່ຕອງ, ປຶກສາຫາລືກັນແລະເປັນເອກະພາບກັນກ່ຽວກັບ 'ມາດຖານ' ທີ່ສຳຄັນທີ່ສຸດສຳລັບໂຮງຮຽນໃຫ້ຄວາມສຸກ ໃນສ່ວນທີ່ກ່ຽວກັບຜູ້ຮຽນເປັນລາຍບຸກຄົນ. ອີງໃສ່ການວິເຄາະແລະການແປຄວາມໝາຍຈາກແຜ່ນໂປສເຕີຕ່າງໆ ຈຶ່ງໄດ້ມີການກຳນົດຫົວເລື່ອງສຳຄັນຫຼາຍຢ່າງອອກມາ.

## 2. ມາດຖານຕ່າງໆໃນທາງປະຕິບັດ – ການຄິດໄຕ່ຕອງເປັນລາຍບຸກຄົນ

ແຜ່ນໂປສເຕີຕ່າງໆຊຶ່ງຜູ້ທີ່ມີສ່ວນຮ່ວມເຮັດຂຶ້ນຢູ່ໃນກິດຈະກຳທຳອິດນັ້ນ ໄດ້ນຳມາຈັດວາງສະແດງເພື່ອໃຫ້ທຸກຄົນໄດ້ຍ່າງເລາະເບິ່ງ ໂດຍມີການແຈກຢາຍບັດທ້າອັນໃຫ້ສຳມະນາກອນແຕ່ລະຄົນ ແລ້ວຂໍໃຫ້ເຂົາເຈົ້າຂຽນມາດຖານສຳຄັນທີ່ສຸດໃນອັນດັບຕົ້ນທ້າຍ່າງສຳລັບໂຮງຮຽນໃຫ້ຄວາມສຸກໃສ່ບັດເຫຼົ່ານັ້ນ. ຜູ້ທີ່ມີສ່ວນຮ່ວມແຕ່ລະກຸ່ມໄດ້ຮັບສີສະເພາະເພື່ອໃຫ້ຈຳແນກມິຕິທີ່ແຕກຕ່າງກັນໄດ້ ຄື: ນັກຮຽນ (ສີຂຽວ), ຄູ (ສີຄຳ) ແລະຜູ້ອຳນວຍການ (ສີໝາກກ້ຽງ). ຈຸດປະສົງຂອງກິດຈະກຳນີ້ແມ່ນເພື່ອເປີດໂອກາດໃຫ້ສຳມະນາກອນໝົດທຸກຄົນໄດ້ຄິດໄຕ່ຕອງວິທີທີ່ແຕກຕ່າງກັນວ່າ ສາມາດມະໂນພາບກ່ຽວກັບ 'ໂຮງຮຽນໃຫ້ຄວາມສຸກ' ອອກມາແນວໃດ ຕໍ່ມາກໍໃຫ້ເລືອກເອົາມາດຖານທີ່ແຕ່ລະຄົນຊື່ນຊອບ.

ຈາກນັ້ນ ກໍມີການແບ່ງສຳມະນາກອນອອກເປັນສີ່ກຸ່ມປະສົມກັນແລະແນະນຳໃຫ້ເອົາບັດຂອງເຂົາເຈົ້າມາຈັດແບ່ງເປັນປະເພດອີງຕາມຫົວເລື່ອງລວມ. ອັນນີ້ເຮັດໃຫ້ການຈັດແບ່ງເປັນກຸ່ມມາດຖານຕາມຫົວເລື່ອງສຳຄັນ.

## 3. ມາດຖານຕ່າງໆໃນທາງປະຕິບັດ - ໂປສເຕີກ່ຽວກັບໂຮງຮຽນ

ຢູ່ໃນກິດຈະກຳນີ້ ສຳມະນາກອນໄດ້ຈັບກຸ່ມກັນເປັນແຕ່ລະໂຮງຮຽນແລະໄດ້ບອກເຂົາເຈົ້າໃຫ້ຈື່ຈຳຫົວເລື່ອງຕ່າງໆຈາກກິດຈະກຳທີ່ຜ່ານມາ. ເຂົາເຈົ້າໄດ້ຮັບການແນະນຳຕ່າງໆຊຶ່ງປະກອບດ້ວຍການລະບຸມາດຖານສຳຄັນທີ່ສຸດອັນດັບຕົ້ນຫ້າຢ່າງ ທີ່ນຳໄປປະຍຸກໃຊ້ຢູ່ໃນໂຮງຮຽນຂອງຕົນ ແລະໃຫ້ຕົວຢ່າງຍຸດທະສາດທີ່ໂຮງຮຽນຈະນຳໄປໃຊ້ເພື່ອບັນລຸມາດຖານເຫຼົ່ານີ້. ແຕ່ລະກຸ່ມໂຮງຮຽນໄດ້ຮັບເຈ້ຍແຜ່ນໃຫຍ່, ບິກເຝີສໃຫຍ່, ເຈ້ຍສີແຜ່ນນ້ອຍເພື່ອຂຽນຂໍ້ຄວາມສຳຄັນໃສ່ ພ້ອມທັງແຈກຢາຍເອກະສານກ່ຽວກັບມາດຖານເບື້ອງຕົ້ນໃຫ້ໂດຍສຳມະນາກອນມີໂອກາດໄດ້ລະດົມຄວາມຄິດຢ່າງອິດສະຫຼະ, ແຕ້ມແລະຂຽນບາງຢ່າງອີງຕາມຄຳແນະນຳເຫຼົ່ານີ້. ເຂົາເຈົ້າໄດ້ຮັບການບອກກ່າວວ່າ ອັນນີ້ຈະເປັນ 'ໂປສເຕີຂອງໂຮງຮຽນ' ທີ່ສະທ້ອນໃຫ້ເຫັນສະພາບໂຮງຮຽນຂອງເຂົາເຈົ້າ ແທນທີ່ຈະແມ່ນຕົວຢ່າງໂຮງຮຽນທົ່ວໄປຢູ່ໃນປະເທດຂອງຕົນ.

## 4. ມາດຖານຕ່າງໆໃນບໍລິບົດທີ່ແຕກຕ່າງກັນ - ໂປສເຕີກ່ຽວກັບປະເທດ

ຕໍ່ຈາກນັ້ນ ສຳມະນາກອນແຕ່ລະໂຮງຮຽນ/ແຕ່ລະປະເທດຈັບກຸ່ມກັນ ແລະໄດ້ຮັບການແນະນຳໃຫ້ຄິດໄຕ່ຕອງສະພາບເງື່ອນໄຂປະເທດຂອງຕົນໃນວົງກວ້າງ. ເຂົາເຈົ້າໄດ້ຮັບການຂໍຮ້ອງໃຫ້ພິຈາລະນາເບິ່ງວ່າ ມາດຖານຕ່າງໆທີ່ໄດ້ກຳນົດກັນຢູ່ໃນກິດຈະກຳກ່ອນໜ້ານີ້ສາມາດເຮັດໃຫ້ບັນລຸໄດ້ແນວໃດ ຢູ່ໃນປະເພດໂຮງຮຽນທີ່ແຕກຕ່າງກັນ[17] ພາຍໃຕ້ສະພາບເງື່ອນໄຂຂອງປະເທດຕົນ. ໃນການເບິ່ງມາດຖານຕ່າງໆນັ້ນ ເຂົາເຈົ້າໄດ້ຮັບການແນະນຳໃຫ້ພິຈາລະນາຕົວຢ່າງຕ່າງໆນຳພ້ອມ ເຊັ່ນ: ໂຮງຮຽນຢູ່ເຂດຊົນນະບົດ, ໂຮງຮຽນທີ່ມີງົບປະ

17 ໂຮງຮຽນທີ່ເຂົ້າຮ່ວມການສຳມະນາໄດ້ຮັບການຄັດເລືອກອີງໃສ່ການປະຕິບັດທີ່ດີ ແລະມີຫົວຄິດປະດິດສ້າງຕາມແນວຄິດໂຮງຮຽນໃຫ້ຄວາມສຸກແລະມາດຖານເບື້ອງຕົ້ນ ສະນັ້ນ ຈຶ່ງບໍ່ຈຳເປັນຕ້ອງເປັນຕົວແທນໂຮງຮຽນໃນລະດັບກາງຢູ່ໃນປະເທດຂອງເຂົາເຈົ້າ. ຈຸດປະສົງຂອງກິດຈະກຳນີ້ແມ່ນເພື່ອພິຈາລະນາໂຮງຮຽນປະເພດອື່ນໆຢູ່ໃນສະພາບເງື່ອນໄຂປະເທດຂອງເຂົາເຈົ້າ ໂດຍສະເພາະແມ່ນໂຮງຮຽນທີ່ມີໂອກາດໜ້ອຍກວ່າ.

ມານໜ້ອຍ ແລະ/ຫຼື ໂຮງຮຽນທີ່ມີວັດທະນະທຳ, ສາດສະໜາແລະພູມຫຼັງຂອງຫຼາຍຊົນເຜົ່າປະສົມກັນ. ເຂົາເຈົ້າຍັງໄດ້ຮັບການຂໍຮ້ອງໃຫ້ລະບຸອຸປະສັກຕ່າງໆໃນການບັນລຸມາດຖານເຫຼົ່ານັ້ນນຳອີກ ແລະຈະສາມາດເອົາຊະນະອຸປະສັກເຫຼົ່ານີ້ໄດ້ແນວໃດ. ຄຳຖາມເພື່ອເປັນແນວທາງມີດັ່ງນີ້: 1) ມາດຖານເຫຼົ່ານີ້ສາມາດບັນລຸໄດ້ແນວໃດ ຢູ່ໃນສະພາບເງື່ອນໄຂປະເທດຂອງທ່ານ? 2) ມາດຖານເຫຼົ່ານີ້ສາມາດນຳໄປປັບໃຊ້ກັບກຸ່ມຄົນທີ່ມີວັດທະນະທຳ, ສາດສະໜາ ຫຼືສັງຄົມ/ເສດຖະກິດທີ່ແຕກຕ່າງກັນໄດ້ແນວໃດ? 3) ມີອຸປະສັກຫຍັງແດ່ໃນການບັນລຸມາດຖານເຫຼົ່ານີ້ແລະສາມາດເອົາຊະນະອຸປະສັກເຫຼົ່ານີ້ໄດ້ແນວໃດ?



























UNESCO Bangkok Office
Mom Luang Pin Malakul Centenary Building
920 Sukhumvit Road, Prakanong, Klongtoey
Bangkok 10110, Thailand
Email: iqe.bgk@unesco.org
https://bangkok.unesco.org
Tel: +66-2-3910577 Fax: +66-2-3910866

With the support of

Pestalozzi Children's Foundation